ບົດລາຍງານໂລກ
ການຕິດຕາມການສຶກສາເພື່ອທຸກຄົນ

2011

# ບົດສັງລວມ

## ວິກິດການເຊື່ອງຊ້ອນ: ຄວາມຂັດແຍ້ງດ້ວຍອາວຸດ ແລະ ການສຶກສາ



ການສຶກສາເພື່ອທຸກຄົນ

UNESCO
United Nations
Educational, Scientific and
Cultural Organization

# ວິກິດການເຊື່ອງຊ້ອນ:
# ຄວາມຂັດແຍ້ງດ້ວຍອາວຸດ ແລະ ການສຶກສາ

## ບົດສັງລວມ

ຈັດພິມໂດຍອົງການ ຢູເນດສະໂກ

ບົດລາຍງານສະບັບນີ້ ແມ່ນບົດພິມທີ່ເປັນເອກະລາດພາຍໃຕ້ການອຸປະຖຳຂອງອົງການອຸຍແນດສະໂກ ໃນນາມຄະນະຍາດສາກົນ. ນີ້ແມ່ນຜົນຜະລິດທີ່ໄດ້ມາຈາກການຮ່ວມແຮງຮ່ວມໃຈຂອງບັນດາສະມາຊິກທີມງານຂຽນບົດລາຍງານ ແລະ ບັນດາບຸກຄົນ, ອົງການ, ສະຖາບັນ ແລະ ລັດຖະບານຂອງປະເທດຕ່າງໆ.

ຜູ້ຖືກແຕ່ງຕັ້ງ ແລະ ການສະເໜີບັນດາຂໍ້ມູນໃນບົດພິມນີ້ ບໍ່ໄດ້ອອກມາຈາກຄວາມຄິດຄວາມເຫັນ ໃນສ່ວນຂອງອົງການອຸຍແນດສະໂກ ທີ່ກ່ຽວພັນເຖິງສະຖານະພາບດ້ານກົດໝາຍຂອງປະເທດ, ເຂດນ້ຳແດນດິນ, ເມືອງ ຫລື ພື້ນທີ່ໃດໜຶ່ງ, ຫລື ອຳນາດການປົກຄອງ ຫລື ຈາກຄວາມຄິດຄວາມເຫັນທີ່ກ່ຽວພັນເຖິງການບໍ່ໃຫ້ຂໍ້ຈຳກັດທາງດ້ານພົມແດນ ຫລື ເຂດແດນ.

ທີມງານ ບົດລາຍງານໂລກການຕິດຕາມການປະຕິບັດການສຶກສາເພື່ອທຸກຄົນ ມີຄວາມຮັບຜິດຊອບຕໍ່ທາງເລືອກ ແລະ ການສະເໜີກ່ຽວກັບຄວາມຈິງທີ່ບັນຈຸໃນບົດສັງລວມນີ້ ແລະ ຄວາມນຶກຄິດກ່ຽວກັບບັນດາສິ່ງເຫລົ່ານັ້ນ ຊຶ່ງບໍ່ຈຳເປັນວ່າຈະແມ່ນມາຈາກແນວຄວາມຄິດ ແລະ ກໍບໍ່ມີຂໍ້ຜູກພັນໃດໆ ກັບອົງການອຸຍແນດສະໂກທັງໝົດ. ຜູ້ອຳນວຍການອົງການຈະຮັບເອົາຄວາມຮັບຜິດຊອບທັງໝົດຕໍ່ທັດສະນະ ແລະ ແນວຄວາມຄິດທີ່ສະແດງອອກໃຫ້ເຫັນໃນບົດລາຍງານນີ້.

## ທີມງານບົດລາຍງານໂລກການຕິດຕາມການປະຕິບັດການສຶກສາເພື່ອທຸກຄົນ

ຜູ້ອຳນວຍການ: ເຄວິນ ແວດຄິນ

ຄົ້ນຄວ້າ: ເຊເມີ ອານ ຊາມາໄຣ, ນີໂຄນ ແບນລາ, ສະຈວດ ຄາເມຣອນ, ແອນນາ ຣາອັດ, ຝຣັງຊົວ ເລີກະແລກ, ເອລີ ເລີໂງ, ອາແນດ ລິວຊີຢົງ, ເຄເຣນ ມົວ, ປາຕະຣິກ ມົງຈຸຣາຍ, ໂປລີນ ໂຣ.

ການສື່ສານ ແລະ ການຂ່າວ: ໄດເດີຣິກ ເດີຈົງ, ແອນດະຣູ ຈອນສະເຕີນ, ແລລາ ລູປີ, ມາຣີໂຊນ ແຊນຈາຍ, ເຊລີນ ສະເຕຍ.

ດຳເນີນງານ ແລະ ຈັດພິມ: ເອຣິນ ເຊີເມີຣີ, ຈູລີຢາ ໄຣ, ມາກ ຟີລິບ ບູອາໄລນິດ, ໂຊຟີ ສະລອນດອກ, ມາກຕີນາ ຊີເມີຕີ, ຈຸດິດ ຣັນດະຣີຢານາໂຕອາວີນາ, ຊູຣາດ ວາຣີນ.

**ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບບົດລາຍງານ, ເຊີນຕິດຕໍ່:**

ຜູ້ອຳນວຍການ
ທີມງານບົດລາຍງານໂລກການຕິດຕາມການປະຕິບັດການ
ສຶກສາເພື່ອທຸກຄົນ
c/o UNESCO
7, Place de Fontenoy,
75352 Paris 07 SP, France
e-mail: efareport@unesco.org
Tel.: +33 1 45 68 10 36
Fax: +33 1 45 68 56 41
www.efareport.unesco.org

**ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນທີ່ຜ່ານມາ**

2010: ການເຂົ້າເຖິງຜູ້ດ້ອຍໂອກາດ
2009: ເອົາຊະນະກັບຄວາມບໍ່ມີຄຸນນະພາບ: ເປັນຫຍັງການບໍລິຫານຄຸ້ມຄອງຈຶ່ງເປັນບັນຫາສຳຄັນ
2008: ການສຶກສາເພື່ອທຸກຄົນໃນປີ 2015 ພວກເຮົາຈະສາມາດບັນລຸໄດ້ບໍ່?
2007: ການວາງພື້ນຖານທີ່ເຂັ້ມແຂງ-ເດັກກ່ອນໄວຮຽນ ແລະ ການສຶກສາ
2006: ການຮູ້ໜັງສືຕະຫລອດຊີວິດ
2005: ການສຶກສາເພື່ອທຸກຄົນ-ຄວນຈຳເປັນດ້ານຄຸນນະພາບ
2003/04: ຄວາມສະເໝີພາບຍິງ-ຊາຍ ແລະ ການສຶກສາເພື່ອທຸກຄົນ
2002: ການສຶກສາເພື່ອທຸກຄົນ ໂລກຂອງເຮົາໄດ້ຖືກທິດທາງແລ້ວບໍ່?

ຈັດພິມໃນປີ 2011 ໂດຍອົງການສະຫະປະຊາຊາດ ດ້ານການສຶກສາ,
ວິທະຍາສາດ ແລະ ວັດທະນະທຳ
7,place de Fontenoy, 75352 Paris 07 SP, France
ອອກແບບດ້ານກະຣາຟິກ ໂດຍ ຊິນແອນ ແບເຢັນສ໌
ພິມໂດຍ ອົງການອຸຍແນດສະໂກ
ພິມເທື່ອທີໜຶ່ງໃນປີ 2011

© UNESCO 2011
Printed in Paris
ED-2011/WS/1

ຮູບໜ້າປົກ
ຢູ່ພາກເໜືອຂອງປະເທດ ອູກັນດາ, ເດັກທີ່ຢູ່ໃນການສູ້ຮົບລະຫວ່າງກອງກຳລັງຂອງລັດຖະບານ ແລະ ກອງທັບການຕໍ່ຕ້ານຂອງຊຸມນາງທ້ອງຖິ່ນຢັ້ງຢືນສິ່ງທີ່ເຂົາເຈົ້າໄດ້ເຫັນ ດ້ວຍການແຕ້ມຮູບ.
© Xanthopoulos Daimon/Gamma

# ຄຳນຳ

ອົງການສະຫະປະຊາຊາດໄດ້ຮັບການສ້າງຕັ້ງຂຶ້ນເພື່ອປົດປ່ອຍໂລກອອກຈາກມະຫັນຕະໄພ ຂອງສົງຄາມ ອົງການໄດ້ຍຶດຖືຄຳໝັ້ນສັນຍາວ່າ: ຈະເຮັດໃຫ້ອະນາຄົດມີຊີວິດໃນ "ເສລີພາບ ທີ່ປາສະຈາກຄວາມຢ້ານກົວ". ອົງການອຸຍແນດສະໂກໄດ້ຮັບການສ້າງຕັ້ງຂຶ້ນເພື່ອຊ່ວຍສ້າງອະນາຄົດນີ້. ຈາກຄຳເວົ້າອັນປະທັບໃຈໃນທຳມະນູນຂອງອົງການ, ພວກເຮົາໄດ້ຮັບພາລະກິດຕໍ່ສູ້ກັບຄວາມບໍ່ເຂົ້າໃຈເຖິງທ່າທີ ແລະ ການດຳລົງຊີວິດຂອງກັນ ແລະ ກັນທີ່ຖືກລໍ່ລ້ຽງຈາກຂໍ້ຂັດແຍ້ງດ້ວຍອາວຸດໃນເວລາອັນຍາວນານນັ້ນດ້ວຍການສຶກສາ.

ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນປີນີ້ສະເໜີຄືນຢ່າງແທດເໝາະ ປະຫວັດສາດ, ແນວຄິດ ແລະ ຄຸນຄ່າທີ່ເປັນພື້ນຖານໃຫ້ແກ່ການສ້າງຕັ້ງອົງການສະຫະປະຊາຊາດ. ຄຸນຄ່າເຫລົ່ານັ້ນໄດ້ລະບຸໄວ້ໃນຖະແຫລງການ ສາກົນວ່າດ້ວຍສິດທິມະນຸດ 1948. ນອກນີ້ຍັງໄດ້ສະແດງອອກໃນ ຈຸດປະສົງຂອງການສຶກສາເພື່ອທຸກຄົນຊຶ່ງ ຄະນະຍາດສາກົນໄດ້ຮັບຮອງເອົາໃນປີ 2000. ແຕ່ເປັນໜ້າເສຍດາຍ,ພວກເຮົາຍັງຢູ່ຫ່າງໄກຈາກໂລກທີ່ນັກສະຖາປະນິກ ຂອງຖະແຫລງການສາກົນໄດ້ຄາດຄະເນໄວ້ນັ້ນຢູ່-ຫ່າງໄກຈາກຈຸດປະສົງ ການສຶກສາທີ່ພວກເຮົາໄດ້ຮັບຮູ້ນຳກັນ. ສະນັ້ນ ພວກເຮົາທຸກຄົນຈຶ່ງພວມປະເຊີນໜ້າກັບສິ່ງທ້າທາຍອັນໃຫຍ່ຫລວງຈາກ ການປະທະກັນດ້ວຍອາວຸດ.

ດັ່ງທີ່ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນສະບັບໃໝ່ ໃຫ້ຄວາມກະຈ່າງແຈ້ງ, ສົງຄາມຍັງສືບຕໍ່ທຳລາຍຊີວິດຂອງຜູ້ຄົນຫລາຍລ້ານຄົນທີ່ມີຄວາມສ່ຽງທີ່ສຸດຂອງໂລກ. ນອກນີ້, ສົງຄາມຍັງທຳລາຍໂອກາດເພື່ອ ການສຶກສາໃນລະດັບທີ່ບໍ່ສາມາດຮັບຮູ້ໄດ້ຢ່າງຄົບຖ້ວນ. ສະພາວະເປັນຈິງໄດ້ບົ່ງຊີ້ ຫລາຍກວ່າ 40% ຂອງເດັກ ທີ່ປະລະການຮຽນດຳລົງຊີວິດໃນປະເທດທີ່ມີສົງຄາມ. ປະເທດເຫລົ່ານີ້ມີຄວາມບໍ່ສະເໝີພາບລະຫວ່າງຍິງ - ຊາຍ ຫລາຍ ແລະ ມີລະດັບຄວາມຮູ້ໜັງສືຕ່ຳທີ່ສຸດໃນໂລກ. ຂ້າພະເຈົ້າຫວັງວ່າດ້ວຍການເປີດສະປອດໄລໃສ່ສິ່ງທີ່ເປັນວິກິດການບໍ່ເປີດເຜີຍຈົນເຖິງປັດຈຸບັນ, ບົດລາຍງານ ຈະຊ່ວຍກະຕຸ້ນພຶດຕິກຳແຫ່ງຊາດ ແລະ ສາກົນ ໃນສີ່ຈຸດທີ່ເປັນຂໍກະແຈ.

ໜຶ່ງ, ພວກເຮົາຕ້ອງການ ຢຸດຕິຢ່າງສິ້ນເຊີງ ການລ່ວງລະເມີດສິດທິມະນຸດຢ່າງເປີດແປນ ທີ່ເປັນບັນຫາໃຈກາງ ຂອງວິກິດການການສຶກສາໃນປະເທດທີ່ມີສົງຄາມ. ພວກເຮົາບໍ່ສາມາດສ້າງສັງຄົມໃຫ້ມີສັນຕິພາບໃນມື້ໜຶ່ງຍາມດຽວໄດ້, ແຕ່ມັນບໍ່ມີສິ່ງໃດທີ່ຢັ້ງຢືນການທຳລາຍເດັກ, ການຂົ່ມຂືນຊຳເລົາເດັກຍິງ ແລະ ແມ່ຍິງຢ່າງກວ້າງຂວາງ ແລະ ເປັນລະບົບ ຫລື ການທຳລາຍສິ່ງອຳນວຍຄວາມສະດວກຂອງໂຮງຮຽນທີ່ສະເໜີໃນບົດລາຍງານສະບັບນີ້. ເຖິງວ່າມີມະຕິຕໍ່ເນື່ອງກັນ ຂອງສະພາຄວາມໝັ້ນຄົງ ອົງການ ສະຫະປະຊາຊາດກໍ່ຕາມ, ມັນເປັນສິ່ງຮັບເອົາບໍ່ໄດ້ ການລ່ວງລະເມີດທາງເພດທີ່ຍັງເປັນ ອາວຸດ ຂອງສົງຄາມ - ອາວຸດ ທີ່ພາໃຫ້ໄດ້ຮັບຄວາມເຈັບປວດອັນແສນສາຫັດ, ຄວາມຢ້ານກົວ ແລະ ຄວາມບໍ່ປອດໄພ ຂອງເດັກຍິງ ແລະ ແມ່ຍິງ ແລະຄວາມເສຍຫາຍອັນມະຫາສານຕໍ່ການສຶກສາຂອງເຂົາເຈົ້າ. ຂ້າພະເຈົ້າກຽມພ້ອມເພື່ອ ເຮັດວຽກຮ່ວມກັບເພື່ອນຮ່ວມງານ ໃນລະບົບ ອົງການສະຫະປະຊາຊາດ ເພື່ອເພີ່ມທະວີ ການປົກປ້ອງສິດທິມະນຸດຂອງເດັກຢູ່ໃນພາວະຂອງສົງຄາມ.

ສອງ, ຕ້ອງສ້າງລະບົບການຊ່ວຍເຫລືອມະນຸດສະທຳ. ເວລາຂ້າພະເຈົ້າຢ້ຽມຢາມຊຸມຊົນຕ່າງໆໃນປະເທດທີ່ໄດ້ຮັບການຊ່ວຍເຫລືອຮີບດ່ວນ, ຂ້າພະເຈົ້າຕົກຕະລຶງຕໍ່ຄວາມພະຍາຍາມພິເສດຂອງເຂົາເຈົ້າເພື່ອເຮັດໃຫ້ການສຶກສາຍັງຄົງຕົວຢູ່. ແຕ່ເປັນໜ້າເສຍດາຍການຊ່ວຍເຫລືອຂອງຜູ້ໃຫ້ທຶນບໍ່ສາມາດບັນລຸຕາມຈຸດປະສົງນີ້. ຂະແໜງ ການສຶກສາໃນປັດຈຸບັນໄດ້ຮັບພຽງ 2% ຂອງການຊ່ວຍເຫລືອດ້ານມະນຸດສະທຳ ແລະ ລະບົບການຊ່ວຍເຫລືອດ້ານມະນຸດສະທຳເອງກໍໄດ້ຮັບທຶນໜ້ອຍ. ພວກເຮົາທຸກຄົນທີ່ມີພັນທະຕໍ່ການສຶກສາເພື່ອທຸກຄົນຕ້ອງການແກ້ໄຂກໍລະນີດັ່ງກ່າວ ເພື່ອເຮັດໃຫ້ການສຶກສາເປັນໃຈກາງຂອງຄວາມພະຍາຍາມໃນການຊ່ວຍເຫລືອດ້ານມະນຸດສະທຳ.

ສາມ, ພວກເຮົາຕ້ອງການຄວາມມີປະສິດທິພາບກວ່າເກົ່າອີກໃນການນຳໃຊ້ຊ່ອງຫວ່າງຂອງກາລະໂອກາດເພື່ອສັນຕິພາບ. ທ່ານເລຂາທິການໃຫຍ່ ອົງການສະຫະປະຊາຊາດ ບັນກີມູນ ໄດ້ຊີ້ແຈງໃຫ້ຮູ້ວ່າໃນປັດຈຸບັນພວກເຮົາຍັງຂາດ ກົນໄກ ເພື່ອຊ່ວຍເຫລືອປະເທດທີ່ຢູ່ໃນເສັ້ນທາງອັນຕະລາຍນັ້ນອອກຈາກສົງຄາມ. ຍ້ອນແນວນີ້, ກາລະໂອກາດແຫ່ງການສ້າງສັນຕິພາບ ແລະ ການກໍ່ສ້າງຄືນໃໝ່ ຈຶ່ງຖືກສູນເສຍໄປດ້ວຍລາຄາອັນມະຫາສານຂອງຄົນ ແລະ ການເງິນ. ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນສະເໜີກໍລະນີເພື່ອການເພີ່ມທະວີກອງທຶນລວມ. ຂ້າພະເຈົ້າເຊື່ອໝັ້ນວ່າຜູ້ໃຫ້ທຶນ ແລະ ລັດທີ່ໄດ້ຮັບຜົນກະທົບຈາກສົງຄາມ

ໄດ້ຮັບຜົນປະໂຫຍດຈາກການເພີ່ມທະວີການຮ່ວມມືໃນຂະແໜງນີ້.

ສຸດທ້າຍ, ພວກເຮົາຕ້ອງການເປີດຄວາມອາດສາມາດທັງໝົດຂອງການສຶກສາເພື່ອປະຕິບັດໜ້າທີ່ໃນຖານະເປັນພະລັງເພື່ອສັນຕິພາບ. ປະໂຫຍກທຳອິດໃນທຳມະນູນຂອງອຸຍແນດສະໂກປະກາດຢ່າງເດັ່ນຊັດວ່າ: "ໃນເມື່ອສົງຄາມເກີດຈາກແນວຄິດ ແລະ ຈິດໃຈຂອງຜູ້ຊາຍ[ຜູ້ຍິງ]. ສະນັ້ນ, ມັນຈຶ່ງແມ່ນ ທີ່ແນວຄິດ ແລະ ຈິດໃຈຂອງຜູ້ຊາຍ[ຜູ້ຍິງ] ທີ່ຄວນກໍ່ສ້າງການປ້ອງກັນສັນຕິພາບ". ບໍ່ມີການປ້ອງກັນໃດຈະແໜ້ນໜາກວ່າທ່າທີຂອງປວງຊົນທີ່ຕັ້ງຢູ່ບົນພື້ນຖານການ ປະນີປະນອມ, ການເຄົາລົບຊຶ່ງກັນ ແລະ ກັນ ແລະ ການຜູກພັນກັບການສົນທະນາ, ທ່າທີເຫລົ່ານີ້ຄວນໄດ້ຮັບການປູກຝັງໃນແຕ່ລະມື້ໃນທຸກໆຫ້ອງຮຽນຂອງໂລກ. ນຳໃຊ້ໂຮງຮຽນເປັນພາຫະນະເຜີຍແຜ່ແນວຄິດແບ່ງພັກແຍກພວກ, ແນວຄິດຊາດຄັບແຄບ ແລະ ການບໍ່ເຄົາລົບຊົນຊາດອື່ນ ບໍ່ພຽງແຕ່ເປັນເສັ້ນທາງໄປສູ່ການສຶກສາທີ່ບໍ່ດີເທົ່ານັ້ນແຕ່ຍັງເປັນ ທາງຜ່ານໄປສູ່ຄວາມຮຸນແຮງ. ຂ້າພະເຈົ້າມີຄວາມເຊື່ອໝັ້ນຢ່າງເຕັມປ່ຽມວ່າ ອຸຍແນດສະໂກສາມາດເຮັດໜ້າທີ່ຢ່າງມີ ປະສິດທິພາບໃນການກໍ່ສ້າງຄືນລະບົບການສຶກສາໃນປະເທດທີ່ໄດ້ຮັບຜົນກະທົບຈາກສົງຄາມດ້ວຍວຽກງານໃນຂະແໜງການຕ່າງໆຂອງພວກເຮົາເຊັ່ນ: ການສົນທະນາລະຫວ່າງກຸ່ມວັດທະນະທຳ, ການພັດທະນາຫລັກສູດ, ການຝຶກອົບຮົມຄູ ແລະ ການປະຕິຮູບປຶ້ມແບບຮຽນ.

ອົງການສະຫະປະຊາຊາດໄດ້ຮັບການສ້າງຕັ້ງຂຶ້ນມາໄດ້ຫລາຍກວ່າ 60 ປີແລ້ວ. ສິ່ງທ້າທາຍຈາກການປະທະກັນດ້ວຍອາວຸດໄດ້ ປ່ຽນແປງແລ້ວ, ແຕ່ວ່າຫລັກການ, ຄຸນຄ່າ ແລະ ອົງການຈັດຕັ້ງທີ່ສະໜັບສະໜູນອົງການສະຫະປະຊາຊາດ ຍັງມີຄວາມສັກສິດຢູ່ຄືເກົ່າ. ຖ້າພວກເຮົາເຮັດວຽກຮ່ວມກັນ ແລະ ນຳໃຊ້ສິ່ງເຫລົ່ານີ້ເພື່ອປະເຊີນໜ້າກັບ ວິກິດການທີ່ບໍ່ສະແດງອອກ ໃນການສຶກສາແລ້ວສ້າງໂລກທີ່ເດັກ ແລະ ຜູ້ປົກຄອງສາມາດດຳລົງຊີວິດຢູ່ໄດ້ ຢ່າງມີອິດສະຫລະພາບ ທີ່ປາສະຈາກຄວາມຢ້ານກົວ.



ອີຣິນາ ໂບໂກວາ
ຜູ້ອຳນວຍການໃຫຍ່ ອຸຍແນດສະໂກ

# ຈຸດເດັ່ນຂອງບົດລາຍງານການຕິດຕາມການສຶກສາເພື່ອທຸກຄົນ 2011

ໂລກບໍ່ໄປຕາມເສັ້ນທາງເພື່ອບັນລຸຈຸດປະສົງຂອງການສຶກສາເພື່ອທຸກຄົນ ໃນ 2015. ເຖິງວ່າໄດ້ມີຄວາມຄືບໜ້າ ໃນຫລາຍຂະແໜງການກໍຕາມ, ຂ່າວສານສຳຄັນອັນພົ້ນເດັ່ນຈາກ ບົດລາຍງານໂລກການຕິດຕາມການ ສຶກສາເພື່ອທຸກ ຄົນ 2011 ແມ່ນເກືອບໝົດທຸກຈຸດປະສົງບໍ່ສາມາດບັນລຸໄດ້ໃນຂອບເຂດອັນກວ້າງຂວາງ. ປະເທດທີ່ໄດ້ຮັບຜົນກະທົບຈາກ ສົງຄາມປະເຊີນໜ້າກັບສິ່ງທ້າທາຍອັນໃຫຍ່ຫຼວງສະເພາະລັດຖະບານຕ້ອງສະແດງເຈດຈຳນົງຢ່າງກະທັນຫັນ, ຄວາມເດັດດ່ຽວ ແລະ ເປົ້າໝາຍອັນດຽວກັນ ເພື່ອຫຍັບເຂົ້າໃກ້ການບັນລຸຈຸດປະສົງດັ່ງກ່າວ.

## ຄວາມຄືບໜ້າໃນເປົ້າໝາຍ 2015

ໃນທົດສະວັດຜ່ານມາໄດ້ມີຄວາມຄືບໜ້າໃນການບັນລຸເປົ້າໝາຍການສຶກສາເພື່ອທຸກຄົນຢູ່ບາງປະເທດທີ່ທຸກຍາກກວ່າໝູ່ໃນໂລກ.

- ສະຫວັດດີການຂອງເດັກກ່ອນໄວຮຽນໄດ້ຮັບການພັດທະນາໃຫ້ດີຂຶ້ນ. ຕົວຢ່າງ: ອັດຕາການຕາຍຂອງ ເດັກກ່ອນ 5 ປີ ໄດ້ຫລຸດລົງຈາກ 12.5 ລ້ານ ໃນ ປີ 1990 ຫາ 8.8 ລ້ານ ໃນປີ 2008.

- ແຕ່ປີ 1999 ຫາ 2008 ເດັກ 52 ລ້ານຄົນໄດ້ເຂົ້າຮຽນໃນຊັ້ນປະຖົມສຶກສາຕື່ມອີກ. ຈຳນວນເດັກບໍ່ເຂົ້າໂຮງຮຽນ ຫລຸດລົງເຄິ່ງໜຶ່ງໃນອາຊີໃຕ້ ແລະ ອາຊີຕາເວັນຕົກ. ອັດຕາການເຂົ້າຮຽນໃນຊັ້ນປະຖົມສຶກສາ ຢູ່ເຂດ ອະນຸພາກພື້ນຊາຮາລາອາຟຣິກາ ເພີ່ມຂຶ້ນໜຶ່ງສ່ວນສາມ ເຖິງວ່າພົນລະເມືອງໃນເກນອາຍຸເຂົ້າຮຽນໃນຊັ້ນປະຖົມສຶກສາເພີ່ມຂຶ້ນກໍ່ຕາມ.

- ຄວາມແຕກໂຕນກັນລະຫວ່າງຍິງ ແລະ ຊາຍ ໃນການເຂົ້າຮຽນຊັ້ນປະຖົມສຶກສາໄດ້ຫລຸດລົງຫລາຍໃນ ຂົງເຂດທີ່ເລີ່ມຕົ້ນ ທົດສະວັດດ້ວຍຄວາມແຕກໂຕນກັນລະຫວ່າງເພດຫລາຍທີ່ສຸດ.

ເຖິງວ່າມີການພັດທະນາຢ່າງຕັ້ງໜ້າເຫລົ່ານີ້ກໍຕາມ, ມັນຍັງມີຄວາມແຕກໂຕນກັນຫຼາຍລະຫວ່າງ ເປົ້າໝາຍການສຶກສາເພື່ອທຸກຄົນທີ່ວາງອອກໃນ 2000 ແລະ ມີຄວາມຄືບໜ້າໜ້ອຍໃນການປະຕິບັດຜ່ານມາ.

- ຄວາມອຶດຫິວສະກັດກັ້ນຄວາມຄືບໜ້າ. ຢູ່ປະເທດພວມພັດທະນາເດັກອາຍຸຕ່ຳກວ່າ 5 ປີ 195 ລ້ານຄົນ ໝາຍຄວາມວ່າ 1 ສ່ວນ 3 ມີພະຍາດຂາດອາຫານຊຶ່ງມີຜົນກະທົບອັນບໍ່ສາມາດປົວແປງໄດ້ຕໍ່ການຂະຫຍາຍຕົວດ້ານສະຕິປັນຍາ ແລະ ເສັ້ນທາງການສຶກສາໃນໄລຍະຍາວຂອງເຂົາເຈົ້າ.

- ຈຳນວນນັກຮຽນທີ່ບໍ່ເຂົ້າໂຮງຮຽນຫລຸດລົງຊ້າໂພດ. ໃນປີ 2008 ມີຈຳນວນ 67 ລ້ານຄົນ. ຄວາມຄືບໜ້າ ໃນການເຂົ້າໂຮງຮຽນໂດຍທົ່ວໄປໃນຊັ້ນປະຖົມສຶກສາຍັງອືດອາດຊັກຊ້າ.ຖ້າທ່າອ່ຽງ ໃນປະຈຸບັນຫາກສືບຕໍ່ ເດັກທີ່ບໍ່ໄດ້ເຂົ້າຮຽນປີ 2015 ຈະມີຈຳນວນຫລາຍກວ່າປະຈຸບັນ.

- ເດັກຈຳນວນຫລວງຫລາຍປະລະການຮຽນກ່ອນຈົບຊັ້ນປະຖົມສົມບູນ. ເດັກ 10 ລ້ານ ຄົນຢູ່ເຂດອະນຸພາກພື້ນຊາຮາລາອາຟຣິກາປະລະການຮຽນໃນຊັ້ນປະຖົມສຶກສາໃນແຕ່ລະປີ.

- ປະມານ 17% ຂອງຜູ້ໃຫຍ່ໃນໂລກ ໝາຍຄວາມວ່າ 796 ລ້ານຄົນ ຍັງບໍ່ທັນມີຄວາມສາມາດພື້ນຖານໃນຂັ້ນການລຶບລ້າງຄວາມບໍ່ຮູ້ໜັງສື. ໃນນີ້ສອງສ່ວນສາມແມ່ນແມ່ຍິງ.

- ຄວມແຕກໂຕນກັນລະຫວ່າງ ຍິງ ຊາຍ ຍັງສືບຕໍ່ເປັນອຸປະສັກແກ່ຄວາມຄືບໜ້າຂອງການສຶກສາ. ຖ້າໂລກບັນລຸຄວາມສະເໝີພາບລະຫວ່າງ ຍິງ - ຊາຍ ໃນລະດັບຊັ້ນປະຖົມສຶກສາປີ 2008 ພວກເຮົາຈະມີແມ່ຍິງ 3.6 ລ້ານຄົນ ເພີ່ມໃນຊັ້ນປະຖົມ.

- ຄວາມບໍ່ສະເໝີພາບກັນຫລາຍ ຈຳກັດການຄາດຄະເນໂຄງການໃນອະນາຄົດ. ຢູ່ປາກິດສະຖານ ເກືອບເຄິ່ງໜຶ່ງຂອງເດັກໃນອາຍຸ 7 ປີ ຫາ 16 ປີ ຂອງຂົງເຂດຊຸມຊົນທຸກຍາກບໍ່ໄດ້ເຂົ້າຮຽນແຕ່ຢູ່ເຂດຮັ່ງມີພຽງ 5% ເທົ່ານັ້ນ.

- ຄວາມດ້ອຍໂອກາດ ທີ່ຕິດພັນກັບເພດມີຄຸນຄ່າເທົ່າກັບຊີວິດ. ຖ້າອັດຕາສະເລ່ຍໃນການຕາຍຂອງເດັກຢູ່ ໃນເຂດອະນຸພາກພື້ນຊາຮາລາອາຟຣິກາ ຫາກຫລຸດລົງເຖິງລະດັບໃນເວລາທີ່ແມ່ຍິງໄດ້ເຂົ້າຮຽນໃນຊັ້ນມັດທະຍົມ, ພວກເຮົາຈະມີເດັກນ້ອຍທີ່ຕາຍໜ້ອຍກວ່ານີ້ 1.8 ລ້ານຄົນ.

- ແມ່ນຍິງທີ່ຮຽນໃນຊັ້ນມັດທະຍົມມີໂອກາດຮຽນຮູ້ມາດຕະການສະເພາະເພື່ອຫລີກເວັ້ນການຕິດຕໍ່ເຊື້ອ ເຮດສ໌ໄອວີ (HIV) ຈາກແມ່ສູ່ລູກ, ຕາມການຄາດຄະເນແລ້ວ ພະຍາດທີ່ເກີດຂຶ້ນຕາມ ກາລະໂອກາດດັ່ງກ່າວນີ້ເຮັດໃຫ້ມີຄົນຕາຍ 260.000 ຄົນ ໃນປີ 2009. ຢູ່ປະເທດ ມາລາວີ 60% ຂອງແມ່ທີ່ໄດ້ເຂົ້າຮຽນໃນຊັ້ນ ມັດທະຍົມຫລື ໃນການສຶກສາຊັ້ນສູງຮູ້ຈັກຢາທີ່ສາມາດຫລຸດຜ່ອນຄວາມສ່ຽງໃນການຕິດຕໍ່ພະຍາດ, ແຕ່ແມ່ຍິງທີ່ບໍ່ໄດ້ຮັບການສຶກສາມີພຽງ 27% ເທົ່ານັ້ນ.

- ຄຸນນະພາບຂອງການສຶກສາຍັງຕ່ຳໃນຫລາຍປະເທດ. ເດັກຫລາຍລ້ານຄົນທີ່ຈົບຊັ້ນປະຖົມມີຄວາມສາມາດໃນການອ່ານ, ການຂຽນ ແລະ ການຄຳນວນຕ່ຳກວ່າລະດັບທີ່ຕ້ອງການ.

- ແຕ່ນີ້ເຖິງປີ 2015 ຕ້ອງມີນາຍຄູ 1.9 ລ້ານຄົນ ເພື່ອບັນລຸການສຶກສາຊັ້ນປະຖົມໂດຍທົ່ວໄປເຊິ່ງໃນນີ້ ເຄິ່ງໜຶ່ງແມ່ນຢູ່ເຂດອາຟຣິກາໃຕ້ ຊາຮາລາ.

## ການສະໜອງທຶນແກ່ການສຶກສາເພື່ອທຸກຄົນ

ວິກິດການທາງດ້ານການເງິນໂລກໄດ້ເພີ່ມການກົດດັນທີ່ໜີບເຕັງງົບປະມານແຫ່ງຊາດ, ຫລຸດຜ່ອນຄວາມພະຍາຍາມຢ່າງຈິງຈັງເພື່ອສະໜອງທຶນໃຫ້ແກ່ແຜນ ການສຶກສາ ຂອງຫລາຍປະເທດທຸກຍາກກວ່າໝູ່ໃນໂລກ. ງົບປະມານ ການຊ່ວຍເຫລືອໄດ້ຮັບຄວາມຈຳກັດຄືກັນ, ຍັງບໍ່ເຖິງ 5 ປີ ກ່ອນກຳນົດໝາຍ 2015 ລັດຖະບານແຫ່ງຊາດ ແລະ ຜູ້ໃຫ້ທຶນຕ້ອງເພີ່ມທະວີຄວາມພະຍາຍາມອີກເຄິ່ງໜຶ່ງເພື່ອທົດແທນການຂາດດູນໃນ ການສະໜອງທຶນ ແກ່ການສຶກສາເພື່ອທຸກຄົນ.

- ເຖິງວ່າປະເທດທີ່ມີລາຍໄດ້ຕ່ຳໄດ້ເພີ່ມລາຍຮັບຂອງຕົນແຕ່ 2.9% ເປັນ 3.8% ເຂົ້າໃສ່ການສຶກສາແຕ່ ປີ 1999 ກໍຕາມແຕ່ຫລາຍ

ຂົງເຂດ ແລະ ຫລາຍປະເທດຍັງສືບຕໍ່ການບໍ່ໃຫ້ຄວາມສຳຄັນແກ່ການສຶກສາ.

- ຈາກລາຍຮັບດ້ວຍການລະດົມລາຍຮັບຂະໜາດໃຫຍ່ ແລະ ການເຮັດພັນທະຢ່າງແຂງແຮງຕໍ່ການສຶກສາ ປະເທດທີ່ມີລາຍໄດ້ຕໍ່າສາມາດເພີ່ມລາຍຈ່າຍເຂົ້າໃສ່ການສຶກສາເພື່ອທຸກຄົນແຕ່ 12 ຕື້ ໂດລາສະຫະລັດ ອາເມລິກາ ເຖິງ 19 ຕື້ ໂດລາ ຕໍ່ປີ-ໝາຍຄວາມວ່າການເພີ່ມຂຶ້ນເທົ່າກັບ 0.7% ຂອງມູນຄ່າຜະລິດຕະພັນ ລວມພາຍໃນ (GNP).

- ວິກິດການດ້ານການເງິນໄດ້ຫລຸດງົບປະມານຂອງການສຶກສາລົງຢ່າງໜັກໜ່ວງ. ຈາກການຄົ້ນຄວ້າວິໃຈ ເພື່ອຂຽນບົດລາຍງານສະບັບນີ້ເຫັນວ່າ 7 ໃນ 18 ປະເທດທີ່ມີລາຍໄດ້ຕໍ່າໄດ້ຕັດລາຍຈ່າຍຂອງການສຶກສາໃນ 2009. ປະເທດເຫລົ່ານີ້ມີເດັກທີ່ບໍ່ໄດ້ເຂົ້າໂຮງຮຽນຈຳນວນ 3.7 ລ້ານຄົນ.

- ໂດຍລວມແລ້ວ, ແຕ່ປີ 2002 ເປັນຕົ້ນມາການຊ່ວຍເຫລືອແກ່ການສຶກສາຂັ້ນພື້ນຖານເພີ່ມຂຶ້ນສອງເທົ່າເຖິງ 4.7 ຕື້ໂດລາສະຫະລັດອາເມລິກາ ເພື່ອສະໜັບສະໜູນນະໂຍບາຍຊຸກຍູ້ຄວາມຄືບໜ້າການສຶກສາເພື່ອທຸກຄົນ. ແຕ່ວ່າລະດັບການຊ່ວຍເຫລືອໃນປະຈຸບັນຍັງຫ່າງໄກຈາກ 16 ຕື້ໂດລາສະຫະລັດອາເມລິກາ ທີ່ຕ້ອງການໃນແຕ່ລະປີເພື່ອຖົມຊ່ອງຄວາມຂາດດູນໃນການສະໜອງທຶນຈາກພາຍນອກໃຫ້ແກ່ປະເທດທີ່ມີລາຍໄດ້ຕໍ່າ.

- ຜູ້ໃຫ້ທຶນຕ້ອງໄດ້ປະຕິບັດພັນທະເພີ່ມທະວີການຊ່ວຍເຫລືອຕາມທີ່ຕົນໄດ້ເຫັນດີໃນປີ 2005. ອົງການການຮ່ວມມືເພື່ອການພັດທະນາເສດຖະກິດ (OECD) ຄາດຄະເນການຂາດດູນໃນທົ່ວໂລກມີຈຳນວນ 20 ຕື້ ໂດລາສະຫະລັດອາເມລິກາຕໍ່ປີ.

- ທ່າອ່ຽງປະຈຸບັນຂອງການຊ່ວຍເຫລືອສ້າງຄວາມກັງວົນໃຈ.ແຕ່ປີ 2007 ເປັນຕົ້ນມາການຊ່ວຍເຫລືອເພື່ອ ການພັດທະນາທີ່ມອບໃຫ້ການສຶກສາຂັ້ນພື້ນຖານຢຸດຈົ້ງຢູ່ບ່ອນເກົ່າ. ໃນປີ 2008 ການຊ່ວຍເຫລືອນີ້ໄດ້ ຫລຸດລົງປະມານ 6% ຕໍ່ເດັກ 1 ຄົນໃນອາຍຸເຂົ້າຮຽນໃນຊັ້ນປະຖົມ.

- ສ່ວນຫລາຍຂອງຜູ້ໃຫ້ທຶນໃນລະດັບແຖວໜ້າສືບຕໍ່ທັນງົບປະມານການຊ່ວຍເຫລືອແກ່ລະດັບການສຶກສາທີ່ສູງກວ່າ. ຖ້າວ່າຜູ້ໃຫ້ທຶນຫາກສະໜອງເຄິ່ງໜຶ່ງຂອງການຊ່ວຍເຫລືອໃຫ້ແກ່ການສຶກສາຂັ້ນພື້ນຖານ, ໃນແຕ່ລະປີ ສາມາດລະດົມທຶນເພີ່ມອີກ 1.7 ຕື້ ໂດລາສະຫະລັດອາເມລິກາ.

ວິທີການແກ້ໄຂແບບໃໝ່ ແລະ ມີນະວັດຕະກຳໃນການສະໜອງທຶນແກ່ການສຶກສາສາມາດຖົມຊ່ອງການຂາດດູນໃນການສະໜອງທຶນໃຫ້ການສຶກສາເພື່ອທຸກຄົນ. ບົດລາຍງານສະບັບນີ້ໄດ້ມີຂໍ້ສະເໜີໃນທິດດັ່ງກ່າວດັ່ງນີ້:

- ຄວາມສະດວກສະບາຍໃນການສະໜອງທຶນສາກົນ ເພື່ອການສຶກສາຕາມຕົວແບບທີ່ຄ້າຍຄືກັນກັບວິທີປະຕິບັດໃນຂະແໜງສາທາລະນະສຸກສາມາດຊ່ວຍຜູ້ໃຫ້ທຶນເຕົ້າໂຮມຊັບພະຍາກອນໃໝ່ໃນສະພາບແວດລ້ອມເສດຖະກິດຫຍຸ້ງຍາກ. ຈາກການປະຕິບັດພັນທະສາມາດລະດົມທຶນເພື່ອການສຶກສາແຕ່ 2011 ຫາ 2015 ໃນຈຳນວນ 3 ຫາ 4 ຕື້ໂດລາສະຫະລັດອາເມລິກາຕໍ່ປີ.

- ການເກັບອາກອນຈາກການບໍລິການໂທລະສັບມືຖືໃນແຕ່ລະປີທີ່ຢູໂຣບ ສາມາດລະດົມທຶນ 894 ລ້ານ ໂດລາສະຫະລັດອາເມລິກາ.

## ວິກິດການເຊື່ອງຊ້ອນ: ຄວາມຂັດແຍ້ງດ້ວຍອາວຸດ ແລະ ການສຶກສາ

ປະເທດທີ່ໄດ້ຮັບຜົນກະທົບຈາກ ຂໍ້ຂັດແຍ້ງດ້ວຍກຳລັງອາວຸດ ຖືກຈັດເຂົ້າໃນບັນດາປະເທດທີ່ຍັງຫ່າງໄກກວ່າໝູ່ຈາກເປົ້າໝາຍການສຶກສາເພື່ອທຸກຄົນ, ແຕ່ບັນຫາທີ່ເຂົາເຈົ້າພົບພໍ້ໃນຂະແໜງການສຶກສາໂດຍສ່ວນຫລາຍແມ່ນຖືກປົກປິດຢູ່ໃນຄວາມງຽບ. ວິກິດການເຊື່ອງຊ້ອນໃນການສຶກສາຂອງປະເທດທີ່ໄດ້ຮັບຜົນກະທົບຈາກສົງຄາມແມ່ນ ສິ່ງທ້າທາຍຂອງໂລກທີ່ຮຽກຮ້ອງ ໃຫ້ ມີຄຳຕອບຈາກສາກົນ. ນອກຈາກຈຳກັດການຄາດຄະເນເປົ້າໝາຍການເລັ່ງລັດການເຕີບໂຕດ້ານເສດຖະກິດ, ການຫລຸດຜ່ອນຄວາມທຸກຍາກ ແລະ ການເຮັດໃຫ້ເປົ້າໝາຍສະຫະສະວັດ ເພື່ອການພັດທະນາປະກົດຜົນເປັນຈິງແລ້ວ ສົງຄາມຍັງເພີ່ມທະວີຄວາມບໍ່ສະເໝີພາບ, ຄວາມຜິດຫວັງ ແລະ ຄວາມຂົມຂື່ນທີ່ປິດລ້ອມຫລາຍປະເທດ ໃຫ້ຢູ່ໃນວົງຈອນຂອງຄວາມຮຸນແຮງ.

### ຜົນກະທົບຂອງ ຄວາມຂັດແຍ້ງດ້ວຍອາວຸດ ຕໍ່ການສຶກສາ

- ແຕ່ປີ 1998 ຫາ 2008, 35ປະເທດໄດ້ປະສົບກັບສົງຄາມ. ໃນນີ້ 30 ປະເທດແມ່ນປະເທດທີ່ມີລາຍໄດ້ ໜ້ອຍ ຫລື ຕໍ່າກວ່າລາຍໄດ້ສະເລ່ຍ. ຢູ່ປະເທດທີ່ມີລາຍໄດ້ໜ້ອຍ,ໂດຍສະເລ່ຍແລ້ວສົງຄາມທີ່ມີຄວາມຮຸນແຮງແກ່ຍາວເຖິງ 12 ປີ.

- ຢູ່ປະເທດທຸກຍາກທີ່ໄດ້ຮັບຜົນກະທົບຈາກສົງຄາມ ມີເດັກ 28 ລ້ານຄົນໃນເກນ ອາຍຸເຂົ້າຮຽນໃນຊັ້ນປະຖົມບໍ່ໄດ້ເຂົ້າຮຽນ - ໝາຍຄວາມວ່າ 42% ຂອງເດັກ ໃນທົ່ວໂລກ.

- ເດັກໃນປະເທດທຸກຍາກທີ່ໄດ້ຮັບຜົນກະທົບຈາກສົງຄາມມີຄວາມສ່ຽງຕໍ່ການເສຍຊີວິດກ່ອນອາຍຸຫ້າປີ ຫລາຍກວ່າເດັກປະເທດທຸກຍາກອື່ນໆສອງເທົ່າ.

- ຢູ່ປະເທດທຸກຍາກທີ່ໄດ້ຮັບຜົນກະທົບຈາກສົງຄາມ, 79% ຂອງຊາວໜຸ່ມເທົ່ານັ້ນທີ່ຮູ້ໜັງສືແຕ່ຢູ່ປະເທດ ທຸກຍາກອື່ນໆນັ້ນ ແມ່ນ 93%.

- ພາກສ່ວນຂອງລັດ ແລະ ບໍ່ຂຶ້ນກັບລັດ ທີ່ກ່ຽວຂ້ອງກັບສົງຄາມນັບມື້ນັບເອົາພົນລະເຮືອນ ແລະ ພື້ນຖານໂຄງລ່າງຂອງສັງຄົມເປັນເປົ້າໝາຍເລື້ອຍໆ. ໂຮງຮຽນ ແລະ ນັກຮຽນ ໂດຍທົ່ວໄປແລ້ວຖືກເປັນເປົ້າໝາຍອັນຊອບທຳຈາກ ນັກຮົບ ຊຶ່ງເປັນການລ່ວງລະເມີດກົດໝາຍສາກົນຢ່າງເປີດແປນ.

- ບົດລາຍງານໄດ້ຊີ້ໃຫ້ເຫັນວ່າ ມີຫລາຍກວ່າ 43 ລ້ານຄົນ ຖືກຍົກຍ້າຍສ່ວນຫລາຍແມ່ນຍ້ອນສົງຄາມເຖິງວ່າຈຳນວນຕົວຈິງອາດຈະສູງກວ່ານີ້. ຊາວອົບພະຍົບ ແລະ ຄົນທີ່ເຄື່ອນຍ້າຍຢູ່ພາຍໃນປະສົບກັບອຸປະສັກອັນໃຫຍ່ຫລວງຂອງການສຶກສາ. ໃນປີ 2008, ຢູ່ຄ້າຍຂອງອົງການຂ້າຫລວງໃຫຍ່ສະຫະປະຊາຊາດເພື່ອ ຊາວອົບພະຍົບ (UNHCR) 69% ຂອງເດັກອົບພະຍົບ ທີ່ຢູ່ໃນເກນອາຍຸການເຂົ້າຮຽນໃນຊັ້ນປະຖົມເທົ່ານັ້ນທີ່ໄດ້ເຂົ້າຮຽນ.

### ການໃຊ້ຈ່າຍໃນການສຶກສາ ຢູ່ປະເທດທີ່ໄດ້ຮັບຜົນກະທົບຈາກສົງຄາມ

- ຂໍ້ຂັດແຍ້ງດ້ວຍອາວຸດທັນກອງທຶນຂອງລັດ ເພື່ອການສຶກສາເຂົ້າໃນການໃຊ້ຈ່າຍທາງທະຫານ. ປັດຈຸບັນ 21 ປະເທດ ພວມພັດທະນາໃຊ້ຈ່າຍເຂົ້າໃນການປະກອບອາວຸດ ຫລາຍກວ່າໂຮງຮຽນປະຖົມ: ຖ້າປະເທດເຫລົ່ານັ້ນ ຫາກຫລຸດການໃຊ້ຈ່າຍດ້ານການທະຫານລົງ 10% ປະເທດເຫລົ່ານັ້ນສາມາດເຮັດໃຫ້ເດັກເຂົ້າຮຽນໄດ້ຕື່ມອີກ 9.5 ລ້ານຄົນ.

- ການໃຊ້ຈ່າຍດ້ານການທະຫານທັນທີດຊັບພະຍາກອນການຊ່ວຍເຫລືອເຊັ່ນກັນ. ຈຳນວນເງິນທີ່ໃຊ້ຈ່າຍເຂົ້າໃສ່ການທະຫານຂອງປະເທດຮັ່ງມີ ພຽງ 6 ວັນເທົ່ານັ້ນ ກໍເທົ່າກັບຈຳນວນເງິນທີ່ຕ້ອງການ 16 ຕື້ ດອນລາສະຫະລັດ ເພື່ອປິດຊ່ອງວ່າງທຶນພາຍນອກ ເພື່ອສະໜອງໃຫ້ແກ່ການສຶກສາເພື່ອທຸກຄົນ.

- ການສຶກສາໄດ້ຮັບທຶນຈາກການຊ່ວຍເຫລືອມະນຸດສະທຳພຽງແຕ່ 2%. ນອກນີ້ ບໍ່ມີຂະແໜງການໃດທີ່ໄດ້ຮັບການແບ່ງປັນໜ້ອຍຈາກການຮ້ອງຂໍນຳກອງທຶນມະນຸດສະທຳ ກວ່າຂະແໜງການນີ້: 38% ຂອງຄຳຮ້ອງຂໍການຊ່ວຍເຫລືອແກ່ການສຶກສາເທົ່ານັ້ນ ທີ່ໄດ້ຮັບການຕອບສະໜອງ, ຕົວເລກດັ່ງກ່າວ ໜ້ອຍກວ່າຈຳນວນສະເລ່ຍຂອງໝົດຂະແໜງການອື່ນ 2 ເທື່ອ.

## ແຜນປະຕິບັດງານເພື່ອການປ່ຽນແປງ

ບົດລາຍງານກຳນົດແຜນວຽກ ເພື່ອການປ່ຽນແປງທີ່ມີເປົ້າໝາຍຕໍ່ສູ້ກັບຄວາມຫລົ້ມເຫລວໃນທົ່ວລະບົບ.

- ຄວາມຫລົ້ມເຫລວໃນການປ້ອງກັນ. ໃນເວລາທີ່ລັດຖະບານດຳເນີນງານຜ່ານລະບົບອົງການສະຫະປະຊາຊາດ ລັດຖະບານຕ້ອງເພີ່ມທະວີລະບົບການຕິດຕາມ ແລະ ການແຈ້ງຂ່າວການລ່ວງລະເມີດສິດທິມະນຸດ ທີ່ກ່ຽວຂ້ອງກັບການສຶກສາ, ຕ້ອງສະໜັບສະໜູນແຜນການແຫ່ງຊາດທີ່ແນໃສ່ຢຸດຕິການລ່ວງລະເມີດ ເຫລົ່ານັ້ນ ແລະ ການບັງຄັບການລົງໂທດຕໍ່ຜູ້ກະທຳຜິດຢ່າງເປີດແປນ ແລະ ຊ້ຳແລ້ວຊ້ຳອີກ. ກຳມາທິການສາກົນກ່ຽວກັບການລ່ວງລະເມີດທາງເພດ ແລະ ການໃຊ້ຄວາມຮຸນແຮງທາງເພດຕ້ອງໄດ້ຮັບການສ້າງຂຶ້ນ ໂດຍສານອາຍາສາກົນ ແລະ ຕ້ອງປະກອບສ່ວນໂດຍກົງໃນການປະເມີນການດຳເນີນຄະດີຕາມກົດໝາຍ. ອຸຍແນດສະໂກຕ້ອງປະຕິບັດໜ້າທີ່ເປັນຫົວຈັກຫລັກແຫລ່ງໃນການຕິດຕາມ ແລະ ການແຈ້ງຂ່າວການບຸກໂຈມຕີທີ່ມີລະບົບການສຶກສາເປັນເປົ້າໝາຍ.

- ຄວາມຫລົ້ມເຫລວໃນການສະໜອງ. ຕ້ອງປ່ຽນແປງຢ່າງຮີບດ່ວນຄວາມສຳນຶກກ່ຽວກັບມະນຸດສະທຳ ແລະ ຮັບຮູ້ໜ້າທີ່ເປັນຕາຍຂອງການສຶກສາໃນຂອບການຊ່ວຍເຫລືອແບບສຸກເສີນທີ່ຕິດພັນກັບສົງຄາມ. ການຮວມທຶນໃຫ້ກອງທຶນດ້ານມະນຸດສະທຳຕ້ອງເພີ່ມຈາກ 730 ລ້ານໂດລາສະຫະລັດອາເມລິກາ ເປັນ 2 ຕື້ ໂດລາສະຫະລັດອາເມລິກາ ເພື່ອຊົດເຊີຍການຂາດດູນໃນການສະໜອງທຶນແກ່ການສຶກສາ. ລະບົບການປະເມີນຄວາມຕ້ອງການການສຶກສາໃນປັດຈຸບັນຂອງຊຸມຊົນທີ່ໄດ້ຮັບຜົນກະທົບຈາກສົງຄາມ ຕ້ອງໄດ້ຮັບການປັບປຸງໃຫ້ເຂັ້ມແຂງ. ກົນໄກການບໍລິຫານກ່ຽວຂ້ອງກັບຊາວອົບພະຍົບ ຕ້ອງໄດ້ຮັບການປະຕິຮູບ ເພື່ອປັບປຸງການຂະຫຍາຍໂອກາດການເຂົ້າຮຽນຂອງເຂົາເຈົ້າ. ພ້ອມນີ້ລັດຖະບານຕ້ອງເພີ່ມທະວີສິດໃນການໄດ້ຮັບການສຶກສາຂອງຜູ້ຄົນທີ່ເຄື່ອນຍ້າຍຢູ່ພາຍໃນ.

- ຄວາມຫລົ້ມເຫລວດ້ານການກໍ່ສ້າງຄືນ. ຜູ້ໃຫ້ທຶນຕ້ອງຢຸດຕິການແບ່ງປັນທີ່ບໍ່ຈະແຈ້ງລະຫວ່າງການຊ່ວຍເຫລືອ ດ້ານມະນຸດສະທຳ ແລະ ການຊ່ວຍເຫລືອໄລຍະຍາວ. ການຊ່ວຍເຫລືອເພື່ອການພັດທະນາຕ້ອງເຂົ້າຜ່ານກອງທຶນລວມແຫ່ງຊາດໃຫ້ຫລາຍຕາມກົນໄກທີ່ປະສົບຜົນສຳເລັດໃນອັບການິດສະຖານ. ປະຕິບັດຕາມຂອບປະຕິຮູບ ຂອງກອງທຶນເລັ່ງລັດການສຶກສາເພື່ອທຸກຄົນ, ຜູ້ໃຫ້ທຶນຕ້ອງສ້າງກົນໄກຮ່ວມຫລາຍຝ່າຍທີ່ມີປະສິດທິພາບໃນການສະໜອງທຶນຮ່ວມກັນຄືກັນກັບກົນໄກທີ່ປະຕິບັດໃນຂະແໜງສາທາລະນະສຸກ. ການສະໜອງກອງທຶນເລັ່ງລັດໃນແຕ່ລະປີຕ້ອງເພີ່ມຂຶ້ນເພື່ອໃຫ້ ເຖິງ 6 ຕື້ໂດລາສະຫະລັດອາເມລິກາ ດ້ວຍການນຳໃຊ້ລະບຽບການທີ່ນິ້ມນວນກວ່າເພື່ອເຮັດໃຫ້ການຊ່ວຍເຫລືອປະເທດທີ່ໄດ້ຮັບຜົນກະທົບ ຈາກຂໍ້ຂັດແຍ້ງດ້ວຍອາວຸດມີຄວາມສະດວກ.

### ຂໍ້ຄວາມທີ່ເປັນຂໍກະແຈ

ການເພີ່ມທະວີຢ່າງໄວວາຂອງຈຳນວນເດັກ ແລະ ຄວາມບໍ່ພຽງພໍໃນການສຶກສາລວມເຂົ້າກັນເປັນຄວາມສ່ຽງຂອງສົງຄາມ. ໃນຫລາຍປະເທດທີ່ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ, ລະບົບການສຶກສາບໍ່ຮັບປະກັນໃຫ້ຊາວໜຸ່ມ ມີຄວາມສາມາດທີ່ເຂົາເຈົ້າຕ້ອງການເພື່ອຫລຸດພົ້ນຈາກຄວາມທຸກຍາກ ແລະ ການວ່າງງານ. ຊາວໜຸ່ມອາຍຸຕ່ຳກວ່າ 25 ປີ ມີຈຳນວນ 60% ຂອງພົນລະເມືອງປະເທດທີ່ໄດ້ຮັບຜົນກະທົບຈາກ ຄວາມຂັດແຍ້ງ, ການສຶກສາທີ່ມີຄຸນນະພາບດີແມ່ນສິ່ງຈຳເປັນ ເພື່ອຜ່ານຜ່າຄວາມຜິດຫວັງດ້ານເສດຖະກິດທີ່ພາໃຫ້ມີຄວາມຂັດແຍ່ງຮຸນແຮງຢູ່ເລື້ອຍໆ.

ຮູບແບບການສຶກສາທີ່ບໍ່ສອດຄ່ອງສາມາດຫລໍ່ລ້ຽງໃຫ້ມີຄວາມຂັດແຍ່ງຮຸນແຮງໄດ້. ການສຶກສາສາມາດເປັນພະລັງແຫ່ງສັນຕິພາບ - ແຕ່ຫລາຍເທື່ອໂຮງຮຽນຖືກນຳໃຊ້ເພື່ອເພີ່ມທະວີການແບ່ງແຍກໃນສັງຄົມ, ການບໍ່ປະນີປະນອມ ແລະ ຄວາມອະຄະຕິ ທີ່ພາໄປສູ່ສົງຄາມ. ບໍ່ມີປະເທດໃດສາມາດມີຄວາມ ຫວັງດຳລົງຊີວິດໃນສັນຕິພາບ ແລະ ວັດທະນາຖາວອນ ຖ້າວ່າປະເທດນັ້ນບໍ່ສ້າງຄວາມໄວ້ເນື້ອເຊື່ອໃຈຊຶ່ງກັນ ແລະ ກັນ ລະຫວ່າງ ພົນລະເມືອງ ໂດຍເລີ່ມຕົ້ນຈາກຫ້ອງຮຽນ.

ລັດຖະບານແຫ່ງຊາດ ແລະ ຄະນະຍາດສາກົນບໍ່ສາມາດເຮັດໃຫ້ເຄົາລົບສິດທິມະນຸດ. ພາກສ່ວນທີ່ ຂຶ້ນກັບລັດ ແລະ ບໍ່ຂຶ້ນກັບລັດທີ່ກ່ຽວຂ້ອງກັບການປະທະກັນ ດ້ວຍອາວຸດວາງເປົ້າໝາຍໃຫ້ນັກຮຽນ, ຄູ, ພົນລະເຮືອນ ແລະ ໂຮງຮຽນບໍ່ໄດ້ຮັບການລົງໂທດໃດໝົດ. ສິ່ງດັ່ງກ່າວມີຄວາມຈິງພິເສດໃນການລ່ວງລະເມີດທາງເພດ. ຄູ່ຮ່ວມງານໃນການສຶກສາເພື່ອທຸກຄົນຕ້ອງເປັນຜູ້ປົກປ້ອງສິດທິມະນຸດຢ່າງຂະຫຍັນຂັນແຂງ.

ປະສິດທິພາບຂອງການຊ່ວຍເຫລືອຖືກບັ່ນທອນໂດຍບູລິມະສິດຄວາມປອດໄພແຫ່ງຊາດຂອງຜູ້ໃຫ້ທຶນທີ່ສຳຄັນ. ການຊ່ວຍເຫລືອເພື່ອການພັດທະນາແກ່ປະເທດທີ່ໄດ້ຮັບຜົນກະທົບຈາກສົງຄາມໄຫລເຂົ້າສູ່ປະເທດທີ່ຖືວ່າເປັນບູລິມະສິດຍຸດທະສາດເຊັ່ນ: ອັບການິດສະຖານ, ອີຣັກ ແລະ ປາກິດສະຖານ. ການນຳໃຊ້ການຊ່ວຍເຫລືອການສຶກສາເພື່ອສະໜັບສະໜູນການປະຕິບັດງານ ຕ້ານການຕໍ່ຕ້ານເປັນການຂົ່ມຂູ່ຄວາມປອດໄພຂອງຊຸມຊົນໃນທ້ອງຖິ່ນ, ນັກຮຽນ ແລະ ຜູ້ທີ່ເຮັດວຽກໃນການຊ່ວຍເຫລືອ. ຜູ້ໃຫ້ທຶນຕ້ອງເຮັດໃຫ້ການຊ່ວຍເຫລືອບໍ່ມີລັກສະນະການທະຫານ.

ລະບົບການຊ່ວຍເຫລືອມະນຸດສະທຳທໍລະຍົດຄວາມຄອງຄອຍຂອງເດັກທີ່ຢູ່ໃນສົງຄາມ. ຊຸມຊົນໃນທ້ອງຖິ່ນມີ ຄວາມເດັດດ່ຽວ ແລະ ເຮັດນະວັດຕະກຳຫລາຍຢ່າງເພື່ອອອກແຮງຮັກສາການສຶກສາໄວ້ໃນຊ່ວງເວລາຂອງສົງຄາມ. ພວກເຮົາບໍ່ສາມາດເວົ້າໄດ້ເທົ່າກັບຜູ້ໃຫ້ທຶນ. ຄະນະຍາດການຊ່ວຍເຫລືອມະນຸດສະທຳຕ້ອງຢູ່ໃນລະດັບສູງຂອງຄວາມມຸ້ງມາດ ປາຖະໜາຂອງຊຸມຊົນທີ່ໄດ້ຮັບຜົນກະທົບຈາກສົງຄາມ.

ລະບົບການຊ່ວຍເຫລືອສາກົນບໍ່ມີພາທະນະເພື່ອສວຍໃຊ້ໂອກາດແຫ່ງສັນຕິພາບ ແລະ ການກໍ່ສ້າງຄືນໃໝ່. ຫລາຍປະເທດທີ່ອອກຈາກສະພາວະສົງຄາມບໍ່ມີຊັບພະຍາກອນ ອັນຈຳເປັນເພື່ອ ກໍ່ສ້າງລະບົບການສຶກສາຄືນ. ປັດຈຸບັນ ປະເທດທີ່ຂຶ້ນກັບທຶນການຊ່ວຍເຫລືອມະນຸດສະທຳທີ່ຈຳກັດ ແລະ ບໍ່ໄດ້ຄາດຄະເນໄວ້ລ່ວງໜ້າຕ້ອງການການສະໜອງ ທຶນທີ່ຄາດຄະເນໄວ້ໃນໄລຍະຍາວ ເພື່ອສ້າງລະບົບການສຶກສາທີ່ມີຄຸນນະພາບ ແລະ ການຮຽນຮ່ວມ.

- ຄວາມຫລົ້ມເຫລວດ້ານການສ້າງສັນຕິພາບ. ເພື່ອປົດປ່ອຍຄວາມສາມາດໃນການສ້າງສັນຕິພາບຂອງການສຶກສາ, ລັດຖະບານ ແລະ ຜູ້ໃຫ້ທຶນຕ້ອງໃຫ້ບູລິມະສິດການພັດທະນາ ລະບົບການສຶກສາການຮຽນຮ່ວມ ດ້ວຍການເຊີດຊູນະໂຍບາຍ ກ່ຽວກັບພາສາ, ຫລັກສູດການຮຽນ ແລະ ການແບ່ງຂັ້ນຄຸ້ມຄອງ ກ່ຽວກັບການປະເມີນຜົນກະທົບທີ່ອາດຈະເກີດຂຶ້ນຍ້ອນແນວຄິດເກົ່າ. ຕ້ອງຖືວ່າໂຮງຮຽນເປັນສະຖານທີ່ທຳອິດ ແລະ ສຳຄັນກວ່າໝູ່ເພື່ອຮັບເອົາຄວາມສາມາດຕົ້ນຕໍ: ການປະນີປະນອມ, ການເຄົາລົບ ຊຶ່ງກັນ ແລະ ກັນ ແລະ ຄວາມສາມາດເພື່ອດຳລົງຊີວິດໃນສັນຕິພາບຮ່ວມກັບຄົນອື່ນ. ມັນມີຄວາມເໝາະສົມທີ່ຕ້ອງສະໜອງທຶນລະຫວ່າງ 500 ລ້ານໂດລາ ຫາ 1 ຕື້ໂດລາສະຫະລັດອາເມລິກາໃຫ້ແກ່ການສຶກສາໂດຍ ຜ່ານກອງທຶນສ້າງຄວາມແຂງແກ່ນແກ່ສັນຕິພາບຂອງອົງການສະຫະປະຊາຊາດ. ອຸຍແນດສະໂກ ແລະ ອຸຍນີແຊບເຮັດໜ້າທີ່ໃຈກາງເພື່ອບັນຈຸການສຶກສາເຂົ້າໃນຍຸດທະສາດລວມຂອງ ການສ້າງຄວາມແຂງແກ່ນໃຫ້ແກ່ສັນຕິພາບ. ■

# ບົດເປີດຫົວເລື່ອງ

ຂອບປະຕິບັດງານການສຶກສາເພື່ອທຸກຄົນ ດາກາ ທີ່ໄດ້ຖືກຮັບຮອງເອົາໂດຍບັນດາລັດຖະບານ ຂອງປະເທດຕ່າງໆຢູ່ເມືອງດາກາ ປະເທດ ເຊເນການໃນປີ 2000 ໄດ້ວາງຫົກເປົ້າໝາຍລວມ ແລະ ຫລາຍຄາດໝາຍສະເພາະເພື່ອບັນລຸໃນປີ 2015. ຂອບປະຕິບັດງານໄດ້ມີຫົວຂໍ້ວ່າ "ເພື່ອບັນລຸຂໍ້ຜູກພັນລວມຂອງພວກເຮົາ". 10 ປີຕໍ່ມາ ຂໍ້ຄວາມທີ່ມີລັກສະນະກວມລວມຂອງບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນປີ 2011 ແມ່ນຊີ້ໃຫ້ເຫັນວ່າລັດຖະບານປະເທດຕ່າງໆໃນໂລກນີ້ບໍ່ໄດ້ບັນລຸບັນດາຂໍ້ຜູກພັນລວມທີ່ໄດ້ໃຫ້ຄຳໝັ້ນສັນຍາໄວ້ຮ່ວມກັນ.

ຂໍ້ມູນທີ່ໄດ້ຄົ້ນພົບທີ່ບໍ່ສາມາດປ່ຽນແປງໄດ້ບໍ່ໄດ້ຫັນເຫອອກຈາກບາງຜົນສຳເລັດທີ່ໂດດເດັ່ນໃນໄລຍະຜ່ານມາ. ຈຳນວນນັກຮຽນທີ່ບໍ່ໄດ້ເຂົ້າໂຮງຮຽນຫລຸດລົງ, ຊ່ອງວ່າງບົດບາດຍິງ-ຊາຍກຳລັງຮັດແຄບເຂົ້າ ແລະ ຈຳນວນເດັກນ້ອຍນັບມື້ນັບຫລາຍທີ່ໄດ້ເລື່ອນຈາກຊັ້ນປະຖົມຂຶ້ນໄປຮຽນຢູ່ຊັ້ນມັດທະຍົມ ແລະ ສູງກວ່ານັ້ນ. ບາງປະເທດທີ່ທຸກທີ່ສຸດຂອງໂລກ ໄດ້ມີຄວາມກ້າວໜ້າຢ່າງເພິ່ງພໍໃຈ ນັ້ນສະແດງໃຫ້ເຫັນວ່າລາຍຮັບຕ່ຳບໍ່ແມ່ນສິ່ງກີດຂວາງແບບອັດຕາໂນມັດຕໍ່ຄວາມຄືບໜ້າ. ແຕ່ວ່າຊ່ອງວ່າງຖະແຫຼງການ ດາກາ ແລະ ການສະໜອງຍັງກວ້າງຫລາຍ ແລະ ກໍບໍ່ມີສັນຍານຂອງຄວາມເປັນຫ່ວງເປັນໄຍເຖິງຄວາມກວ້າງອອກຂອງຊ່ອງວ່າງດັ່ງກ່າວ. ອີງຕາມທ່າອ່ຽງປັດຈຸບັນ ມັນອາດຈະມີຈຳນວນເດັກນ້ອຍທີ່ບໍ່ໄປເຂົ້າຮຽນໃນປີ 2015 ຫລາຍກວ່າຈຳນວນປັດຈຸບັນ. ໂດຍຂາດຄວາມພະຍາຍາມທີ່ເອົາຈິງເອົາຈັງເພື່ອປ່ຽນແປງພາບພົດດັ່ງກ່າວ ຄຳໝັ້ນສັນຍາ ດາກາ ຕໍ່ເດັກນ້ອຍໃນໂລກຈະຖືກທັບມ້າງຢ່າງກວ້າງຂວາງ.

ຄວາມຫລົ້ມເຫລວໃນການບັນລຸເປົ້າໝາຍທີ່ໄດ້ວາງໄວ້ທີ່ ດາກາ ຈະເກີດຜົນສະທ້ອນຕາມມາຊຶ່ງຍາກທີ່ຈະແກ້ໄດ້. ການເລັ່ງໃຫ້ມີຄວາມຄືບໜ້າໃນການສຶກສາເປັນສິ່ງຈຳເປັນສຳລັບບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ (MDGs) ໃນຂົງເຂດການຫລຸດຜ່ອນຄວາມທຸກຍາກ, ໂພຊະນາການ, ການລອດຊີວິດຂອງເດັກ ແລະ ສຸຂະພາບຂອງແມ່. ຍິ່ງໄປກວ່ານັ້ນ, ຄວາມຫລົ້ມເຫລວໃນການແກ້ໄຂຄວາມແຕກໂຕນທີ່ມີໃນລວງເລິກໃນລະດັບຊາດ ແລະ ສາກົນສຳລັບໂອກາດໄດ້ຮັບການສຶກສາໃຫ້ແຄບເຂົ້ານັ້ນກຳລັງທຳລາຍການເຕີບໂຕທາງເສດຖະກິດ ແລະ ເພີ່ມກຳລັງແກ່ລັກສະນະຮູບແບບຄວາມບໍ່ເທົ່າທຽມກັນຂອງໂລກາພິວັດ. ບໍ່ມີບັນຫາໃດທີ່ຕ້ອງໄດ້ຮັບຄວາມເອົາໃຈໃສ່ຢ່າງຮີບດ່ວນກວ່ານີ້ອີກ. ແຕ່ວ່າການສຶກສາໄດ້ຕົກຈາກຄວາມສຳຄັນຂອງແຜນການພັດທະນາຂອງສາກົນ, ນອກຈາກຄວາມເປັນຫ່ວງເປັນໄຍຂອງບັນດາປະເທດໃນກຸ່ມ ຈີ 8 (G8) ຫຼື ກຸ່ມ ຈີ 20 (G20) ເທົ່ານັ້ນ.

ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ 2011 ໄດ້ແບ່ງອອກເປັນສອງພາກ. ພາກທີ 1 ໄດ້ສະໜອງຂໍ້ມູນສັງລວມກ່ຽວກັບສະພາບການສຶກສາໃນທົ່ວໂລກ. ບົດລາຍງານໄດ້ໃຫ້ລັກສະນະຂອງຄວາມຄືບໜ້າ, ການຖອຍຫລັງ ແລະ ບັນດາຂໍ້ແຊກແຊງດ້ານນະໂຍບາຍທີ່ສາມາດຊ່ວຍເລັ່ງການປະຕິບັດໃຫ້ມີຄວາມຄືບໜ້າພາກທີ 2 ໄດ້ຫັນໄປສູ່ສິ່ງກີດຂວາງທີ່ໃຫຍ່ທີ່ສຸດທີ່ກຳລັງປະເຊີນໜ້າ. ກັບເປົ້າໝາຍການສຶກສາເພື່ອທຸກຄົນຄື: ຄວາມຂັດແຍ້ງດ້ວຍອາວຸດໃນບັນດາປະເທດທີ່ທຸກຍາກທີ່ສຸດຂອງໂລກ. ບົດລາຍງານໄດ້ວິໄຈຄວາມຫລົ້ມເຫລວທາງດ້ານນະໂຍບາຍທີ່ເພີ່ມຄວາມເຂັ້ມແຂງໃຫ້ສິ່ງກີດຂວາງດັ່ງກ່າວ ແລະ ບັນດາຍຸດທະສາດສຳລັບການທັບມ້າງມັນ. ບົດລາຍງານຍັງ ວາງວາລະສຳລັບການສ້າງຄວາມເຂັ້ມແຂງໃຫ້ບົດບາດຂອງລະບົບການສຶກສາໃນການສະກັດກັ້ນຄວາມຂັດແຍ້ງ ແລະ ສ້າງສັງຄົມໃຫ້ມີສັນຕິພາບ.

□



# ພາກທີ 1: ການຕິດຕາມຄວາມຄືບໜ້າ ເພື່ອບັນລຸເປົ້າໝາຍການສຶກສາເພື່ອທຸກຄົນ

## 6 ເປົ້າໝາຍການສຶກສາເພື່ອທຸກຄົນ

*ວຽກງານເບິ່ງແຍງ ແລະ ໃຫ້ການສຶກສາເດັກກ່ອນໄວຮຽນ: ການສົ່ງເສີມສຸຂະພາບ, ການຕໍ່ສູ້ກັບຄວາມອຶດຫິວ*

ໂອກາດດ້ານການສຶກສາໄດ້ຖືກກຳນົດໄວ້ດົນແລ້ວກ່ອນທີ່ເດັກນ້ອຍຈະເຂົ້າຮຽນ. ທັກສະດ້ານພາສາ, ດ້ານຄວາມຮັບຮູ້ ແລະ ດ້ານສັງຄົມທີ່ພວກເຂົາພັດທະນາກ່ອນໄວຮຽນແມ່ນເປັນພື້ນຖານອັນແທ້ຈິງໃນການຮຽນຕະຫລອດຊີວິດ. ສຸຂະພາບບໍ່ສົມບູນ, ການຂາດໂພສະນາການ ແລະ ການຂາດການກະຕຸ້ນ ໄດ້ທຳລາຍພື້ນຖານເຫລົ່ານັ້ນ ຊຶ່ງຈຳກັດສິ່ງທີ່ເດັກນ້ອຍສາມາດບັນລຸໄດ້ຄວາມເສຍຫາຍ ທີ່ເກີດຈາກຄວາມຫິວໃນລະຫວ່າງຕົ້ນປີຍັງສືບຕໍ່ທຳລາຍຂີດຄວາມສາມາດຂອງມະນຸດໃນລະດັບໂລກ.

ເງື່ອນໄຂສຸຂະພາບທີ່ກວ້າງກວ່າເກົ່າໃນກຸ່ມເດັກນ້ອຍ ສາມາດວັດແທກໄດ້ຈາກການຕາຍຂອງເດັກ. ອັດຕາການຕາຍໄດ້ຫລຸດລົງໃນປີ 2008, ເດັກນ້ອຍ 8.8 ລ້ານຄົນ ເສຍຊີວິດກ່ອນອາຍຸ 5 ປີ ທຽບໃສ່ປີ 1990 ມີເຖິງ 12.5 ລ້ານຄົນ. ແຕ່ໃນທີກສິບແປດປະເທດທີ່ມີອັດຕາການຕາຍຂອງເດັກສູງ, ມີພຽງສິບເກົ້າ ປະເທດທີ່ປະຕິບັດໄປຕາມທິດທາງເພື່ອບັນລຸເປົ້າໝາຍສະຫັດສະວັດ ເພື່ອການພັດທະນາ ໃນການຫລຸດຜ່ອນໃຫ້ໄດ້ສອງສ່ວນສາມແຕ່ປີ 1990 ເຖິງ 2015 ການຂາດໂພສະນາການ ກ່ຽວຂ້ອງໂດຍກົງ ຕໍ່ການຕາຍຂອງເດັກຫລາຍກວ່າ 3 ລ້ານຄົນ ແລະ ແມ່ຫລາຍກວ່າ 100,000 ຄົນ.

ລັດຖະບານ ຍັງປະເມີນຜົນຕາມມາຂອງການສຶກສາໃນເດັກກ່ອນໄວຮຽນທີ່ຂາດໂພສະນາການຕ່ຳເກີນໄປ. ໜຶ່ງສ່ວນສາມຂອງຈຳນວນເດັກນ້ອຍປະມານ 195 ລ້ານຄົນທີ່ມີອາຍຸຕ່ຳກວ່າ 5 ປີ ໃນປະເທດກຳລັງພັດທະນາຕ້ອງປະສົບກັບການຈະເລີນເຕີບໂຕຊ້າ ຫລື ມີລະດັບຄວາມສູງຕ່ຳກວ່າອາຍຸ ຊຶ່ງເປັນສັນຍານ ສະຖານະພາບທາງດ້ານໂພສະນາການບໍ່ພຽງພໍ. ເດັກນ້ອຍຫລາຍຄົນຈະປະສົບກັບການຂາດໂພສະນາການຊ້ຳເຮື້ອ ໃນສອງສາມປີຕົ້ນຂອງຊີວິດ ຊຶ່ງເປັນໄລຍະທີ່ສຳຄັນສຳລັບການພັດທະນາ ດ້ານສະຕິປັນຍາ. ນອກຈາກສະພາບທີ່ພົວພັນເຖິງຄວາມເດືອດຮ້ອນຂອງມະນຸດແລ້ວ, ການຂາດໂພສະນາການເປັນພາລະ ອັນໜັກໜ່ວງໃນລະບົບການສຶກສາ. ເດັກນ້ອຍທີ່ຂາດສານອາຫານ ບໍ່ຄ່ອຍຈະມີຄວາມເຂັ້ມແຂງທາງດ້ານຮ່າງກາຍ ແລະ ຈິດໃຈ. ພວກເຂົາມີໂອກາດໜ້ອຍທີ່ຈະໄດ້ເຂົ້າຮຽນ ແລະ ຖ້າໄດ້ເຂົ້າຮຽນ ພວກເຂົາກໍຈະມີຜົນສຳເລັດດ້ານການຮຽນຕ່ຳ. ການເຕີບໂຕຂອງເສດຖະກິດ ບໍ່ແມ່ນສິ່ງທີ່ຈະສາມາດແກ້ໄຂການຂາດໂພສະນາການໄດ້. ຕັ້ງແຕ່ຊ່ວງກາງຊຸມປີ 1990 ເປັນຕົ້ນມາ, ປະເທດອິນເດຍ ມີລາຍໄດ້ສະເລ່ຍຫລາຍກວ່າສອງເທົ່າ ໃນຂະນະທີ່ການຂາດໂພສະນາການຫລຸດລົງ ພຽງແຕ່ສອງສາມເປີເຊັນເທົ່ານັ້ນ. ເດັກນ້ອຍເກືອບເຄິ່ງໜຶ່ງໃນປະເທດເປັນໂລກຂາດໂພສະນາການຊ້ຳເຮື້ອ ແລະ ມີຊັດສ່ວນນ້ຳໜັກທີ່ຕ່ຳກວ່າມາດຕະຖານ ແມ່ນເກືອບສອງເທົ່າ ຊຶ່ງສູງເທົ່າກັບຄ່າສະເລ່ຍໃນເຂດອະນຸພາກພື້ນທະເລຊາຍຊາຣາລາ-ອາຟຣິກາ.

ໃນປັດຈຸບັນ, ສຸຂະພາບແມ່ ແລະ ເດັກ ໄດ້ມີຄວາມສຳຄັນຫລາຍຂຶ້ນໃນວາລະການປະຊຸມກ່ຽວກັບການພັດທະນາສາກົນ. ຂໍ້ລິເລີ່ມສາກົນກ່ຽວກັບ ໂພສະນາການ, ການຢູ່ລອດ ແລະ ການເປັນຢູ່ທີ່ດີ ຂອງແມ່ ແລະ ເດັກໄດ້ຮັບການຕ້ອນຮັບ ແລະ ໄດ້ປະກາດທັງຢູ່ໃນກອງປະຊຸມສຸດຍອດ G8 ປີ 2009 ແລະ ກອງປະຊຸມສຸດຍອດ ເປົ້າໝາຍສະຫັດສະວັດເພື່ອການພັດທະນາ ໃນປີ 2010 ໄດ້ຮັບການຕ້ອນຮັບ. ເຖິງຢ່າງໃດກໍຕາມ, ແນວທາງໃນປັດຈຸບັນ ບໍ່ໄດ້ຮັບຮູ້ວ່າການສຶກສາໂດຍສະເພາະການສຶກສາໃຫ້ແກ່ມານດາ-ມີບິດບາດ ກະຕຸ້ນເປົ້າໝາຍສຸຂະພາບໃຫ້ມີຄວາມຄືບໜ້າ.

ການປະຕິບັດເທົ່າທຽມກັນໃນການສຶກສາສຳລັບເດັກຍິງ ແລະ ເດັກຊາຍແມ່ນສິດທິມະນຸດ ແລະ ກໍຍັງໝາຍເຖິງການໄຂກຸນແຈໄປສູ່ຂົງເຂດອື່ນໆອີກ. ການສຶກສາປັບປຸງສຸຂະພາບແມ່ ແລະ ເດັກ ຍ້ອນວ່າມັນ ຈະເຮັດໃຫ້ແມ່ຍິງສາມາດເຂົ້າເຖິງຂໍ້ມູນກ່ຽວກັບໂພສະນາການ, ໂລກໄພໄຂ້ເຈັບ ແລະ ເພື່ອທາງເລືອກ ໃນການຄວບຄຸມຊີວິດຂອງພວກເຂົາໃຫ້ຫລາຍຂຶ້ນ.

ຫລັກຖານຈາກການສຳຫຼວດຄົວເຮືອນຢ່າງຕໍ່ເນື່ອງຊີ້ບອກເຖິງການສຶກສາຂອງແມ່ ຊຶ່ງເປັນປັດໄຈການ ສະໜັບສະໜູນການຜັກດັນໂອກາດການຢູ່ລອດຂອງເດັກ. ຖ້າສະເລ່ຍອັດຕາການຕາຍໃນເຂດອະນຸພາກພື້ນທະເລຊາຍຊາຣາລາ-ອາຟຣິກາ ເດັກນ້ອຍທີ່ເກີດກັບຜູ້ຍິງທີ່ມີການສຶກສາຕ່ຳໃນຊັ້ນມັດທະຍົມ ມີລະດັບຫລຸດລົງ ຊຶ່ງອາດຈະມີອັດຕາການເສຍຊີວິດໜ້ອຍກວ່າ 1.8 ລ້ານ ຄົນ-ຫລຸດລົງ 41% (ຮູບທີ1).ໃນເຄນ

**ຮູບທີ 1: ໝາກຜົນຂອງການສຶກສາສາມາດຊ່ວຍຊີວິດໄດ້ 1.8 ລ້ານຄົນ**

*ຄາດຄະເນຈຳນວນການຕາຍຂອງເດັກ ທີ່ຕ່ຳກວ່າ 5 ປີ ຄົນຢູ່ໃນສົມມຸດຖານການສຶກສາຂອງແມ່ທີ່ແຕກຕ່າງກັນໃນເຂດອະນຸພາກພື້ນທະເລຊາຍຊາຣາລາ-ອາຟຣິກາ, 2003-2008*




ແຫລ່ງຂໍ້ມູນ: *ເບິ່ງຮູບທີ 1.7 ໃນບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ 2011.*

ໃນເຂດອະນຸພາກພື້ນທະເລຊາຍຊາຣາລາ-ອາຟຣິກາ ສ່ວນແບ່ງງົບປະມານໃຫ້ການສຶກສາ ສາມາດກອບກູ້ຊີວິດຂອງເດັກ 1.8 ລ້ານຄົນ.

ຢາ, ເດັກນ້ອຍທີ່ເກີດມາຈາກແມ່ທີ່ບໍ່ທັນຈົບ ການສຶກສາ ຊັ້ນປະຖົມ ແມ່ນມີຄວາມເປັນໄປໄດ້ ທີ່ຈະເສຍຊີວິດໄວເຖິງສອງເທົ່າຂອງເດັກ ທີ່ເກີດກ່ອນກໍານົດຫ້າມື້ຄືກັບເດັກນ້ອຍທີ່ເກີດຈາກແມ່ ທີ່ມີການສຶກສາ ຊັ້ນມັດທະຍົມ ຫລື ສູງກວ່າ.

ໃນບົດລາຍງານໂລກການຕິດຕາມການສຶກສາ ເພື່ອທຸກຄົນ 2011 ໄດ້ໃຫ້ຫລັກຖານໃໝ່ທີ່ໂດດເດັ່ນກ່ຽວກັບ ປະໂຫຍດຕໍ່ສຸຂະພາບ ພົວພັນເຖິງການສຶກສາຂອງແມ່. ການນໍາໃຊ້ຂໍ້ມູນການສໍາຫລວດ ຄົວເຮືອນ ໄດ້ສະແດງໃຫ້ເຫັນວ່າ ໃນຫລາຍປະເທດ, ແມ່ທີ່ມີການ ສຶກສາຫລາຍກວ່າຈະຮູ້ເລື່ອງກ່ຽວກັບເຊື້ອໄວຣັດ HIV ຫລາຍກວ່າ ຊຶ່ງສາມາດສົ່ງຜ່ານທາງນໍ້ານົມແມ່ຫລາຍກວ່າ ແລະ ຄວາມສ່ຽງໃນ ການສົ່ງຕໍ່ຈາກ ແມ່ສູ່ລູກສາມາດຫລຸດຜ່ອນໄດ້ໂດຍການກິນຢາ ໃນລະຫວ່າງຖືພາ. ໃນປະເທດມາລາວີ, 60% ຂອງແມ່ທີ່ມີການ ສຶກສາຂັ້ນມັດທະຍົມ ຫລື ສູງກວ່ານັ້ນ ຈະຮັບຮູ້ວ່າຢາສາມາດ ຫລຸດຜ່ອນຄວາມສ່ຽງ ໃນການນໍາສົ່ງເຊື້ອເອດ, ທຽບກັບຜູ້ຍິງ ທີ່ບໍ່ມີການສຶກສາ 27%.

ຫລັກຖານດັ່ງກ່າວສະແດງໃຫ້ເຫັນວ່າ ການສຶກສາຂອງແມ່ເປັນຢາວັກ ຊິນທີ່ມີປະສິດທິພາບສູງ ຕ້ານກັບ ຄວາມສ່ຽງທີ່ຮຸກຮານຕໍ່ກັບສຸຂະ ພາບຂອງເດັກ. ໃນປີ 2009, ອົງການສະຫະປະຊາຊາດກ່ຽວກັບ ໂລກ ເອດ (UNIAIDS) ໄດ້ຄາດຄະເນວ່າ ເດັກນ້ອຍທີ່ມີອາຍຸຕໍ່າກວ່າ 15 ປີ ຈໍານວນ 370,000 ຄົນ ໄດ້ຕິດເຊື້ອເຮດສ໌ໄອວີ (HIV). ເດັກ ນ້ອຍຈໍານວນຫລາຍ ຕິດເຊື້ອໄວຣັດສ໌ ໃນ ລະຫວ່າງຖືພາ ຫລື ສົ່ງຕໍ່ ຫລື ໃນເວລາດື່ມນົມແມ່ທີ່ມີເຊື້ອໄວຣັດເຮດສ໌ໄອວີບວກ. ຫລັກຖານ ໃນບົດລາຍງານນີ້ ແນະນໍາໃຫ້ຜູ້ທີ່ຕິດເຊື້ອຄວນຈະມີການປ້ອງກັນ ຜ່ານການສຶກສາ (ຮູບທີ 2).

ການສຶກສາຂອງແມ່ ເປັນຢາທີ່ມີປະສິດທິຜົນສູງ ເພື່ອຕ້ານກັບຄວາມສ່ຽງ ຕໍ່ສຸຂະພາບຂອງເດັກ.

**ຮູບທີ 2: ການສຶກສາແມ່ສາມາດຊ່ວຍຊີວິດ**

ການປິ່ນປົວແບບໃໝ່ທີ່ສາມາດຫລຸດການສົ່ງຕໍ່ ເຊື້ອໄວຣັດ HIV ຈາກແມ່ສູ່ລູກທີ່ຍັງບໍ່ທັນໄດ້ເກີດ ຊຶ່ງໃນປັດຈຸບັນຕິດເຊື້ອເຖິງ 370,000 ຄົນຕໍ່ປີ.

ເອີ້ນວ່າ ການສຶກສາແມ່.




*ແຫລ່ງຂໍ້ມູນ: ເບິ່ງໃນຮູບທີ 1.9 ບົດລາຍງານໂລກ ການຕິດຕາມການສຶກສາເພື່ອທຸກຄົນ 2011*

ແຜນງານສຳລັບເດັກກ່ອນໄວຮຽນ ແມ່ນກະກຽມເດັກນ້ອຍ ເພື່ອເຂົ້າຮຽນ, ບັນເທົາຄວາມເດືອດຮ້ອນໃນຄົວເຮືອນ, ຢຸດການຖ່າຍທອດການສຶກສາທີ່ບໍ່ມີຜົນປະໂຫຍດຈາກຜູ້ປົກຄອງສູ່ເດັກ ແລະ ສ້າງຄວາມເຂັ້ມແຂງໃນ ການຂະຫຍາຍຕົວດ້ານເສດຖະກິດໃນອະນາຄົດ. ແຕ່ນະໂຍບາຍສຳລັບເດັກກ່ອນໄວຮຽນ ໃນຫລາຍປະເທດກຳລັງພັດທະນາ ຍັງສືບຕໍ່ປະສົບກັບ ການຂາດທຶນຮອນ, ຂາດແຜນການລະອຽດ ແລະ ຂາດຄວາມເທົ່າທຽມ.

ເດັກນ້ອຍຈາກຄົວເຮືອນທີ່ດ້ອຍໂອກາດທີ່ສຸດ ຈະໄດ້ຮັບຜົນປະໂຫຍດຫລາຍທີ່ສຸດຈາກແຜນງານນີ້, ແຕ່ຈະມີຕົວແທນຂອງພວກເຂົາໜ້ອຍຫລາຍ. ໃນປະເທດ ກິດດີວົວ, ເດັກນ້ອຍປະມານໜຶ່ງສ່ວນສີ່ຈາກຄົວເຮືອນທີ່ຮັ່ງມີທີ່ສຸດໄດ້ເຂົ້າຮຽນໃນອະນຸບານ, ໃນຂະນະທີ່ອັດຕາຜູ້ເຂົ້າຮຽນທີ່ມາຈາກຄົວເຮືອນທີ່ທຸກຍາກທີ່ສຸດ ແມ່ນເກືອບວ່າບໍ່ມີເລີຍ. ປະເທດຕ່າງໆເຊັ່ນປະເທດໂມຊຳບິກ ໄດ້ເນັ້ນໜັກກ່ຽວກັບພັນທະການສ້າງຄວາມເຂັ້ມແຂງທີ່ທ່ຽງທຳ ອັນສາມາດເປີດປະຕູໄປສູ່ການສຶກສາຂັ້ນອະນຸບານແກ່ກຸ່ມທີ່ດ້ອຍໂອກາດທີ່ສຸດ (ກ່ອງທີ 1).

## ກ່ອງທີ 1: ເປົ້າໝາຍໂຄງການໂຮງຮຽນອະນຸບານຂອງປະເທດໂມຊຳບິກ

ໂຄງການໂຮງຮຽນອະນຸບານ ເອສໂຄລິນຮາສ ໃນປະເທດໂມຊຳບິກ ເປີດໃຫ້ເດັກນ້ອຍທີ່ດ້ອຍໂອກາດ ໃນອາຍຸ 3 ຫາ 5 ປີ ທີ່ຢູ່ໃນເປົ້າໝາຍຄວາມທຸກຍາກ ຫລື ໂດຍສະເພາະຜູ້ຕິດເຊື້ອໄວຣັດເຮດສ໌ໄອວີເຂົ້າຮຽນ. ອາສາສະໝັກໃນຊຸມຊົນ ຊຶ່ງລວມມີອາຈານສອງຄົນຕໍ່ຫ້ອງຮຽນໜຶ່ງຫ້ອງ, ສຸມໃສ່ການກະຕຸ້ນ ຄວາມຄິດ ໂດຍນຳໃຊ້ເກມ, ສິລະປະ ແລະ ເພງ ເພື່ອພັດທະນາທັກສະພື້ນຖານດ້ານການຄິດໄລ່ ແລະ ການອ່ານ. ໂຄງການໄດ້ລວມເອົາການໃຫ້ຄວາມຮູ້ກ່ຽວກັບສຸຂະພາບ ແລະ ໂພຊະນາການ ແລະ ການຊ່ວຍເຫລືອຜູ້ປົກຄອງ. ໂຄງການນີ້ ມັນໄດ້ສະໜອງດ້ານການບໍລິການທີ່ມີຄຸນນະພາບສູງ, ມູນຄ່າຕ່ຳ ຊຶ່ງເປັນທ່າແຮງທີ່ສາມາດນຳໄປໃຊ້ໃນ ປະເທດອື່ນໆໄດ້.

ແຫລ່ງຂໍ້ມູນ: ເບິ່ງໃນກ່ອງ 1.3 *ໃນບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ2011.*

## *ການສຶກສາຊັ້ນປະຖົມໂດຍທົ່ວໄປ: ກຳລັງຈະບໍ່ບັນລຸເປົ້າໝາຍ*

ໃນທົດສະວັດທີ່ຜ່ານມາ ການເຂົ້າຮຽນໃນຊັ້ນປະຖົມມີຄວາມກ້າວໜ້າຢ່າງເຫັນໄດ້ຊັດ. ຫລາຍປະເທດທີ່ໄດ້ເລີ່ມຕົ້ນທົດສະວັດ ມີທ່າອ່ຽງບໍ່ບັນລຸການສຶກສາຊັ້ນປະຖົມໂດຍທົ່ວໄປ (UPE) ພາຍໃນປີ 2015 ຄາດວ່າຈະສາມາດບັນລຸໄດ້ຢ່າງແທ້ຈິງ. ເຖິງຢ່າງໃດກໍຕາມ, ບາດກ້າວຂອງຄວາມຄືບໜ້າ ບໍ່ມີລັກສະນະສະໝ່ຳສະເໝີ ແລະ ອາດຈະຊັກຊ້າ. ອີງໃສ່ທ່າອ່ຽງປັດຈຸບັນ ໂລກຈະບໍ່ສາມາດບັນລຸຄວາມຄາດຫວັງ ທີ່ໄດ້ກຳນົດໄວ້ໃນຂອບປະຕິບັດງານດາກາ.

ເມື່ອຂອບປະຕິບັດງານໄດ້ຖືກຮັບຮອງ, ມີເດັກນ້ອຍປະມານ 106 ລ້ານຄົນ ທີ່ບໍ່ໄດ້ເຂົ້າຮຽນ. ພາຍໃນປີ 2008, ຕົວເລກໄດ້ຫລຸດລົງເຖິງ 67 ລ້ານຄົນ. ນຳໂດຍແຮງກະຕຸ້ນອັນແຂງແຮງ ໃນປະເທດອິນເດຍ, ເຂດພາກໃຕ້ ແລະ ພາກຕາເວັນຕົກຂອງທະວີບອາຊີ ສາມາດບັນລຸຈຳນວນປະຊາກອນກວ່າເຄິ່ງໜຶ່ງ ຂອງຜູ້ທີ່ບໍ່ໄດ້ເຂົ້າຮຽນ. ເຂດອະນຸພາກພື້ນທະເລຊາຍຊາຮາລາ-ອາຟຣິກາ ມີອັດຕາສ່ວນການເຂົ້າຮຽນເພີ່ມຂຶ້ນເກືອບໜຶ່ງສ່ວນສາມ ເຖິງຈະມີປະຊາກອນໃນເກນອາຍຸ ເຂົ້າຮຽນເພີ່ມຫລາຍຂຶ້ນ. ເດັກນ້ອຍ 43% ທີ່ບໍ່ໄດ້ເຂົ້າຮຽນ ອາໄສຢູ່ເຂດອະນຸພາກພື້ນທະເລຊາຍຊາຮາລາ-ອາຟຣິກາ ແລະ ອີກ 27% ອາໄສຢູ່ໃນທະວີບອາຊີໃຕ້ ແລະ ອາຊີຕາເວັນຕົກ, ໃນນັ້ນເກືອບເຄິ່ງໜຶ່ງແມ່ນອາໄສຢູ່ພຽງ 15 ປະເທດ (ຮູບທີ 3) . ຫລາຍປະເທດ ມີຈຳນວນເດັກນ້ອຍທີ່ບໍ່ໄດ້ເຂົ້າຮຽນຫລຸດລົງຢ່າງໄວວາ. ຈາກປີ 1999 ເຖິງປີ 2008, ປະເທດເອທິໂອເປຍ ສາມາດຫລຸດຈຳນວນເດັກນ້ອຍທີ່ບໍ່



ການອາໄສແບບບໍ່ມີຫລັກແຫລ່ງ: ເດັກນ້ອຍໃນສູນອົບພະຍົບ ຂອງ ໄນສິງປາຣາ, ອິນເດຍ

ເຂົ້າຮຽນໄດ້ໂດຍປະມານ 4 ລ້ານຄົນ ແລະ ປັດຈຸບັນ ຄາດວ່າ ຈະບັນລຸການສະໜອງການສຶກສາຊັ້ນປະຖົມໂດຍທົ່ວໄປຢ່າງແທ້ຈິງພາຍໃນປີ 2015. ປະເທດອື່ນໆ ທີ່ໄດ້ເລີ່ມຕົ້ນຈາກ ພື້ນຖານຕ່ຳມາແມ່ນຍັງຫ່າງໄກຫລາຍ, ເຖິງແມ່ນວ່າຫລາຍປະເທດ ຈະຍັງໄກທີ່ຈະບັນລຸການສຶກສາຊັ້ນປະຖົມ ໂດຍທົ່ວໄປພາຍໃນປີ 2015. ຕົວຢ່າງປະເທດໄນຈີເລຍ, ສາມາດບັນລຸອັດຕາການເຂົ້າຮຽນສຸດທິເຖິງສອງເທົ່າ ໂດຍໃຊ້ເວລາໜ້ອຍກວ່າໜຶ່ງທົດສະວັດ.

ເຖິງວ່າໄດ້ເຮັດການສົ່ງເສີມເພື່ອບັນລຸເປົ້າໝາຍດັ່ງກ່າວກໍຕາມ, ໂລກເຮົາຍັງບໍ່ໄດ້ໄປຕາມເສັ້ນທາງ ທີ່ຈະບັນລຸການສຶກສາຊັ້ນປະຖົມໂດຍທົ່ວໄປ ພາຍໃນປີ 2015. ການວິເຄາະທ່າອ່ຽງສຳລັບບົດລາຍງານນີ້ ໄດ້ເບິ່ງເຖິງຄວາມຄືບໜ້າໃນການເຂົ້າຮຽນ ໃນ 182 ປະເທດ ນັບທັງ 60% ຂອງເດັກນ້ອຍ ທີ່ບໍ່ໄດ້ເຂົ້າຮຽນທັງໝົດ. ຫົວຂໍ້ຂ່າວແຈ້ງໃຫ້ຊາບວ່າຈຳນວນເດັກນ້ອຍທີ່ບໍ່ໄດ້ເຂົ້າຮຽນໃນ ເຄິ່ງປາຍທົດສະວັດຜ່ານມາ ຫລຸດລົງເຄິ່ງໜຶ່ງຂອງ ອັດຕາທີ່ບັນລຸໃນເຄິ່ງຕົ້ນທົດສະວັດ.

ໃນປີ 2008 ມີເດັກນ້ອຍບໍ່ໄດ້ເຂົ້າໂຮງຮຽນ 67 ລ້ານຄົນ

**ຮູບທີ 3: ເຄິ່ງໜຶ່ງຂອງເດັກທີ່ບໍ່ໄດ້ເຂົ້າໂຮງຮຽນໃນໂລກ ອາໄສຢູ່ໃນສິບຫ້າປະເທດເທົ່ານັ້ນ.**
*ຈຳນວນເດັກໃນເກນອາຍຸເຂົ້າຮຽນຊັ້ນປະຖົມ ທີ່ບໍ່ໄດ້ເຂົ້າໂຮງຮຽນ ໃນປີ 2008, ເລືອກເຟັ້ນປະເທດ.*




ແຫລ່ງຂໍ້ມູນ: *ເບິ່ງໃນຮູບທີ 1.11 ໃນ ບົດລາຍງານໂລກ ການຕິດຕາມການສຶກສາເພື່ອທຸກຄົນ2011.*

ເມື່ອປັບໃຫ້ເຂົ້າໃນລະດັບທ່າອ່ຽງຂອງໂລກ, ຈະເຫັນວ່າ ຖ້າສະພາບການທ່າອ່ຽງສືບຕໍ່ເປັນລັກສະນະດັ່ງກ່າວ ຈະເຮັດໃຫ້ເດັກນ້ອຍຫລາຍກວ່າ 72 ລ້ານຄົນ ບໍ່ໄດ້ເຂົ້າໂຮງຮຽນໃນປີ 2015 - ຫລາຍກວ່າ ໃນປີ 2008.

ຄວາມບໍ່ເທົ່າທຽມກັນ ຍັງເປັນອຸປະສັກຕໍ່ການເລັ່ງຄວາມຄືບໜ້າໃນການສຶກສາ (ຮູບທີ 4). ໃນປີ 2007 ປະເທດປາກິດສະຖານ ມີເດັກນ້ອຍອາຍຸລະຫວ່າງ 7 ຫາ 16 ປີ ເກືອບເຄິ່ງໜຶ່ງຈາກຄົວເຮືອນທີ່ທຸກຍາກບໍ່ໄດ້ເຂົ້າຮຽນ ປຽບທຽບແລ້ວມີພຽງ 5% ຈາກຄົວເຮືອນທີ່ຮັ່ງມີທີ່ສຸດ. ຫລາຍປະເທດທີ່ໃກ້ຈະບັນລຸການສຶກສາ ຊັ້ນປະຖົມ ໂດຍທົ່ວໄປເຊັ່ນ: ປະເທດຟີລິປີນ ແລະ ຕວກກີ ບໍ່ສາມາດບັນລຸຂັ້ນຕອນສຸດທ້າຍ ສ່ວນຫລາຍ ແມ່ນຍ້ອນບໍ່ສາມາດເຂົ້າເຖິງປະຊາກອນທີ່ດ້ອຍໂອກາດທີ່ສຸດໄດ້ພໍດີ. ຊ່ອງວ່າງລະຫວ່າງເພດ ຍັງຝັງເລິກຢ່າງບໍ່ມີການປ່ຽນແປງ (ເບິ່ງຂ້າງລຸ່ມ). ໃນຂຸມປີນີ້ໆນີ້ ບົດລາຍງານໂລກການຕິດຕາມການສຶກສາ ເພື່ອທຸກຄົນ ໄດ້ໂຕ້ຖຽງກ່ຽວກັບການຮັບຮອງເອົາ ເປົ້າໝາຍບົນພື້ນຖານຄວາມສະເໝີພາບ ໂດຍທີ່ລັດຖະບານ ໄດ້ໃຫ້ຄຳໝັ້ນສັນຍາວ່າ ຈະບໍ່ພຽງແຕ່ບັນລຸເປົ້າໝາຍແຫ່ງຊາດເທົ່ານັ້ນ, ແຕ່ບັນລຸຈຸດປະສົງ ຫລຸດຜ່ອນຄວາມແຕກໂຕນໃຫ້ໄດ້ເຄິ່ງໜຶ່ງບົນພື້ນຖານຄວາມຮັ່ງມີ, ສະຖານທີ່, ຊົນເຜົ່າ, ເພດ ແລະ ເຄື່ອງໝາຍອື່ນໆ ທີ່ຊີ້ບອກເຖິງຄວາມດ້ອຍໂອກາດ.

ການເຂົ້າໂຮງຮຽນ ເປັນພຽງໜຶ່ງໃນປັດໄຈການບັນລຸການສຶກສາຂັ້ນປະຖົມໂດຍທົ່ວໄປ. ເດັກນ້ອຍຫລາຍຄົນເລີ່ມເຂົ້າໂຮງຮຽນ ແຕ່ອອກຮຽນກ່ອນຈະສຳເລັດການຮຽນໃຫ້ຄົບຂັ້ນຮຽນຂອງຊັ້ນປະຖົມ.ໃນເຂດອະນຸພາກພື້ນທະເລຊາຍຊາຮາລາ-ອາຟຣິກາ, ມີເດັກນ້ອຍປະມານ 10 ລ້ານຄົນທີ່ອອກໂຮງຮຽນປະຖົມ ໃນແຕ່ລະປີ. ນີ້ສະແດງໃຫ້ເຫັນເຖິງຄວາມສູນເສຍທາງດ້ານຄວາມສາມາດຂອງເດັກ ແລະ ເປັນບໍ່ເກີດການຂາດປະສິດທິພາບໃນລະບົບການສຶກສາ. ຄວາມທຸກຍາກ ແລະ ຄຸນນະພາບການສຶກສາຕໍ່າ ພ້ອມໆກັບບໍ່ສາມາດບັນລຸເຖິງລະດັບ ການຮຽນທີ່ຮຽກຮ້ອງໃຫ້ມີຄະແນນສູງເພື່ອເລື່ອນຂັ້ນຮຽນນັ້ນ ເປັນການປະກອບສ່ວນເຮັດໃຫ້ອັດຕາການອອກໂຮງຮຽນຢູ່ໃນລະດັບສູງ.

ໃນເຂດອະນຸພາກພື້ນທະເລຊາຍ ຊາຮາລາ ມີເດັກນ້ອຍອອກໂຮງຮຽນຊັ້ນປະຖົມປະມານ 10 ລ້ານຄົນ ໃນແຕ່ລະປີ

**ຮູບທີ 4: ໂອກາດເຂົ້າໂຮງຮຽນ ມີການປ່ຽນແປງຢ່າງຍິ່ງໃຫຍ່ໃນປະເທດຕ່າງໆ-ຕົວຢ່າງ ປະເທດປາກິດສະຖານ**

*ເປີເຊັນຂອງເດັກນ້ອຍອາຍຸ 7-16 ປີ ບໍ່ໄດ້ລົງທະບຽນຮຽນໃນປະເທດປາກິດສະຖານປີ 2007.*




ແຫລ່ງຂໍ້ມູນ: *ເບິ່ງໃນຮູບທີ 1.13 ໃນ ບົດລາຍງານໂລກ ການຕິດຕາມການສຶກສາເພື່ອທຸກຄົນ2011*

ຍຸດທະສາດສຳລັບປົກປ້ອງບໍ່ໃຫ້ເດັກອອກໂຮງຮຽນຕ້ອງໄດ້ສ້າງຂຶ້ນໂດຍອີງໃສ່ຄວາມຕ້ອງການສະເພາະຂອງປະເທດນັ້ນໆ. ບາງປະເທດລວມທັງ ເອທີໂອເປຍ, ມາລາວີ ແລະ ຟີລິປີນໄດ້ເນັ້ນໜັກກ່ຽວກັບການອອກໂຮງຮຽນ ຂອງນັກຮຽນຊັ້ນປີທີໜຶ່ງ, ໃນຂະນະທີ່ປະເທດອື່ນໆລວມມີ ປະເທດຢູການດາ, ບັນຫາດັ່ງກ່າວໄດ້ເກີດຂຶ້ນທັງໃນ ຊັ້ນປີທີ1 ແລະ ປີທີ 6. ການເຂົ້າຮຽນທີ່ເພີ່ມຂຶ້ນຢ່າງໄວວາ ຊຶ່ງມັກຈະຕາມມາດ້ວຍ ການຍົກເລີກຄ່າລົງທະບຽນ ສາມາດນຳໄປສູ່ຫ້ອງຮຽນທີ່ແອອັດ ແລະ ຄຸນນະພາບການສຶກສາຕໍ່າ. ປະເທດມາລາວີ ແລະ ຢູການດາ ມີຄວາມຫຍຸ້ງຍາກໃນການລະບາຍຄວາມແອອັດ ໃນການເຂົ້າຮຽນຂອງນັກຮຽນໂດຍຈັດໃຫ້ມີການເລື່ອນຂັ້ນໃນຈຳນວນຫລາຍໃນຊັ້ນຮຽນຕົ້ນໆ. ສະຫະລັດສາທາລະນະລັດຕັງສະເນຍ ມີຜົນໄດ້ຮັບທີ່ດີ ຜ່ານການປະຕິຮູບການເລື່ອນຂັ້ນແບບຕໍ່ເນື່ອງ ໂດຍໄດ້ເພີ່ມການລົງທຶນ ແລະ ຈັດສັນຄູທີ່ມີປະສົບການຫລາຍ ແລະ ມີຄຸນນະພາບກວ່າເຂົ້າສອນ ໃນຊັ້ນຮຽນຕົ້ນໆ. ເກນອາຍຸຂອງເດັກນ້ອຍທີ່ ເຂົ້າຮຽນກໍແມ່ນສິ່ງທີ່ຕ້ອງເອົາໃຈໃສ່ ການເຂົ້າຮຽນຊ້າຂອງເດັກນ້ອຍອາຍຸເກີນມີສ່ວນພົວພັນຢ່າງສະໜິດແໜ້ນ ຕໍ່ການອອກໂຮງຮຽນ. ວິທີການອີກອັນໜຶ່ງໃນປະເທດໂຄລົມເບຍ ແມ່ນໂຄງການ ໂຮງຮຽນຊົນນະບົດ ຊຶ່ງຫລຸດອັດຕາການອອກໂຮງຮຽນ ໂດຍການປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງຂອງການສຶກສາ.

ບົດລາຍງານນີ້ ໄດ້ໃຫ້ລັກສະນະຂອງຄວາມສຳເລັດບາງອັນກ່ຽວກັບການຫລຸດຜ່ອນການອອກໂຮງຮຽນ ໂດຍຜ່ານການ ໂອນເງິນສະໜັບສະໜູນການເຂົ້າຮຽນຂອງເດັກ ແລະ ຕາໜ່າງຄວາມປອດໄພ ຊຶ່ງສາມາດຊ່ວຍຄົວເຮືອນທີ່ດ້ອຍໂອກາດໃຫ້ສາມາດສູ້ທົນຕໍ່ຜົນກະທົບທາງເສດຖະກິດຄື: ໄພແຫ້ງແລ້ງ, ໄພວ່າງງານ ຫລືການເຈັບປ່ວຍ. ຕົວຢ່າງໜຶ່ງຂອງໂຄງການຕາໜ່າງຄວາມປອດໄພດ້ານຜົນຜະລິດ ຂອງປະເທດເອທີໂອເປຍ ຊຶ່ງໄດ້ສົ່ງເງິນ ຫລືອາຫານໃຫ້ແກ່ຄົວເຮືອນທຸກຍາກ ເພື່ອໃຫ້ຜູ້ປົກຄອງຫລາຍຄົນສາມາດຮັກສາລູກຂອງຕົນ ບໍ່ໃຫ້ອອກໂຮງຮຽນໄດ້ຢ່າງຍາວນານ.

## ການຮຽນຮູ້ຂອງຊາວໜຸ່ມ ແລະ ຜູ້ໃຫຍ່: ທັກສະສຳລັບໂລກທີ່ມີການປ່ຽນແປງໄວ

ຄຳໝັ້ນສັນຍາທີ່ໄດ້ໃຫ້ໄວ້ໃນ ດາກາ ເພື່ອແກ້ໄຂບັນຫາ "ຄວາມຕ້ອງການດ້ານການຮຽນຮູ້ສຳລັບຄົນ ໜຸ່ມທຸກຄົນ" ສົມທົບກັບຄວາມຫວັງໃນລະດັບສູງດ້ວຍການສະໜອງຂໍ້ມູນໃນລະດັບຕໍ່າ. ການຕິດຕາມຄວາມຄືບໜ້າແມ່ນຫຍຸ້ງຍາກ ເນື່ອງຈາກການຂາດເປົ້າໝາຍທາງດ້ານປະລິມານ.

ປະເທດຮັ່ງມີສ່ວນຫລາຍແມ່ນໃກ້ຈະເຂົ້າເຖິງການສຶກສາຊັ້ນມັດທະຍົມໂດຍທົ່ວໄປ ພ້ອມກັບຈຳນວນປະຊາກອນທີ່ຫລາຍ ເຖິງປະມານ 70 % ໃນທະວີບອາເມລິກາເໜືອ ແລະ ຢູໂຣບຕາເວັນອອກມີຄວາມຄືບໜ້າໄປສູ່ການສຶກສາຊັ້ນສູງ. ສ່ວນອີກພາກສ່ວນໜຶ່ງຂອງໂລກ ໂດຍສະເພາະເຂດອະນຸພາກພື້ນທະເລຊາຍ ຊາຮາລາ ຂອງອາຟຣິກາ ມີອັດຕາການເຂົ້າຮຽນໃນລະດັບມັດທະຍົມສຶກສາພຽງແຕ່ 34% ແລະ ມີພຽງ 6% ທີ່ຄືບໜ້າໄປສູ່ລະດັບການສຶກສາຊັ້ນສູງ. ເຖິງຢ່າງໃດກໍຕາມ, ຂົງເຂດນີ້ກຳລັງຈະເລີ່ມນຳໃຫ້ທັນໂດຍເລີ່ມຈາກຈຸດທີ່ຕໍ່າກ່ອນ. ຕັ້ງແຕ່ປີ 1999, ອັດຕາການເຂົ້າຮຽນມີຫລາຍກວ່າສອງເທົ່າ ໃນປະເທດເອທີໂອເປຍ ແລະ ຢູການດາ , ແລະ ສີ່ເທົ່າໃນປະເທດໂມຊຳບິກ. ພ້ອມກັບອັດຕາການເຂົ້າຮຽນ ໃນຊັ້ນປະຖົມທີ່ເພີ່ມຂຶ້ນໃນປະເທດທີ່ກຳລັງພັດທະນາໃນໂລກ, ຄວາມຕ້ອງການສຳລັບການສຶກສາຊັ້ນມັດທະຍົມແມ່ນເພີ່ມຂຶ້ນ. ການເຂົ້າຮຽນໃນໂຮງຮຽນເຕັກນິກ ແລະ ວິຊາຊີບກໍເພີ່ມຂຶ້ນເຊັ່ນດຽວກັນ ເຖິງວ່າຂໍ້ມູນທີ່ຍັງຈຳກັດຢູ່ ໄດ້ສ້າງຄວາມຫຍຸ້ງຍາກໃນການສົມທຽບໃນແຕ່ລະຂົງເຂດ. ຕົວເລກຂອງເຍົາວະຊົນທີ່ອອກໂຮງຮຽນໄດ້ຫລຸດລົງ, ແຕ່ໃນປີ 2008 ຍັງມີຈຳນວນເດັກນ້ອຍທັງໝົດປະມານ 74 ລ້ານຄົນ

ໃນທົ່ວໂລກບໍ່ໄດ້ເຂົ້າໂຮງຮຽນ.

ຄວາມບໍ່ເທົ່າທຽມຢູ່ໃນປະເທດຕ່າງໆສະທ້ອນໃຫ້ສາກົນເຫັນເຖິງຄວາມແຕກຕ່າງໃນການສຶກສາຊັ້ນມັດທະຍົມ. ອັດຕາການເຂົ້າຮຽນ ແລະ ສຳເລັດການສຶກສາພົວພັນຢ່າງແໜ້ນແຟ້ນກັບຄວາມຮັ່ງມີ, ສະຖານທີ່, ເຊື້ອຊາດ, ເພດ ແລະ ປັດໄຈອື່ນໆທີ່ສາມາດນຳໄປສູ່ຄວາມດ້ອຍໂອກາດ. ໃນປະເທດກຳປູເຈຍ, 28% ຂອງປະຊາຊົນ ອາຍຸ 23 ຫາ 27 ປີ ທີ່ມາຈາກຄົວເຮືອນທີ່ຮັ່ງມີ 20% ສາມາດສຳເລັດການສຶກສາໃນຊັ້ນມັດທະຍົມ ເມື່ອທຽບກັບຄົວເຮືອນທີ່ທຸກຍາກ 0.2%. ຜ່ານໂຄງການ ໂອກາດທີສອງ, ໄວໜຸ່ມທີ່ບໍ່ສຳເລັດການສຶກສາຊັ້ນປະຖົມສາມາດໄດ້ຮັບທັກສະ ແລະ ການຝຶກອົບຮົມທີ່ຈຳເປັນ ເພື່ອຂະຫຍາຍທາງເລືອກ ໃນການດຳລົງຊີວິດ. ແບບຢ່າງທີ່ໄດ້ຮັບຄວາມສຳເລັດອັນໜຶ່ງແມ່ນ ໂຄງການ ໂຈເວນ(Jovenes) ໃນອາເມລິກາລາຕິນ ຊຶ່ງມີເປົ້າໝາຍແນໃສ່ຄົວເຮືອນທີ່ມີລາຍໄດ້ຕ່ຳ ອັນປະກອບດ້ວຍວິທີການ ແລະ ການຝຶກອົບຮົມທັກສະຊີວິດ. ການປະເມີນຊີ້ໃຫ້ເຫັນຄວາມສຳຄັນໃນການປັບປຸງການມີວຽກເຮັດງານທຳ ແລະ ໂອກາດໃນການສ້າງລາຍຮັບ.

ເຖິງແມ່ນວ່າ ປະເທດທີ່ພັດທະນາແລ້ວສ່ວນຫລາຍຈະມີລະດັບການສຶກສາຊັ້ນມັດທະຍົມ ແລະ ການເຂົ້າຮຽນໃນການສຶກສາຊັ້ນສູງຈະສູງກໍຕາມ, ແຕ່ພວກເຂົາກໍປະສົບບັນຫາທີ່ພົວພັນເຖິງຄວາມບໍ່ເທົ່າທຽມ ແລະ ຄວາມດ້ອຍໂອກາດ. ເກືອບໜຶ່ງໃນຫ້າຂອງນັກຮຽນໃນບັນດາປະເທດອົງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ (OECD) ບໍ່ສາມາດສຳເລັດການສຶກສາຊັ້ນມັດທະຍົມປາຍ. ປັດໄຈສ່ຽງຕໍ່ການອອກໂຮງ ຮຽນກ່ອນກຳນົດແມ່ນມາຈາກຄວາມທຸກຍາກ, ຜູ້ປົກຄອງມີລະດັບການສຶກສາຕ່ຳ ແລະ ມີສະຖານະພາບ ເປັນຜູ້ອົບພະຍົບ.

ການເພີ່ມຂຶ້ນຂອງຊາວໜຸ່ມທີ່ບໍ່ມີວຽກເຮັດຊຶ່ງຊ້ຳເຕີມດ້ວຍວິກິດການທາງການເງິນໂລກ ເຮັດໃຫ້ປະເທດໃນອົງການ ຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ (OECD) ຖືເອົາການພັດທະນາທັກສະເປັນບູລິມະສິດໃນທັນທີທັນໃດ. ແຜນປະຕິຮູບການສຶກສາ ແລະ ການຝຶກທັກສະຂອງສະຫະລາຊະອານາຈັກອັງກິດ ສຳລັບປີ 2008 ໄດ້ສ້າງໃຫ້ມີການສຶກສາ ແລະ ການຝຶກອົບຮົມແບບບັງຄັບ ສຳລັບຜູ້ທີ່ມີອາຍຸຕ່ຳກວ່າ 18 ປີ ຊຶ່ງສາມາດເລືອກຮຽນ ໄດ້ໃນພາກປົກກະຕິ ແລະ ພາກພິເສດ, ພ້ອມທັງຈັດໃຫ້ມີ ການຝຶກງານປົກກະຕິ ແລະ ການຝຶກອົບຮົມຕາມບໍລິສັດ. ໂອກາດທີສອງ ມີຈຸດປະສົງເອົາຊາວໜຸ່ມທີ່ມີທັກສະຕ່ຳກັບເຂົ້າໄປສຶກສາ ແລະ ຝຶກອົບຮົມ ເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ແກ່ເຂົາເຈົ້າ. ເຖິງແມ່ນວ່າ ແຜນງານໃນຂົງເຂດນີ້ ຈະມີຂໍ້ມູນຜົນງານທີ່ແຕກຕ່າງກັນກໍຕາມ ແຕ່ກໍຍັງມີຜົນໄດ້ຮັບບາງອັນທີ່ໂດດເດັ່ນ.ວິທະຍາໄລຊຸມຊົນ ຂອງສະຫະລັດອາເມລິກາ ແລະ ໂຮງຮຽນທີ່ໃຫ້ໂອກາດຄັ້ງທີ່ ສອງ ຂອງບັນດາປະເທດໃນສະຫະພາບຢູໂຣບ ມີຜົນງານດີເລີດໃນການເຂົ້າເຖິງກຸ່ມຜູ້ດ້ອຍໂອກາດ.

## ການຮູ້ໜັງສືຂອງຜູ້ໃຫຍ່: ການເມີນເສີຍຂອງຝ່າຍການເມືອງໄດ້ຖ່ວງດຶງຄວາມກ້າວໜ້າ

ການຮູ້ໜັງສື ແມ່ນການເປີດປະຕູໄປສູ່ການດຳລົງຊີວິດທີ່ດີກວ່າ, ປັບປຸງສຸຂະພາບ ແລະ ຂະຫຍາຍໂອກາດ ການທຳມາຫາກິນ. ໃນຂອບແຜນປະຕິບັດງານດາກາ ລວມທັງເປົ້າໝາຍສະເພາະສຳລັບການຮູ້ໜັງສືຂອງ ຜູ້ໃຫຍ່ໃຫ້ໄດ້ 50% ພາຍໃນປີ 2015. ເປົ້າໝາຍດັ່ງກ່າວນັ້ນ ອາດຈະບໍ່ບັນລຸໄດ້ສຳລັບຈຳນວນຫລວງຫລາຍຂອງຜູ້ດ້ອຍໂອກາດ ອັນສະແດງເຖິງ ການປ່ອຍປະລະເລີຍການຮູ້ໜັງສືຂອງຜູ້ໃຫຍ່ທີ່ຍາວນານ ໃນນະໂຍບາຍການສຶກສາ.

ໃນປີ 2008 ຜູ້ໃຫຍ່ຈຳນວນເກືອບ 796 ລ້ານຄົນ ຂາດທັກສະການຮູ້ໜັງສືຂັ້ນພື້ນຖານ ຊຶ່ງມີອັດຕາສ່ວນ ຜູ້ໃຫຍ່ປະມານ 17% ຂອງພົນລະເມືອງທົ່ວໂລກ. ເກືອບສອງໃນສາມເປັນເພດຍິງ. ສ່ວນໃຫຍ່ອາໄສຢູ່ໃນເຂດພາກໃຕ້ ແລະ ພາກຕາເວັນຕົກຂອງທະວີບເອເຊຍ ແລະ ເຂດອະນຸພາກພື້ນທະເລຊາຍຊາຮາລາ ຂອງອາຟຣິກາ, ແມ່ນແຕ່ຢູ່ໃນສະຫະລັດອາຣັບ ຈຳນວນຜູ້ໃຫຍ່ກໍາກໜັງສືຍັງຢູ່ໃນລະດັບສູງ.

ມີພຽງ 10 ປະເທດ ທີ່ມີຜູ້ໃຫຍ່ກຶກໜັງສືທັງໝົດ 72% (ຮູບທີ5). ຜົນງານໃນປະເທດເຫລົ່ານີ້ມີລັກ ມີຂໍ້ມູນທີ່ແຕກຕ່າງກັນ. ປະເທດເບຼຊິນສາມາດຫລຸດຜ່ອນຈຳນວນຜູ້ໃຫຍ່ທີ່ກຶກໜັງສືໄດ້ 2.8 ລ້ານຄົນ ຈາກປີ 2000-2007 ແລະ ປະເທດຈີນ ຍັງຮັກສາຄວາມຄືບໜ້າໃນ ການຮູ້ໜັງສືຂອງຜູ້ໃຫຍ່ໄດ້ຢ່າງເຂັ້ມແຂງໃນການບັນລຸການຮູ້ໜັງສືຂອງຜູ້ໃຫຍ່ໂດຍທົ່ວໄປ. ໃນປະເທດອິນເດຍ ອັດຕາການຮູ້ໜັງສືໄດ້ເພີ່ມຂຶ້ນ ແຕ່ບໍ່ທັນໄວພໍທີ່ຈະປ້ອງກັນຈຳນວນຜູ້ໃຫຍ່ກຶກໜັງສື ທີ່ເພີ່ມຂຶ້ນປະມານ 11 ລ້ານຄົນ ໃນເຄິ່ງທຳອິດຂອງ ທົດສະວັດທີ່ຜ່ານມາ. ຍັງມີຄວາມຄືບໜ້າຊ້າທັງໃນປະເທດໄນຈີເລຍ ແລະ ປາກີດສະຖານ .

ການວິເຄາະທ່າອ່ຽງໄດ້ສະແດງໃຫ້ເຫັນເຖິງລະຍະທາງ ລະຫວ່າງຄຳໝັ້ນສັນຍາທີ່ໄດ້ໃຫ້ໄວ້ໃນດາກາ ປີ 2000 ແລະ ອັດຕາຄວາມຄືບໜ້າຕັ້ງແຕ່ນັ້ນມາ. ບາງປະເທດທີ່ມີຈຳນວນຜູ້ກຶກໜັງສືຫລາຍ ຊຶ່ງລວມທັງ ປະເທດຈີນ ແລະ ຫວຽດນາມ ແມ່ນຢູ່ໃນເສັ້ນທາງທີ່ຈະບັນລຸຕາມຄຳໝັ້ນສັນຍາ. ແຕ່ອັດຕາຄວາມຄືບໜ້າ ໃນຫວ່າງບໍ່ດົນມານີ້, ປະເທດໃຫຍ່ອື່ນໆທີ່ມີຊັດສ່ວນຈຳນວນປະຊາກອນກຶກໜັງສືຫລາຍໃນໂລກຍິ່ງມີອັດຕາການຮູ້ໜັງສືຕ່ຳ. ປະເທດບັງກາລາເທດ ແລະ ອິນເດຍຈະສາມາດເຮັດໄດ້ບໍ່ເກີນເຄິ່ງໜຶ່ງ ຂອງເປົ້າໝາຍສຳລັບປີ 2015, ໃນຂະນະທີ່ປະເທດ ອັງໂກລາ, ຊາດ ແລະ ສາທາລະນະລັດກອງໂກ ຍິ່ງໄກຈາກເປົ້າໝາຍທີ່ຕັ້ງໄວ້.

ການຂາດພັນທະທາງການເມືອງ ແມ່ນຖືກອ້າງວ່າເປັນເຫດຜົນທີ່ເຮັດໃຫ້ຄວາມຄືບໜ້າ ໃນການຮູ້ໜັງສືຊັກຊ້າ ແລະ ມັນກໍແມ່ນແນວນັ້ນແທ້. ຢູ່ໃນລະດັບສາກົນ, ການປຸ່ນແປງທີ່ໄດ້ຮັບຜົນແທ້ຈິງມີໜ້ອຍໃນທົດສະວັດທີ່ຜ່ານມາ. ການຮູ້ໜັງສືບໍ່ໄດ້ໃຫ້ຕົວເລກ ໃນວາລະການປະຊຸມ ຂອງເປົ້າໝາຍສະຫັດສະວັດແຫ່ງການພັດທະນາ (MDG) ແລະ ທົດສະວັດແຫ່ງການຮູ້ໜັງສືຂອງ ສະຫະປະຊາຊາດ (2003-2012) ພ້ອມທັງໄດ້ສ້າງຈິດສຳນຶກກ່ຽວກັບຄວາມສຳຄັນຂອງບັນຫາ ແລະ ບໍ່ມີການກິດຈະກຳເພື່ອກະຕຸ້ນ ການປະຕິບັດ. ກອງປະຊຸມສາກົນສ່ວນຫລາຍໄດ້ສົ່ງເສີມໃຫ້ມີການແລກປ່ຽນຄຳຄິດເຫັນ ແລະ ເຕັມໄປດ້ວຍການເຈລະຈາຕໍ່ລອງ, ແຕ່ຍັງບໍ່ທັນໄດ້ຈັດຕັ້ງເວທີທີ່ໜ້າເຊື່ອຖືສຳລັບການປະຕິບັດເທື່ອ. ຍັງບໍ່ທັນມີ ການນຳພາທີ່ກວ້າງຂວາງເພື່ອເປັນແຊມປ້ຽນໃນເວທີປະຕິບັດການຮູ້ໜັງສືຂອງສາກົນ.

ເມື່ອຜູ້ນຳທາງການເມືອງຮັບຮູ້ເຖິງຄວາມຕ້ອງການແກ້ໄຂຄວາມບໍ່ຮູ້ໜັງສື, ຄວາມຄືບໜ້າເປັນໄປໄດ້ຢ່າງໄວວາ. ຕັ້ງແຕ່ທ້າຍຊຸມ

ໃນປີ 2008 ຜູ້ໃຫຍ່ຈຳນວນປະມານ 796 ລ້ານຄົນ ຂາດທັກສະການຮູ້ໜັງສືຂັ້ນພື້ນຖານ-ປະມານ 17% ຂອງພົນລະເມືອງໂລກ

**ຮູບທີ 5: ຜູ້ໃຫຍ່ບໍ່ຮູ້ໜັງສືສ່ວນຫລາຍແມ່ນອາໄສຢູ່ໃນສິບປະເທດ.**

*ຈຳນວນຜູ້ໃຫຍ່ບໍ່ຮູ້ໜັງສືໃນປະເທດທີ່ຖືກເລືອກ ແຕ່ປີ 2005-2008*




*ແຫລ່ງຂໍ້ມູນ: ເບິ່ງຮູບທີ 1.29 ໃນ ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ 2011*

ປີ 1990 ເປັນຕົ້ນມາ, ປະເທດຕ່າງໆໃນອາເມລິກາລາຕິນ ແລະ ຄາລິບຽນ ໄດ້ເລີ່ມຕົ້ນ ໃຫ້ຄວາມສຳຄັນຕໍ່ການຮູ້ໜັງສືຂອງຜູ້ໃຫຍ່ຫລາຍກວ່າເກົ່າ. ແຜນການ ອີເບໂຣ-ອະເມຣິກັນ (Ibero-American) ສຳລັບການຮູ້ໜັງສື ແລະ ການສຶກສາຂັ້ນພື້ນຖານສຳລັບຊາວໜຸ່ມ ແລະ ຜູ້ໃຫຍ່ (PIA) ໄດ້ກຳນົດເປົ້າໝາຍ ໃນການລຶບລ້າງຄວາມບໍ່ຮູ້ໜັງສືຂອງຜູ້ໃຫຍ່ ພາຍໃນປີ 2015. ການຊຽນແຜນງານ ກ່ຽວກັບນະວັດຕະກຳໃໝ່ໃນ ປະເທດ ຊຶ່ງລວມມີລັດທີ່ມີຫລາຍເຊື້ອຊາດ ຂອງປະເທດໂບລິເວຍ, ກູບາ ແລະ ນິກາລາກົວ, ແຜນສຳລັບການຮູ້ໜັງສື ແລະ ການສຶກສາຂັ້ນພື້ນຖານສຳລັບຊາວໜຸ່ມ ແລະ ຜູ້ໃຫຍ່ມີເປົ້າໝາຍສະໜອງການສຶກສາຂັ້ນພື້ນຖານເປັນເວລາ 3 ປີ ໃຫ້ແກ່ຜູ້ໃຫຍ່ທີ່ກືກໜັງສືຈຳນວນ 34 ລ້ານຄົນ. ພ້ອມນັ້ນ ຍັງມີຊາວໜຸ່ມບໍ່ຮູ້ໜັງສືຈຳນວນ 110 ລ້ານຄົນ ທີ່ຍັງບໍ່ສຳເລັດການສຶກສາຊັ້ນປະຖົມ ມີສິດໄດ້ຮັບການສະໜັບສະໜູນເຊັ່ນກັນ.

ເພື່ອສຳເລັດການບຸກທະລຸດ້ານການຮູ້ໜັງສື ມັນໄດ້ຮຽກຮ້ອງໃຫ້ລັດຖະບານຂອງແຕ່ລະປະເທດຈະຕ້ອງມີ ຄວາມຮັບຜິດຊອບສຳລັບການວາງແຜນ, ການເງິນ ແລະ ການໃຫ້ບໍລິການຫລາຍຂຶ້ນ ໂດຍການເຮັດວຽກຜ່ານຄູ່ຮ່ວມງານຕ່າງໆ. ເມື່ອສິ່ງນີ້ເກີດຂຶ້ນ, ກໍຈະໄດ້ຮັບຜົນຢ່າງໄວວາ. ຄວາມຄືບໜ້າທີ່ມີຜົນສຳເລັດໃນປະເທດເອຢິບ ນັບແຕ່ການສ້າງຕັ້ງອົງການສົ່ງເສີມການຮູ້ໜັງສື ແລະ ການສຶກສາຜູ້ໃຫຍ່ ໃນກາງຊຸມປີ 1990 ເປັນຕົ້ນມາ ສະແດງໃຫ້ເຫັນເຖິງສິ່ງທີ່ສາມາດບັນລຸຜ່ານການສອດແຊກນະໂຍບາຍ ທີ່ລວມເອົາການບັນຈຸ ແລະ ການຝຶກອົບຮົມໃຫ້ແກ່ຄູສອນການສຶກສາຜູ້ໃຫຍ່, ການວາງເປົ້າໝາຍ ທີ່ມີປະສິດທິພາບ ແລະ ພັນທະຕໍ່ການສົ່ງເສີມສິດເທົ່າທຽມລະຫວ່າງຍິງ-ຊາຍ.

> ຖ້າໂລກເຮົາສາມາດບັນລຸຄວາມສະເໝີພາບຍິງ-ຊາຍໃນຊັ້ນປະຖົມໃນປີ 2008 ເດັກຍິງອີກ 3.6 ລ້ານຄົນອາດຈະໄດ້ເຂົ້າໂຮງຮຽນ

### *ຄວາມສະເໝີພາບ ແລະ ຄວາມເທົ່າທຽມດ້ານບົດບາດຍິງ-ຊາຍ: ສາຍໄຍຂອງຄວາມດ້ອຍໂອກາດທີ່ຕ້ອງເອົາຊະນະ*

ຄວາມສະເໝີພາບຍິງ-ຊາຍ ໃນການສຶກສາແມ່ນສິດທິມະນຸດ ຊຶ່ງເປັນພື້ນຖານຂອງຄວາມເທົ່າທຽມດ້ານໂອກາດ ແລະ ແຫລ່ງແຫ່ງການຂະຫຍາຍຕົວດ້ານເສດຖະກິດ, ການສ້າງວຽກເຮັດງານທຳ ແລະ ຜະລິດຕະພັນຕ່າງໆ. ປະເທດທີ່ຍອມທົນຢູ່ພາຍໃຕ້ສະພາບທີ່ມີຄວາມບໍ່ສະເໝີພາບຍິງ-ຊາຍສູງຕ້ອງໄດ້ຈ່າຍຄ່າເສຍຫາຍສູງເພື່ອແລກກັບການທຳລາຍຄວາມສາມາດບົ່ມຊ້ອນຂອງເດັກຍິງ ແລະ ແມ່ຍິງ ພ້ອມທັງຮັດແຄບທັດສະນະຄິດປະດິດສ້າງ ແລະ ຈຳກັດຂອບເຂດ. ເຖິງວ່າຈະມີຄວາມຄືບໜ້າໃນດ້ານຄວາມສະເໝີພາບຍິງ-ຊາຍ, ແຕ່ຫລາຍປະເທດທີ່ທຸກຍາກ ຈະບໍ່ສາມາດບັນລຸເປົ້າໝາຍໄດ້ໂດຍປາສະຈາກນະໂຍບາຍທັນປ່ຽນແບບເອົາຈິງເອົາຈັງ ແລະ ບູລິມະສິດ ໃນການວາງແຜນການສຶກສາ.

ຄວາມຄືບໜ້າທີ່ຈະບັນລຸຄວາມສະເໝີພາບຍິງ-ຊາຍ ໃນລະດັບໂຮງຮຽນປະຖົມຍັງສືບຕໍ່ປະຕິບັດໄດ້ເປັນກ້າວໆມາ. ຂົງເຂດທີ່ເລີ່ມຕົ້ນປະຕິບັດທິດສະວັດ ດ້ວຍຊ່ອງວ່າງຄວາມສະເໝີພາບຍິງ-ຊາຍທີ່ຫລາຍທີ່ສຸດແມ່ນ ຂົງເຂດໃນ ສະຫະລັດອາຣັບ, ເຂດພາກໃຕ້ ແລະ ພາກຕາເວັນຕົກຂອງທະວີບອາຊີ ແລະ ເຂດອະນຸພາກພື້ນທະເລຊາຍຊາຮາລາຂອງອາຟຣິກາ ຂົງເຂດດັ່ງກ່າວໄດ້ມີຄວາມຄືບໜ້າ. ແຕ່ບໍ່ຄວນປະເມີນໄລຍະທາງທີ່ຕ້ອງກ້າວໄປຕໍ່າ. 52 ປະເທດ ມີຂໍ້ມູນກ່ຽວກັບອັດຕາຂອງເດັກຍິງຕໍ່ເດັກຊາຍ ໃນໂຮງຮຽນປະຖົມ ຊຶ່ງວັດແທກຈາກດັດສະນີຄວາມສະເໝີພາບຍິງ-ຊາຍ (GPI) ແມ່ນ 0.95 ຫລືໜ້ອຍກວ່າ ແລະ ໃນ 26 ປະເທດ ແມ່ນມີ 0.90 ຫລື ໜ້ອຍກວ່າການເຂົ້າຮຽນຢູ່ອັບການິດສະຖານ ແມ່ນມີເດັກຍິງ 66 ຄົນ ຕໍ່ເດັກຊາຍທຸກໆ100 ຄົນ ແລະ ໃນປະເທດໂຊມາເລຍ ມີພຽງເດັກຍິງ 55 ຄົນຕໍ່ເດັກຊາຍທຸກໆ100ຄົນ. ຖ້າໂລກເຮົາສາມາດບັນລຸຄວາມສະເໝີພາບຍິງ-ຊາຍ ໃນຊັ້ນໂຮງຮຽນປະຖົມໃນປີ 2008, ເດັກຍິງອີກ 3.6 ລ້ານຄົນອາດຈະໄດ້ ເຂົ້າຮຽນ.

ຄວາມຄືບໜ້າໃນຄວາມສະເໝີພາບຍິງ-ຊາຍໃນລະດັບຂັ້ນມັດທະຍົມມີອັດຕາການປ່ຽນແປງສູງ. ເຂດພາກໃຕ້ ແລະ ພາກຕາເວັນຕົກຂອງທະວີບອາຊີໄດ້ເອົາຈຳນວນການເຂົ້າຮຽນຂອງເພດຍິງທີ່ເພີ່ມຂຶ້ນ ບວກໃສ່ການກ້າວໄປສູ່ການບັນລຸຄວາມສະເໝີພາບຍິງ-ຊາຍທີ່ເຫັນໄດ້ຊັດໃນຂະນະທີ່ເຂດອະນຸພາກພື້ນ ທະເລຊາຍຊາຮາລາຂອງອາຟຣິກາມີເດັກຍິງເຂົ້າຮຽນ ໃນໂຮງຮຽນມັດທະຍົມເພີ່ມຂຶ້ນ ເຖິງວ່າຈະມາຈາກພື້ນຖານຕໍ່າ ແລະ ຂາດຄວາມກ້າວໜ້າໃນດ້ານຄວາມສະເໝີພາບ. ໃນປີ 2008, 24 ປະເທດ ທີ່ມີ ຂໍ້ມູນທີ່ສອດຄ່ອງຢູ່ໃນເຂດອະນຸພາກພື້ນທະເລຊາຍຊາຮາລາຂອງອາຟຣິກາ ແລະ ສາມປະເທດ ໃນທະວີບອາຊີໃຕ້ ມີດັດສະນີຄວາມສະເໝີພາບຍິງ-ຊາຍ (GPI) ໃນການເຂົ້າຮຽນຊັ້ນມັດທະຍົມ 0.90 ຫລື ໜ້ອຍກວ່າ ແລະ 10 ປະເທດມີ 0.70 ຫລື ໜ້ອຍກວ່າ. ໃນໂຮງຮຽນມັດທະຍົມຂອງປະເທດຊາດຈຳນວນເດັກຊາຍຫລາຍກວ່າເດັກຍິງສອງເທົ່າ ແລະ ປະເທດປາກິດສະຖານ ມີພຽງເດັກຍິງ 3 ຄົນ ຕໍ່ຈຳນວນຜູ້ຊາຍທຸກໆ 4 ຄົນ. ສ່ວນສະຫະລັດອາຣັບ, ຄວາມຄືບໜ້າກ່ຽວກັບຄວາມສະເໝີພາບຍິງ-ຊາຍໃນໂຮງຮຽນມັດທະຍົມແມ່ນຫລ້າຫລັງກວ່າຄວາມຄືບໜ້າໃນລະດັບໂຮງຮຽນ ປະຖົມ. ຄວາມຄາດຫວັງທີ່ຈະ ບັນລຸຄວາມສະເໝີພາບຍິງ-ຊາຍ ໃນການສຶກສາຂັ້ນມັດທະຍົມ ຍັງຖືກຈຳກັດໃນຫລາຍໆປະເທດ, ເຖິງວ່າ ຈະມີພັນທະຈາກລັດຖະບານຢ່າງແຂງຂັນທີ່ສະໜັບສະໜູນທາງດ້ານນະໂຍບາຍເພື່ອສ້າງຄວາມແຕກຕ່າງໄດ້.

ຕິດຕາມຄືນຄວາມບໍ່ດຸ່ນດ່ຽງທາງດ້ານບົດບາດຍິງ-ຊາຍ ໂດຍຜ່ານລະບົບການສຶກສາໄປຫາຈຸດເລີ່ມຕົ້ນ ຂອງມັນຈະສາມາດຊ່ວຍບອກໄດ້ເຖິງນະໂຍບາຍ. ໃນຫລາຍໆປະເທດ, ຄວາມແຕກໂຕນເລີ່ມຈາກການຮັບນັກຮຽນ ເຂົ້າຮຽນຢູ່ໃນຫ້ອງ ປ 1ຂອງໂຮງຮຽນປະຖົມ. ສາມສ່ວນສີ່ຂອງປະເທດທີ່ບໍ່ສາມາດ ບັນລຸຄວາມສະເໝີພາບຍິງ-ຊາຍໃນລະດັບຊັ້ນປະຖົມ ມີເດັກຊາຍລົງທະບຽນຫລາຍກວ່າເດັກຍິງ ໃນການເລີ່ມຕົ້ນຮອບວຽນ ໃນຊັ້ນປະຖົມ. ໃນປະເທດມາລີ, ອັດຕາສະເລ່ຍທັງໝົດຂອງຊັ້ນປະຖົມປີທີໜຶ່ງ ແມ່ນມີ ເດັກຊາຍ 102% ແລະ ເດັກຍິງ 89%. ນອກຈາກວ່າ ຄວາມບໍ່ສົມດູນຈະປ່ຽນໃນລະຫວ່າງຊັ້ນປະຖົມ(ໃນອັດຕາຂອງເດັກຍິງທີ່ອອກໂຮງຮຽນຕໍ່າ) ເປັນຜົນໃຫ້ເກີດມີຄວາມລຳອຽງທາງເພດຢ່າງຖາວອນໃນຊັ້ນ ປະຖົມ ຊຶ່ງຈະນຳໄປ ສູ່ສະພາບດຽວກັນໃນການສຶກສາຊັ້ນມັດທະຍົມ.

ເມື່ອເດັກນ້ອຍເຂົ້າຮຽນ, ຮູບແບບການເລື່ອນຊັ້ນມີການປ່ຽນແປງ. ໃນປະເທດໂບກີນາຟາໂຊ, ເດັກຊາຍ ແລະ ເດັກຍິງປະມານ 70% ເຂົ້າໂຮງຮຽນຈົນເຖິງຂັ້ນຮຽນສຸດທ້າຍ ແລະ ໃນປະເທດເອທິໂອເປຍ, ເບິ່ງຄືວ່າເດັກຍິງຈະສາມາດເຂົ້າຮຽນຈົນຮອດຊັ້ນຮຽນສຸດທ້າຍຫລາຍກວ່າ. ສະນັ້ນ, ໃນບັນດາປະເທດເຫລົ່ານີ້, ນະໂຍບາຍຈຶ່ງຕ້ອງສຸມໃສ່ການປົດເປື້ອງອຸປະສັກຕໍ່ຄວາມສະເໝີພາບຍິງ-ຊາຍແຕ່ເລີ່ມເຂົ້າຮຽນຫ້ອງ ປ 1. ກົງກັນຂ້າມໃນປະເທດກີນີ ອັດຕາລອດເຫລືອສຳລັບເດັກຍິງແມ່ນ ຫ່າງໄກຈາກເດັກຊາຍຫລາຍ. ໃນເມື່ອມີຄວາມແຕກໂຕນກັນໃນອັດຕາການອອກໂຮງຮຽນ, ລັດຖະບານຕ້ອງໄດ້ສ້າງສິ່ງຈູງໃຈເຊັ່ນວ່າ: ການໃຫ້ກ້ອນເງິນຊ່ວຍເຫລືອ ຫລື ໂຄງການອາຫານເສີມແກ່ໂຮງຮຽນ ເພື່ອໃຫ້ຜູ້ປົກຄອງສືບຕໍ່ເອົາລູກຂອງຕົນເຂົ້າໂຮງຮຽນ.

ຄວາມແຕກໂຕນລະຫວ່າງຍິງ-ຊາຍ ໃນການສຶກສາລະດັບມັດທະຍົມເປັນກໍລະນີ ທີ່ພົບເຫັນຫລາຍທີ່ສຸດເມື່ອກວດຄືນໄປເບິ່ງຢູ່ໃນຊັ້ນປະຖົມ. ໃນປະເທດຕ່າງໆສ່ວນຫລາຍເດັກຍິງທີ່ສຳເລັດການສຶກສາ ຊັ້ນປະຖົມ ຈະມີໂອກາດຄືກັບເດັກຊາຍໃນການສືບຕໍ່ ໄປຮຽນໃນລະດັບການສຶກສາຊັ້ນມັດທະຍົມ, ເຖິງວ່າ ເດັກຍິງໃນຊັ້ນມັດທະຍົມມັກຈະມີການອອກໂຮງຮຽນຫລາຍກວ່າກໍຕາມ. ໃນປະເທດບັງກາລາເທດ, ມີຄວາມແຕກໂຕນໜ້ອຍລະຫວ່າງຍິງ-ຊາຍ ໃນຈຸດຂ້າມຜ່ານຈາກຊັ້ນປະຖົມ ສູ່ຊັ້ນ ມັດທະຍົມ. ເຖິງຢ່າງໃດກໍຕາມ, ອັດຕາການຈົບຊັ້ນມັດທະຍົມຂອງເດັກຊາຍແມ່ນ 23% ທຽບກັບເດັກ ຍິງ 15%.

ຄວາມດ້ອຍໂອກາດໄດ້ຕິດພັນກັບຄວາມອຸດົມຮັ່ງມີ, ສະຖານທີ່, ພາສາ ແລະ ປັດໄຈອື່ນໆເຮັດໃຫ້ຄວາມແຕກໂຕນລະຫວ່າງຍິງ-ຊາຍກວ້າງອອກ. ຂະນະທີ່ຊ່ອງວ່າງການເຂົ້າຮຽນລະຫວ່າງເດັກຍິງ ແລະ ເດັກ

ຊາຍ ທີ່ມາຈາກຄອບຄົວຮັ່ງມີມັກ ຈະນ້ອຍກວ່າ, ເດັກຍິງທີ່ມາຈາກຄອບຄົວທີ່ທຸກຍາກ, ຊົນນະບົດ ຫລື ມາຈາກຊົນເຜົ່າສ່ວນນ້ອຍມັກຖືກປ່ອຍປະລະເລີຍ. ໃນປະເທດປາກິດສະຖານ, ແມ່ຍິງອາຍຸ 17 ຫາ 22 ປີ ສະເລ່ຍການໃຊ້ຊີວິດໃນໂຮງຮຽນ 5 ປີ, ແຕ່ສຳລັບຜູ້ຍິງທຸກຍາກຈາກເຂດຊົນນະບົດຕົວເລກຫລຸດລົງມີພຽງ 1 ປີ ໃນຂະນະທີ່ແມ່ຍິງທີ່ມີຖານະຮັ່ງມີ ຈາກຕົວເມືອງຈະໃຊ້ເວລາໃນການສຶກສາສະເລ່ຍປະມານ 9 ປີ.

ແມ່ຍິງຍັງສືບຕໍ່ປະເຊີນໜ້າກັບຄວາມດ້ອຍໃນລະດັບສູງໃນການມີໂອກາດໄດ້ຮັບຄ່າຈ້າງ ແລະ ການມີວຽກເຮັດງານທຳ ຊຶ່ງເຮັດໃຫ້ຜົນໄດ້ຮັບຈາກການສຶກສາຫລຸດລົງ. ໃນເວລາດຽວກັນ, ການສຶກສາຍັງມີບົດບາດສຳຄັນທີ່ຈະທັບມ້າງ ຄວາມດ້ອຍໂອກາດໃນຕະຫລາດແຮງງານ. ບັນດານະໂຍບາຍນັບແຕ່ການໃຫ້ທຶນດ້ານການເງິນທີ່ເປັນສິ່ງຈູງໃຈສຳລັບການສຶກສາເດັກຍິງ ຈົນເຖິງການພັດທະນາສະພາບແວດລ້ອມໃນໂຮງຮຽນເພື່ອນຍິງ, ການປັບປຸງການເຂົ້າເຖິງແຜນງານດ້ານເຕັກນິກ ແລະ ວິຊາຊີບ ແລະ ການໃຫ້ການສຶກສານອກໂຮງຮຽນ ສາມາດເອົາຊະນະກັບຄວາມດ້ອຍໂອກາດທາງດ້ານຄວາມສະເໝີພາບຍິງ-ຊາຍ ຊຶ່ງຈຳກັດການພັດທະນາທັກສະຂອງແມ່ຍິງ. ໃນປະເທດບັງກາລະເທດ, ສູນຈັດຫາງານ ແລະ ການສຶກສາເພື່ອດຳລົງຊີວິດສຳລັບເຍົາວະຊົນ ແລະ ຊາວໜຸ່ມ (BRAC) ມີເປົ້າໝາຍເພື່ອພັດທະນາທັກສະ ແລະ ເສີມສ້າງຄວາມໝັ້ນໃຈຂອງກຸ່ມຊາວໜຸ່ມຍິງ (ກ່ອງທີ 2).

### ກ່ອງທີ2: ສູນຈັດຫາງານ ແລະ ການສຶກສາເພື່ອດຳລົງຊີວິດສຳລັບເຍົາວະຊົນ ແລະ ຊາວໜຸ່ມ BRAC ສາມາດຊ່ວຍເດັກຍິງ ແລະ ແມ່ຍິງ

ໃນປີ 2009, ສູນຈັດຫາງານ ແລະ ການສຶກສາເພື່ອດຳລົງຊີວິດສຳລັບເຍົາວະຊົນ ແລະ ຊາວໜຸ່ມ ບັງກະລາເທດ (BRAC) ມີຫລາຍກວ່າ 21,000 ສູນທີ່ເຕົ້າໂຮມຊາວໜຸ່ມຍິງປະມານ 430,000 ຄົນ ເພື່ອໃຫ້ມີທັກສະການຮູ້ໜັງສື ແລະ ສົນທະນາກ່ຽວກັບຫົວເລື່ອງຕ່າງໆເຊັ່ນ: ເລື່ອງສຸຂະພາບ, ການແຕ່ງງານໄວ ແລະ ໜ້າທີ່ຂອງ ເດັກຍິງໃນຄອບຄົວ. ສູນຍັງສະໜອງການຝຶກອົບຮົມໃນທັກສະເພື່ອສ້າງລາຍຮັບ ພ້ອມທັງ ການທ້ອນເງິນ ແລະ ໂຄງການເງິນກູ້ຂະໜາດນ້ອຍສຳລັບສະມາຊິກທີ່ມີຈຸດປະສົງສ້າງຕັ້ງທຸລະກິດຂະໜາດນ້ອຍ. ຜົນໄດ້ຮັບ ສະແດງໃຫ້ເຫັນວ່າ ສູນດັ່ງກ່າວໄດ້ຮັບຜົນສຳເລັດໃນການຍົກສູງການເຄື່ອນຍ້າຍແຮງງານໃນສັງຄົມ ແລະ ກິດຈະກຳຫາລາຍໄດ້ຕ່າງໆ. ເພື່ອສືບຕໍ່ຜົນສຳເລັດນັ້ນ, ແບບຢ່າງນີ້ ໄດ້ຖືກນຳເອົາໄປໃຊ້ໃນປະເທດອື່ນໆ ເຊັ່ນ: ປະເທດອັບການິດສະຖານ, ຊູດານ, ອູການດາ ແລະ ສະຫະລັດປະຊາທິປະໄຕ ທານສະເນຍ.

*ແຫລ່ງຂໍ້ມູນ: ເບິ່ງໃນຮູບທີ 1.13 ໃນ ບົດລາຍງານໂລກ ການຕິດຕາມການສຶກສາເພື່ອທຸກຄົນ2011.*

## ຄຸນນະພາບການສຶກສາ: ຄວາມບໍ່ເທົ່າທຽມເປັນສິ່ງຂັດຂວາງຄວາມກ້າວໜ້າ

ການທົດສອບຂອງລະບົບການສຶກສາ ແມ່ນຢາກຮູ້ວ່າລະບົບການສຶກສານັ້ນ ມີຜົນສຳເລັດຈຸດປະສົງຕົ້ນຕໍ ໃນການປະກອບທັກສະທີ່ຈຳເປັນໃຫ້ແກ່ໄວໜຸ່ມ ຕາມທີ່ເຂົາເຈົ້າຕ້ອງການເພື່ອພັດທະນາທີ່ມີການຄ້ຳປະກັນ ແລະ ເຂົ້າຮ່ວມຊີວິດທາງສັງຄົມ, ເສດຖະກິດ ແລະ ການເມືອງ. ຫລາຍປະເທດແມ່ນ ບໍ່ຜ່ານການທົດສອບດັ່ງກ່າວ ແລະ ມີນັກຮຽນຫລາຍຄົນ ທີ່ອອກຈາກໂຮງຮຽນໂດຍບໍ່ໄດ້ປະກອບທັກສະການຮູ້ໜັງສື ແລະ ການຄິດໄລ່ເລກທີ່ເປັນພື້ນຖານທີ່ສຸດ.

ການປະເມີນການຮຽນສາກົນ ໄດ້ເປີດເຜີຍຄວາມແຕກໂຕນທີ່ເຫັນໄດ້ຊັດໃນລະດັບຊາດ ແລະ ລະດັບໂລກເຖິງຜົນສຳເລັດທາງດ້ານການຮຽນ. ຄວາມຄືບໜ້າໃນການວິໄຈກ່ຽວກັບການອ່ານໜັງສືສາກົນ (PIRLS) ປີ 2006 ໄດ້ປະເມີນທັກສະການອ່ານ ຂອງນັກຮຽນ ຊັ້ນປີທີສີ່ ໃນ 40 ປະເທດໂດຍອີງໃສ່ 4 ມາດຕະຖານ. ໃນປະເທດທີ່ຮັ່ງມີ ເຊັ່ນ ປະເທດຝຣັ່ງ ແລະ ສະຫະລັດອາເມລິກາ, ນັກຮຽນສ່ວນຫລາຍມີຜົນສຳເລັດໃນລະດັບ ມາດຕະຖານ ຫລື ສູງກວ່າມາດຕະຖານລະດັບກາງ. ໃນທາງກົງກັນຂ້າມ, ໃນປະເທດໂມຣັອກໂກ ແລະ ອາຟຣິກາໃຕ້ ຊຶ່ງເປັນປະເທດທີ່ມີລາຍໄດ້ລະດັບກາງ , ສູງກວ່າ 70% ມີຄະແນນຕ່ຳກວ່າເກນມາດຕະຖານຂັ້ນຕ່ຳສຸດ.

ຜົນການຮຽນຮູ້ໃນລະດັບທີ່ແນ່ນອນ ແມ່ນຕ່ຳຫລາຍໃນຫລາຍປະເທດກຳລັງພັດທະນາ (ຮູບທີ6). ໃນປະເທດອິນເດຍ, ການສຳຫລວດໃນປີ 2009 ພົບວ່າ ມີພຽງ 38% ຂອງ ນັກຮຽນປີທີສີ່ໃນເຂດຊົນນະບົດ ທີ່ສາມາດອ່ານປຶ້ມແບບຮຽນທີ່ອອກແບບໃຫ້ນັກຮຽນປີທີສອງ. ແມ່ນແຕ່ຫລັງຈາກໃຊ້ເວລາຮຽນເຖິງ 8 ປີ, 18% ຂອງນັກຮຽນກໍ່ຍັງບໍ່ສາມາດອ່ານປຶ້ມເຫລົ່ານີ້ໄດ້. ໃນປີ 2007, ການປະເມີນຂອງບໍລິສັດຫຸ້ນສ່ວນການຕິດຕາມຄຸນນະພາບການສຶກສາ ໃນເຂດພາກໃຕ້ ແລະ ຕາເວັນອອກຂອງ ທະວີບອາຟຣິກາ (SACMEQ) ໄດ້ເນັ້ນການຂາດດຸນກ່ຽວກັບຜົນການຮຽນ ຂອງປະເທດທີ່ມີລາຍຮັບຕ່ຳ. ໃນປະເທດ ມາລາວີ ແລະ ຊຳເບຍ ມີຫລາຍກວ່າສ່ວນສາມຂອງນັກຮຽນຊັ້ນປີທີ 6 ທີ່ບໍ່ສາມາດ ອ່ານໄດ້ຢ່າງຄ່ອງແຄ້ວ.

ການເຂົ້າຮຽນທີ່ເພີ່ມຂຶ້ນຢ່າງໄວຂອງນັກຮຽນໃນຫລາຍປະເທດ ເປັນການປະນີປະນອມດ້ານຄຸນນະພາບ ການສຶກສາ ຫລື ບໍ່? ຄຳຖາມນີ້ຍັງຄົງເປັນຈຸດໃຈກາງຂອງການໂຕ້ຖຽງກັນຢູ່. ເຫັນໄດ້ວ່າ ຜູ້ທີ່ມາເຂົ້າຮຽນໃໝ່ຫລາຍຄົນແມ່ນມາຈາກຄົບຄົວທີ່ຈັດເຂົ້າໃນລະດັບຄວາມທຸກຍາກສູງ, ໂພສະນາການຕ່ຳ ແລະ ຜູ້ປົກຄອງມີລະດັບການຮູ້ໜັງສືຕ່ຳ ຊຶ່ງລັກສະນະທັງໝົດເຫລົ່ານີ້ ພົວພັນເຖິງການມີຜົນສຳເລັດທີ່ຕ່ຳຫລາຍ. ສິ່ງນີ້ ອາດຖືກຕັ້ງສົມມຸດຖານໄວ້ວ່າ ການລົງທະບຽນ ແລະ ລະດັບການຮຽນແມ່ນສິ່ງທີ່ເຮັດແທນກັນໄດ້. ໃນຄວາມຈິງ, ຫລັກຖານແມ່ນຍັງບໍ່ທັນສາມາດສະຫລຸບໄດ້. ຂໍ້ມູນການປະເມີນຈາກ SACMEQ ສະແດງໃຫ້ເຫັນວ່າ ສິ່ງເຫລົ່ານີ້ບໍ່ໄດ້ມີສ່ວນພົວພັນກັນໃນຫລາຍປະເທດ. ໃນປະເທດເຄນຢາ ແລະ ຊຳເບຍ, ການເຂົ້າຮຽນທີ່ເພີ່ມຂຶ້ນຫລາຍ ລະຫວ່າງ ປີ 2000 ແລະ 2007 ບໍ່ໄດ້ມີຜົນກະທົບຕໍ່ຄະແນນເສັງ. ໃນປະເທດສະຫະລັດປະຊາທິປະໄຕ ຕັງຊາເນຍໄດ້ບັນທຶກຄວາມກ້າວໜ້າໃນລະດັບການຮຽນ ທັງໆທີ່ມີຈຳນວນເດັກນ້ອຍທີ່ເຂົ້າຮຽນໃນຊັ້ນປະຖົມມີເກືອບສອງເທົ່າ.

ຜົນການຮຽນແມ່ນພົວພັນເຖິງປັດໄຈເຊັ່ນ: ຄວາມຮັ່ງມີ ແລະ ການສຶກສາຂອງຜູ້ປົກຄອງ, ພາສາ, ເຊື້ອຊາດ ແລະ ທີ່ຕັ້ງທາງດ້ານພູມສາດ. ໃນປະເທດບັງກາລາເທດ, ຕົວຢ່າງ, ນັກຮຽນຫລາຍກວ່າ 80% ທີ່ຮຽນຮອດ ຊັ້ນປະຖົມປີທີ 5 ຜ່ານການສອບເສັງຈົບຊັ້ນ, ແຕ່ເຖິງວ່ານັກຮຽນທຸກຄົນທີ່ຢູ່ໃນເຂດຕາແສງໃນເມືອງບາຣິຊາ ຈະສາມາດຜ່ານການ

**ຮູບທີ 6: ທັກສະການອ່ານປ່ຽນແປງຢ່າງກວ້າງຂວາງໃນເຂດອະນຸພາກພື້ນທະເລຊາຍ ຊາຮາລາ-ອາຟຣິກາ**

ເປີເຊັນຂອງນັກຮຽນຊັ້ນປີທີ 6 ທີ່ສາມາດບັນລຸລະດັບທັກສະການອ່ານSACMEO ປີ 2007




*ແຫລ່ງຂໍ້ມູນ: ເບິ່ງໃນຮູບທີ 1.37 ໃນ ບົດລາຍງານໂລກ ການຕິດຕາມການສຶກສາເພື່ອທຸກຄົນ2011*

ໃນປະເທດ ມາລາວີ ແລະ ຊຳເບຍ ມີນັກຮຽນຈຳນວນໜຶ່ງສ່ວນສາມ ໃນຊັ້ນປີທີ 6 ບໍ່ສາມາດອ່ານໄດ້ຢ່າງຄ່ອງແຄ້ວ

ສອບເສັງ, ນັກຮຽນຢູ່ເຂດຕາແສງໃນສີເຣດ ມີໜ້ອຍກວ່າເຄິ່ງໜຶ່ງທີ່ສຳເລັດການສຶກສາ. ດັ່ງນັ້ນ, ການທີ່ເດັກນ້ອຍໄດ້ໄປເຂົ້າໂຮງຮຽນໃນປະເທດບັງກາລາເທດ ເປັນສິ່ງທີ່ຈະແຈ້ງວ່າ ເຂົາເຈົ້າມີໂອກາດທີ່ຈະຜ່ານການສອບເສັງລະດັບຊາດ. ໃນປະເທດເຄນຢາ, ເຄິ່ງໜຶ່ງຂອງເດັກນ້ອຍ ທີ່ທຸກຍາກໃນປີທີ 3 ສາມາດ ອ່ານປຶ້ມແບບຮຽນມາດຕະຖານ ໃນພາສາກີສວາຮີລີ ຂອງຊັ້ນປີທີ 2 ລົມທຽບ ກັບນັກຮຽນທີ່ຮັ່ງມີປະມານສາມສ່ວນສີ່.

ລັດຖະບານໃນປະເທດທີ່ທຸກຍາກທີ່ສຸດ ປະເຊີນກັບສິ່ງທ້າທາຍອັນໃຫຍ່ຫລວງໃນການເພີ່ມລະດັບຄ່າສະເລ່ຍໃນລະບົບການສຶກສາ. ນະໂຍບາຍທີ່ເນັ້ນໃສ່ການບັນລຸການປັບປຸງທັງລະບົບ ປາສະຈາກເປົ້າໝາຍໃນ ການຫລຸດຄວາມບໍ່ເທົ່າທຽມກັນ ລະຫວ່າງນັກຮຽນ ເບິ່ງຄືວ່າຈະບໍ່ປະສົບຄວາມສຳເລັດ.

ການເຕົ້າໂຮມຂອງຄວາມດ້ອຍໂອກາດດ້ານສັງຄົມ ໃນການຮັບນັກຮຽນເຂົ້າໂຮງຮຽນ ໄດ້ຕິດພັນຢ່າງແຂງແຮງກັບລະດັບ ຜົນການຮຽນຕ່ຳຂອງນັກຮຽນ-ແຕ່ໂຮງຮຽນຍັງສ້າງຄວາມບໍ່ເທົ່າທຽມກັນອີກ. ໃນປະເທດສ່ວນຫລາຍ, ຄຸນນະພາບທີ່ໃຫ້ການບໍລິການແກ່ກຸ່ມ ເສດຖະກິດ-ສັງຄົມທີ່ຕ່າງກັນ ມີຄວາມແຕກຕ່າງກັນຫລາຍ. ການເຮັດໃຫ້ຄວາມແຕກຕ່າງນີ້ແຄບເຂົ້າ ແມ່ນບາດກ້າວທຳອິດໃນການປັບປຸງລະດັບສະເລ່ຍຂອງການຮຽນ ແລະ ເປັນການຫລຸດຄວາມບໍ່ເທົ່າທຽມດ້ານການຮຽນລົງ. ຮູບແບບທີ່ຫລາກຫລາຍ ໃນຄຸນນະພາບຂອງໂຮງຮຽນລະຫວ່າງປະເທດ ແລະ ພາຍໃນປະເທດ ສ້າງຄວາມຫຍຸ້ງຍາກ ໃນຖອດຖອນບົດຮຽນທີ່ ນຳໃຊ້ໄດ້ໂດຍທົ່ວໄປ. ເຖິງຢ່າງໃດກໍຕາມ, ມັນມີຄວາມເປັນໄປໄດ້ທີ່ຈະກຳນົດບາງປັດໄຈ ທີ່ມີ ຜົນກະທົບທີ່ສຳຄັນສຳລັບປະເທດຕ່າງໆໃນທົ່ວໂລກເຊັ່ນ:

ຖ້າຢາກບັນລຸການສຶກສາຂັ້ນປະຖົມໂດຍທົ່ວໄປ ຈະຕ້ອງເລືອກຄູມາຮັບໃຊ້ອີກຈຳນວນ 1.9 ລ້ານຄົນ ພາຍໃນປີ 2015

- ຄູເປັນປັດໄຈສຳຄັນ. ການດຶງດູດເອົາຄົນທີ່ມີຄຸນນະພາບເຂົ້າສູ່ອາຊີບການສອນ, ຮັກສາພວກເຂົາ ເອົາໄວ້ໃນອາຊີບນີ້ ແລະ ການສະໜອງທັກສະທີ່ສຳຄັນ ແລະ ການສະໜັບສະໜູນ ແກ່ເຂົາເຈົ້າເປັນສິ່ງທີ່ສຳຄັນຫລາຍ. ໃຫ້ຮັບປະກັນວ່າ ລະບົບການພັດທະນາຄູທີ່ມີການແຈກຢາຍຄູຢ່າງ ເທົ່າທຽມ ແມ່ນເປັນກຸນແຈ ນຳໄປສູ່ການບັນລຸຜົນການຮຽນຢ່າງເປັນທຳຫລາຍຂຶ້ນ. ສິ່ງທີ່ຕ້ອງກັງວົນ ອີກຢ່າງໜຶ່ງແມ່ນການຮັບສະໝັກຄູ. ຖ້າຫາກຢາກສາມາດບັນລຸການສຶກສາຊັ້ນປະຖົມ ໂດຍທົ່ວໄປໄດ້ໝາຍຄວາມວ່າຈະຄັດເລືອກຄູ ມາຮັບໃຊ້ອີກ 1.9 ລ້ານຄົນ ພາຍໃນປີ 2015 ໃນນັ້ນຫລາຍກວ່າເຄິ່ງໜຶ່ງແມ່ນ ຢູ່ໃນເຂດອະນຸພາກພື້ນ ທະເລຊາຍຊາຮາລາຂອງອາຟຣິກາ.

- ເວລາສອນຕົວຈິງເປັນສິ່ງສຳຄັນ. ການຂາດສອນ ແລະ ພັກກ່ອນເວລາໃນລະຫວ່າງ ການສອນ ສາມາດຫລຸດເວລາການຮຽນ ແລະ ເປັນການເຮັດໃຫ້ຄວາມບໍ່ເທົ່າທຽມໃນການຮຽນກວ້າງອອກເຊັ່ນກັນ. ການສຳຫລວດອັນໜຶ່ງໃນສອງລັດຂອງປະເທດອິນເດຍ ພົບວ່າ ລັດຖະກອນຄູທົ່ວໄປຂອງລັດຢູ່ຊົນນະບົດຈະຂາດສອນໜຶ່ງມື້ຕໍ່ອາທິດ. ການແກ້ໄຂເງື່ອນໄຂການບັນຈຸຄູ ແລະ ການສ້າງຄວາມເຂັ້ມແຂງໃນການຄຸ້ມຄອງໂຮງຮຽນ ແລະ ການເຮັດແທ້ທຳຈິງ ສາມາດເພີ່ມຜົນສຳເລັດດ້ານການຮຽນແລະ ຫລຸດຄວາມບໍ່ເທົ່າທຽມລົງໄດ້.

- ການຮຽນໃນຂັ້ນຕົ້ນໆມີຄວາມສຳຄັນຫລາຍ. ຂະໜາດຫ້ອງຮຽນສ່ວນຫລາຍຈະນ້ອຍລົງໃນເມື່ອເດັກຫາກມີການເລື່ອນຂັ້ນຮຽນສູງຂຶ້ນໄປຕາມລະບົບການສຶກສາ ຊຶ່ງນັກຮຽນໃນຂັ້ນຮຽນລຸນລົງມາຈະຖືກເນັ້ນໜັກການໃຫ້ຄວາມຮູ້ຫລາຍກວ່າ. ໃນປະເທດບັງກາລາເທດ, ສະເລ່ຍຂະໜາດຫ້ອງຮຽນໃນຊັ້ນປະຖົມ ປີສຸດທ້າຍ ທັງໂຮງຮຽນລັດ ແລະ ເອກະຊົນ ມີນັກຮຽນ ສາມສິບຄົນ-ປະມານເຄິ່ງໜຶ່ງ ຂອງຈຳນວນສະເລ່ຍໃນຂັ້ນປີທີໜຶ່ງ. ການແຈກຢາຍຄູສອນໃນແຕ່ລະຊັ້ນໃຫ້ເທົ່າທຽມຫລາຍຂຶ້ນ ແລະ ການສຸມໃສ່ ເພື່ອຮັບປະກັນໃຫ້ນັກຮຽນທຸກຄົນ ໄດ້ຮັບທັກສະພື້ນຖານໃນການຂີດຂຽນ ແລະ ການຄຳນວນ ເປັນສິ່ງສຳຄັນຫລາຍ. ສະພາບແວດລ້ອມໃນຫ້ອງຮຽນມີຄວາມສຳຄັນ. ຫ້ອງຮຽນທີ່ບໍ່ຄ່ອຍມີອຸປະກອນ ແລະ ນັກຮຽນບໍ່ມີປຶ້ມແບບຮຽນ ແລະ ອຸປະກອນການຂຽນແມ່ນບໍ່ຊ່ວຍໃຫ້ການຮຽນມີປະສິດທິພາບ. ໃນປະເທດ ມາລາວີ, ຫ້ອງຮຽນຊັ້ນປະຖົມ ມີນັກຮຽນປະມານ 36 ຫາ 120 ຄົນ ຕໍ່ຄູໜຶ່ງຄົນ. ໃນປະເທດ ເຄນຢາ, ອັດຕາສ່ວນຂອງເດັກທີ່ມີປຶ້ມແບບຮຽນຄະນິດສາດມີປະມານ 8% ຈາກແຂວງທາງ ພາກຕາເວັນອອກສຽງເໜືອ ຈົນເຖິງ 44% ໃນເມືອງຫລວງໄນໂຣບີ.

ເພື່ອແກ້ໄຂຄວາມດ້ອຍໂອກາດຂອງເດັກນ້ອຍ ທີ່ຕິດມາກັບພວກເຂົາ, ໂຮງຮຽນຕ້ອງສະໜອງການສະໜັບສະໜູນຕື່ມອີກ ຊຶ່ງລວມມີ ເວລາການຮຽນພິເສດ ແລະ ຊັບພະຍາກອນເພີ່ມເຕີມ. ການຈັດສັນແຫລ່ງທຶນຂອງລັດ ມີບົດບາດສຳຄັນໃນການເຮັດໃຫ້ຊ່ອງວ່າງການຮຽນຮູ້ແຄບລົງ. ໃນປະເທດ ອິນເດຍ, ການຈັດສັນງົບປະມານຕໍ່ນັກຮຽນຈາກລັດຖະບານກາງ ເພີ່ມຂຶ້ນຢ່າງກວ້າງຂວາງຕາມ ເມືອງຕ່າງໆທີ່ມີຕົວຊີ້ບອກຂອງການສຶກສາຕ່ຳທີ່ສຸດ. ແຫລ່ງທຶນອື່ນອີກ ໄດ້ຊ່ວຍໃຫ້ທຶນແກ່ຄູອາຈານເພີ່ມ ແລະ ເຮັດໃຫ້ຊ່ອງວ່າງຂອງໂຄງລ່າງແຄບລົງ. ແຜນງານການສຶກສາໃຫ້ແກ່ນັກຮຽນທີ່ຮຽນຊ້າ ສາມາດເຮັດໃຫ້ມີຄວາມແຕກຕ່າງດ້ານການຮຽນ (ກ່ອງທີ3). ໃນປະເທດຊີລີ, ໂຄງການສະໜອງທຶນອຸດໜູນໂຮງຮຽນ 900 ແຫ່ງ (Programa de las 900 Escuelas) ສະໜອງແຫລ່ງທຶນພິເສດ ໃຫ້ແກ່ໂຮງຮຽນທີ່ມີປະສິດທິພາບຕ່ຳ ເພື່ອປັບປຸງການຮຽນ ລວມມີການສຳມະນາປະຈຳອາທິດ ເພື່ອເສີມສ້າງຄວາມເຂັ້ມແຂງທັກສະການສອນ, ຈັດສຳ

### ກ່ອງທີ 3: ແຜນງານ ປຣາທຳ ຂອງ ບານສະກີ ເພື່ອສະໜອງການສຶກສາທີ່ມີຄຸນນະພາບ

ປຣາທຳ ແມ່ນອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂະໜາດໃຫຍ່ຂອງປະເທດອິນເດຍ ຊຶ່ງມີເປົ້າໝາຍເພື່ອສະໜອງການສຶກສາທີ່ມີຄຸນນະພາບ ໃຫ້ແກ່ຜູ້ທີ່ທຸກຍາກ ແລະ ອ່ອນໄຫວ. ແຜນງານການພື້ນຟູການສຶກສາແບບດັ່ງເດີມນັ້ນ ແມ່ນເລັ່ງໃສ່ນັກຮຽນໃນໂຮງຮຽນລັດ ຂັ້ນ ປ 3 ແລະ ປ 4 ທີ່ຫລ້າຫລັງ ແລະ ໄປບໍ່ທັນໝູ່. ນັກຮຽນໄດ້ຖືກສິດສອນ ພື້ນການຄິດໄລ່ເລກ ແລະ ທັກສະການຂີດຂຽນ ໂດຍຄູແນະນຳຂັ້ນທ້ອງຖິ່ນທີ່ໄດ້ຜ່ານການຝຶກອົບຮົບຂັ້ນຕົ້ນ 2 ອາທິດ ແລະ ການຝຶກອົບຮົມປະຈຳການອື່ນໆ. ການປະເມີນແຜນການຈັດຕັ້ງປະຕິບັດໄດ້ສະແດງໃຫ້ເຫັນທ່າກ້າວຈາກຄະແນນການຄິດໄລ່ເລກ ແລະ ການອ່ານ ພ້ອມທັງການເຮັດໃຫ້ຄວາມແຕກຕ່າງດ້ານການຮຽນແຄບລົງ. ຜົນສຳເລັດໄດ້ນຳໄປສູ່ການໃຫ້ມີສະບັບປັບປຸງ ແລະ ນຳໃຊ້ໃນ 19 ລັດໃນທົ່ວປະເທດ ໂດຍຜ່ານໂຄງການອ່ານປະເທດອິນເດຍ ຊຶ່ງເຂົ້າເຖິງເດັກນ້ອຍຈຳນວນປະມານ 33 ລ້ານຄົນໃນປີ 2008/2009.

ແຫລ່ງຂໍ້ມູນ: *ເບິ່ງກ່ອງ 1.14 ໃນບົດລາຍງານໂລກ ການຕິດຕາມການສຶກສາເພື່ອທຸກຄົນ 2011*

ມະນາ ໃຫ້ແກ່ເດັກທີ່ບໍ່ໄດ້ເຂົ້າຮຽນ ແລະ ປຶ້ມແບບຮຽນ ແລະ ອຸປະກອນອື່ນໆ. ແຜນງານນີ້ແມ່ນເພື່ອປັບປຸງການຮຽນໃນລະດັບ ປ4 ແລະ ຮັດແຄບຊ່ອງວ່າງການຮຽນລົງ.

ການປະເມີນຜົນການຮຽນລະດັບຊາດມີບົດບາດເໝືອນກັນ. ຕົວຢ່າງ, ການປະເມີນຜົນການອ່ານໃນຂັ້ນຕົ້ນຂອງຊັ້ນປະຖົມສາມາດກຳນົດເດັກທີ່ກຳລັງຕໍ່ສູ້ດີ້ນລົນ, ໂຮງຮຽນ ແລະ ເຂດແຄ້ວນ ທີ່ຕ້ອງການການຊ່ວຍເຫລືອ. ການເຮັດໃຫ້ການປະເມີນການຮຽນເຂົ້າເຖິງພໍ່ແມ່ຜູ້ປົກຄອງ ສາມາດຊ່ວຍຊຸມຊົນຖືເອົາຄວາມສຳຄັນຂອງຜູ້ສະໜອງການສຶກສາ ພ້ອມນັ້ນກໍສາມາດເຮັດໃຫ້ເຂົາເຈົ້າເຂົ້າໃຈບັນຫາຕົ້ນຕໍໄດ້.

## ເງິນສະໜັບສະໜູນການສຶກສາເພື່ອທຸກຄົນ: ການຊອກຫາຊ່ອງທາງທີ່ມີຜົນສຳເລັດ

ງົບປະມານການເງິນທີ່ເພີ່ມຂຶ້ນອາດບໍ່ຮັບປະກັນຜົນສຳເລັດໃນການບັນລຸການສຶກສາ - ແຕ່ການສະໜັບສະໜູນດ້ານການເງິນໜ້ອຍແມ່ນເສັ້ນທາງທີ່ຮັບປະກັນໃຫ້ແກ່ການຫລົ້ມເຫລວ. ຂອບປະຕິບັດງານດາກາ ຮັບຮູ້ເຖິງຄວາມສຳຄັນຂອງການໃຫ້ ການສະໜັບສະໜູນ ແລະ ພັນທະດ້ານການເງິນ. ຂໍ້ມູນກ່ຽວກັບການໃຫ້ທຶນມີການປ່ຽນແປງສະເໝີ. ມີລັດຖະບານຂອງບາງປະເທດຍັງ ໃຊ້ງົບປະມານ ພຽງໜ້ອຍດຽວເຂົ້າໃສ່ການສຶກສາ ແຕ່ມີຫລາຍປະເທດທີ່ທຸກຍາກກໍໄດ້ເພີ່ມການໃຊ້ຈ່າຍງົບປະມານເຂົ້າໃສ່ວຽກງານດັ່ງກ່າວ. ໃນຂະນະທີ່ລະດັບການຊ່ວຍເຫລືອດ້ານການເງິນໄດ້ເພີ່ມຂຶ້ນ, ບັນດາຜູ້ໃຫ້ທຶນຊ້ຳພັດ ພ້ອມກັນບໍ່ໃຫ້ກຽດຕົນເອງໃນການໃຫ້ຄຳໝັ້ນສັນຍາເພື່ອຮັບປະກັນວ່າ 'ບໍ່ມີປະເທດ ໃດທີ່ລົງທຶນໃສ່ການສຶກສາຢ່າງເອົາຈິງ ເອົາຈັງຈະຖືກກີດກັ້ນບໍ່ໃຫ້ບັນລຸຜົນສຳເລັດ ເປົ້າໝາຍ ດັ່ງກ່າວ". ເມື່ອເບິ່ງໄປຂ້າງໜ້າ ຫາ ປີ 2015 ແລ້ວ, ຈະເຫັນໄພອັນຕະລາຍ ທີ່ວ່າຜົນສະທ້ອນຂອງວິກິດການການເງິນໂລກຈະເຮັດໃຫ້ຊ່ອງວ່າງລະຫວ່າງດ້ານຄວາມຕ້ອງການດ້ານການສຶກສາເພື່ອທຸກຄົນ ແລະ ພັນທະດ້ານການເງິນທີ່ມີຢູ່ແລ້ວກວ້າງອອກ.

*ການສະໜອງດ້ານການເງິນພາຍໃນປະເທດແກ່ການສຶກສາເພີ່ມຂຶ້ນ ແຕ່ກໍມີຄວາມແຕກຕ່າງທີ່ເຫັນໄດ້ຊັດລະຫວ່າງບັນດາຂົງເຂດ ແລະ ພາຍໃນຂົງເຂດເອງ.*

ແມ້ແຕ່ໃນບັນດາປະເທດທີ່ທຸກຍາກທີ່ສຸດ, ເມື່ອຄິດໄລ່ລາຍຮັບພາຍໃນ ແລະ ການໃຊ້ຈ່າຍຂອງລັດໂດຍບໍ່ໄດ້ຄິດໄລ່ການຊ່ວຍເຫລືອຂອງຕ່າງປະເທດແລ້ວ ຈະເຫັນຄວາມເປັນຈິງທີ່ວ່າການລົງທຶນໃສ່ການສຶກສາມີການເພີ່ມຂຶ້ນ. ມີຫລາຍປະເທດທີ່ທຸກຍາກທີ່ສຸດໄດ້ເພີ່ມການລົງທຶນໃສ່ການສຶກສາ. ບັນດາປະເທດທີ່ມີລາຍຮັບນ້ອຍ ໄດ້ເພີ່ມສ່ວນແບ່ງລາຍຮັບງົບປະມານເຂົ້າໃສ່ການສຶກສາຈາກ 2.9% ເຖິງ 3.8% ນັບແຕ່ປີ 1999 ເປັນຕົ້ນມາ. ເຫັນໄດ້ຢ່າງເດັ່ນຊັດແມ່ນບັນດາປະເທດໃນເຂດອະນຸພາກພື້ນທະເລຊາຍ ຊາຮາລາ ຂອງທະວີບ ອາຟຣິກາ ເຊັ່ນ: ໃນປະເທດບູຣຸນດີ ສ່ວນແບ່ງລາຍຮັບງົບປະມານເຂົ້າໃສ່ການສຶກສາເພີ່ມຂຶ້ນສອງເທົ່າ ແລະ ສາມເທົ່າໃນປະເທດສະຫະສາທາລະນະລັດ ຕັງຊາເນຍ ນັບແຕ່ປີ 1999.

ແຕ່ກໍມີບາງພາກພື້ນ ແລະ ບາງປະເທດ ຍັງສືບຕໍ່ບໍ່ເອົາໃຈໃສ່ຕໍ່ການລົງທຶນໃສ່ການສຶກສາຢູ່. ໃນບັນດາພາກພື້ນທີ່ກ່າວມານັ້ນ, ມີປະເທດໃນເຂດອາຊີກາງ, ອາຊີໃຕ້ ແລະ ອາຊີຕາເວັນຕົກ ຍັງລົງທຶນໃສ່ການສຶກສາໜ້ອຍຫລາຍ. ໂດຍທົ່ວໄປແລ້ວ, ສ່ວນແບ່ງຍອດຜະລິດຕະພັນພາຍໃນໃຫ້ການສຶກສາ ມີທ່າອ່ຽງ ສູງຂຶ້ນເມື່ອຄິດໄລ່ຕາມລາຍຮັບແຫ່ງຊາດ, ແຕ່ຮູບແບບດັ່ງກ່າວ ກໍບໍ່ມີຄວາມແນ່ນອນໃນຂະນະທີ່ປະເທດ ປາກິດສະຖານ ມີລາຍຮັບຕໍ່ຫົວຄົນຄ້າຍໆກັບ ຫວຽດນາມ, ແຕ່ປາກິດສະຖານ ແມ່ນໄດ້ເອົາສ່ວນແບ່ງຍອດຜະລິດຕະພັນພາຍໃນເຄິ່ງໜຶ່ງລົງທຶນໃສ່ການສຶກສາ. ມີກໍລະນີຄ້າຍໆກັນກໍຄື ປະເທດຟີລິບປິນ ທີ່ເອົາສ່ວນແບ່ງຍອດຜະລິດຕະພັນພາຍໃນຂອງຕົນເຂົ້າໃສ່ການສຶກສາໜ້ອຍກວ່າເຄິ່ງໜຶ່ງ ຂອງສ່ວນແບ່ງຍອດຜະລິດຕະພັນພາຍໃນເຂົ້າໃສ່ການສຶກສາ ຂອງປະເທດສາທາລະນະລັດ ອາລັບຊີເຣຍ.

ທ່າອ່ຽງດ້ານການເງິນການສຶກສາກໍຍັງຂຶ້ນກັບການຂະຫຍາຍຕົວທາງດ້ານເສດຖະກິດ, ລະດັບການເກັບລາຍຮັບ ແລະ ສ່ວນແບ່ງ ງົບປະມານເຂົ້າໃສ່ການສຶກສາ. ການຂະຫຍາຍຕົວທາງດ້ານເສດຖະກິດທີ່ເຂັ້ມແຂງນັບແຕ່ປີ 1999 ເຖິງ 2008 ໄດ້ເຮັດໃຫ້ ການລົງທຶນເຂົ້າໃສ່ການສຶກສາໃນເກືອບທຸກໆ ປະເທດກຳລັງພັດທະນາເພີ່ມຂຶ້ນ. ອັດຕາສ່ວນການຂະຫຍາຍຕົວ ທາງດ້ານເສດຖະກິດທີ່ຫັນປ່ຽນເປັນການເພີ່ມຂຶ້ນດ້ານຄ່າໃຊ້ຈ່າຍເຂົ້າໃສ່ການສຶກສານັ້ນແມ່ນຂຶ້ນກັບຂອບເຂດການຕົກລົງດ້ານ ການໃຊ້ຈ່າຍຂອງລັດ. ຢູ່ໃນກວ່າເຄິ່ງໜຶ່ງຂອງບັນດາປະເທດທີ່ມີຂໍ້ມູນ, ການຂະຫຍາຍຕົວທາງດ້ານຄ່າໃຊ້ຈ່າຍໃຫ້ແກ່ການ



ຫ້ອງຮຽນທີ່ບໍ່ມີຝາ ແລະ ຫຼັງຄາ ຢູ່ປໍ ໂອ ປະແຣງຊ໌ ໃນລະບົບການສຶກສາປະເທດຮາອິຕິ ທີ່ໄດ້ຖືກຜົນກະທົບຈາກຄວາມຂັດແຍ້ງແລ້ວ ຊ້ຳພັດຖືກທຳລາຍດ້ວຍແຜ່ນດິນໄຫວ ໃນເດືອນມັງກອນ 2010

© Evan Abramson/UNESCO

ສຶກສາທີ່ແທ້ຈິງ ຫລາຍກວ່າການຂະຫຍາຍຕົວທາງດ້ານເສດຖະກິດ. ຕົວຢ່າງປະເທດ ການາ, ໂມຊຳບິກ ແລະ ສະຫະສາທາລະນະລັດ ຕັງຊາເນຍ ໄດ້ເພີ່ມຄ່າໃຊ້ຈ່າຍເຂົ້າໃສ່ການສຶກສາ ໄວກວ່າການຂະຫຍາຍຕົວທາງດ້ານເສດຖະກິດ ໂດຍເພີ່ມຄວາມເຂັ້ມແຂງໃຫ້ແກ່ການເກັບລາຍຮັບ ແລະ ເພີ່ມສ່ວນແບ່ງງົບປະມານເຂົ້າໃສ່ການສຶກສາ.

ປະເທດອື່ນໆ ໄດ້ຫັນເອົາສ່ວນແບ່ງງົບປະມານຈຳນວນໜ້ອຍໜຶ່ງຈາກລາຍຮັບອັນຫລວງຫລາຍເຂົ້າໃສ່ການເງິນການສຶກສາ. ຕົວຢ່າງຢູ່ປະເທດ ຟີລິບປິນ, ການໃຊ້ຈ່າຍເຂົ້າໃສ່ການສຶກສາທີ່ແທ້ຈິງໄດ້ເພີ່ມຂຶ້ນ 0.2% ຕໍ່ປີ ນັບແຕ່ປີ 1999 ເຖິງ ປີ 2008 ທັງໆທີ່ ການຂະຫຍາຍຕົວທາງ ດ້ານເສດຖະກິດມີເຖິງ 5% ຕໍ່ປີ. ດັ່ງນັ້ນ ຈຶ່ງເຮັດໃຫ້ສ່ວນແບ່ງງົບປະມານເຂົ້າໃສ່ການສຶກສາທີ່ຕ່ຳຢູ່ແລ້ວໃນ ຟີລິບປິນ ຈຶ່ງຫລຸດລົງຕະຫລອດມາ. ຄວາມພະຍາຍາມລະດົມທຶນຈຶ່ງເປັນບັນຫາທີ່ຕ້ອງເອົາໃຈໃສ່ເພື່ອບັນລຸເປົ້າໝາຍທັງໝົດ ຂອງການສຶກສາເພື່ອທຸກຄົນ. ໃນປະເທດສະຫະສາທາລະນະລັດ ຕັງຊາເນຍ ການເພີ່ມຂຶ້ນຂອງການລົງທຶນໃສ່ການສຶກສາໄດ້ຊ່ວຍໃຫ້ຫລຸດຜ່ອນຈຳນວນເດັກນ້ອຍທີ່ບໍ່ໄດ້ເຂົ້າຮຽນຈຳນວນ 3 ລ້ານຄົນນັບແຕ່ປີ 1999. ໃນຂະນະທີ່ ປະເທດ ບັງກະລາເທດ ໄດ້ມີຄວາມຄືບໜ້າຫລາຍສົມຄວນ ໃນທົດສະວັດຜ່ານມາ, ລະດັບການເກັບລາຍຮັບຕ່ຳ ແລະ ການໄດ້ຮັບສ່ວນແບ່ງງົບປະມານເຂົ້າໃສ່ການສຶກສາ ມີຈຳນວນໜ້ອຍເຮັດໃຫ້ຄວາມຄືບໜ້າໃນການປະຕິບັດເປົ້າໝາຍການສຶກສາຫລຸດໜ້ອຍຖອຍລົງ.

ຂົງເຂດທີ່ຈະຕ້ອງເອົາໃຈໃສ່ ສຳລັບບັນດາປະເທດກຳລັງພັດທະນາທີ່ທຸກທີ່ສຸດນັ້ນແມ່ນຕ້ອງເຮັດສອງດ້ານຄືເອົາໃຈໃສ່ການລະດົມທຶນ ແລະ ການໃຫ້ນ້ຳໜັກການສຶກສາຂັ້ນພື້ນຖານ. ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ ປີ 2010 ໄດ້ຄາດຄະເນວ່າປະເທດເຫລົ່ານີ້ ຕ້ອງລະດົມທຶນໃຫ້ໄດ້ 7 ຕື້ໂດລາສຳລັບການສຶກສາຂັ້ນພື້ນຖານຈາກທຶນພາຍໃນ ໂດຍໃຫ້ໄດ້ ລະດັບ 0.7% ຂອງຍອດຜະລິດຕະພັນພາຍໃນ.

ປະເທດທີ່ມີລາຍໄດ້ຕ່ຳ ເມື່ອຈັດເປັນກຸ່ມແລ້ວໄດ້ເພື່ອສ່ວນແບ່ງຂອງລາຍຮັບແຫ່ງຊາດ ເຂົ້າໃສ່ການສຶກສາ

**ການຊ່ວຍເຫລືອຂອງສາກົນ: ບໍ່ໄດ້ຕາມຄຳໝັ້ນສັນຍາໄວ້.**
ການຊ່ວຍເຫລືອທັງໝົດໃຫ້ແກ່ການສຶກສາຂັ້ນພື້ນຖານເພີ່ມຂຶ້ນເກືອບສອງເທົ່ານັບແຕ່ ປີ 2002 ເຮັດໃຫ້ມີຜົນສຳເລັດຫລາຍດ້ານທີ່ສຳຄັນ. ໃນບັນດາປະເທດ ຊຶ່ງລວມທັງ ບັງກະລາເທດ, ກຳປູເຈຍ, ເອທິໂອເປຍ, ໂມຊຳບິກ, ຣູວັນດາ, ເຊເນການ ແລະ ສະຫະສາທາລະນະລັດ ຕັງຊາເນຍ, ການຊ່ວຍເຫລືອສາກົນມີບົດບາດສຳຄັນໃນການສະໜັບສະໜູນດ້ານນະໂຍບາຍທີ່ສາມາດເລັ່ງໃຫ້ມີຄວາມ

ຄືບໜ້າໃນການປະຕິບັດການສຶກສາເພື່ອທຸກຄົນ. ໃນຂະນະທີ່ມີການວາງຄຳຖາມທີ່ມີລັກສະນະດ້ານລົບກ່ຽວກັບຄຸນຄ່າການຊ່ວຍເຫລືອເພື່ອການພັດທະນາ, ຜົນໄດ້ຮັບສາມາດຕອບຄຳຖາມດັ່ງກ່າວ. ເຖິງຢ່າງໃດກໍຕາມ, ຜູ້ໃຫ້ທຶນ ກໍບໍ່ສາມາດປະຕິບັດຕາມຄຳໝັ້ນສັນຍາທີ່ໄດ້ໃຫ້ໄວ້ທີ່ ດາກ້າ ແລະ ໃນກອງປະຊຸມສຸດຍອດສາກົນຫລາຍບ່ອນນັບແຕ່ເວລານັ້ນມາ. ການຊ່ວຍເຫລືອໃຫ້ແກ່ການສຶກສາຫລັກລ້ຽງບໍ່ໄດ້ເຖິງອິທິພົນ ຂອງລະດັບການຊ່ວຍເຫລືອແລະ ເງື່ອນໄຂດ້ານການຊ່ວຍເຫລືອທັງໝົດ. ໃນປີ 2005 ຄຳໝັ້ນສັນຍາທີ່ໃຫ້ໄວ້ໂດຍກຸ່ມປະເທດ 8 ປະເທດ ແລະ ສະຫະພາບເອີຣົບ ສຳລັບ 2010 ມີເຖິງ 50 ຕື້ດອນລາ, ໃນນັ້ນ ຈຳນວນເຄິ່ງໜຶ່ງ ກຳນົດໃຫ້ບັນດາປະເທດໃນອະນຸພາກພື້ນຊາຮາລາ ອາຟຣິກາ. ຄາດຄະເນເງິນທີ່ຈະຂາດ ແລະ ບໍ່ໄດ້ຕາມຄາດໝາຍມີເຖິງ 20 ຕື້ໂດລາ, ໃນນັ້ນ 16 ຕື້ ສຳລັບອະນຸພາກພື້ນ ຊາຮາລາ ອາຟຣິກາ.

ຜູ້ໃຫ້ທຶນມີການປ່ຽນແປງຂໍ້ມູນດ້ານເປົ້າໝາຍການຊ່ວຍເຫລືອ ແລະ ມີມາດຖານຕ່າງໆທີ່ໄດ້ຮັບຮອງເອົາ. ຢູ່ໃນບັນດາປະເທດກຸ່ມ 8 ປະເທດ ອີຕາລີ, ຍີ່ປຸ່ນ ແລະ ສະຫະລັດອາເມລິກາ ສືບຕໍ່ລົງທຶນໃນລະດັບຕ່ຳຂອງລາຍຮັບລວມແຫ່ງຊາດໃຫ້ແກ່ການຊ່ວຍເຫລືອ. ປະເທດ ອີຕາລີ ຕັດຄ່າໃຊ້ຈ່າຍລົງເຖິງ 1/3 ໃນປີ 2009, ຈາກຖານຕ່ຳ ແລະ ຄ່ອຍໆ ຫລຸດພັນທະການຊ່ວຍເຫລືອຂອງຕົນ ຈາກສະຫະພາບເອີຣົບໃຫ້ລົງຢູ່ໃນລະດັບຕ່ຳສຸດ 0.51%. ຄວາມກົດດັນດ້ານການເງິນໄດ້ສ້າງຄວາມບໍ່ແນ່ນອນຕໍ່ທິດທາງການຊ່ວຍເຫລືອໃນອະນາຄົດ. ເຖິງຢ່າງໃດກໍຕາມ, ຍັງມີຜູ້ໃຫ້ທຶນຈຳນວນຫລວງຫລາຍ ລວມທັງປະເທດຝລັ່ງເສດ, ລາຊະນາຈັກອັງກິດ ແລະ ສະຫະລັດອາເມລິກາ ໄດ້ເພີ່ມການຊ່ວຍເຫລືອໃນປີ 2009.

ຂໍ້ມູນກ່ຽວກັບການຊ່ວຍເຫລືອໃຫ້ແກ່ການສຶກສາ ໄດ້ຊີ້ໃຫ້ທຸກຄົນມີຄວາມກັງວົນໃນການທີ່ຈະສຳເລັດທຸກໆເປົ້າໝາຍການສຶກສາເພື່ອທຸກຄົນ. ພາຍຫລັງ 5 ປີທີ່ມີການເພີ່ມຂຶ້ນຂອງການຊ່ວຍເຫລືອດັ່ງກ່າວ, ທຶນຊ່ວຍເຫລືອໃຫ້ແກ່ການສຶກສາຂັ້ນພື້ນຖານໄດ້ຢຸດສະງັກໃນປີ 2008 ຢູ່ໃນລະດັບ 4.7 ຕື້ໂດລາ (ເບິ່ງຮູບ 7). ສຳລັບບັນດາປະເທດໃນເຂດທະເລຊາຍ ຊາຮາລາ ຂອງອາຟຣິກາ ເຊິ່ງເປັນພາກພື້ນທີ່ຊ່ອງວ່າງການເງິນໃຫ້ແກ່ການສຶກສາເພື່ອທຸກຄົນກວ້າງທີ່ສຸດ, ການໃຊ້ຈ່າຍເງິນເຂົ້າໃສ່ວຽກງານດັ່ງກ່າວຫລຸດລົງເຖິງ 4% ເທົ່າກັບການຫລຸດລົງ 6% ຕໍ່ຄົນຂອງການຊ່ວຍເຫລືອເດັກນັກຮຽນໃນຂັ້ນປະຖົມ. ເມື່ອທຽບເບິ່ງລະດັບການຊ່ວຍເຫລືອແລ້ວ ການຫລຸດລົງດັ່ງກ່າວໃນໜຶ່ງປີບໍ່ໄດ້ສະແດງອອກໃຫ້ເຫັນທ່າອ່ຽງດັ່ງກ່າວ. ແຕ່ວ່າມັນຍັງມີຄວາມເພິ່ງພໍໃຈຢູ່ເພາະຊ່ອງວ່າງທາງດ້ານການເງິນ ເພື່ອບັນລຸການສຶກສາເພື່ອທຸກຄົນໃນປະເທດທີ່ມີລາຍໄດ້ຕ່ຳແມ່ນຢູ່ໃນລະຫວ່າງ 16 ຕື້ໂດລາຕໍ່ປີ.

ພາຍຫຼັງ 5 ປີທີ່ມີການເພີ່ມຂຶ້ນຂອງການຊ່ວຍເຫຼືອດັ່ງກ່າວ, ທຶນຊ່ວຍເຫຼືອໃຫ້ແກ່ການສຶກສາຂັ້ນພື້ນຖານໄດ້ຢຸດສະງັກໃນປີ 2008 ຢູ່ໃນລະດັບ 4.7 ຕື້ໂດລາ

**ຮູບທີ 7: ການເພີ່ມຂຶ້ນຂອງການເບີກຈ່າຍເງິນຊ່ວຍເຫລືອ ແກ່ການສຶກສາຂັ້ນພື້ນຖານຢຸດເຊົາໃນປີ 2008.**

ການເບີກຈ່າຍເງິນຊ່ວຍເຫລືອແກ່ການສຶກສາ 2002-2008




*ແຫລ່ງຂໍ້ມູນ: ເບິ່ງຮູບ 2.8 ໃນບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ 2011*

ຍ້ອນຂະໜາດຂອງຊ່ອງວ່າງທາງດ້ານການເງິນດັ່ງກ່າວນີ້ ຈຶ່ງເຫັນຄວາມຈຳເປັນ ຕ້ອງພິຈາລະນາກຳນົດບູລິມະສິດຄືນໃໝ່ໃນຂະແໜງການສຶກສາ. ຖ້າວ່າຜູ້ໃຫ້ທຶນຫາກຕັດສິນໃຈນຳເອົາຈຳນວນເຄິ່ງໜຶ່ງຂອງເງິນຊ່ວຍເຫລືອຂອງຕົນເຂົ້າໃສ່ການສຶກສາໃນຂັ້ນພື້ນຖານ ຈະສາມາດເຮັດໃຫ້ເຂົາເຈົ້າສາມາດລະດົມທຶນໄດ້ເຖິງ 1.7 ຕື້ໂດລາຕໍ່ປີ. ເຖິງຢ່າງໃດກໍຕາມ, ພວກເຮົາຍັງບໍ່ມີຫລັກຖານພຽງພໍທີ່ສະແດງເຖິງການຊັ່ງຊາຄືນໃໝ່ຂອງຜູ້ໃຫ້ທຶນລະຫວ່າງການສຶກສາຂັ້ນພື້ນຖານ ແລະ ການສຶກສາຂັ້ນສູງກວ່າ. ມີຫລາຍປະເທດໃນກຸ່ມເສດຖະກິດກ້າວໜ້າ 8 ປະເທດ ລວມທັງປະເທດຝລັ່ງເສດ, ເຢຍລະມັນ ແລະ ຍີ່ປຸ່ນ ໃຫ້ແບ່ງເງິນກວ່າ 70% ຂອງການຊ່ວຍເຫລືອດ້ານການສຶກສາຂອງຕົນເຂົ້າໃສ່ການສຶກສາຂັ້ນພື້ນຖານ. ຍິ່ງໄປກວ່ານັ້ນສ່ວນທີ່ຖືວ່າເປັນມູນຄ່າການຊ່ວຍເຫລືອກໍຖືກໂອນໄປເປັນທຶນໃນສະຖາບັນການສຶກສາຂອງປະເທດຜູ້ໃຫ້ທຶນເອງ. ໃນປະເທດຝລັ່ງເສດ ແລະ ເຢຍລະມັນ ສ່ວນທີ່ຖືວ່າເປັນມູນຄ່າການຊ່ວຍເຫລືອໄດ້ກວມເອົາກວ່າເຄິ່ງໜຶ່ງຂອງທຶນຊ່ວຍເຫລືອດ້ານການສຶກສາ. ອັນໃດກໍຕາມທີ່ຖືວ່າເປັນຜົນໄດ້ຮັບໃຫ້ແກ່ນັກສຶກສາຕ່າງປະເທດທີ່ຮຽນໃນລະບົບຂອງປະເທດຝລັ່ງເສດ ແລະ ເຢຍລະມັນ ແມ່ນເປັນພຽງແຕ່ການລົດຊ່ອງວ່າງນ້ອຍໆດ້ານການເງິນໃນລະບົບການສຶກສາຂອງປະເທດທີ່ທຸກຍາກເທົ່ານັ້ນ.

ເມື່ອເບິ່ງອອກໄປຈາກດ້ານປະລິມານການຊ່ວຍເຫລືອແລ້ວ ມັນຍັງສືບຕໍ່ມີບັນຫາທີ່ກ່ຽວພັນເຖິງປະສິດທິຜົນໃນການນຳໃຊ້ທຶນການຊ່ວຍເຫລືອນຳອີກ. ໃນປີ 2007 ມີໜ້ອຍກວ່າເຄິ່ງໜຶ່ງຂອງຈຳນວນທຶນຊ່ວຍເຫລືອທັງໝົດໄດ້ສົ່ງຜ່ານລະບົບການຄຸ້ມຄອງການເງິນຂອງລັດ. ມີພຽງແຕ່ 1 ໃນ 5 ຂອງທີມງານຜູ້ໃຫ້ທຶນໄດ້ຮັບການປະສານງານ ແລະ ມີພຽງ 46% ຂອງການຊ່ວຍເຫລືອດ້ານການພັດທະນາມີແຜນໃນການເບີກຈ່າຍໃນແຕ່ລະປີທີ່ຂຶ້ນແຜນໄວ້. ຜົນໄດ້ຮັບດັ່ງກ່າວແມ່ນໜ້ອຍເກີນໄປທີ່ຈະບັນລຸເຖິງລະດັບທີ່ໄດ້ຮັບຮອງເອົາໄວ້ໃນຖະແຫລງການ ປາຣີ ກ່ຽວກັບກັບປະສິດທິພາບ ໃນການນຳໃຊ້ທຶນຊ່ວຍເຫລືອເພື່ອການພັດທະນາ. ມັນມີວິທີການຈັດຕັ້ງປະຕິບັດໂດຍກົງໃນວຽກສຶກສາ. ຕົວຢ່າງ ຊ່ອງວ່າງລະຫວ່າງຄຳໝັ້ນສັນຍາດ້ານການຊ່ວຍເຫລືອ ແລະ ການເບີກຈ່າຍຕົວຈິງເປັນອຸປະສັກຕໍ່ການວາງແຜນທີ່ມີປະສິດທິຜົນໃນຫລາຍຂົງເຂດວຽກງານ ເຊັ່ນ ການກໍ່ສ້າງຫ້ອງຮຽນ ແລະ ການບັນຈຸສັບຊ້ອນຄູ.

### *ວິກິດການດ້ານການເງິນ - ເກີດຄວາມຫຍຸ້ງຍາກໃນການດັດແກ້ໃນອະນາຄົດ*

ຜົນກະທົບຂອງວິກິດການດ້ານການເງິນໂລກຕໍ່ການອະນາຄົດເພື່ອບັນລຸການສຶກສາເພື່ອທຸກຄົນຍັງສືບຕໍ່ຖືກເມີນເສີຍໂດຍຜູ້ໃຫ້ທຶນ, ສະຖາບັນການເງິນລະຫວ່າງຊາດ ແລະ ອົງການຜູ້ໃຫ້ທຶນອື່ນໆ. ໃນເງື່ອນໄຂທີ່ມີການເພີ່ມຂຶ້ນຂອງຄວາມທຸກຍາກ ແລະ ການອ່ອນໄຫວ, ແລະຄວາມພະຍາຍາມທາງດ້ານການເງິນໃນລະດັບຊາດໄດ້ຖືກແຮງກົດດັນດ້ອຍທາງດ້ານການເງິນ, ການຊ່ວຍເຫລືອເປັນສິ່ງຈຳເປັນເພື່ອປົກປ້ອງສິ່ງທີ່ໄດ້ຮັບຜົນສຳເລັດຜ່ານມາ ແລະ ເປັນພື້ນຖານໃຫ້ແກ່ການເລັ່ງທວງໃຫ້ມີຄວາມຄືບໜ້າຕໍ່ໄປ.

ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນໃນປີ 2010 ໄດ້ຮຽກຮ້ອງໃຫ້ບັນດາລັດຖະບານ ແລະ ສະຖາບັນການເງິນລະຫວ່າງຊາດ ປະເມີນເບື້ອໃນຄວາມໝາຍຂອງການດັດແກ້ງົບປະມານທີ່ໄດ້ຮັບຜົນກະທົບຈາກວິກິດການໃຫ້ແກ່ການສຶກສາເພື່ອທຸກຄົນ. ບົດລາຍງານຍັງໄດ້ສະແດງໃຫ້ເຫັນຈຸດເດັ່ນ ສະພາວະຂອງເວລາທີ່ຂາດຂໍ້ມູນກ່ຽວກັບສິ່ງທີ່ການດັດແກ້ງົບປະມານເພື່ອບັນລຸເປົ້າໝາຍທີ່ໄດ້ກຳນົດໄວ້ໃນກຸງ ດາກາ. ຮູບພາບເຫລົ່ານັ້ນກໍຍັງບໍ່ມີການປ່ຽນແປງເທື່ອ. ກອງທຶນລະຫວ່າງຊາດ (IMF) ໄດ້ຊີ້ແຈງວ່າບັນດາປະເທດທີ່ກອງທຶນໄດ້ໃຫ້ການຊ່ວຍເຫລືອຍັງບໍ່ທັນໄດ້ຕັດເປົ້າໝາຍບູລິມະສິດດ້ານງົບປະມານເທື່ອ. ສິ່ງທີ່ຄວນໃຫ້ກຳລັງໃຈ ອາດແມ່ນ ຄຳຖາມທີ່ວ່າການໃຊ້ຈ່າຍທີ່ຂຶ້ນແຜນແລ້ວແມ່ນຍັງສອດຄ່ອງກັບແຜນ ກ່ອນເກີດວິກິດ

ການ ຫລື ກັບຄວາມຕ້ອງການທາງ ດ້ານການເງິນຂອງການສຶກສາ ເພື່ອທຸກຄົນ.

ຍິ່ງໄປກວ່ານັ້ນ, ລະບົບລາຍງານໃນລະດັບຊາດ ແລະ ສາກົນຍັງສືບຕໍ່ເປັນອຸປະສັກແກ່ການປະເມີນທີ່ດີກ່ຽວກັບການປັບງົບປະມານ. ໃນຂະນະທີ່ວິກິດການດ້ານການເງິນເກີດຂຶ້ນຍ້ອນລະບົບທະນາຄານ ແລະ ການຫລົ້ມເຫລວທາງດ້ານລະບຽບການຂອງບັນດາປະເທດທີ່ຮັ່ງມີ ຍັງມີປະຊາຊົນທີ່ທຸກຍາກທີ່ສຸດໃນໂລກກຳລັງຕໍ່ສູ້ກັບຜົນກະທົບດັ່ງກ່າວ. ຖ້າທຽບໃສ່ທ່າອ່ຽງກ່ອນເກີດວິກິດການແລ້ວການເຕີບໂຕທາງດ້ານເສດຖະກິດທີ່ຊັກຊ້າ ປະກອບກັບລາຄາສູງຂຶ້ນຂອງເຄື່ອງບໍລິໂພກໄດ້ສົ່ງຜົນໃຫ້ປະຊາຊົນອີກ 64 ລ້ານຄົນປະເຊີນກັບຄວາມທຸກຍາກທີ່ສຸດ ແລະ ອີກ 41 ລ້ານຄົນຂາດທາດອາຫານທີ່ພຽງພໍໃນປີ 2009. ອະນາຄົດສຳລັບການສຶກສາແນ່ນອນຈະຕ້ອງໄດ້ຮັບການກະທົບກະເທືອນຢ່າງຫລີກລ້ຽງບໍ່ໄດ້. ມັນໄດ້ມີຫລັກຖານຂໍ້ມູນກ່ຽວກັບຄວາມ ກົດດັນຕໍ່ຄ່າໃຊ້ຈ່າຍໃນຄົວເຮືອນແລ້ວ ຊຶ່ງຈະນຳໄປສູ່ການຖອນຕົວອອກຈາກໂຮງຮຽນຂອງເດັກ. ພ້ອມນັ້ນ ການຂາດອາຫານທີ່ພຽງພໍໃຫ້ແກ່ເດັກຈະສົ່ງຜົນສະທ້ອນການມີໜ້າເຂົ້າຮຽນ ແລະ ຜົນການຮຽນຂອງເດັກ.

ຄວາມກົດດັນດ້ານການເງິນໄດ້ສ້າງໄພຂົ່ມຂູ່ຕໍ່ຄວາມຄືບໜ້າໃນການບັນລຸເປົ້າໝາຍການສຶກສາເພື່ອທຸກຄົນ. ຄວາມຫລົ້ມເຫລວຂອງການຈັດຕັ້ງທີ່ຂຶ້ນກັບອົງການສະຫະປະຊາຊາດ, ທະນາຄານໂລກ ແລະ ກອງທຶນລະຫວ່າງຊາດ ໃນການປະເມີນຄວາມເປັນຈິງກ່ຽວກັບການປັບງົບປະມານສຳລັບເປົ້າໝາຍການສຶກສາ ເພື່ອທຸກຄົນກໍຍັງແມ່ນສາຍເຫດທີ່ເປັນບັນຫາ. ສ່ວນໜຶ່ງຂອງບັນຫາແມ່ນການຂາດການຕິດຕາມດ້ານການເງິນທີ່ເປັນລະບົບ. ໂດຍອີງໃສ່ການຄົ້ນຄວ້າເພື່ອໃຫ້ຂໍ້ມູນແກ່ບົດລາຍງານກ່ອນ, ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນປີ 2011 ໄດ້ພະຍາຍາມໃຫ້ຂໍ້ມູນເພີ່ມເຕີມໃນສິ່ງທີ່ຂາດຫາຍໄປ. ໂດຍອີງໃສ່ການສຳຫລວດທີ່ກວມເອົາ 18 ປະເທດທີ່ມີລາຍໄດ້ຕໍ່າ ແລະ 10 ປະເທດທີ່ມີລາຍໄດ້ປານກາງ, ບົດລາຍງານນີ້ໄດ້ເບິ່ງຂໍ້ມູນກ່ຽວກັບການໃຊ້ຈ່າຍສຳລັບປີ 2009 ແລະ ແຜນໃຊ້ຈ່າຍປີ 2010 (ເບິ່ງຮູບ 8). ບາງຕົວຢ່າງຂອງຜົນການສຳຫລວດມີດັ່ງນີ້:

- ມີ 7 ປະເທດທີ່ມີລາຍໄດ້ຕໍ່າ ລວມທັງ ປະເທດ ຊາດ, ການາ, ນິແຊ ແລະ ເຊເນການ ໄດ້ຕັດງົບປະມານເຂົ້າໃສ່ການສຶກສາໃນປີ 2009. ຫລາຍປະເທດລາຍງານວ່າການຕັດງົບປະມານນັ້ນເຮັດໃຫ້ມີເດັກນ້ອຍທີ່ບໍ່ໄດ້ເຂົ້າຮຽນເຖິງ 3.7 ລ້ານຄົນ.
- ໃນ 5 ປະເທດທີ່ມີລາຍໄດ້ຕໍ່າ ແຜນໃຊ້ຈ່າຍງົບປະມານສຳລັບ 2010 ແມ່ນຕໍ່າກວ່າແຜນງົບປະມານສຳລັບການສຶກສາໃນປີ 2008.
- ຂະນະດຽວກັນ ມີ 7ປະເທດທີ່ມີລາຍໄດ້ຕໍ່າປານກາງຍັງຮັກສາ ຫລື ເພີ່ມງົບປະມານໃຊ້ຈ່າຍເຂົ້າໃສ່ການສຶກສາໃນປີ 2009, ໃນນັ້ນ 6 ປະເທດມີແຜນຈະຕັດຄ່າໃຊ້ຈ່າຍເຂົ້າໃສ່ການສຶກສາໃນປີ 2010.
- ເມື່ອເບິ່ງໄປຂ້າງໜ້າຮອດປີ 2015 ຈະເຫັນໄດ້ວ່າການປັບງົບປະມານທີ່ວາງແຜນສຳລັບປະເທດທີ່ມີລາຍໄດ້ຕໍ່າຍິ່ງເປັນການຂູ່ວ່າຈະເຮັດໃຫ້ຊ່ອງວ່າງດ້ານການເງິນແກ່ການສຶກສາເພື່ອທຸກຄົນກວ້າງອອກ. ການຄາດຄະເນດ້ານການເງິນຂອງກອງທຶນລະຫວ່າງຊາດຍິ່ງຊີ້ໃຫ້ເຫັນເຖິງການເພີ່ມຂຶ້ນຂອງຄ່າໃຊ້ຈ່າຍຂອງລັດສຳລັບບັນດາປະເທດທີ່ມີລາຍໄດ້ຕໍ່າໃນລະດັບສະເລ່ຍ 6% ຕໍ່ປີຈົນເຖິງປີ 2015, ໃນຂະນະດຽວກັນຄ່າສະເລ່ຍຂອງການເພີ່ມຂຶ້ນຂອງການໃຊ້ຈ່າຍຕໍ່ປີ ເພື່ອບັນລຸປະຖົມສຶກສາໂດຍທົ່ວໄປຊ່ວງຜ່ານມາ ແມ່ນ 12%.

ຫຼາຍປະເທດລາຍງານວ່າການຕັດງົບປະມານນັ້ນເຮັດໃຫ້ມີເດັກນ້ອຍທີ່ບໍ່ໄດ້ເຂົ້າຮຽນເຖິງ 3.7 ລ້ານຄົນ

### *ຂໍ້ແນະນຳ 5 ຂໍ້ກ່ຽວກັບການເງິນ*

ເງື່ອນໄຂທາງດ້ານການເງິນສຳລັບບັນດາລັດຖະບານ ແລະ ຜູ້ໃຫ້ທຶນມີທ່າອ່ຽງຫຍຸ້ງຍາກຫລາຍຕະຫລອດ 5 ປີ ຂ້າງໜ້າກວ່າທີ່ເຄີຍເປັນໃນທົດສະວັດຜ່ານມາ. ແຮງຊຸກດັນເພື່ອບັນລຸຄາດໝາຍທີ່ວາງໄວ້ໃນປີ 2000 ຮຽກຮ້ອງໃຫ້ມີການກະທຳທີ່ມີລັກສະນະຕັດສິນ. ດັ່ງນັ້ນ ບົດລາຍງານນີ້ ຈຶ່ງມີຂໍ້ສະເໜີແນະທີ່ມີລັກສະນະກວມລວມ 5 ວິທີການດັ່ງນີ້:

- ປະເມີນຄືນຄວາມຕ້ອງການທາງດ້ານການເງິນ ໃນເງື່ອນໄຂວິກິດການດ້ານການເງິນ. ການວາງແຜນເພື່ອບັນລຸເປົ້າໝາຍການສຶກສາ

**ຮູບ 8. ຜົນກະທົບຂອງວິກິດການການເງິນຕໍ່ການໃຊ້ຈ່າຍໃນການສຶກສາ**

ດັດຊະນີການໃຊ້ຈ່າຍໃນການສຶກສາທີ່ແທ້ຈິງໃນບັນດາປະເທດທີ່ມີລາຍຮັບຕໍ່າ ແລະ ກາງຕໍ່າ ສຳລັບ 2008-2010




ແຫລ່ງຂໍ້ມູນ: *ເບິ່ງໃນຮູບ 2.12 ໃນບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ 2011*

ເພື່ອທຸກຄົນຈະຕ້ອງອີງໃສ່ການຄາດຄະເນທີ່ລະອຽດ. ອົງການກອງທຶນລະວ່າງຊາດ ແລະ ທະນາຄານໂລກ ທີ່ເຮັດວຽກຮ່ວມກັບລັດຖະບານ ແລະ ບັນດາອົງການທີ່ຂຶ້ນກັບສະຫະປະຊາຊາດ ຄວນປະເມີນການຂາດດຸນ ລະຫວ່າງ ແຜນການໃຊ້ຈ່າຍປັດຈຸບັນ ແລະ ຄວາມຕ້ອງການດ້ານການເງິນສຳລັບການສຶກສາເພື່ອທຸກຄົນ ແລະ ເປົ້າໝາຍສະຫັດສະວັດເພື່ອການພັດທະນາ. ພວກເຂົາເຈົ້າຄວນຕີລາຄາຢ່າງເອົາຈິງເອົາຈັງຄວາມສອດຄ່ອງ ລະຫວ່າງບັນດາຄວາມຕ້ອງການດ້ານການເງິນ ແລະ ບັນດາແຜນງານການປັບງົບປະມານ.

> ອົງການຊ່ວຍເຫລືອການເງິນສາກົນສຳລັບການສຶກສາ ຄວນລະດົມໃຫ້ໄດ້ປະມານ 3 ລ້ານໂດລາສະຫະລັດ

- ການສົ່ງມອບອົງຕາມຄຳໝັ້ນສັນຍາປີ 2008. ບັນດາລັດຖະບານຜູ້ໃຫ້ທຶນຄວນປະຕິບັດຢ່າງທັນການເພື່ອບັນລຸຄຳໝັ້ນສັນຍາທີ່ໄດ້ໃຫ້ໄວ້ໃນປີ 2005 ພ້ອມນັ້ນ ກໍໃຫ້ຄຳໝັ້ນສັນຍາໃໝ່ສຳລັບໄລຍະແຕ່ນີ້ຫາປີ 2015. ໃນໄລຍະ 6 ເດືອນຕົ້ນປີ 2011 ຜູ້ໃຫ້ທຶນທັງໝົດຄວນຍື່ນຕາຕະລາງຊີ້ແຈງເຖິງວິທີການທີ່ຈະທົບແທນທຶນທີ່ຂາດໄປຕາມທີ່ຕົນໄດ້ໃຫ້ໄວ້ຕາມຄຳໝັ້ນສັນຍາໃນແຕ່ລະປີ ລວມທັງຈຳນວນ 16 ຕື້ໂດລາ ທີ່ຂາດໄປສຳລັບປະເທດໃນອະນຸພາກພື້ນທະເລຊາຍ ຊາຮາລາ.

- ສ້າງໃຫ້ການສຶກສາຂັ້ນພື້ນຖານເປັນບູລິມະສິດທີ່ສູງສົ່ງ. ຜູ້ໃຫ້ທຶນມັກຈະໃຫ້ຄວາມສຳຄັນແກ່ການພັດທະນາປະເທດໄປຕາມບູລິມະສິດການໃຊ້ຈ່າຍຂອງລັດຖະບານຕໍ່ການສຶກສາເພື່ອທຸກຄົນ. ພວກເຂົາເຈົ້າຈຳເປັນຕ້ອງນັບຖືຫລັກການອັນດຽວກັນ. ຖ້າຜູ້ໃຫ້ທຶນທັງໝົດຫາກໃຫ້ການຊ່ວຍເຫລືອຢ່າງໜ້ອຍເຄິ່ງໜຶ່ງຂອງທຶນຊ່ວຍເຫລືອຂອງເຂົາເຈົ້າເຂົ້າໃສ່ການສຶກສາຂັ້ນພື້ນຖານ (ໃນລະດັບປັດຈຸບັນສະເລ່ຍ 41%) ພວກເຂົາເຈົ້າສາມາດລະດົມທຶນໄດ້ເພີ່ມເຖິງ 1.7 ຕື້ໂດລາຕໍ່ປີ.

- ຂໍ້ລິເລີ່ມດ້ານການເງິນໂລກໃໝ່, ແມ່ນ ອົງການຊ່ວຍເຫລືອການເງິນການສຶກສາສາກົນ (IFFE). ການຮ່ວມມືດ້ານການສຶກສາເພື່ອທຸກຄົນມີຄວາມຈຳເປັນຕ້ອງຮັບຮູ້ວ່າ ຖ້າຫາກ ຄຳໝັ້ນສັນຍາດ້ານການເງິນ ປີ 2005 ຫາກສາມາດບັນລຸໄດ້ ແລະ ຜູ້ໃຫ້ທຶນກໍໄດ້ເນັ້ນຄວາມເອົາໃຈໃສ່ການສຶກສາຂັ້ນພື້ນຖານ, ກໍຖືວ່າຍັງມີ ຄວາມພະຍາຍາມໜ້ອຍ ແລະ ມີຄວາມຊັກຊ້າຢູ່. ພາຍໃຕ້ນະໂຍບາຍສັກຢາກັນພະຍາດຂອງ ອົງການໃຫ້ຄວາມສະດວກດ້ານການເງິນ ລັດຖະບານທີ່ໃຫ້ທຶນໄດ້ລະດົມທຶນດ້ວຍວິທີການຂາຍພັນທະບັດ, ນຳໃຊ້ລາຍຮັບລວງໜ້າເພື່ອຊ່ວຍຊີວິດ ແລະ ຈ່າຍທົດແທນດອກເບ້ຍໄລຍະຍາວ. ວິທີການດັ່ງກ່າວນີ້ແມ່ນມີລັກສະນະກະທັດຮັດ-ງ່າຍດາຍ ແລະ ບົບບັງຄັບ: ເດັກບໍ່ສາມາດຈ່າຍຄ່າພັນທະບັດ ເພື່ອການລໍຖ້າສັກຢາກັນພະຍາດ ແລະ ລໍຖ້າການສຶກສາ. ລັດຖະບານທີ່ໃຫ້ທຶນຄວນລະດົມທຶນໃຫ້ໄດ້ປະມານ 3 ຫາ 4 ຕື້ໂດລາຕໍ່ປີໃນລະຫວ່າງປີ 2011 ຫາ 2015 ໂດຍຜ່ານການຂາຍພັນທະບັດຂອງອົງການໃຫ້ຄວາມສະດວກດ້ານການເງິນ, ໃນຈຳນວນດັ່ງກ່າວສ່ວນໜຶ່ງກໍໄດ້ເອົາເຂົ້າໃນກອງທຶນເລັ່ງລັດ.

- ລະດົມທຶນແບບໃໝ່. ການໂຄສະນາກ່ຽວກັບການສຶກສາເພື່ອທຸກຄົນຄວນເຮັດວຽກຮ່ວມກັນກັບຜູ້ແທນໃນເຂດເລືອກຕັ້ງຕ່າງໆໃນການສະເໜີເງື່ອນໄຂເກັບຄ່າພາສີນຳບັນດາສະຖາບັນການເງິນ ລວມທັງວິທີການທີ່ສະເໜີໂດຍການຫາສຽງແບບ “ພາສີໂຣບິນຮູດ”, ແລະ ສະຖາບັນການເງິນກໍຕ້ອງຮັບປະກັນວ່າການສຶກສາແມ່ນນອນຢູ່ໃນແຜນແບ່ງປັນລາຍຮັບທີ່ເປັນສ່ວນໜຶ່ງຂອງຍຸດທະສາດສະຫັດສະວັດເພື່ອການພັດທະນາ. ໂດຍອີງໃສ່ຊ່ອງວ່າງດ້ານການເງິນ, ມັນມີຄວາມຈຳເປັນຕ້ອງມີບົດສະເໜີການເງິນແບບໃໝ່ທີ່ເນັ້ນໃສ່ການສຶກສາ. ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນປີ 2011 ໄດ້ມີຂໍ້ສະເໜີສຳລັບການເກັບພາສີລາຍຮັບ 0.5%ຈາກຜູ້ໃຊ້ໂທລະສັບມືຖືໃນທົ່ວສະຫະພາກເອີຣົບ. ພາສີດັ່ງກ່າວສາມາດລະດົມທຶນໄດ້ເຖິງ 894 ລ້ານໂດລາຕໍ່ປີ.



© Lana Slezic/Panos

ເດັກນ້ອຍຍິງຫລິ້ນໃນຕຶກ
ທີ່ຖືກທຳລາຍໃນເມືອງ ຄາບູນ
ຊຶ່ງເປັນບ້ານຂອງຊາວອົບພະຍົບ 105 ຄອບຄົວ



# ພາກ 2. ວິກິດການເຊື່ອງຊ້ອນ: ຄວາມຂັດແຍ້ງດ້ວຍອາວຸດ ແລະ ການສຶກສາ

ອົງການສະຫະປະຊາດໄດ້ຖືກສ້າງຕັ້ງຂຶ້ນ ກ່ອນອື່ນໝົດແມ່ນເພື່ອທັບມ້າງ 'ຄວາມຫາຍຍະນະຂອງສົງຄາມ'. ສຳລັບນັກສະຖາປະນິກຂອງລະບົບໃໝ່ແລ້ວ ຈຸດປະສົງແມ່ນເພື່ອສະກັດກັ້ນການກັບມາຂອງສິ່ງທີ່ຖະແຫລງການດ້ານສິດທິມະນຸດໄດ້ພັນລະນາຄື 'ການດູໝິ່ນ ຢຽດຫຍາມສິດທິຂອງມະນຸດ' ແລະ 'ການກະທຳທີ່ປ່າເຖື່ອນ ທີ່ຮຸກຮານຈິດສຳນຶກຂອງຄວາມເປັນມະນຸດ'. ເປັນເວລາ 65 ປີຜ່ານມາແລ້ວ, ຄວາມຫາຍຍະນະທີ່ເກີດຈາກສົງຄາມຍັງ ສືບຕໍ່. ບາດແຜທີ່ບໍ່ສາມາດປິ່ນປົວໄດ້ຍັງຄົງຕົວຢູ່ໃນບັນດາປະເທດທີ່ທຸກຍາກທີ່ສຸດ ແລະ ມັນກຳລັງທຳລາຍໂອກາດດ້ານການສຶກສາໃນວົງກວ້າງ.

ຜົນກະທົບຂອງຄວາມຂັດແຍ້ງດ້ວຍອາວຸດຕໍ່ການສຶກສາໄດ້ຖືກເມີນເສີຍໃນທົ່ວໂລກ. ອັນນີ້ແມ່ນວິກິດການເຊື່ອງຊ້ອນທີ່ຍິ່ງເຮັດໃຫ້ມີຄວາມທຸກຍາກຫລາຍຂຶ້ນ, ທຳລາຍການຈະເລີນເຕີບໂຕທາງເສດຖະກິດ ແລະ ຖ່ວງດຶງຄວາມກ້າວໜ້າຂອງປະເທດ. ເນື້ອແທ້ຂອງວິກິດການແມ່ນການລະເມີດສິດທິມະນຸດທີ່ເປັນລະບົບ ແລະ ແຜ່ລາມຊຶ່ງສົມຄວນທີ່ສຸດທີ່ຈະຮຽກຊື່ວ່າ 'ການກະທຳທີ່ປ່າເຖື່ອນ'. ບໍ່ມີສິ່ງໃດທີ່ຕ້ອງໄດ້ຖືກເອົາໃຈໃສ່ຢ່າງຮີບດ່ວນຄືບັນຫານີ້ໃນລະດັບສາກົນ. ແຕ່ນອກຈາກມັນທຳລາຍດ້ານແນວຄິດຈິດໃຈຂອງມະນຸດ ແລະ ຮຽກຮ້ອງໃຫ້ມີການຕອບໂຕ້ຢ່າງມີປະສິດທິຜົນ, ຜົນກະທົບຂອງສົງຄາມຕໍ່ການສຶກສາຊ້ຳພັດໄດ້ແຜ່ລາມໄປໂດຍບໍ່ໄດ້ຮັບຂໍ້ມູນໃດໆເລີຍ. ວົງຄະນະຍາດສາກົນກໍບໍ່ໄດ້ເອົາໃຈໃສ່ແຕ່ຢ່າງໃດຕໍ່ຜູ້ທີ່ຖືກເຄາະຮ້າຍ.

ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນປີ 2011 ໄດ້ຊີ້ໃຫ້ເຫັນວິກິດການເຊື່ອງຊ້ອນດັ່ງກ່າວໃນການສຶກສາ. ມັນໄດ້ບັນທຶກຂໍ້ມູນກ່ຽວກັບລະດັບຂອງວິກິດການ, ຊອກໃຫ້ເຫັນສາເຫດ ແລະ ວາງແຜນເພື່ອປ່ຽນແປງມັນ. ຂໍ້ຄວາມທີ່ສຳຄັນອັນໜຶ່ງທີ່ຕ້ອງເອົາໃຈໃສ່ແມ່ນ ວິທີການເຮັດຕາມມີຕາມເກີດຜ່ານມາ ທຳລາຍອະນາຄົດຂອງການບັນລຸເປົ້າໝາຍການສຶກສາເພື່ອທຸກຄົນ ແລະ ເປົ້າໝາຍສະຫັດສະວັດເພື່ອການພັດທະນາ (ເບິ່ງການປະກອບສ່ວນພິເສດ, ພໍແລ້ວກໍຄືພໍແລ້ວ).

ບໍ່ໝາຍຄວາມວ່າສາຍກ່ຽວພັນລະຫວ່າງຄວາມຂັດແຍ້ງດ້ວຍອາວຸດ ແລະ ການສຶກສາປະຕິບັດໄປໃນທິດທາງດຽວກັນ. ໃນຂະນະທີ່ລະບົບການສຶກສາມີຄວາມສາມາດເປັນກຳລັງໃຫ້ແກ່ການສ້າງສັນຕິພາບ, ສ້າງຄວາມປອງດອງ ແລະ ສະກັດກັ້ນຂໍ້ຂັດແຍ້ງ, ທັງໝົດເຫລົ່ານີ້ກໍມັກເກີດສະນວນຄວາມຮຸນແຮງເລື້ອຍໆ. ອັນນີ້ແມ່ນສິ່ງໜຶ່ງທີ່ນັກສະຖາປະນິກຂອງອົງການສະຫະປະຊາຊາດໄດ້ຮັບຮູ້ ແລະ ເຂົ້າໃຈ. ພວກເຂົາເຈົ້າເຂົ້າໃຈວ່າ ສົງຄາມໂລກຄັ້ງທີສອງ, ເຖິງແມ່ນມັນຈະເກີດຈາກສາເຫດສະເພາະໜ້າອັນໃດກໍຕາມ, ແມ່ນເກີດຈາກຄວາມຄວາມເຂົ້າໃຈຜິດຊຶ່ງກັນແລະກັນ. ອົງການອຸຍແນດສະໂກຊອກໃຫ້ເຫັນບໍ່ເກີດຂອງມັນເພື່ອພະຍາຍາມແກ້ໄຂຄວາມຫລົ້ມເຫລວດັ່ງກ່າວ. ທຳມະນູນຂອງອຸຍແນດສະໂກປີ 1941 ຮັບຮູ້ວ່າ, ຕະຫລອດປະຫວັດສາດ, ຄວາມຮູ້ເທົ່າບໍ່ເຖິງການກ່ຽວກັບວິທີການ ແລະ ການດຳລົງຊີວິດຂອງແຕ່ລະຝ່າຍໄດ້ນຳໄປສູ່ການໃຊ້ຄວາມຮຸນແຮງ, ແລະ ເຂົ້າໃຈວ່າສັນຕິພາບທີ່ຖາວອນແມ່ນຖືກສ້າງຂຶ້ນດ້ວຍການສຶກສາ: 'ໃນເມື່ອສົງຄາມເກີດຈາກຄວາມສຳນຶກຂອງມະນຸດ, ມັນກໍແມ່ນຄວາມສຳນຶກຂອງມະນຸດທີ່ການປົກປ້ອງສັນຕິພາບຈະຕ້ອງສ້າງຂຶ້ນ'. ແຕ່ລະບົບການສຶກສາຜ່ານມາບໍ່ຄ່ອຍຖືກສົ່ງເສີມໃຫ້ມີການນັບຖືຊຶ່ງກັນ ແລະ ກັນ, ອົດທົນຕໍ່ກັນ ແລະ ຄົ້ນຄິດຢ່າງສົມເຫດສົມຜົນ, ກົງກັນຂ້າມຊ້ຳພັດເພີ່ມແນວຄິດກຽດຊັງ, ຂາດຄວາມອົດທົນ ແລະ ກ່າວ

## ການປະກອບສ່ວນພິເສດ: ພໍແລ້ວຄືພໍແລ້ວ

ເກືອບເຈັດສິບປີຜ່ານໄປແລ້ວນັບແຕ່ຜູ້ນຳທາງການເມືອງ ລຸ້ນກ່ອນໄດ້ພົບປະກັນໃນທາມກາງຂໍ້ຂັດແຍ້ງທີ່ຮ້າຍແຮງ ແລະ ໃຫ້ຄຳໝັ້ນສັນຍາວ່າ: 'ບໍ່ໃຫ້ມີອີກ'. ອົງການສະຫະປະຊາຊາດໄດ້ຖືກສ້າງຕັ້ງຂຶ້ນເພື່ອສະກັດກັ້ນການກັບມາຂອງຄູ່ຕໍ່ສູ້, ສົງຄາມ ແລະ ການລະເມີດສິດທິມະນຸດ ທີ່ແລກດ້ວຍຊີວິດ ແລະ ສູນເສຍກຳລັງແຮງບໍ່ຈັກວ່າເທົ່າໃດ. ແຕ່ວ່າ ຊີວິດ ແລະ ກຳລັງແຮງກໍຍັງສືບຕໍ່ສູນເສຍຢ່າງຫລວງຫລາຍ, ພວກເຮົາຕ້ອງຢຸດເຊົາການກະທຳດັ່ງກ່າວ.

ບົດລາຍງານຂອງອົງການອຸຍແນດສະໂກ ສະບັບນີ້ ໄດ້ແກ່ຍາວມາຫລາຍ. ມັນໄດ້ບັນທຶນຂໍ້ມູນລະອຽດທີ່ບໍ່ມີການປ່ຽນແປງກ່ຽວກັບການຮ້າຍກາດຂອງຄວາມຮຸນແຮງຕໍ່ປະຊາຊົນຊາວໂລກທີ່ມີຄວາມອ່ອນໄຫວກວ່າໝູ່ ລວມທັງເດັກນ້ອຍນັກຮຽນ ແລະ ມັນກໍເປັນການທ້າທາຍໃຫ້ແກ່ບັນດາຜູ້ນຳປະເທດຕ່າງໆ ບໍ່ວ່າຈະຮັ່ງມີ ຫລື ທຸກຍາກ ເພື່ອຢຸດເຊົາຢ່າງເອົາຈິງເອົາຈັງ.

ຄຳຮຽກຮ້ອງຂອງຂ້າພະເຈົ້າຕໍ່ບັນດາຜູ້ນຳໂລກເປັນຄຳເວົ້າທີ່ສະແດງເຖິງຄວາມຕັ້ງໃຈແບບທຳມະດາໆອັນໜຶ່ງຄື: 'ພໍແລ້ວຄືພໍແລ້ວ'.ໃນຖານະທີ່ເປັນສະມາຊິກຂອງປະຊາຄົມແຫ່ງຈັນຍາທຳອັນໜຶ່ງອັນດຽວ, ບໍ່ມີຜູ້ໃດດອກທີ່ຕ້ອງການຄວາມອົດກັ້ນຕໍ່ການລະເມີດສິດທິມະນຸດ, ການທຳຮ້າຍເດັກ ແລະ ການທຳລາຍໂຮງຮຽນຕາມທີ່ພວກເຮົາໄດ້ຮູ້ໄດ້ເຫັນໃນຄວາມຂັດແຍ້ງດ້ວຍອາວຸດ. ພວກເຮົາພາກັນສະກັດກັ້ນບໍ່ໃຫ້ການກະທຳເຫລົ່ານີ້ເກີດຂຶ້ນ, ປົກປ້ອງເດັກນ້ອຍພວກເຮົາ ແລະ ສິດທິໃນການໄດ້ຮັບການສຶກສາຂອງເຂົາ. ຂ້າພະເຈົ້າຮຽກຮ້ອງເຖິງຜູ້ນຳທາງການເມືອງທັງໝົດ, ປະເທດ ແລະ ກຸ່ມປະກອບອາວຸດທີ່ມີສ່ວນຮ່ວມໃນຂໍ້ຂັດແຍ້ງທີ່ຮຸນແຮງໃຫ້ຈຳໄວ້ວ່າ ພວກເພິ່ນບໍ່ໄດ້ຢູ່ເໜືອກົດໝາຍດ້ານມະນຸດສະທຳສາກົນ.

ຂ້າພະເຈົ້າຮຽກຮ້ອງໄປຍັງຜູ້ນຳປະເທດທີ່ຮັ່ງເພື່ອໃຫ້ການຊ່ວຍເຫລືອທີ່ມີປະສິດທິຜົນແກ່ຜູ້ທີ່ຢູ່ແນວໜ້າ. ໃນການເດີນທາງໄປທົ່ວໂລກຂອງຂ້າພະເຈົ້າ, ຂ້າພະເຈົ້າມັກມີຄວາມຖະໜອມທ່ອມຕົວດ້ວຍຄວາມພະຍາຍາມພິເສດ, ຄວາມເສຍສະລະ ແລະ ຄວາມຕັດສິນໃຈທີ່ເຫັນວ່າພໍ່ແມ່ ແລະ ລູກໆມີການຕໍ່ສູ້ເພື່ອສະແຫວງຫາການສຶກສາ. ໃນເມື່ອບ້ານໄດ້ຮັບການໂຈມຕີ ແລະ ປະຊາຊົນຖືກອົບພະຍົບໜີ, ເຮັດໃຫ້ບໍ່ມີໂຮງຮຽນໂດຍທີ່ບໍ່ໄດ້ກຽມການມາກ່ອນ. ການທຳລາຍໂຮງຮຽນ ແລະ ພໍ່ແມ່ ແລະ ເດັກຈຳເປັນຕ້ອງໄດ້ເຮັດທຸກສິ່ງຢ່າງທີ່ສາມາດເຮັດໄດ້ເພື່ອໄຂຊ່ອງທາງໃຫ້ແກ່ການສຶກສາ. ມີແຕ່ຜູ້ໃຫ້ທຶນເທົ່ານັ້ນທີ່ຈະສະແດງພັນທະເພື່ອແກ້ໄຂບັນຫາດັ່ງກ່າວ.

ປະເທດທີ່ມີຜົນກະທົບຈາກຂໍ້ຂັດແຍ້ງມັກບໍ່ໄດ້ຮັບການຊ່ວຍເຫລືອດ້ານການສຶກສາ ແລະ ການຊ່ວຍເຫລືອສຳລັບການສຶກສາມັກໄດ້ມາຈາກແຫລ່ງທຶນທີ່ຜິດ. ຕາມທີ່ໄດ້ສະແດງໃຫ້ເຫັນໃນບົດລາຍງານນີ້, ການພັດທະນາໄດ້ຖືກກະທົບກະເທືອນຫລາຍຍ້ອນໄດ້ຮັບການຊ່ວຍເຫລືອໜ້ອຍ ແລະ ກໍຊັກຊ້າຫລາຍ. ຜົນໄດ້ຮັບກໍຄືໂອກາດທີ່ຈະໄດ້ກໍ່ຮ່າງສ້າງຕົວລະບົບການສຶກສາຄືນໃໝ່ຖືກເສຍໄປ.

*ຂ້າຫຼວງ ແດສມອນ ຕູລູ*
*ເຈົ້າຂອງລາງວັນໂນແບນສາຂາສັນຕິພາບ*

ຫາຊຶ່ງກັນ ແລະ ກັນ ຊຶ່ງນຳໄປສູ່ຄວາມຮຸນແຮງ. ບົດລາຍງານນີ້ ໄດ້ກຳນົດຍຸດທະສາດເພື່ອແກ້ໄຂບັນຫາເຫລົ່ານີ້ ແລະ ເປີດໂອກາດຢ່າງເຕັມປ່ຽມໃຫ້ການສຶກສາກາຍເປັນກຳລັງເພື່ອສັນຕິພາບ ແຕ່ລະຂໍ້ຂັດແຍ້ງດ້ວຍອາວຸດມີຄວາມແຕກຕ່າງກັນ - ແລະ ມີຜົນສະທ້ອນຕາມມາຕໍ່ການສຶກສາທີ່ແຕກຕ່າງກັນ. ແຕ່ທົວຂໍ້ຂອງຄວາມຂັດແຍ້ງປັດຈຸບັນກໍມີສະເພາະຂອງມັນ. ບົດລາຍງານນີ້ ໄດ້ໃຫ້ລັກສະນະຄວາມຫລົ້ມເຫລວ 4 ຢ່າງຂອງລະບົບໃນການຮ່ວມມືສາກົນ ຊຶ່ງເປັນໃຈກາງຂອງ 'ວິກິດການເຊື່ອງຊ້ອນ' ຄື:

> ມີເດັກນ້ອຍປະມານ 28 ລ້ານຄົນທີ່ມີເກນອາຍຸເຂົ້າຮຽນປະຖົມ ໃນປະເທດທີ່ໄດ້ຮັບຜົນສະທ້ອນຈາກຂໍ້ຂັດແຍ້ງດ້ວຍກຳລັງອາວຸດບໍ່ໄດ້ເຂົ້າໂຮງຮຽນ

- ຄວາມຫລົ້ມເຫລວດ້ານການປົກປ້ອງ. ລັດຖະບານ ແລະ ວົງຄະນະຍາດສາກົນ ບໍ່ດຳເນີນການຕາມຄວາມຮັບຜິດຊອບດ້ານຈັນຍາທຳ ແລະ ພັນທະດ້ານນິຕິກຳເລີຍ ໃນການປົກປ້ອງພົນລະເຮືອນທີ່ຖືກປິດລ້ອມດ້ວຍຂໍ້ຂັດແຍ້ງດ້ວຍອາວຸດ. ຜູ້ທີ່ລະເມີດສິດທິມະນຸດກໍບໍ່ໄດ້ຮັບການລົງໂທດໃດໆເລີຍ ຊຶ່ງກາຍເປັນສິ່ງກີດກັ້ນອັນໃຫຍ່ຫລວງຕໍ່ການສຶກສາ. ການໂຈມຕີຕໍ່ເດັກນັກຮຽນ, ຄູ ແລະ ໂຮງຮຽນ ແລະ ການກະທຳຂົ່ມຂືນສຳເລົາທາງເພດທີ່ແຜ່ລາມ ແລະ ເປັນລະບົບທີ່ຖືວ່າເປັນອາວຸດຂອງສົງຄາມ ແມ່ນຕົວຢ່າງທີ່ບໍ່ມີການປ່ຽນແປງຂອງການລະເມີດສິດທິມະນຸດ.
- ຄວາມຫລົ້ມເຫລວດ້ານການສະໜອງການສຶກສາ. ພໍ່ແມ່ ແລະ ເດັກທີ່ໄດ້ຮັບຜົນກະທົບຈາກຂໍ້ຂັດແຍ້ງ ດ້ວຍອາວຸດສະແດງຄວາມພະຍາຍາມຂອງຕົນໃນການຮັກສາໂອກາດໃຫ້ໄດ້ຮັບການສຶກສາໃນເງື່ອນໄຂຫຍຸ້ງຍາກດັ່ງກ່າວ. ແຕ່ຄວາມພະຍາຍາມດັ່ງກ່າວກໍບໍ່ໄດ້ຮັບຄຳຕອບຈາກວົງຄະນະຍາດສາກົນ. ການສຶກສາຍັງເປັນຂົງເຂດທີ່ຖືກເມີນເສີຍດ້ານການເງິນກວ່າໝູ່ໃນລະບົບການຊ່ວຍເຫລືອດ້ານສິດທິມະນຸດ.
- ຄວາມຫລົ້ມເຫລວດ້ານການຟື້ນຕົວ ແລະ ກໍ່ສ້າງຄືນໃໝ່ແຕ່ຫົວທີ. ການສ້າງສັນຕິພາບຄືນໃໝ່ໄດ້ສ້າງໂອກາດໃຫ້ລັດຖະບານ ແລະ ວົງຄະນະຍາດສາກົນໃນການເປີດໂອກາດໃນການຟື້ນຟູ ແລະ ກໍ່ສ້າງຍຸດທະສາດຄືນໃໝ່. ແຕ່ທັງໝົດ ການປະຕິບັດງານຂອງເຂົາເຈົ້າບໍ່ປະຕິບັດໄດ້ແບບທັນການ. ສ່ວນໜຶ່ງຂອງບັນຫາແມ່ນປະເທດທີ່ມີຜົນກະທົບຈາກຂໍ້ຂັດແຍ້ງແມ່ນຍັງຢູ່ໃນຄວາມມືດມົນ ແລະ ຂາດຄວາມເຂົ້າໃຈລະຫວ່າງການຊ່ວຍເຫລືອເພື່ອບັນເທົາທຸກ ແລະ ການຊ່ວຍເຫລືອເພື່ອການພັດທະນາໄລຍະຍາວ. ເພາະໃນເມື່ອປະເທດໄດ້ເຂົ້າສູ່ສະພາບມີຂໍ້ຂັດແຍ້ງແລ້ວ, ຮູບແບບການຊ່ວຍເຫລືອສາກົນກໍຖືກຕັດຂາດ ແລະ ຢຸດສະງັກ.



ເດັກນ້ອຍກຳລັງຊອງອອກມາຈາກຫ້ອງຮຽນ ທີ່ເປັນເຕັ້ນ ຫລັງຈາກໂຮງຮຽນພວກເຂົາ ຖືກທຳລາຍຈາກການໂຈມຕີຂອງອິດສະລະເອວ ໃນກາຊາ ປີ 2009

© Ismael Mohamad/UPI/GAMMA

- ຄວາມຫລົ້ມເຫລວດ້ານການປົກປັກຮັກສາສັນຕິພາບ. ການສຶກສາມີພາລະບົດບາດຕົ້ນຕໍໃນການປົກປັກຮັກສາສັນຕິພາບ. ອາດເວົ້າໄດ້ວ່າການສຶກສາສາມາດເຮັດໄດ້ ຫລາຍກວ່າທຸກໆຂະແໜງການໃນການແບ່ງປັນສັນຕິພາບແບບຕົ້ນໆຢ່າງເຫັນໄດ້ຊັດ ຊຶ່ງຜູ້ທີ່ຍັງນັບຖືຂໍ້ຕົກລົງສັນຕິພາບອາດຕ້ອງໄດ້ອີງໃສ່. ຍິ່ງໄປກວ່ານັ້ນ ໃນເມື່ອລະບົບການສຶກສາມີລັກສະນະເນື້ອໃນແບບຮຽນຮ່ວມ ແລະ ເລັ່ງໃສ່ສິ່ງເສີມອຸປະນິໄສທີ່ຊ່ວຍໃຫ້ມີຄວາມເຂົ້າໃຈຊຶ່ງກັນ ແລະ ກັນ, ມີຄວາມອົດທົນຕໍ່ກັນ ແລະ ນັບຖືຊຶ່ງກັນ ແລະ ກັນ, ລະບົບການສຶກສານັ້ນ ສາມາດເຮັດໃຫ້ສັງຄົມມີໂອກາດໜ້ອຍທີ່ຈະເກີດຂໍ້ຂັດແຍ້ງທີ່ຮຸນແຮງ.

ຄວາມຫລົ້ມເຫລວແຕ່ລະຢ່າງເຫລົ່ານີ້ ໄດ້ຝັງເລິກເຂົ້າໃນການປະຕິບັດ ໂດຍການຈັດຕັ້ງແລ້ວ. ແຕ່ຄວາມຫລົ້ມເຫລວແຕ່ລະຢ່າງນີ້ ກໍສາມາດດັດແກ້ໄດ້ດ້ວຍທາງອອກທີ່ທຸກຄົນເຮັດໄດ້ ແລະ ບໍ່ໄດ້ລົງທຶນຫລາຍ ຕາມທີ່ໄດ້ກຳນົດໄວ້ໃນບົດລາຍງານນີ້. ປັດໄຈສຳຄັນໃນການປ່ຽນແປງ ແມ່ນການນຳພາທາງດ້ານການເມືອງທີ່ເອົາຈິງເອົາຈັງ, ເພີ່ມຄວາມເຂັ້ມແຂງທາງດ້ານການຮ່ວມມືສາກົນ ແລະ ການພັດທະນາການວິທີການຕອບໂຕ້ ຕໍ່ບັນດາສິ່ງທ້າທາຍດ້ານການການພັດທະນາໃນຕົ້ນສັດຕະວັດທີ 21 ດ້ວຍຫລາຍຝ່າຍ.

## ຄວາມຂັດແຍ້ງດ້ວຍອາວຸດແມ່ນສິ່ງກີດຂວາງການບັນລຸເປົ້າໝາຍການສຶກສາເພື່ອທຸກຄົນ

ໃນເມື່ອລັດຖະບານຂອງປະເທດຕ່າງໆໄດ້ຮັບຮອງເອົາຂອບປະຕິບັດງານ ດາກາ ປີ 2000, ພວກເພິ່ນໄດ້ໃຫ້ລັກສະນະຂໍ້ຂັດແຍ້ງດ້ວຍອາວຸດເປັນ 'ສິ່ງກີດຂວາງການບັນລຸເປົ້າໝາຍການສຶກສາເພື່ອທຸກຄົນ'. ຂໍ້ມູນດ້ານຫລັກຖານທີ່ໄດ້ສະເໜີໃນບົດລາຍງານນີ້ໄດ້ສະແດງໃຫ້ຮູ້ວ່າຂະໜາດຄວາມສູງຂອງສິ່ງຂີດຂວາງແມ່ນໄດ້ຖືກປະເມີນຕ່ຳ ແລະ ການເອົາໃຈໃສ່ທີ່ບໍ່ພຽງພໍຕໍ່ຍຸດທະສາດການແກ້ໄຂບັນຫາດັ່ງກ່າວ. (ເບິ່ງຂໍ້ຄວາມພິເສດ, ການສຶກສາເພື່ອຄວາມປອດໄພ ແລະ ການພັດທະນາ). ປະເທດກຳລັງພັດທະນາທີ່ຖືກຜົນສະທ້ອນຈາກຂໍ້ຂັດແຍ້ງດ້ວຍອາວຸດໄດ້ຮັບການເອົາໃຈໃສ່ໜ້ອຍໃນການຍົກເອົາບັນຫາຂຶ້ນມາແກ້ໄຂຂອງປະເທດສັນນິບາດສຳລັບການສຶກສາເພື່ອທຸກຄົນ (ເບິ່ງຮູບ 9).

- ອັດຕາການຕາຍຂອງເດັກສູງກວ່າປະເທດກຳລັງພັດທະນາອື່ນໆສອງເທົ່າ ຊຶ່ງສະທ້ອນໃຫ້ເຫັນວ່າມີລະດັບການຂາດໂພຊະນາການ ແລະ ບັນດາຄວາມສ່ຽງທີ່ພົວພັນເຖິງສຸຂະພາບ.
- ມີເດັກນ້ອຍປະມານ 28 ລ້ານຄົນທີ່ມີເກນອາຍຸເຂົ້າຮຽນປະຖົມໃນປະເທດທີ່ໄດ້ຮັບຜົນສະທ້ອນຈາກຂໍ້ຂັດແຍ້ງດ້ວຍກຳລັງອາວຸດບໍ່ໄດ້ເຂົ້າໂຮງຮຽນ. ໃນເມື່ອທົ່ວໂລກມີເດັກນ້ອຍບໍ່ໄດ້ເຂົ້າຮຽນປະຖົມເຖິງ 18% ຈຳນວນນີ້ໄດ້ກວມເອົາ 42% ຂອງເດັກນ້ອຍບໍ່ໄດ້ເຂົ້າຮຽນປະຖົມໃນທົ່ວໂລກ. ເມື່ອສົມທຽບພາຍໃນບັນດາປະເທດກຳລັງພັດທະນາແລ້ວ, ຈຳນວນນີ້ໄດ້ກວມເອົາໜຶ່ງສ່ວນສາມຂອງຈຳນວນເດັກນັກຮຽນປະຖົມທັງໝົດ, ແຕ່ກໍເກືອບເຖິງເຄິ່ງໜຶ່ງຂອງເດັກນ້ອຍທີ່ບໍ່ໄດ້ເຂົ້າໂຮງຮຽນໃນບັນດາປະເທດເຫລົ່ານັ້ນ.
- ໃນປະເທດທີ່ຖືກຜົນກະທົບຈາກຂໍ້ຂັດແຍ້ງດ້ວຍອາວຸດ ອັດຕາການເຂົ້າຮຽນໃນຊັ້ນມັດທະຍົມຕ່ຳກວ່າປະເທດກຳລັງພັດທະນາອື່ນໆເກືອບເຖິງໜຶ່ງສ່ວນສາມ ແລະ ເດັກຍິງກໍຍິ່ງຕ່ຳກວ່າຫລາຍ.
- ອັດຕາການຮູ້ໜັງສືຂອງຊາວໜຸ່ມໃນປະເທດທີ່ໄດ້ຮັບຜົນກະທົບຈາກຂໍ້ຂັດແຍ້ງດ້ວຍອາວຸດແມ່ນ 79% ໃນຂະນະທີ່ປະເທດກຳລັງພັດທະນາອື່ນໆ ແມ່ນ 93%.

## **ຂໍ້ຄວາມປະກອບສ່ວນພິເສດ**: ການສຶກສາເພື່ອຄວາມໝັ້ນຄົງ ແລະ ການພັດທະນາ

ເມື່ອພວກເຮົາຄິດກ່ຽວກັບສົງຄາມ, ພວກເຮົາຄິດເຖິງທະຫານ. ແຕ່ບໍ່ແມ່ນພວກເຂົາເຈົ້າເທົ່ານັ້ນທີ່ກຳລັງປະເຊີນກັບຄວາມຮຸນແຮງ ແລະ ຄວາມຕາຍ. ເປັນໜ້າເສົ້າໃຈ, ເດັກນ້ອຍ ແລະ ໂຮງຮຽນກໍຢູ່ໃນປ້ອມດ້ານໜ້າເໝືອນກັນ. ບໍ່ເປັນໜ້າສົງໄສທີ່ວ່າ, ມີຈຳນວນເຄິ່ງໜຶ່ງຂອງເດັກທີ່ບໍ່ໄດ້ເຂົ້າຮຽນແມ່ນຢູ່ໃນສະຖານະການທີ່ບອບບາງ ຫລື ມີຜົນສະທ້ອນຈາກຂໍ້ຂັດແຍ້ງ.

ຂໍ້ຂັດແຍ້ງແມ່ນມີເງື່ອນງຳທີ່ກໍ່ໃຫ້ເກີດຄວາມຕາຍ. ມັນບໍ່ທຳລາຍສະເພາະແຕ່ການດຳລົງຊີວິດຂອງຄົນເຮົາໃນປັດຈຸບັນ ແຕ່ມັນກໍຍັງທຳລາຍການດຳລົງຊີວິດຂອງຄົນເຮົາໃນອະນາຄົດໂດຍປະຕິເສດການສຶກສາຂອງເດັກ. ໃນເມື່ອເດັກກັບໄປເຂົ້າໂຮງຮຽນ, ຄວາມບອບຊ້ຳໃນຊີວິດຄວາມເປັນເດັກທີ່ຖືກທຳລາຍໄປແລ້ວມີຜົນກະທົບບໍ່ໜ້ອຍຕໍ່ຄວາມສາມາດໃນການຮຽນ ແລະ ການຕໍ່ສູ້ກັບບັນຫາໃນໂລກ.

ກະແສແຫ່ງຄວາມທຳລາຍທ່ວງດຶງການພັດທະນາລົງໄປສູ່ການຢຸດສະງັກ ແລະ ຖອຍຫລັງ. ເມື່ອມີເດັກນ້ອຍໃນຄວາມຂັດແຍ້ງບໍ່ໄດ້ເຂົ້າໂຮງຮຽນ, ເປົ້າໝາຍການສຶກສາເພື່ອທຸກຄົນ ແລະ ສະຫັດສະວັດດ້ານການພັດທະນາອາດເວົ້າໄດ້ວ່າບໍ່ສາມາດບັນລຸໄດ້ ໃນຂະນະທີ່ລັດທິຮັກສາເດີມ ແລະ ຄວາມຮຸນແຮງໄດ້ຄອບງຳຄວາມມຸ້ງຫວັງທັງໝົດ. ດັ່ງນັ້ນ ພວກເຮົາຕ້ອງສຸມກຳລັງຄວາມພະຍາຍາມໃນການໃຫ້ການສຶກສາແກ່ເດັກນ້ອຍເຫລົ່ານີ້. ນີ້ບໍ່ແມ່ນການປ້ອງກັນບໍ່ໃຫ້ຂໍ້ຂັດແຍ້ງບໍ່ໃຫ້ເກີດເທົ່ານັ້ນ, ມັນຍັງສ້າງສາປະເທດຄືນໃໝ່ຫລັງຈາກຂໍ້ຂັດແຍ້ງໄດ້ສິ້ນສຸດລົງ. ສິ່ງທີ່ຈະຕ້ອງສ້າງຄືນໃໝ່ມີ: ໂຄງລ່າງ, ການປົກຄອງ, ແຕ່ສິ່ງສຳຄັນກວ່າແມ່ນການສ້າງແນວຄິດ. ໃນທ່າມກາງການສ້າງສັນຕິພາບຄືນໃໝ່, ການໃຫ້ການສຶກສາຄືນໃໝ່ແມ່ນມີຄວາມສຳຄັນຫລາຍສຳລັບນັກຮົບ, ເດັກ ແລະ ຜູ້ໃຫຍ່ ທີ່ຂາດທັກສະ ຫລື ອະນາຄົດແທນທີ່ຈະເປັນປາກກະບອກປືນ.

ນີ້ແມ່ນຄວາມຈິງໃນປະເທດຕາວັນອອກກາງຊຶ່ງເປັນບ່ອນທີ່ຄວາມຮຸນແຮງຕັດສິນອະນາຄົດຂອງເດັກນ້ອຍຫລາຍໆຄົນ. ໃນປະເທດປາແລດສະຕິນ, ມີເດັກຫລາຍກວ່າ 110,000 ຄົນບໍ່ໄດ້ຮຽນໜັງສື ໂດຍເລີ່ມຈາກ 4000 ຄົນໃນສິບປີຫລັງ.

ໂດຍເຕີບໂຕມາໃນເງົາມືດແຫ່ງຄວາມຍຶດຄອງທີ່ເຕັມໄປດ້ວຍຄວາມຢ້ານກົວແຫ່ງຄວາມຂັດແຍ້ງນັ້ນ, ການໄປໂຮງຮຽນຂອງເດັກກໍຍັງເປັນສິ່ງທີ່ເພິ່ງພໍໃຈອັນໜຶ່ງອັນດຽວຂອງເດັກນ້ອຍປາແລດສະຕິນ. ໂດຍບໍ່ຢ້ານກົວຕໍ່ລູກລະເບີດ ແລະ ການປິດລ້ອມ ພວກເຂົາເຈົ້າຮູ້ວ່າອັນນັ້ນຄືຄວາມຫວັງອັນດຽວທີ່ຈະກັບຄືນມາໃຊ້ຊີວິດປົກກະຕິຂອງເຂົາເຈົ້າ.

ໃນປະເທດອີຣັກ, ຄວາມທຸກຍາກ ແລະ ຄວາມບໍ່ປອດໄພ ຂົ່ມຂູ່ສິດທິການໄປໂຮງຮຽນປະຖົມຂອງ ເດັກນ້ອຍຫລາຍກວ່າເຄິ່ງລ້ານຄົນ. ການຮຽນບົດຮຽນແຕ່ລະວັນກໍຢູ່ທ່າມກາງຄວາມໂຫຍຫິວ ແລະ ການສູນເສຍ. ການສຳເລັດການຮຽນກໍແມ່ນເພື່ອເຂົ້າໄປສູ່ສະພາບແຫ່ງຄວາມຢ້ານກົວ ແລະ ຄວາມກຽດຊັງ.

ຖ້າຄວາມບໍ່ໝັ້ນຄົງຫາກແມ່ນບູລິມະສິດໃນລະດັບພາກພື້ນ ແລະ ໃນໂລກ ພວກເຮົາຕ້ອງແກ້ໄຂບັນຫາຄວາມທຸກຍາກ, ການແບ່ງແຍກສັງຄົມ ແລະ ການຂາດໂອກາດ ທີ່ເກີດມາຈາກຄວາມຂັດແຍ້ງ.

ນັ້ນແມ່ນການນຳການສຶກສາເຂົ້າໄປໃນເຂດຄວາມຂັດແຍ້ງເພາະມັນຈະທຳລາຍແນວຄິດພວກຫົວຮຸນແຮງ ແລະ ສ້າງຄວາມເຂັ້ມແຂງໃຫ້ປະເທດທີ່ໄດ້ຮັບຄວາມບອບຊ້ຳມາແລ້ວ. ແຕ່ຍິ່ງໄປກວ່ານັ້ນ, ການສຶກສາໄດ້ນຳເອົາຄວາມຫວັງມາໃຫ້ເດັກນ້ອຍຫລາຍລ້ານຄົນທີ່ບໍ່ເຄີຍຮູ້ສັນຕິພາບມາກ່ອນ. ການສຶກສານຳເອົາໂອກາດມາໃຫ້ປະເທດທີ່ມີຄວາມຕ້ອງການຢ່າງແຮງກ້າເພື່ອການເຕີບໂຕ ແລະ ມີຄວາມວັດທະນາຖາວອນ.

ສະຫລຸບຄວາມແລ້ວ, ການສຶກສາແມ່ນສິ່ງທີ່ດີງາມຂອງພວກເຮົາ, ໂອກາດທີ່ດີທີ່ສຸດຂອງພວກເຮົາ ແລະ ປືນໃຫຍ່ອັນໜຶ່ງຂອງພວກເຮົາທີ່ນຳມາຊຶ່ງຄວາມໝັ້ນຄົງ ແລະ ການພັດທະນາໃຫ້ແກ່ມວນມະນຸດທັງໝົດ.

*ສົມເດັດພະລາຊີນີ ຣາເນຍ ອານ ອັບດູນລາ ແຫ່ງປະເທດຈໍແດນ*

ມີຫລັກຖານສະແດງໃຫ້ເຫັນວ່າຄວາມຂັດແຍ້ງທີ່ຮຸນແຮງເຮັດໃຫ້ຄວາມແຕກໂຕນພາຍໃນປະເທດທີ່ຕິດພັນກັບຄວາມຮັ່ງມີ ແລະ ບົດບາດຍິງ-ຊາຍ. ເຂດທີ່ໄດ້ຮັບຜົນກະທົບຍ້ອນຄວາມຂັດແຍ້ງສ່ວນໃຫຍ່ຫລ້າຫລັງກວ່າບ່ອນອື່ນໆຂອງປະເທດ. ໃນປະເທດ ຟີລິບປິນ ຊັດສ່ວນຈຳນວນໄວໜຸ່ມໃນເຂດປົກຄອງຕົນເອງ ມູສະລິມ ມິນດານາວທີ່ມີເວລາໜ້ອຍກວ່າສອງປີໃນການສຶກສາ ແມ່ນມີຫລາຍກວ່າສີ່ເທື່ອຂອງຈຳນວນສະເລ່ຍໃນທົ່ວປະເທດ.

ຜູ້ທີ່ລົ້ມຕາຍຍ້ອນຄວາມຂັດແຍ້ງດ້ວຍອາວຸດຊ້ຳພັດເກີດຂຶ້ນໄກຈາກເຂດທີ່ມີການຕໍ່ສູ້ກັນຍ້ອນພະຍາດ ແລະ ການຂາດອາຫານ. ສິ່ງທີ່ກໍ່ໃຫ້ເກີດຄວາມຕາຍທັງສອງຢ່າງທີ່ໄດ້ຂ້າຄົນຈຳນວນ 5.4 ລ້ານຊີວິດໃນໄລຍະສົງຄາມໃນສາທາລະນະລັດປະຊາຊາທິປະໄຕ ກອງໂກ ຖືວ່າເປັນຄວາມຂັດແຍ້ງທີ່ໄດ້ເຮັດໃຫ້ຄົນຕາຍຫລາຍທີ່ສຸດໃນໂລກ. ຈຳນວນຜູ້ທີ່ໄດ້ຮັບເຄາະຮ້າຍເກືອບເຄິ່ງໜຶ່ງແມ່ນເດັກນ້ອຍອາຍຸຕ່ຳກວ່າ 5 ປີ. ຄວາມເຈັບປ່ວຍ ແລະ ຄວາມຫິວ ດັ່ງກ່າວກໍ່ໃຫ້ເກີດຄວາມອ່ອນແອແກ່ການສຶກສາ.

### *ເດັກນ້ອຍ, ພົນລະເຮືອນ ແລະ ໂຮງຮຽນຢູ່ໃນປ້ອມດ້ານໜ້າ*

ຄວາມຂັດແຍ້ງດ້ວຍອາວຸດໃນປັດຈຸບັນ ມີການຕໍ່ສູ້ກັນຢ່າງຫລາຍພາຍໃນປະເທດ ແທນທີ່ຈະຢູ່ຕາມຊາຍແດນ ແລະ ຕິດພັນກັບການໃຊ້ຄວາມຮຸນແຮງທີ່ຍືດເຍື້ອຍາວນານ. ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນໄດ້ແຈ້ງໃຫ້ຮູ້ຈຳນວນຄວາມຂັດແຍ້ງດ້ວຍອາວຸດ ໃນລະຫວ່າງປີ 1999 ເຖິງ 2008 ທັງໝົດ 48 ຄວາມຂັດແຍ້ງໃນ 35 ປະເທດ. ໃນນັ້ນ 45 ຄວາມຂັດແຍ້ງເກີດຂຶ້ນໃນບັນດາປະເທດທີ່ມີລາຍໄດ້ຕ່ຳ ແລະ ຕ່ຳປານກາງ. ຍ້ອນຄວາມເຄັ່ງຮ້ອນ, ຂະໜາດ ແລະ ຂອບເຂດທາງພູມສາດຂອງຄວາມຮຸນແຮງມີການປ່ຽນແປງຄວາມຍືດເຍື້ອຍາວນານຂອງຄວາມຂັດແຍ້ງເປັນຂອງປົກກະຕິທຳມະດາ. ສະເລ່ຍແລ້ວຄວາມຂັດແຍ້ງດ້ວຍອາວຸດໃນປະເທດທີ່ມີລາຍໄດ້ຕ່ຳມັກແກ່ຍາວເຖິງ 12 ປີ ແລະ ໃນປະເທດທີ່ມີລາຍໄດ້ຕ່ຳປານກາງໃຊ້ເວລາສະເລ່ຍເພີ່ມຂຶ້ນເຖິງ 22 ປີ.

ການໃຊ້ກຳລັງທີ່ຂາດການພິນິດພິຈາລະນາ ແລະ ເລັ່ງເປົ້າໝາຍໃສ່ພົນລະເຮືອນໂດຍຄວາມຕັ້ງໃຈແມ່ນການສະແດງເຖິງຄວາມຂັດແຍ້ງຂອງຄວາມຮຸນແຮງທີ່ມີຄຸນນະພາບສູງໃນຊ່ວງຕົ້ນໆສັດຕະວັດທີ 21.ໃນຄວາມຂັດແຍ້ງ ສ່ວນໃຫຍ່ ການເປັນພົນລະເມືອງອັນຕະລາຍກວ່າການເປັນນັກຮົບ. ລະບົບການສຶກສາຖືກຜົນກະທົບໂດຍກົງ. ປັດຈຸບັນເດັກນ້ອຍ ແລະ ໂຮງຮຽນ ຢູ່ໃນປ້ອມດ້ານໜ້າຂອງຄວາມຂັດແຍ້ງດ້ວຍອາວຸດ ຊຶ່ງຖືວ່າຫ້ອງຮຽນ, ຄູ ແລະ ນັກຮຽນເປັນເປົ້າໝາຍທີ່ຖືກຕ້ອງຕາມກົດໝາຍ. ຜົນຕາມມາ ໂດຍອີງໃສ່ການລາຍງານຂອງສະຫະປະຊາຊາດວ່າ ມັນເກີດໃຫ້ມີຄວາມຢ້ານກົວຕໍ່ການໄປໂຮງຮຽນ ເພີ່ມຂຶ້ນຂອງເດັກນ້ອຍ, ຕໍ່ຄູໃນການສິດສອນ, ຢ້ານກົວບໍ່ໄປໂຮງຮຽນ ແລະ ຕໍ່ພໍ່ແມ່ໃນການສົ່ງລູກໄປ ໂຮງຮຽນ. ໃນປະເທດອັຟການິດສະຖານ ແລະ ປາກິດສະຖານ ກຸ່ມຕໍ່ສູ້ໄດ້ທຳລາຍໂຄງລ່າງການສຶກສາ ຄັ້ງແລ້ວຄັ້ງເລົ່າ ໂດຍສະເພາະໂຮງຮຽນເດັກຍິງ. ຄວາມຢ້ານກົວຕໍ່ຄວາມບໍ່ປອດໄພເຮັດໃຫ້ມີການ ອັດໂຮງຮຽນເຖິງ 70% ໃນແຂວງ ແຮນມານ ຂອງອັຟການິດສະຖານ. ໃນເຂດ ກາຊາທີ່ເປັນເຂດປົກຄອງຂອງ ປາແລດສະຕິນ, ການໂຈມຕີຂອງກອງທະຫານປະເທດອິດສະລາແອນໃນປີ 2008 ແລະ 2009 ເຮັດໃຫ້ເດັກນ້ອຍຕາຍເຖິງ 350 ຄົນ, ບາດເຈັບ 1,815 ຄົນ ແລະ ທຳລາຍໂຮງຮຽນ 280 ຫລັງ. ໃນເຂດ 3 ແຂວງພາກໃຕ້ຂອງປະເທດໄທ, ເດັກນ້ອຍ ແລະ ຄູ ກໍແມ່ນເປົ້າໝາຍຂອງ ຂອງກຸ່ມຕໍ່ຕ້ານ. ການລາຍງານໃຫ້ຊາບວ່າ ການໃຊ້ເດັກເປັນທະຫານ ມີຢູ່ໃນ 24 ປະເທດ ລວມທັງໃນປະເທດ ສາທາລະນະລັດ ອາຟະຣິກາກາງ, ຊາດ, ສາທາລະນະລັດ ປະຊາທິປະໄຕ ກອງໂກ, ມຽນມາ ແລະ ຊູດານ,

ປັດຈຸບັນ ໂຮງຮຽນ ຢູ່ໃນ ປ້ອມດ້ານໜ້າ ຂອງຄວາມຂັດແຍ້ງດ້ວຍອາວຸດ ຊຶ່ງຖືວ່າ ຫ້ອງຮຽນ, ຄູ ແລະ ນັກຮຽນ ເປັນເປົ້າໝາຍ ທີ່ຖືກຕ້ອງຕາມ ກົດໝາຍ

**ຮູບທີ 9: ປະເທດທີ່ໄດ້ຮັບຜົນສະທ້ອນຈາກຄວາມຂັດແຍ້ງດ້ວຍອາວຸດມີຄວາມຫລ້າຫລັງດ້ານການສຶກສາ**

*ຕົວຊີ້ບອກດ້ານການສຶກສາສຳລັບປະເທດທີ່ມີລາຍໄດ້ຕ່ຳ ແລະ ຕ່ຳປານກາງ, ໂດຍອີງໃສ່ສະພາບ ຄວາມຂັດແຍ້ງ ປີ 2008.*




*ແຫລ່ງຂໍ້ມູນ: ເບິ່ງຮູບທີ 3.1 ໃນບົດລາຍງານໂລກ ການຕິດຕາມການສຶກສາເພື່ອທຸກຄົນ 2011*




ເດັກຍິງຜູ້ໜຶ່ງໃນປະເທດ ໂຊມາລີ ຍ່າງຜ່ານຕຶກທີ່ຖືກທຳລາຍດ້ວຍການສູ້ຮົບໃນເມືອງໂມກາດີຊູ ຊຶ່ງເປັນບ່ອນທີ່ຄວາມຂັດແຍ້ງໄດ້ສະກັດກັ້ນການໄປເຂົ້າຮຽນຂອງເດັກສ່ວນໃຫຍ່

ຮູບແບບຄວາມຮຸນແຮງຫລາຍຢ່າງກໍ່ໃຫ້ເກີດຜົນກະທົບດ້ານການສຶກສາ. ບົດລາຍງານຂອງເລຂາທິການໃຫຍ່ອົງການສະຫະປະຊາຊາດສືບຕໍ່ໃຫ້ຫລັກຖານດ້ານຂໍ້ມູນວ່າ ການຂົ່ມຂືນສຳເລົາ ແລະ ຄວາມຮຸນແຮງດ້ານເພດ ຖືກໃຊ້ເປັນວິທີການທາງທະຫານໃນຫລາຍປະເທດ ລວມທັງ ອັຟການິດສະຖານ, ສາທາລະນະລັດ ອາຟຣິກາກາງ, ຊາດ, ສາທາລະນະລັດ ປະຊາທິປະໄຕ ກອງໂກ ແລະ ຊູດານ. ຜູ້ເຄາະຮ້າຍຫລາຍຄົນເປັນຊາວໜຸ່ມແມ່ຍິງ. ສຳລັບຜູ້ທີ່ໄດ້ຮັບຜົນກະທົບແລ້ວ, ການທຳລາຍຮ່າງກາຍ, ການຕົກໃຈຢ້ານກົວ ແລະ ການມີມົນທິນ ແມ່ນແຫລ່ງເກີດແຫ່ງຄວາມດ້ອຍໂອກາດທາງດ້ານການສຶກສາທີ່ຝັງເລິກ ແລະ ຍາວນານ. ແຕ່ວ່າການໃຊ້ວິທີການຂົ່ມຂືນທາງເພດເປັນເຄື່ອງມືສົງຄາມຍັງມີຜົນສະທ້ອນຕາມມາທີ່ກວ້າງກວ່າ ດ້ານຄວາມບໍ່ປອດໄພ ແລະ ຢ້ານຕໍ່ການເອົາລູກສາວໄປເຂົ້າໂຮງຮຽນ ພ້ອມນັ້ນການແຕກແຍກໃນຊີວິດຄອບຄົວ ແລະ ຊຸມຊົນ ເຮັດໃຫ້ເດັກນ້ອຍຂາດແຄນບ່ອນຮຽນທີ່ມີຄວາມປອດໄພ.

ມັນບໍ່ແມ່ນການແລກດ້ວຍຊີວິດ ແລະ ການທຳລາຍໂຄງລ່າງໂຮງຮຽນເທົ່ານັ້ນທີ່ເຮັດໃຫ້ການສຶກສາໄດ້ຮັບການບອບຊ້ຳ. ຄວາມຂັດແຍ້ງດ້ວຍອາວຸດຍັງທຳລາຍການເຕີບໂຕທາງເສດຖະກິດ, ເພີ່ມຄວາມທຸກຍາກ ແລະ ຫັນຊັບພະຍາກອນຈາກການລົງທຶນທີ່ໄດ້ຮັບຜົນໃນຫ້ອງຮຽນໄປສູ່ ການໃຊ້ຈ່າຍທາງທະຫານທີ່ບໍ່ມີໝາກຜົນອັນໃດອີກດ້ວຍ. ບົດລາຍງານໄດ້ໃຫ້ລັກສະນະ 21 ປະເທດທີ່ກຳລັງພັດທະນາທີ່ທຸກທີ່

ສຸດ ທີ່ໃຊ້ງົບປະມານທາງທະຫານຫລາຍກວ່າງົບປະມານເຂົ້າໃສ່ການສຶກສາຊັ້ນປະຖົມ - ໃນບາງກໍລະນີຍິ່ງຫລາຍກວ່າ. ເມື່ອເບິ່ງຕົວຊີ້ບອກການສຶກສາທີ່ຂີ້ຮ້າຍທີ່ສຸດແລ້ວ, ປະເທດຊາດ ໃຊ້ງົບປະມານໃນການຊື້ອາວຸດຫລາຍກວ່າງົບປະມານເຂົ້າໃສ່ການສຶກສາຊັ້ນປະຖົມເຖິງສີ່ເທົ່າ, ແລະ ປະເທດ ປາກິດສະຖານໃຊ້ເຖິງ ເຈັດເທົ່າ. ຖ້າປະເທດຕ່າງໆທີ່ໃຊ້ງົບປະມານເຂົ້າໃສ່ການທະຫານຫລາຍກວ່າການສຶກສາຊັ້ນປະຖົມຫາກຕັດງົບຂອງຕົນ 10% ເພີ່ມເຂົ້າໃສ່ການສຶກສາຊັ້ນປະຖົມ ເຂົາເຈົ້າຈະສາມາດເຮັດໃຫ້ເດັກນ້ອຍໄດ້ເຂົ້າຮຽນເຖິງ 9.5 ລ້ານຄົນ ເທົ່າກັບການຫລຸດ 40% ຂອງຈຳນວນເດັກນ້ອຍທີ່ບໍ່ໄດ້ເຂົ້າໂຮງຮຽນທັງໝົດ (ເບິ່ງຮູບທີ 10).

ການໃຊ້ຈ່າຍທາງທະຫານທັນທີດແຫລ່ງທຶນຊ່ວຍເຫລືອຄືກັນ. ການໃຊ້ຈ່າຍທາງທະຫານຂອງໂລກທັງໝົດມີຈຳນວນເຖິງ 1.5 ລ້ານໂດລາ ໃນປີ 2009. ຖ້າປະເທດທີ່ຮັ່ງມີຫາກມອບເງິນທີ່ໃຊ້ 6 ວັນໃນການທະຫານເພື່ອຊ່ວຍເຫລືອການສຶກສາຊັ້ນພື້ນຖານ ຈະສາມາດໄດ້ການຊ່ວຍເຫລືອເຖິງ 16 ຕື້ໂດລາ ເພື່ອຖົມຊ່ອງວ່າງຄວາມຕ້ອງການດ້ານການເງິນເພື່ອບັນລຸເປົ້າໝາຍການສຶກສາເພື່ອທຸກຄົນ ໂດຍການເອົາເດັກນ້ອຍທັງໝົດໄດ້ເຂົ້າໂຮງຮຽນໃນປີ 2015 (ເບິ່ງຮູບ 11).

ບັນດາລັດຖະບານປະເທດຕ່າງໆ ແລະ ຜູ້ໃຫ້ທຶນຄວນທົບທວນຄືນຢ່າງຮີບດ່ວນເຖິງຄວາມສາມາດຂອງຕົນໃນການທັບປຸ່ງການໃຊ້ຈ່າຍທີ່ບໍ່ມີຜົນໄດ້ຮັບໃສ່ອາວຸດໄປສູ່ການລົງທຶນທີ່ມີຜົນໄດ້ຮັບໃສ່ໂຮງຮຽນ, ປື້ມຮຽນ ແລະ ເດັກນ້ອຍ. ປະເທດຕ່າງໆທັງໝົດ ຕ້ອງໄດ້ຕອບໂຕ້ຕໍ່ໄພຂົ່ມຂູ່ດ້ານຄວາມປອດໄພ. ເຖິງຢ່າງໃດກໍຕາມ ການເສຍໂອກາດດ້ານການລົງທຶນໃສ່ການສຶກສາຍິ່ງເຮັດໃຫ້ເພີ່ມຄວາມທຸກຍາກ, ການບໍ່ມີວຽກເຮັດງານທຳ ແລະ ຄວາມດ້ອຍໂອກາດຂຶ້ນ ຊຶ່ງຍັງເປັນສິ່ງທີ່ກໍ່ໃຫ້ເກີດຄວາມຂັດແຍ້ງ.

*ການຍົກຍ້າຍປະຊາກອນແມ່ນບັນຫາທີ່ເຫັນໄດ້ຍາກ.*

ການຍົກຍ້າຍປະຊາກອນຢ່າງຫລວງຫລາຍ ແມ່ນເປົ້າໝາຍຍຸດທະສາດຂອງກຸ່ມຕໍ່ຕ້ານທີ່ສະແຫວງຫາເພື່ອແບ່ງແຍກປະຊາຊົນ ຫລື ທຳລາຍການຢູ່ດີກິນດີຂອງປະຊາຊົນກຸ່ມໃດໜຶ່ງ. ໃນທ້າຍປີ 2008, ຂໍ້ມູນໃນບົດລາຍງານຂອງອົງການສະຫະປະຊາຊາດແຈ້ງໃຫ້ຮູ້ວ່າມີຈຳນວນປະຊາກອນເຄື່ອນຍ້າຍປະມານ 43 ລ້ານຄົນໃນທົ່ວໂລກ, ເຖິງແມ່ນວ່າຂໍ້ມູນທີ່ແທ້ຈິງອາດຫລາຍກວ່ານີ້. ການຄາດຄະເນໃນວ່າງບໍ່ດົນມານີ້ ຊີ້ໃຫ້ເຫັນວ່າເກືອບກວ່າເຄິ່ງໜຶ່ງຂອງຊາວອົບພະຍົບ ແລະ ປະຊາຊົນທີ່ເຄື່ອນຍ້າຍໃນປະເທດ (IDPs) ແມ່ນເດັກອາຍຸຕ່ຳກ່ວາ 18 ປີ. ໃນຂະນະທີ່ກະແສຊາວອົບພະຍົບຂ້າມຊາຍແດນໄດ້ຫລຸດໜ້ອຍລົງ, ການເຄື່ອນຍ້າຍພາຍໃນປະເທດຊໍ້າພັດເພີ່ມສູງຂຶ້ນ.

ການເຄື່ອນຍ້າຍເຮັດໃຫ້ປະຊາຊົນປະເຊີນກັບຄວາມສ່ຽງຕໍ່ຄວາມດ້ອຍໂອກາດໃນການສຶກສາ. ຂໍ້ມູນຈາກການສຳຫລວດຂອງອົງການສະຫະປະຊາຊາດໄດ້ວາດພາບທີ່ບໍ່ເພິ່ງປາຖະໜາຂອງສະພາບຂອງການສຶກສາໃນຄ້າຍອົບພະຍົບ. ອັດຕາການເຂົ້າຮຽນສະເລ່ຍ ແມ່ນ 69% ສຳລັບການສຶກສາຊັ້ນປະຖົມ ແລະ ມີພຽງແຕ່ 30% ສຳລັບຊັ້ນມັດທະຍົມ. ອັດຕາສ່ວນນັກຮຽນຕໍ່ຄູແມ່ນ 50:1 ຫລື ຫລາຍກວ່ານັ້ນ ແລະ ຄູຫລາຍຄົນກໍບໍ່ໄດ້ຜ່ານການຝຶກອົບຮົມ. ໃນສູນອົບພະຍົບບາງແຫ່ງ ລວມທັງບ່ອນທີ່ຮັບເອົາຊາວອົບພະຍົບຈາກປະເທດ ໂຊມາເລຍທີ່ຢູ່ພາກເໜືອຂອງປະເທດເຄນຢາ, ພໍ່ແມ່ມີຄວາມເປັນຫ່ວງວ່າການຂາດໂອກາດທີ່ຈະໄດ້ຮັບການສຶກສາຊັ້ນມັດທະຍົມແກ່ຊາວໜຸ່ມມີໂອກາດສູງທີ່ຈະໄດ້ເຂົ້າຮັບໃຊ້ໃນ ກຸ່ມຕໍ່ຕ້ານປະກອບອາວຸດ. ອັດຕາການມີໜ້າໄປຮຽນທັງສີ່ສຳລັບປະຊາກອນເຄື່ອນຍ້າຍແມ່ນນ້ອຍທີ່ສຸດໃນບັນດາປະເທດເຊັ່ນ ສາທາລະນະລັດ ອາຟຣິກາກາງ, ປະເທດຊາດ ແລະ ສາທາລະນະລັດ ປະຊາທິປະໄຕ ຄອງໂກ.

ຊາວອົບພະຍົບປະເຊີນກັບບັນຫາຫລາຍຢ່າງທີ່ເປັນໄພຕໍ່ການສຶກສາ. ມີຫລາຍປະເທດບໍ່ອະນຸຍາດໃຫ້ຊາວອົບພະຍົບໄດ້ຮັບການສຶກສາ

**ຮູບທີ 10: ເກມການສົງຄາມ**




*ແຫລ່ງຂໍ້ມູນ: ເບິ່ງໃນບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ 2011, ໜ້າ 151*

ພາກລັດ ແລະ ການບໍລິການການສຶກສາຊັ້ນພື້ນຖານ. ພາຍໃຕ້ກົດໝາຍ ປະເທດມາເລເຊຍ ຊາວອົບພະຍົບບໍ່ຕ່າງຫຍັງກັບຄົນເຂົ້າເມືອງທີ່ຜິດກົດໝາຍ. ໃນປະເທດໄທ, ການມີ ຊາວອົບພະຍົບທີ່ຍືດເຍື້ອຍາວນານຈາກປະເທດມຽນມາ ບໍ່ມີສິດໄດ້ຮັບການສຶກສາໃນພາກລັດ (ກ່ອງ 41). ໂດຍທົ່ວໄປແລ້ວ, ຂໍ້ຈຳກັດບໍ່ໃຫ້ຊາວອົບພະຍົບມີວຽກເຮັດງານທຳເຮັດໃຫ້ເພີ່ມຄວາມທຸກຍາກຂຶ້ນ, ຊຶ່ງເຮັດໃຫ້ອະນາຄົດຂອງການສຶກສາມືດມົວລົງ.

**ຮູບພາບທີ 11: ກ້ອນທຶນໃຊ້ຈ່າຍສຳລັບການທະຫານ**

## ກ້ອນທຶນໃຊ້ຈ່າຍສຳລັບການທະຫານ

ການໃຊ້ຈ່າຍທາງການທະຫານ ທຽບໃສ່ ຊ່ອງວ່າງດ້ານການເງິນ
ສຳລັບການສຶກສາເພື່ອທຸກຄົນ




ແຫລ່ງຂໍ້ມູນ: *ເບິ່ງບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ 2011*, ໜ້າ 150.

## ກ່ອງທີ 4:ສະຖານທີ່ລີ້ໄພ ແຕ່ແມ່ນບັນຫາການສຶກສາຂອງຊາວອົບພະຍົບເຜົ່າກະຫລ່ຽງ ໃນປະເທດ ໄທ

ຄວາມຂັດແຍ່ງໄດ້ກໍ່ໃຫ້ຄົນມຽນມ້າຈຳນວນຫລວງຫລາຍເຂົ້າໄປຢູ່ໃນປະເທດເພື່ອນບ້ານ ຊຶ່ງລວມມີ ບັງກລາເທດ, ຈີນ ແລະ ໄທ. ສູນອົບພະຍົບ 9 ແຫ່ງຕາມຊາຍແດນໄທມີຊາວອົບພະຍົບ ເຫລົ່ານີ້ຫລາຍທີ່ສຸດ. ສ່ວນຫລາຍແມ່ນຊາວກະຫລ່ຽງ ແລະ ຊົນເຜົ່າສ່ວນນ້ອຍຂອງຊາວກະຫລ່ຽງ ຊຶ່ງມີຜູ້ລົງທະບຽນ 140,000 ຄົນ ເປັນຕົວແທນໃຫ້ແກ່ພົນລະເຮືອນກຸ່ມນ້ອຍທີ່ຍົກຍ້າຍເຂົ້າປະເທດ. ຫລາຍປີມາແລ້ວ ທີ່ສູນອົບພະຍົບໄດ້ພັດທະນາລະບົບການສຶກສາໃຫ້ກວ້າງຂວາງອອກ ຊຶ່ງລວມມີ ຊັ້ນອະນຸບານ, ປະຖົມ, ມັດທະຍົມ, ວິຊາຊີບ ແລະ ເປີດໂອກາດການຮຽນຮູ້ໃຫ້ແກ່ຜູ້ໃຫຍ່. ສູນອົບພະຍົບ 7 ແຫ່ງຂອງຊາວກະຫລ່ຽງມີເຄືອຂ່າຍ 70 ໂຮງຮຽນໃຫ້ບໍລິການນັກຮຽນ 34,000 ຄົນ. ການສຶກສາໃນສູນໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ໄທ ແຕ່ໄດ້ຮັບທຶນມາຈາກອົງການຊຸມຊົນ ແລະ ອົງການທີ່ບໍ່ສັງກັດລັດຖະບານ, ການກຸສົນ ແລະ ຜູ້ປົກຄອງ.

ການສຶກສາໃນສູນຊາວກະຫລ່ຽງ ສະທ້ອນໃຫ້ເຫັນພັນທະພິເສດ ແລະ ຄວາມພະຍາຍາມ ຂອງຊຸມຊົນ, ແຕ່ເປັນບັນຫາທີ່ຮ້າຍແຮງ. ການເຂົ້າຮຽນໂດຍສະເພາະໃນລະດັບມັດທະຍົມແມ່ນຍັງຕ່ຳຫລາຍ. ຄວາມບໍ່ພຽງພໍ ແລະ ຄວາມບໍ່ແນ່ນອນທາງດ້ານການເງິນ ສິ່ງຜົນສະທ້ອນເຖິງສະພາບຂາດເຂີນບາງໂຮງຮຽນ ແລະ ເງິນເດືອນຂອງຄູກໍ່ຕ່ຳ.

ການປະເມີນອັນໜຶ່ງໄດ້ວາງຄ່າໃຊ້ຈ່າຍທັງໝົດຂອງນັກຮຽນຕໍ່ຄົນຢູ່ທີ່ 44 ໂດລາ ສະຫະລັດຕໍ່ປີ ໃນປີ 2008 ຊຶ່ງມີໜ້ອຍກວ່າ 3% ຂອງລະດັບທີ່ຄິດໄລ່ໃຫ້ນັກຮຽນປະຖົມໄທ.

ບາງບັນຫາຂອງການສຶກສາໃນສູນອາດກ່ຽວໂຍງໄປເຖິງການປົກຄອງເປັນສ່ວນຫລາຍ. ຊາວອົບພະຍົບຖືກຈຳກັດອິດສະຫລະພາບໃນການເຄື່ອນຍ້າຍ ແລະ ບໍ່ອະນຸຍາດໃຫ້ເຮັດວຽກຢູ່ນອກສູນ. ບໍ່ສາມາດຈະກໍ່ສ້າງຕຶກໂຮງຮຽນຖາວອນ (ເຖິງວ່າໃນມໍ່ໆນີ້ຈະມີການປັບປຸງໃຫ້ອະນຸຍາດກໍ່ສ້າງຕຶກເຄິ່ງ ຖາວອນ ຂຶ້ນກໍ່ຕາມ). ຄູຈະຖືກຈ້າງມາສອນໃນສູນ ແລະ ສ່ວນຫລາຍຈະຂາດທັກສະທີ່ຈຳເປັນ.

ການປະຕິຮູບໃນມໍ່ໆນີ້ໄດ້ເລີ່ມແກ້ໄຂບັນຫາເຫລົ່ານີ້, ຊຶ່ງລວມມີ ຄວາມຄືບໜ້າໃນການຢັ້ງຢືນການຮຽນຮູ້ວິຊາຊີບ, ອົງການຂ້າຫລວງໃຫຍ່ສະຫະປະຊາຊາດເພື່ອຊາວອົບພະຍົບ (UNHCR) ຮຽກຮ້ອງໃຫ້ມີການຂະຫຍາຍການສຶກສາວິຊາຊີບ ແລະ ເປັນແຫລ່ງ ການຈ້າງງານ ຊຶ່ງເປັນວິທີການຫລຸດຜ່ອນ ການເພິ່ງພາອາໄສຂອງປະຊາກອນໃນສູນຕໍ່ການຊ່ວຍເຫລືອພາຍນອກ.

ແຫລ່ງຂໍ້ມູນ: *ເບິ່ງໃນກ່ອງທີ 3.4 ໃນບົດລາຍງານໂລກການຕິດຕາມ ການສຶກສາເພື່ອທຸກຄົນ 2011.*

ພ້ອມນັ້ນ ຄວາມຫຍຸ້ງຍາກໃນການໄດ້ຮັບສະຖານະພາບຂອງຊາວອົບພະຍົບ ເຮັດໃຫ້ຫລາຍຄົນໄປ ສູ່ການເຄື່ອນໄຫວໃຕ້ດິນ. ການຕັ້ງຖິ່ນຖານຢູ່ໃນຊົນນະບົດ, ການຂາດສິດທິໃນການເຮັດວຽກ ແລະ ຖືກປະຕິເສດໃນການຮັບເຂົ້າຮຽນໃນໂຮງຮຽນທ້ອງຖິ່ນເຮັດໃຫ້ເດັກນ້ອຍມີໂອກາດໜ້ອຍ ໃນການສຶກສາ. ໃນສະພາບອື່ນອີກ, ຄວາມຂັດແຍ້ງໄດ້ປະສົງຕົກທອດຂອງການປະຕິບັດທີ່ບໍ່ເທົ່າທຽມໄວ້ໃຫ້. ເດັກນ້ອຍປາແລັດສະຕິນທີ່ເຂົ້າໂຮງຮຽນ ໃນພາກຕາເວັນອອກຂອງນະຄອນຫລວງເຈລູຊາເລັມ ປະສົບ ກັບຄວາມດ້ອຍໂອກາດທາງການເງິນໃນການສຶກສາ ພ້ອມທັງມີການຂົ່ມຂືນສຳເລົາຈາກກອງກຳລັງ ຮັກສາຄວາມປອດໄພ. ຄວາມຂາດເຂີນຫ້ອງຮຽນ ແລະ ບັນຫາຄຸນນະພາບການສຶກສາໄດ້ຍູ້ດັນ ໃຫ້ເດັກນ້ອຍປາແລັດສະຕິນເຂົ້າໄປສູ່ການສຶກສາພາກເອກະຊົນ ຊຶ່ງກາຍເປັນການແບກຫາບດ້ານການເງິນ ໃຫ້ແກ່ຄອບຄົວທີ່ທຸກຍາກຢ່າງໃຫຍ່ຫລວງ.

### *ວົງຈອນປິ່ນຄືນ-ອິດທິພົນຂອງການສຶກສາຕໍ່ຄວາມຂັດແຍ້ງທີ່ຮຸນແຮງ*

ມີໜ້ອຍຄັ້ງທີ່ການສຶກສາເປັນສາເຫດພື້ນຖານຂອງຄວາມຂັດແຍ້ງ. ແຕ່ມັກຈະເປັນອົງປະກອບສຳຄັນ ໃນການເຄື່ອນໄຫວທາງດ້ານການເມືອງທີ່ຍູ້ດັນບັນດາປະເທດໃຫ້ເກີດຄວາມຮຸນແຮງ. ຄວາມຂັດແຍ້ງດ້ວຍອາວຸດພາຍໃນປະເທດມັກຈະກ່ຽວຂ້ອງກັບຄວາມຄຽດແຄ້ນ ແລະ ຄວາມບໍ່ຍຸດຕິທຳທີ່ພົວພັນເຖິງເອກະລັກ, ຄວາມເຊື່ອ, ເຊື້ອຊາດ ແລະ ເຂດແດນ. ການສຶກສາສາມາດ ສ້າງຄວາມແຕກຕ່າງໃນທຸກຂົງເຂດເຫລົ່ານີ້, ເຮັດໃຫ້ຄວາມສົມດູນທີ່ເອື້ອປະໂຫຍດຕໍ່ສັນຕິພາບ- ຫລື ຄວາມຂັດແຍ້ງ. ບົດລາຍງານນີ້ ກຳນົດກົນໄກ ຊຶ່ງໃຫ້ການສຶກສາທີ່ໜ້ອຍເກີນໄປ, ເກີດຄວາມບໍ່ເທົ່າທຽມໃນການເຂົ້າເຖິງ ການສຶກສາ ແລະ ປະເພດການສຶກສາທີ່ບໍ່ຖືກຕ້ອງ ສາມາດເຮັດໃຫ້ສັງຄົມມີທ່າອ່ຽງໄປສູ່ຄວາມຂັດແຍ້ງດ້ວຍກຳລັງອາວຸດ.

- ການໃຫ້ການສຶກສາທີ່ຈຳກັດ ຫລື ມີຄຸນນະພາບຕ່ຳ ນຳພາໄປສູ່ການວ່າງງານ ແລະ ຄວາມທຸກຍາກ. ເມື່ອຊາວໜຸ່ມຈຳນວນຫລາຍຂາດໂອກາດທາງດ້ານການສຶກສາຂັ້ນພື້ນຖານ ທີ່ມີຄຸນນະພາບແລ້ວ, ຜົນສະທ້ອນຂອງຄວາມທຸກຍາກ, ໄພວ່າງງານ ແລະ ຄວາມສິ້ນຫວັງ ສາມາດເປັນຕົ້ນເຫດໃຫ້ໄວໜຸ່ມໄປເປັນທະຫານກອງຫລອນ. "ການຂະຫຍາຍຕົວຂອງໄວໜຸ່ມ" ເພີ່ມການສ້າງຂໍ້ຕໍ່ອັນຮີບດ່ວນຈາກການສຶກສາໄປສູ່ການມີວຽກເຮັດງານທຳຄື: ຫລາຍກວ່າ 60% ຂອງປະຊາກອນໃນບາງປະເທດ ຊຶ່ງລວມມີ ປະເທດກີນີ, ໄລເບເລຍ, ໄນຈີເລຍ ແລະ ເຊລາລີອອນ ມີອາຍຸຕ່ຳກວ່າ 25 ປີ ເມື່ອທຽບກັບບັນດາປະເທດ OECD ແມ່ນມີໜ້ອຍກວ່າ 25%. ໃນປະເທດຣູວັນດາ, ໄພວ່າງງານ, ຊາຍໜຸ່ມໃນຊົນນະບົດ ທີ່ມີການສຶກສາຕ່ຳ ແມ່ນເປົ້າໝາຍການຕາມລ່າຂອງກຸ່ມຜູ້ຂ້າລ້າງເຜົ່າພັນໃນປີ 1994.

- ການມີໂອກາດໄດ້ຮັບການສຶກສາບໍ່ເທົ່າທຽມ ເຮັດໃຫ້ເກີດມີຄວາມຄຽດແຄ້ນ ແລະ ຄວາມຮູ້ສຶກບໍ່ຍຸດຕິທຳ. ຄວາມບໍ່ເທົ່າທຽມ ໃນການສຶກສາ ສົ່ງຜົນກະທົບຢ່າງໃຫຍ່ຫລວງຕໍ່ຄວາມແຕກໂຕນກັນຢູ່ໃນວົງກວ້າງ ຊຶ່ງເປັນການເພີ່ມລະດັບຄວາມສ່ຽງຕໍ່ຄວາມຂັດແຍ້ງ. ໃນປະເທດໂກດດີວົວ, ຄວາມຄຽດແຄ້ນຕໍ່ສະພາບການສຶກສາຕ່ຳໃນພື້ນທີ່ພາກເໜືອເຮັດໃຫ້ເກີດສະພາບເຄັ່ງຕຶງທາງດ້ານການເມືອງ ອັນນຳໄປສູ່ສົງຄາມກາງເມືອງໃນປີ 2002-2004. ໃນປີ 2006, ຄວາມສູງຂອງລະດັບການເຂົ້າຮຽນໃນພາກເໜືອ ແລະ ພາກຕາເວັນຕົກສຽງເໜືອມີໜ້ອຍກວ່າເຄິ່ງຂອງ ພາກໃຕ້. ການຮັບຮູ້ວ່າການສຶກສາຂອງປະຊາກອນທ້ອງຖິ່ນມີຄວາມເດືອດຮ້ອນຍ້ອນຮູບແບບທີ່ບໍ່ເປັນທຳໃນການຈັດສັນຊັບພະຍາກອນໄດ້ເປັນປັດໄຈຢູ່ເບື້ອງຫລັງຂອງຄວາມຂັດແຍ້ງໃນພື້ນທີ່ນັບແຕ່ແຂວງອາເຈະ (Aceh) ປະເທດອິນໂດເນເຊຍ ຈົນເຖິງເຂດພື້ນທີ່ສາມຫລ່ຽມ ປາກແມ່ນ້ຳໄນເຈີ ທີ່ອຸດົມໄປດ້ວຍນ້ຳມັນໃນປະເທດໄນເຈເລຍ.

- ການນຳໃຊ້ລະບົບໂຮງຮຽນເພື່ອສະໜັບສະໜູນຄວາມມີອະຄະຕິ ແລະ ການຂາດຄວາມອົດກັ້ນຕໍ່ກັນ. ໃນຫລາຍໆຄວາມຂັດແຍ້ງດ້ວຍອາວຸດ, ການສຶກສາໄດ້ຖືກໃຊ້ເປັນຕົວສົ່ງເສີມຢ່າງແຂງແຮງຕໍ່ການຄອບງຳທາງດ້ານການເມືອງ, ການເປັນຊົນຊັ້ນຕ່ຳຂອງກຸ່ມດ້ອຍໂອກາດ ແລະ ການແບ່ງແຍກເຊື້ອຊາດ. ການນຳໃຊ້ລະບົບການສຶກສາເພື່ອສົ່ງເສີມຄວາມຊັງ ແລະ ການເຄັ່ງຄັດ ດ້ານສາສະໜາ ໄດ້ປະກອບເປັນສາເຫດຂອງຄວາມຂັດແຍ້ງທີ່ຮຸນແຮງໂດຍເລີ່ມຈາກປະເທດ ຣູວັນດາ ໄປເຖິງ ປະເທດສີລັງກາ. ພ້ອມນັ້ນໃນຫລາຍປະເທດ, ໂຮງຮຽນໄດ້ກາຍເປັນຈຸດສະນອນ ຂອງຄວາມຂັດແຍ້ງທີ່ແຜ່ກວ້າງອອກກ່ຽວກັບເອກະລັກດ້ານວັດທະນະທຳ. ໃນປະເທດ ກົວເຕມາລາ, ລະບົບການສຶກສາຄ້າຍກັບວ່າເປັນພາຫະນະໃນການຄອບງຳທາງດ້ານວັດທະນະທຳ ແລະ ເປັນການປາບປາມການໃຊ້ພາສາພື້ນເມືອງ, ເຮັດໃຫ້ເພີ່ມຄວາມຄຽດແຄ້ນຫລາຍຂຶ້ນ ຊຶ່ງນຳໄປສູ່ສົງຄາມກາງເມືອງ. ຖ້າວ່າສ້າງສັນຕິພາບບົນພື້ນຖານລັດທີ່ແບ່ງແຍກ ການສຶກສາ, ລະບົບໂຮງຮຽນສາມາດເຊື່ອມຊຶມເອົາທັດສະນະຄະຕິທີ່ຜິດເຂວ ຊຶ່ງຈະເຮັດໃຫ້ສັງຄົມມີທ່າອ່ຽງ ເກີດຄວາມຂັດແຍ້ງດ້ວຍກຳລັງອາວຸດ ຄືດັ່ງທີ່ປະເທດບອດສະເນຍ ແລະ ເຮີເຊໂກວີນາ ໄດ້ປະສົບມາແລ້ວ (ກ່ອງທີ 5).

ຮູບແບບການສຶກສາທີ່ຜິດພາດສາມາດເຮັດໃຫ້ສັງຄົມມີທ່າອ່ຽງເກີດຄວາມຂັດແຍ້ງດ້ວຍອາວຸດ

### *ການຊ່ວຍເຫລືອແກ່ປະເທດໄດ້ຮັບຜົນກະທົບຈາກຄວາມຂັດແຍ້ງ*

ການຊ່ວຍເຫລືອການພັດທະນາມີບົດບາດສຳຄັນໃນປະເທດທີ່ໄດ້ຮັບຜົນກະທົບຈາກຄວາມຂັດແຍ້ງ. ມັນມີທ່າແຮງໃນການທຳລາຍວົງຈອນຊົ່ວຮ້າຍຂອງການກໍ່ສົງຄາມ ແລະ ການພັດທະນາມະນຸດໃນລະດັບຕ່ຳ ຊຶ່ງມີຫລາຍປະເທດທີ່ຖືກເລົ່າກົນ ແລະ ເພື່ອໃຫ້ການສະໜັບສະໜູນການປ່ຽນແປງເພື່ອສັນຕິພາບ ທີ່ຍືນຍາວ. ເຖິງຢ່າງໃດກໍຕາມຄວາມພະຍາຍາມຊ່ວຍເຫລືອຂອງສາກົນ ມີປະສິດທິພາບຫລຸດລົງໃນຫລາຍໆບັນຫາ.

ການບ່ຽງເບນການຊ່ວຍເຫລືອໄປສູ່ກຸ່ມປະເທດສ່ວນໜ້ອຍ ທີ່ໄດ້ກຳນົດ ເປັນບູລິມະສິດດ້ານຄວາມປອດໄພແຫ່ງຊາດ ໄດ້ນຳໄປສູ່ການປ່ອຍປະລະເລີຍບັນດາປະເທດທຸກຍາກທີ່ສຸດຂອງໂລກ. ກະແສການ

#### *ກ່ອງທີ 5: ການຄຸ້ມຄອງ ແລະ ການສຶກສາທີ່ຂາດຄວາມເປັນເອກະພາບ ໃນບອດສະເນຍ ແລະ ເຮີເຊໂກວີນາ*

ໃນບອດສະເນຍ ແລະ ເຮີເຊໂກວີນາ, ຂໍ້ຕົກລົງເດເຕີນ ປີ 1995 ພະຍາຍາມສ້າງພື້ນຖານການ ສ້າງປະເທດຜ່ານການແບ່ງຂັ້ນຄຸ້ມຄອງ ລະດັບສູງ. ຜົນຂອງການແຕກເປັນກຸ່ມນ້ອຍຂອງພະນັກງານສຶກສາ ຍິ່ງເຮັດໃຫ້ມີຄວາມຫຍຸ້ງຍາກໃນການປ່ຽນແປງເອກະລັກປະຈຳຂອງ ຄວາມມີຫລາຍຊົນເຜົ່າ. ປັດຈຸບັນ, ມີກະຊວງສຶກສາທີ່ມີປະສິດທິພາບ ແຍກກັນຢູ່ 13 ແຫ່ງ ແລະ ໂຮງຮຽນສ່ວນໃຫຍ່ຈະ ມີການແບ່ງແຍກ ໂດຍເຊື້ອຊາດ, ສາສະໜາ ແລະ ພາສາ. ການແຕກເປັນກຸ່ມເຊັ່ນນີ້ ສ້າງຄວາມເປັນຫ່ວງຢ່າງໃຫຍ່ຫລວງຕໍ່ການຄຸ້ມຄອງການສຶກສາ.

ການຂາດກະຊວງທີ່ເປັນຂອງລັດຖະບານກາງທີ່ເຂັ້ມແຂງ ເປັນສິ່ງກີດຂວາງການພັດທະນາລະບົບ ການວາງແຜນແຫ່ງຊາດ, ເປັນສິ່ງທຳລາຍຄວາມພະຍາຍາມໃນການແກ້ໄຂບັນຫາໃນດ້ານຄຸນນະພາບ ການສຶກສາ ແລະ ການປະຕິຮູບຫລັກສູດ. ການຂາດລະບົບການຈັດສັນງົບປະມານໃນຂັ້ນສູນກາງຍິ່ງປະກອບສ່ວນໃຫ້ມີຄວາມແຕກຕ່າງດ້ານຜົນສຳເລັດຂອງການຮຽນຕາມ ທີ່ຕັ້ງດ້ານພູມສາດ ຂອງນັກຮຽນ ຊຶ່ງເປັນການທຳລາຍທັດສະນະທີ່ຢາກໃຫ້ມີຄວາມສະເໝີພາບ. ບາງທີ ແລະ ກໍເປັນສິ່ງທີ່ສຳຄັນທີ່ສຸດນັ້ນ ແມ່ນການແຍກຕົວຂອງໂຮງຮຽນ ແລະ ນັກຮຽນແບບຕາຍຕົວ ບໍ່ໄດ້ຊ່ວຍໃຫ້ເດັກນ້ອຍ ພັດທະນາຄວາມຄວາມຮູ້ສຶກກ່ຽວກັບເອກະລັກຂອງການມີຫລາຍກຸ່ມຢູ່ຮ່ວມກັນຊຶ່ງແມ່ນ ສິ່ງທີ່ເຮັດໃຫ້ມີສັນຕິພາບ ແລະ ຄວາມປອດໄພແບບຍາວນານ.

ແຫລ່ງທີ່ມາ: *ເບິ່ງກ່ອງທີ 3.9 ໃນບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ 2011*

ຊ່ວຍເຫລືອດ້ານການພັດທະນາຫລັ່ງເຂົ້າສູ່ຊາວເຈັດປະເທດກຳລັງພັດທະນາທີ່ໄດ້ຮັບຜົນກະທົບຈາກ ຄວາມຂັດແຍ້ງໄດ້ເພີ່ມຂຶ້ນໃນທົດສະວັດທີ່ຜ່ານມາເຖິງ 36 ຕື້ໂດລາສະຫະລັດຕໍ່ປີ ໃນປີ 2007-2008. ເຖິງຢ່າງໃດກໍຕາມ, ອີຣັກໄດ້ຮັບຫລາຍກວ່າໜຶ່ງສ່ວນສີ່ຂອງຈຳນວນທັງໝົດ,ແລະ ເມື່ອເອົາການຊ່ວຍເຫລືອອັຟການິດສະຖານ ແລະ ອີຣັກ ເຂົ້າກັນຈະໄດ້ 38% ຂອງຈຳນວນທັງໝົດ. ອັຟການິດສະຖານ ປະເທດດຽວໄດ້ຮັບ ການຊ່ວຍເຫລືອຫລາຍກວ່າຈຳນວນທີ່ເບີກຈ່າຍໃຫ້ ສາທາລະນະ ລັດປະຊາທິປະໄຕ ກອງໂກ, ໄລເບເຣຍ ແລະ ຊູດານ ລວມເຂົ້າກັນ.

ຄວາມບໍ່ຈະແຈ້ງຂອງການແບ່ງເສັ້ນລະຫວ່າງການຊ່ວຍເຫລືອດ້ານການພັດທະນາ ແລະ ເປົ້າໝາຍນະໂຍບາຍການຕ່າງປະເທດ ແມ່ນຍັງໄກ ສຳລັບທີ່ຈະປະຕິບັດໃນວຽກງານການສຶກສາ

ການຊ່ວຍເຫລືອເຂົ້າໃນການສຶກສາຂັ້ນພື້ນຖານ ສະທ້ອນໃຫ້ເຫັນເຖິງຮູບແບບການຈັດສັນທີ່ກວ້າງຂວາງ (ຮູບທີ 12). ການໂອນເງິນ ໄປໃຫ້ປາກິດສະຖານປະເທດດຽວ ຫລາຍກວ່າສອງເທົ່າທີ່ຖືກຈັດສົ່ງໄປໃຫ້ ສປ.ຄອງໂກ ແລະ ຊູດານ. ໃນຂະນະທີ່ການຊ່ວຍເຫລືອສຳລັບການສຶກສາຂັ້ນພື້ນຖານ ໄດ້ເພີ່ມຂຶ້ນຫລາຍກວ່າຫ້າເທົ່າໃນອັຟການິດສະຖານໃນຫ້າປີທີ່ຜ່ານມາ ການຊ່ວຍເຫລືອໄດ້ຢຸດຈຶ້ງ ຫລື ເພີ່ມຂຶ້ນຊ້າກວ່າໃນບັນດາປະເທດເຊັ່ນ: ປະເທດຊາດ, ສາທາລະນະລັດອາຟຣິກາກາງ ແລະ ຫລຸດລົງ ຊ້ຳໃນປະເທດກົດດີວົວ.

ຄວາມຜັນແປຂອງການຊ່ວຍເຫລືອ ແມ່ນສິ່ງໜຶ່ງທີ່ໜ້າເປັນຫ່ວງ. ດ້ວຍລະບົບການບໍລິຫານທາງການເງິນ ທີ່ອ່ອນແອຂອງລັດ, ປະເທດກຳລັງພັດທະນາທີ່ໄດ້ຮັບຜົນກະທົບຈາກຄວາມຂັດແຍ້ງຈຳຕ້ອງມີກະແສການຊ່ວຍເຫລືອການພັດທະນາທີ່ມີການຄາດເດົາເອົາ. ແຕ່ການຊ່ວຍເຫລືອຫລັ່ງໄຫລເຂົ້າສູ່ປະເທດ ຕ່າງໆ ເຊັ່ນ: ບູຣຸນດີ, ສາທາລະນະລັດອາຟຣິກາກາງ ແລະ ຊາດ ຊຶ່ງຈັດຢູ່ໃນບັນດາ ປະເທດທີ່ມີ ລະດັບຄວາມບໍ່ແນ່ນອນສູງ. ຫລາຍປະເທດມີປະສົບການໃນການໃຫ້ຮອບວຽນການຊ່ວຍເຫລືອ ການສຶກສາເປັນສອງເທົ່າໃນສອງປີ ແລະ ຈາກນັ້ນກໍຫລຸດລົງ 50%.

ຄວາມບໍ່ຈະແຈ້ງຂອງການແບ່ງເສັ້ນລະຫວ່າງການຊ່ວຍເຫລືອດ້ານການພັດທະນາ ແລະ ເປົ້າໝາຍ ນະໂຍບາຍການຕ່າງປະເທດແມ່ນຍັງໄກສຳລັບທີ່ຈະປະຕິບັດໃນວຽກງານການສຶກສາ. ໃນຂະນະທີ່ມີເຫດຜົນທີ່ດີ ເພື່ອການເຊື່ອມໂຍງການຊ່ວຍເຫລືອເຂົ້າໃນຂອບນະໂຍບາຍທີ່ກວ້າງຂຶ້ນ ຊຶ່ງກວມວຽກງານການທູດ ແລະ ຄວາມປອດໄພ,

**ຮູບທີ 12: ການຊ່ວຍເຫລືອເຂົ້າໃນການສຶກສາຂັ້ນພື້ນຖານໄດ້ເພີ່ມຂຶ້ນໃນບາງປະເທດທີ່ໄດ້ຮັບຜົນກະທົບຈາກຄວາມຂັດແຍ້ງຫລາຍກວ່າປະເທດອື່ນ**

ການຊ່ວຍເຫລືອເຂົ້າໃນການສຶກສາຂັ້ນພື້ນຖານໃນປະເທດທີ່ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງທີ່ຖືກເລືອກ, ອັດຕາສະເລ່ຍປີ 2002-2003 ແລະ 2007-2008




*ແຫລ່ງທີ່ມາ: ເບິ່ງຮູບທີ 3.17 ໃນບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ 2011.*

ມັນກໍມີຄວາມກັງວົນວ່າເປົ້າໝາຍການພັດທະນາທີ່ຢູ່ພາຍໃຕ້ ຍຸດທະສາດທີ່ກວ້າງຂວາງກວ່າເກົ່າແລ້ວບໍ່ ເຊັ່ນ ການຊະນະ "ໃຈ ແລະ ຄວາມຄິດ" ຂອງ ປະຊາຊົນທ້ອງຖິ່ນ ຊຶ່ງການສຶກສາເປັນວຽກສຳຄັນຢ່າງຈະແຈ້ງ. ຂໍ້ມູນບັບນີ້ນັບຫລາຍກ່ຽວກັບການລຳລຽງການ ຊ່ວຍເຫລືອໂດຍທະຫານໄດ້ຈຸດສະນວນຄວາມກັງວົນເຫລົ່ານີ້. ໃນປະເທດອັຟການິດສະຖານ, ເກືອບສອງສ່ວນສາມຂອງການຊ່ວຍເຫລືອການສຶກສາຂອງສະຫະລັດອາເມລິກາ ໃນປີ 2008 ໄດ້ຖືກລຳລຽງ ໂດຍຜ່ານສິ່ງອຳນວຍຄວາມສະດວກທາງການທະຫານ. ທີມຟື້ນຟູລະດັບແຂວງ ໃນອັຟການິດສະຖານ ແລະ ອີຣັກ ປະຕິບັດງານໂດຍຜ່ານການແຍກສ່ວນລະຫວ່າງທະຫານ ແລະ ພົນລະເຮືອນ ເພື່ອລຳລຽງການຊ່ວຍເຫລືອໃນພື້ນທີ່ບໍ່ປອດໄພ. ການປະຕິບັດແບບນີ້ແມ່ນຍັງຖືກໃຊ້ຢູ່ໃນແຫລມຮອນຂອງ ອາຟຣິກາ.

ຍັງມີກໍລະນີທີ່ເຂັ້ມຂຸ້ນ ສຳລັບການເພີ່ມການຊ່ວຍເຫລືອເຂົ້າໃນປະເທດທີ່ໄດ້ຮັບຜົນສະທ້ອນຈາກຄວາມຂັດແຍ້ງ. ກໍລະນີດັ່ງກ່າວເປັນພື້ນຖານຫລັກທີ່ຈຳເປັນ ສຳລັບການກ້າວໄປສູ່ເປົ້າໝາຍສະຫັດສະວັດເພື່ອການພັດທະນາ. ຜູ້ໃຫ້ທຶນຍັງມີຄວາມສົນໃຈສ່ວນຕົວໃນການຕໍ່ສູ້ກັບຄວາມທຸກຍາກ ແລະ ຄວາມບໍ່ມີສະຖຽນລະພາບທີ່ພາໃຫ້ບັນດາປະເທດທີ່ໄດ້ຮັບຜົນກະທົບຈາກຄວາມຂັດແຍ້ງເປັນໄພຂົ່ມຂູ່ຕໍ່ສັນຕິພາບ ແລະ ຄວາມໝັ້ນຄົງໃນຂົງເຂດ ແລະ ສາກົນ. ແຕ່ມັນກໍຍັງມີອັນຕະລາຍທີ່ກ່ຽວຂ້ອງກັບວິທີການໃນການຈັດສົ່ງການຊ່ວຍເຫລືອໃນປັດຈຸບັນ. ຖ້າການຊ່ວຍເຫລືອຖືກນຳໃຊ້ ຫລື ເຫັນວ່າເປັນສ່ວນໜຶ່ງ ຂອງຍຸດທະສາດການໂຈມຕີກຸ່ມຕໍ່ຕ້ານ ຫລື ເປັນອົງປະກອບຂອງແຜນການຮັກສາຄວາມປອດໄພແຫ່ງຊາດຂອງປະເທດຜູ້ໃຫ້ທຶນ, ມັນອາດເຮັດໃຫ້ຊຸມຊົນໃນທ້ອງຖິ່ນ ແລະ ພະນັກງານ ເຮັດວຽກການ ຊ່ວຍເຫລືອ ປະເຊີນກັບຄວາມສ່ຽງສູງຂຶ້ນ. ການເພີ່ມຂຶ້ນທີ່ເປັນໜ້າວິຕົກໃນການໂຈມຕີ ພະນັກງານຊ່ວຍເຫລືອດ້ານມະນຸດສະທຳໃນປີທີ່ຜ່ານມາ ເປັນໜຶ່ງໃນຕົວຊີ້ບອກຂອງບັນຫານີ້ຄື: ສາມປີ ທີ່ຜ່ານມາ, ພະນັກງານຊ່ວຍເຫລືອຫລາຍກວ່າ 600 ຄົນຖືກຂ້າ, ບາດເຈັບສາຫັດ ຫລື ຖືກລັກພາຕົວ. ການພົວພັນໂດຍທາງກົງ ຫລື ທາງອ້ອມຂອງກອງທະຫານໃນການສ້າງຫ້ອງຮຽນ ຄ້າຍກັບວ່າເປັນການເພີ່ມຄວາມສ່ຽງຂອງການໂຈມຕີໃນໂຮງຮຽນ. ການນຳໃຊ້ຜູ້ຮັບເໝົາເອກະຊົນທີ່ກວມເອົາຄ່າໃຊ້ຈ່າຍດ້ານຄວາມປອດໄພ ແລະ ການພັດທະນາ ກໍເປັນປັດໄຈໜຶ່ງຂອງຄວາມສ່ຽງ.

ດ້ວຍການຊ່ວຍເຫລືອຂອງຜູ້ໃຫ້ທຶນທີ່ສຳຄັນ-ລວມມີສະຫະລາຊະອານາຈັກ ແລະ ສະຫະລັດອາເມລິກາ-ທີ່ມີການປະກາດເພີ່ມການຊ່ວຍເຫລືອຢ່າງຫລວງຫລາຍສຳລັບປະເທດຕ່າງໆເຊັ່ນ: ອັຟການິດສະຖານ ແລະ ປາກີດສະຖານ ມັນມີຄວາມສຳຄັນວ່າ ນະໂຍບາຍການຊ່ວຍເຫລືອດັ່ງກ່າວຕ້ອງແກ້ໄຂຫລາຍບັນຫາ ຊຶ່ງລວມເຖິງເງື່ອນໄຂການຄັດເລືອກປະເທດ, ເຫດຜົນທີ່ເຫັນເບື້ອງຫລັງຂອງການໃຫ້ຄວາມສຳຄັນທີ່ແຕກຕ່າງກັນຂອງແຕ່ລະປະເທດ, ເປົ້າໝາຍການພັດທະນາ ແລະ ກົນໄກການສົ່ງມອບການ ຊ່ວຍເຫລືອຈະຖືກນຳໃຊ້. ເງື່ອນໄຂໜຶ່ງທີ່ຈຳເປັນແມ່ນການສ້າງຂໍ້ແນະນຳການປະຕິບັດງານ ທີ່ຫ້າມການມີສ່ວນກ່ຽວຂ້ອງໂດຍກົງທາງການທະຫານໃນການກໍ່ສ້າງໂຮງຮຽນ.

## ການຂານຕອບຕໍ່ຄວາມຫລົ້ມເຫລວໃນການປ້ອງກັນ

ໃນປີ 1996, ທ່ານກະລາຊາ ມາແຊລ (Graca Machel) ໄດ້ນຳສະເໜີບົດລາຍງານກ່ຽວກັບເດັກ ແລະ ຄວາມຂັດແຍ້ງດ້ວຍກຳລັງອາວຸດຕໍ່ສະມັດຊາໃຫຍ່ຂອງອົງການສະຫະປະຊາຊາດ. ບົດລາຍງານໄດ້ປະນາມ "ການກໍ່ການຮ້າຍ ແລະ ຄວາມຮຸນແຮງທີ່ຂາດກະຕິກາ" ສ້າງຄວາມເສຍຫາຍແກ່ເດັກນ້ອຍ ແລະ ຮຽກຮ້ອງໃຫ້ປະຊາຄົມໂລກທັບມ້າງສິ່ງທີ່ເອີ້ນວ່າ " ສິ່ງທີ່ບໍ່ສາມາດທົນຕໍ່ ແລະ ຍອມຮັບໄດ້" ໃນການໂຈມຕີເດັກນ້ອຍ. ສິບຕໍ່ຈາກນັ້ນສິບຫ້າປີການກໍ່ການຮ້າຍທີ່ບໍ່ມີກະຕິກາກໍຍັງສືບຕໍ່ ແລະ ປະຊາຄົມໂລກ ຍັງສືບຕໍ່ທົນກັບການໂຈມຕີທີ່ບໍ່ສາມາດປ້ອງກັນໄດ້.




ການຮຽນໜັງສືນຳກັນຢູ່ບ້ານ ສຳລັບເດັກທີ່ດ້ອຍໂອກາດ ຊຶ່ງລວມມີ ຜູ້ລອດຈາກການຖືກຂົ່ມຂືນ ໃນໂກມາ, ສປ. ຄອງໂກ

ນັບແຕ່ມີບົດລາຍງານຂອງທ່ານມາແຊລ ກໍໄດ້ມີການປັ່ງປແປງຫລາຍຂຶ້ນ. ອົງການສະຫະປະຊາຊາດ ໄດ້ສ້າງຕັ້ງກົນໄກການຕິດຕາມ ແລະ ການລາຍງານ (MRM) ທີ່ລະບຸການລະເມີດສິດທິມະນຸດທີ່ຮ້າຍແຮງຕໍ່ເດັກ ໃນຫົກຂົງເຂດທີ່ສຳຄັນ. ຄະນະມົນຕີຄວາມໝັ້ນຄົງແຫ່ງ ສປຊ ໄດ້ຜ່ານມະຕິຫລາຍສະບັບ ທີ່ແນໃສ່ການສ້າງຄວາມເຂັ້ມແຂງໃນການປົກປ້ອງການຂົ່ມຂືນ ແລະ ການໃຊ້ຄວາມຮຸນແຮງທາງເພດອື່ນໆ ໃນປະເທດທີ່ໄດ້ຮັບຜົນກະທົບຈາກຄວາມຂັດແຍ້ງ. ແຕ່ກໍຍາກທີ່ຈະຫລີບຫລີກຂໍ້ສະຫລຸບທີ່ວ່າ ບົດບັນຍັດກ່ຽວກັບສິດທິມະນຸດ ແລະ ມະຕິຂອງຄະນະມົນຕີຄວາມໝັ້ນຄົງ ໃຫ້ການປົກປ້ອງທີ່ຈຳກັດ ໃນບ່ອນທີ່ມີຄວາມຕ້ອງການທີ່ສຸດຄື: ດ້ານຊີວິດຂອງເດັກ ແລະ ພົນລະເຮືອນທີ່ຢູ່ໃນປ້ອມດ່ານໜ້າ. ການປະສານງານທີ່ມີລະດັບຕ່ຳລະຫວ່າງອົງການຕ່າງໆຂອງ ສປຊ ແລະ ການສະໜອງຊັບພະຍາກອນທີ່ຈຳກັດເປັນສ່ວນປະກອບຂອງບັນຫາ. ພາຍໃນລະບົບກົນໄກການຕິດຕາມ ແລະ ລາຍງານ (MRM) ການລາຍງານໂດຍສະເພາະກ່ຽວກັບການໂຈມຕີໂຮງຮຽນມີຄວາມຈຳກັດຊຶ່ງມີຫລາຍເຫດການທີ່ບໍ່ຖືກລາຍງານ. ບໍ່ມີບ່ອນໃດເລີຍທີ່ມີບັນຫາກ່ຽວຂ້ອງກັບການຂົ່ມຂືນ ແລະ ໃຊ້ຄວາມຮຸນແຮງທາງເພດ. ອີງຕາມທ່ານ ມິດແຊລ ບາເຊີເລດ, ຜູ້ອຳນວຍການຝ່າຍບໍລິຫານ ແລະ ຮອງເລຂາທິການໃຫຍ່ຂອງອົງການສະຫະປະຊາຊາດຝ່າຍແມ່ຍິງ ໄດ້ກ່າວກັບຄະນະມົນຕີຄວາມໝັ້ນຄົງໃນເດືອນ ຕຸລາ ປີ 2010 ວ່າ: ກິດຈະກຳຕ່າງໆແມ່ນຂາດເປົ້າໝາຍ ແລະ ຄາດໝາຍທີ່ມີທິດທາງ ຫລື ກຳນົດເວລາທີ່ຊັດເຈນທີ່ສາມາດເລັ່ງການຈັດຕັ້ງປະຕິບັດ ແລະ ຮັບປະກັນຄວາມຮັບຜິດຊອບ', ແລະ 'ຂາດຫລັກຖານທາງດ້ານຜົນກະທົບ'.

ຜົນສະທ້ອນລວມຂອງຄວາມຫລົ້ມເຫລວເຫລົ່ານີ້ ແມ່ນການເສີມສ້າງຄວາມເຂັ້ມແຂງດ້ານວັດທະນະທຳການຍົກເວັ້ນໂທດ ຊຶ່ງກຳນົດໄວ້ໃນລະບົບການລາຍງານຂອງ ສປຊ. ບົດລາຍງານນີ້ ຮຽກຮ້ອງໃຫ້ມີການປະຕິຮູບໃນສາມດ້ານສຳຄັນ.

- ເສີມສ້າງລະບົບກົນໄກການຕິດຕາມ ແລະ ລາຍງານ (MRM). ກົນໄກການຕິດຕາມ ແລະ ການລາຍງານໄດ້ສະໜອງຂໍ້ມູນລະອຽດກ່ຽວກັບຂະໜາດ ແລະ ຂອບເຂດໃນການລະເມີດ ສິດທິມະນຸດຕໍ່ເດັກກັບການບອກຊື່ ຜູ້ກະທຳຜິດຢ່າງເນື່ອງນິດລຽນຕິດ ແລະ ລາຍງານ ເຖິງສະພາຄວາມໝັ້ນຄົງ. ທຸກໆອົງການຂອງ ສປຊ ຄວນຮ່ວມມືກັນຢ່າງໃກ້ຊິດຫລາຍຂຶ້ນໃນການເກັບກຳ, ຮວບຮວມ ແລະ ການລາຍງານການກວດສອບຫລັກຖານ. ໃນປະເທດທີ່ບໍ່ສາມາດດຳເນີນແຜນປະຕິບັດແຫ່ງຊາດ ເພື່ອຢຸຕິການລະເມີດສິດທິມະນຸດ, ມາດຕະການລົງໂທດຄວນໃຊ້ຕາມທີ່ຕັ້ງເປົ້າໝາຍໄວ້ ແລະ ເລືອກເປັນທາງເລືອກສຸດທ້າຍ. ໃນຂົງເຂດທີ່ມີ ລະດັບຂອງການລະເມີດສິດທິມະນຸດອາດຖືເປັນອາດຊະຍາກຳສົງຄາມ ຫລື ອາດຊະຍາກຳ ຕໍ່ມະນຸດຊາດນັ້ນ ຄະນະມົນຕີຄວາມໝັ້ນຄົງແຫ່ງສະຫະປະຊາຊາດຄວນຈະເອົາໃຈໃສ່ກວ່າເກົ່າ ເພື່ອສະເໜີຄະດີໄປຍັງສານອາຍາສາກົນ (ICC).

- ສ້າງຄວາມເຂັ້ມແຂງໃນການລາຍງານກ່ຽວກັບການສຶກສາ. ການລາຍງານສາກົນວ່າດ້ວຍການ ລະເມີດສິດທິມະນຸດທີ່ກ່ຽວພັນກັບການສຶກສາ ຍັງບໍ່ໄດ້ຮັບການພັດທະນາດີເທື່ອ. ສິ່ງທີ່ຕ້ອງການແມ່ນຄວາມມີການຈັດຕັ້ງ ແລະ ລະບົບການລາຍງານລະອຽດກ່ຽວກັບຂໍ້ມູນ ໃນການໂຈມຕີເດັກນ້ອຍນັກຮຽນ, ໂຮງຮຽນ ແລະ ຄູ, ແລະ ຄວນຈະຂະຫຍາຍໄປກວມເອົາ ສະຖາບັນເຕັກນິກ, ວິຊາຊີບ ແລະ ມະຫາວິທະຍາໄລ. ໃນຖານະເປັນໜ່ວຍງານຫລັກຂອງ ສປຊ ດ້ານການສຶກສາ, ຄວນມອບພາລະໃຫ້ອົງການອຸຍແນັດສະໂກ ແລະ ແຫລ່ງທຶນເພື່ອນຳພາການພັດທະນາລະບົບການລາຍງານໃຫ້ແຂງແຮງ.

ຄວນມອບພາລະໃຫ້ອົງການອຸຍແນດສະໂກ ແລະ ແຫລ່ງທຶນເພື່ອນຳພາການພັດທະນາລະບົບລາຍງານ

- ປະຕິບັດຢ່າງເດັດດ່ຽວໃນການຕ້ານການຂົ່ມຂືນ ແລະ ການໃຊ້ຄວາມຮຸນແຮງທາງເພດ ໃນລະຫວ່າງຄວາມຂັດແຍ້ງ. ໃນຂັ້ນທຳອິດ, ສະພາຄວາມໝັ້ນຄົງຄວນຈະສ້າງຄະນະກຳມະທິການສາກົນຕ້ານການຂົ່ມຂືນ ແລະ ການໃຊ້ຄວາມຮຸນແຮງທາງເພດເພື່ອບັນທຶກບັນຫາ ໃນປະເທດທີ່ໄດ້ຮັບຜົນກະທົບຈາກຄວາມຂັດແຍ້ງ, ກຳນົດຜູ້ຮັບຜິດຊອບ ແລະ ລາຍງານໃຫ້ສະພາຄວາມໝັ້ນຄົງຊາບ. ຄະນະກຳມາທິການຄວນຈະນຳພາໂດຍຜູ້ອຳນວຍການບໍລິຫານແມ່ຍິງ ຂອງ ສປຊ. ຂໍ້ມູນຂອງຄະນະກຳມາການຈະລວມເອົາການກວດສອບລະອຽດໃນປະເທດທີ່ກຳນົດໃນບົດລາຍງານຂອງ ສປຊ ວ່າເປັນຈຸດໃຈກາງຂອງການລະເວັ້ນໂທດ. ສານອາຍາສາກົນຄວນຈະມີສ່ວນຮ່ວມໃນການດຳເນີນງານກັບຄະນະກຳມາ

ທີການຈາກການເລີ່ມຕົ້ນເປັນທີ່ປຶກສາ. ສານອາຍາສາກົນຄວນປະເມີນສະເພາະຄວາມຮັບຜິດຊອບຂອງຜູ້ກະທຳໃນປະເທດທີ່ອາດກ່ຽວຂ້ອງກັບອາຊະຍາກຳສົງຄາມ ແລະ ການກໍ່ອາຊະຍາກຳມະນຸດຊາດ ຊຶ່ງບໍ່ພຽງແຕ່ອາໄສອຳນາດຕາມບົດບາດຂອງພວກເຂົາເປັນຜູ້ກະທຳຜິດ ຫລື ຮ່ວມກະທຳຜິດໄດ້, ແຕ່ມີຄວາມຫລົ້ມເຫລວໃນການປະຕິບັດພາລະກິດຕາມຄວາມຮັບຜິດຊອບໃນການປົກປ້ອງພົນລະເຮືອນ. ໃນຂະນະທີ່ ຄະນະກຳມາທິການທີ່ຖືກສະເໜີຈະໄດ້ລາຍງານເຖິງສະພາຄວາມໝັ້ນຄົງ, ຫລັກຖານຕ້ອງສົ່ງໄປທີ່ສານອາຍາສາກົນ ຊຶ່ງຈະປະເມີນຄະດີສຳລັບການລົງໂທດ.

- ສະໜັບສະໜູນແຜນການແຫ່ງຊາດເພື່ອກຳຈັດການລະເມີດສິດທິມະນຸດ. ຜູ້ໃຫ້ທຶນຄວນຈະພະຍາຍາມເພີ່ມການສະໜັບສະໜູນແຜນການ ແລະ ຍຸດທະສາດແຫ່ງຊາດ ທີ່ແນໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ການປົກຄອງດ້ວຍກົດໝາຍ. ແຜນການ ແລະ ຍຸດທະສາດດັ່ງກ່າວ ຕ້ອງລວມເຖິງກຳນົດເວລາເປົ້າໝາຍທີ່ຊັດເຈນສຳລັບການປົກປ້ອງ, ການປ້ອງກັນ ແລະ ການລົງໂທດ. ຂໍ້ລິເລີ່ມທີ່ເປັນໜ້າເຊື່ອຖືກົດໝາຍສາກົນວ່າດ້ວຍການຕ້ານການໃຊ້ຄວາມຮຸນແຮງຕໍ່ກັບແມ່ຍິງ ທີ່ໄດ້ຖືກນຳສະເໜີໃນລັດຖະສະພາຂອງສະຫະລັດອາເມລິກາ ຊຶ່ງມອບໝາຍໃຫ້ກະຊວງການຕ່າງປະເທດນຳໃຊ້ແຜນການຫລຸດຜ່ອນຄວາມຮຸນແຮງທາງເພດ ໃຫ້ໄດ້ເຖິງຊາວປະເທດ.

ໃນປີ 2009, ການຊ່ວຍເຫລືອດ້ານມະນຸດສະທຳສຳລັບການສຶກສາມີມູນຄ່າ ປະມານ 2% ຂອງການຊ່ວຍເຫລືອດ້ານມະນຸດສະທຳທັງໝົດ

## ຄວາມຫລົ້ມເຫລວຂອງການສະໜອງ – ການແກ້ໄຂລະບົບການຊ່ວຍເຫລືອດ້ານມະນຸດສະທຳ

ການຊ່ວຍເຫລືອດ້ານມະນຸດສະທຳ ມີຈຸດປະສົງເພື່ອຊ່ວຍຊີວິດຄົນ, ຕອບສະໜອງຄວາມຕ້ອງການຂັ້ນພື້ນຖານ ແລະ ຟື້ນຟູກຽດສັກສີ. ເພື່ອສຳເລັດພາລະບົດບາດເຫລົ່ານີ້, ກໍຄວນໃຫ້ເສັ້ນທາງຊີວິດດ້ານການສຶກສາແກ່ເດັກນ້ອຍທີ່ອາໄສຢູ່ໃນພື້ນທີ່ໄດ້ຮັບຜົນກະທົບຈາກຄວາມຂັດແຍ້ງ. ສາມສ່ວນສີ່ຂອງການຊ່ວຍເຫລືອດ້ານມະນຸດສະທຳໄປເຖິງປະເທດທີ່ໄດ້ຮັບຜົນກະທົບຈາກຄວາມຂັດແຍ້ງ, ແຕ່ການຊ່ວຍເຫລືອສ່ວນໜ້ອຍໄດ້ຖືກສົ່ງເຂົ້າໄປໃຫ້ການສຶກສາໂດຍກົງ, ສ່ວນໜຶ່ງແມ່ນຍ້ອນພະນັກງານດ້ານມະນຸດສະທຳຫລາຍໆຄົນບໍ່ເຫັນວ່າການສຶກສາເປັນການ "ຊ່ວຍຊີວິດ". ຜົນຂອງມັນກໍແມ່ນຊຸມຊົນທີ່ດີ້ນຮົນຕໍ່ສູ້ກັບສິ່ງຜິດປົກກະຕິດັ່ງກ່າວເພື່ອໃຫ້ມີໂອກາດດ້ານການສຶກສາເປັນຜູ້ໄດ້ຮັບການສະໜັບສະໜູນພຽງແຕ່ໜ້ອຍດຽວ. ປະຊາກອນ ທີ່ຖືກຍົກຍ້າຍກໍຍັງປະເຊີນກັບຄວາມຫຍຸ້ງຍາກທີ່ໜັກໜ່ວງໃນການສຶກສາ.

ການສຶກສາ ກໍມີບັນຫາຄ້າຍກັບລະບົບການຊ່ວຍເຫລືອດ້ານມະນຸດສະທຳ ທີ່ບໍ່ມີທຶນພຽງພໍ, ບໍ່ສາມາດຄາດເດົາ ແລະ ຄຸ້ມຄອງໂດຍວິທີການກຳນົດເວລາສັ້ນໆ ຊຶ່ງເດືອດຮ້ອນຈາກຄວາມດ້ອຍໂອກາດສອງເທົ່າຄື: ການສຶກສາຂຶ້ນກັບສ່ວນແບ່ງນ້ອຍໆ ໜຶ່ງຂອງການຮ້ອງຂໍການຊ່ວຍດ້ານມະນຸດສະທຳ ແລະ ກໍແມ່ນສ່ວນນ້ອຍຂອງການຮ້ອງຂໍດ້ານມະນຸດສະທຳທີ່ໄດ້ຮັບທຶນສະໜັບສະໜູນ. ການປະເມີນບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນທີ່ດີທີ່ສຸດແມ່ນໃນປີ 2009 ຊຶ່ງການຊ່ວຍເຫລືອດ້ານມະນຸດສະທຳສຳລັບການສຶກສາລວມມີ 149 ລ້ານໂດລາສະຫະລັດ-ປະມານ 2% ຂອງການຊ່ວຍເຫລືອດ້ານມະນຸດສະທຳທັງໝົດ(ຮູບທີ 13). ມີພຽງໜຶ່ງສ່ວນສາມຂອງການຂໍຄວາມຊ່ວຍເຫລືອເຂົ້າໃນການສຶກສາໄດ້ຮັບທຶນ. ການຂາດທຶນທີ່ມີລັກສະນະຊ້ຳເຮື້ອທີ່ຢູ່ເບື້ອງຫລັງຂອງຂໍ້ມູນເຫລົ່ານີ້ ໄດ້ເຮັດໃຫ້ເດັກນ້ອຍໃນພື້ນທີ່ຄວາມຂັດແຍ້ງ ແລະ ປະຊາກອນພັດຖິ່ນບໍ່ໄດ້ເຂົ້າໂຮງຮຽນ.

ຄວາມຂາດເຂີນ ໃນການຂໍທຶນສຳລັບການສຶກສາເປັນພຽງສ່ວນໜຶ່ງຂອງບັນຫາ. ການຂໍການຊ່ວຍເຫລືອເອງປະກົດວ່າບໍ່ໄດ້ຕິດພັນກັບການປະເມີນຄວາມຕ້ອງການທີ່ໜ້າເຊື່ອຖືໃນສ່ວນຂອງປະຊາກອນທີ່ຖືກຜົນກະທົບ. ໃນປະເທດຊາດ, ການຮຽກຮ້ອງການຊ່ວຍເຫລືອ ດ້ານມະນຸດສະທຳສຳລັບການສຶກສາ ປີ 2010 ເປັນຈຳນວນເງິນພຽງແຕ່ 12 ລ້ານໂດລາສະຫະລັດ ສຳລັບປະເທດໜຶ່ງທີ່ມີຜູ້ຍ້າຍຖິ່ນ (IDPs) 170,000 ຄົນ ແລະ ຊາວອົບພະຍົບ 300,000 ຄົນ ຊຶ່ງອີງ ຕາມການ

**ຮູບທີ 13: ຄວາມດ້ອຍໂອກາດສອງເທົ່າຂອງການສຶກສາໃນການຊ່ວຍເຫລືອດ້ານມະນຸດສະທຳ: ສ່ວນແບ່ງນ້ອຍໆຂອງການຂໍຄວາມຊ່ວຍເຫລືອ ແລະ ສ່ວນນ້ອຍສຸດຂອງການຮ້ອງຂໍໄດ້ຮັບທຶນສະໜັບສະໜູນ.**

*ທຶນທີ່ໄດ້ຮັບທຽບກັບຈຳນວນການຂໍຄວາມຊ່ວຍເຫລືອຕໍ່ກັບຂະແໜງ,*




ແຫລ່ງທີ່ມາ: *ເບິ່ງຮູບທີ 4.4 ໃນບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ 2011.*

ລາຍງານມີອັດຕາການເຂົ້າໂຮງຮຽນສຳລັບເດັກນ້ອຍຍ້າຍ ຖິ່ນຕໍ່າກວ່າ 40%. ການຂໍຄວາມຊ່ວຍເຫລືອດ້ານມະນຸດສະທຳສຳລັບການສຶກສາ ໃນ ສປ.ກອງໂກ ມີມູນຄ່າທັງໝົດພຽງ 25 ລ້ານໂດລາສະຫະລັດ (ໃນນັ້ນມີພຽງ 15% ໄດ້ຖືກສົ່ງໃຫ້ແລ້ວໃນກາງປີ 2010). ຈຳນວນນີ້ ແມ່ນສຳລັບປະເທດທີ່ມີປະຊາກອນຍ້າຍຖິ່ນເກີນ 2 ລ້ານຄົນ ແລະ ສອງສ່ວນສາມຂອງເດັກນ້ອຍໃນບາງພື້ນທີ່ໄດ້ຮັບຜົນກະທົບຈາກ ຄວາມຂັດແຍ້ງບໍ່ໄດ້ເຂົ້າໂຮງຮຽນ.

ຄວາມບໍ່ແນ່ນອນດ້ານງົບປະມານປະຈຳປີເປັນສ່ວນປະກອບຂອງ ບັນຫາການເງິນການສຶກສາໃນກໍລະນີສຸກເສີນ. ອັນນີ້ແມ່ນຄວາມເປັນ ຈິງໃນສະພາບການທີ່ມີການຍ້າຍຖິ່ນໄລຍະຍາວ. ໃນປະເທດເຄນຢາ, ອົງການຂ້າຫລວງໃຫຍ່ເພື່ອຊາວອົບພະຍົບຂອງສະຫະປະຊາຊາດ (UNHCR) ແລະ ໜ່ວຍງານອື່ນໆ ບໍ່ສາມາດເລີ່ມດຳເນີນການວາງ ແຜນການສຶກສາແບບຫລາຍປີສຳລັບເພີ່ມຊາວອົບພະຍົບຈາກໂຊ ມາລີ ທີ່ນັບມື້ນັບຫລາຍຂຶ້ນ (ກ່ອງທີ 6). ພ້ອມນັ້ນ, ໃນ ສປ. ກອງໂກ, ໂຮງຮຽນທີ່ໃຫ້ບໍລິການເດັກນ້ອຍຍ້າຍຖິ່ນຖືກຂົ່ມຂູ່ດ້ວຍການສັ່ງໃຫ້ ປິດຍ້ອນຜູ້ໃຫ້ທຶນໄດ້ປ່ຽນແປງບູລິມະສິດ ແລະ ທຶນໄລຍະສັ້ນ.

ການຍ້າຍຖິ່ນດ້ວຍການບັງຄັບ ເປັນການຂົ່ມຂູ່ການສຶກສາໂດຍກົງ ທັງ ສຳລັບຜູ້ອົບພະຍົບ ແລະ ຍ້າຍຖິ່ນ IDPs. ຜູ້ອົບພະຍົບມີສິດຕາມກົດ ໝາຍໃນການໄດ້ຮັບການສຶກສາຂັ້ນພື້ນຖານ. ໃນທາງປະຕິບັດ, ສິດ ເຫລົ່ານັ້ນແມ່ນຍາກທີ່ຈະທວງຄືນ. ຫລາຍປະເທດໄດ້ປະຕິບັດຕໍ່ຊາວ ອົບພະຍົບຄືກັບຄົນທີ່ເຂົ້າເມືອງຜິດກົດໝາຍ ຊຶ່ງສາມາດຖອນພວກ ເຂົາອອກຈາກການປົກປ້ອງຂອງສາກົນໄດ້ຢ່າງມີຜົນ. ບາງປະເທດໃຫ້ ການຊ່ວຍເຫລືອຊາວອົບພະຍົບໃນລະດັບສູງ ຊຶ່ງເຮັດໃຫ້ລະບົບການ ສຶກສາພາຍໃນປະເທດຢູ່ພາຍໃຕ້ຄວາມເຄັ່ງຄຽດອັນໃຫຍ່ຫລວງ. ຕົວ ຢ່າງໜຶ່ງແມ່ນ ປະເທດຈໍແດນ ທີ່ອະນຸຍາດໃຫ້ເດັກນ້ອຍອົບພະຍົບ ຈາກອີຣັກ ນຳໃຊ້ລະບົບການສຶກສາຂອງລັດ. (ກ່ອງທີ 7).

## ກ່ອງທີ 6: ການແກ້ໄຂການເພີ່ມຂຶ້ນຂອງຊາວອົບພະຍົບ - ບົດຮຽນຈາກເມືອງດາບາບໃນປະເທດເຄນຢາ

ສູນອົບພະຍົບທີ່ສະຫລັບຊັບຊ້ອນໃນເມືອງດາບາບຢູ່ພາກຕາເວັນ ອອກສ່ຽງເໜືອຂອງປະເທດເຄນຢາເປັນສູນໜຶ່ງທີ່ໃຫຍ່ທີ່ສຸດໃນໂລກ. ສູນດັ່ງກ່າວເປັນບ່ອນພັກອາໄສຂອງຊາວໂຊມາລີ 250,000 ທີ່ຫລົບໜີ ຈາກຄວາມຂັດແຍ້ງທີ່ຄຸກຄາມປະເທດຂອງພວກເຂົາເຈົ້າໃນຕະຫລອດ ຊາວປີຜ່ານມາ. ພົນລະເມືອງຂອງເມືອງດາບາບມີຫລາຍກວ່າສອງເທົ່າ ໃນໄລຍະສີ່ປີ. ລະບົບການສຶກສາທີ່ຮອງຮັບເດັກນ້ອຍຈຳນວນໜ້ອຍກວ່າ 30.000 ຄົນໃນປີ 2005 ຂະນະນີ້ພະຍາຍາມໃຫ້ຮອງຮັບໄດ້ຫລາຍກວ່າ 60.000 ຄົນ. ຈຳນວນສະເລ່ຍຂອງຈຳນວນນັກຮຽນຕໍ່ຫ້ອງຮຽນ ເພີ່ມຂຶ້ນຈາກ 82 ຫາ 113 ຄົນ - ແລະບາງໂຮງຮຽນໄດ້ອອກ ແບບເພື່ອຮອງຮັບເດັກນ້ອຍຈຳນວນໜ້ອຍກວ່າ 1.000 ຄົນ ດຽວນີ້ຮອງຮັບໄດ້ຫລາຍກວ່າ 3.000 ຄົນ. ໃນຂະນະດຽວກັນຊັດສ່ວນ ຂອງເດັກນ້ອຍໃນເກນ ອາຍຸປະຖົມສຶກສາເຂົ້າໂຮງຮຽນຫລຸດຈາກເກືອບ 100% ລົງໜ້ອຍກວ່າ 50% ໃນປີ 2010. ໃນຂະນະທີ່ຄວາມຕ້ອງການ ດ້ານການສຶກສາສູງຂຶ້ນ, ການເງິນມີຄວາມເດືອດຮ້ອນຈາກການ ຂາດເຂີນທຶນຢ່າງຕໍ່ເນື່ອງ ແລະ ບໍ່ມີຄວາມແນ່ນອນໃນອະນາຄົດ. ທັງອົງການຂ້າຫລວງໃຫຍ່ສະຫະປະຊາຊາດເພື່ອຊາວອົບພະຍົບ ແລະ ອົງການທີ່ບໍ່ສັງກັດລັດຖະບານມີຄວາມຮັບຜິດຊອບສະໜອງການສຶກສາ ທີ່ປະຕິບັດຕາມວົງຈອນການເງິນປະຈຳປີ. ອົງການຂ້າຫລວງໃຫຍ່ສະຫະ ປະຊາຊາດເພື່ອຊາວອົບພະຍົບບໍ່ສາມາດໃຫ້ທຶນໄດ້ຕາມຈຳນວນທີ່ຂໍ ດັ່ງນັ້ນອົງການທີ່ບໍ່ສັງກັດລັດຖະບານຈຶ່ງຫັນໄປສູ່ແຫລ່ງທຶນອື່ນ. ເພື່ອ ສາມາດຍົກການສຶກສາໃຫ້ສູງຂຶ້ນແບບຍືນຍົງຢູ່ໃນສູນອົບພະຍົບ, ນັກວາງແຜນຕ້ອງການຄຳໝັ້ນສັນຍາການຊ່ວຍເຫລືອດ້ານການເງິນຂອງ ຜູ້ໃຫ້ທຶນແບບຫລາຍປີ, ໂດຍໃຫ້ມີຂໍ້ຜູກມັດໃນສະພາບເງື່ອນໄຂທີ່ມີການ ປ່ຽນແປງ.

*ແຫລ່ງຂໍ້ມູນ: ເບິ່ງກ່ອງທີ 4.5 ໃນບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ 2011*

## ກ່ອງທີ 7: ການສ້າງຊີວິດໃໝ່ຂອງຊາວອົບພະຍົບອີຣັກ ໃນປະເທດຈໍແດນ

ອັບດູ-ຣາມານ ອາຍຸ 15 ປີ ໃຫ້ການກ່ຽວກັບສະພາບຂອງເດັກນ້ອຍອີຣັກໃນ ການປະເຊີນໜ້າກັບຄວາມທຸກຍາກ ແລະ ໂອກາດ ທີ່ສ້າງຂຶ້ນໂດຍການສົມທົບ ລະຫວ່າງພັນທະຂອງລັດຖະບານ ແລະ ນະວັດຕະກຳຂອງອົງການທີ່ບໍ່ສັງກັດ ລັດຖະບານ. ການໜີອອກມາຈາກຄວາມຮຸນແຮງກຸ່ມສາສະໜາ ໃນອີຣັກນັ້ນ ເຮັດໃຫ້ ອັບດູ-ຣາມານ ແລະ ຄອບຄົວຂອງລາວສາມາດສ້າງຊີວິດໃໝ່ໃນຈໍ ແດນ. ເຖິງວ່າຈະຂາດໂຮງຮຽນເປັນເວລາສອງປີກໍຕາມ, ປັດຈຸບັນ ລາວເປັນ ໜຶ່ງໃນນັກຮຽນ ຂອງສູນການສຶກສານອກໂຮງຮຽນ 39 ແຫ່ງ ຊຶ່ງດຳເນີນການ ໂດຍກະຊວງສຶກສາທິການ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານແຄດສະໂຄບ (Questscope). ໂຮງຮຽນໄດ້ສະໜອງການຮຽນເລັ່ງລັດແປດເດືອນ 3 ຫລັກສູດ ຊຶ່ງສາມາດເລັ່ງນັກຮຽນຈາກຊັ້ນປະຖົມປີທີ 1 ເຖິງ ປີທີ 10 ຈົບພາຍໃນສອງປີ. ໃບຢັ້ງຢືນສາມາດໃຊ້ເຂົ້າໃນການຝຶກອົບຮົມວິຊາຊີບ ຫລື ຊັ້ນມັດທະຍົມ. ນັກຮຽນ ແຄດສຄົບສ່ວນໃຫຍ່ເປັນຄົນຈໍແດນທີ່ອອກຈາກໂຮງຮຽນ, ແຕ່ສູນກໍຍັງສະໜອງ ໃຫ້ຄົນອີຣັກໄດ້ເຂົ້າຮຽນປະມານ 1,000 ຄົນ. ສູນດັ່ງກ່າວ ໄດ້ຮັບຄວາມສຳເລັດ ຢ່າງແຂງແຮງ ຊຶ່ງມີນັກຮຽນທີ່ສຳເລັດຄົບຫລັກສູດການສຶກສາ ປະມານ 75%.

ເຖິງແມ່ນວ່າຄອບຄົວຂອງ ອັບດູ-ຣາມານຈະທຸກຍາກ, ແຕ່ເງິນທຶນນ້ອຍໆ ຈາກຂ້າຫລວງໃຫຍ່ເພື່ອຊາວອົບພະຍົບແຫ່ງສະຫະປະຊາຊາດ (UNHCR) ສາມາດຊ່ວຍຄ່າໃຊ້ຈ່າຍໃນການເດີນທາງໄປໂຮງຮຽນ ສ່ວນນະໂຍບາຍຂອງ ລັດຖະບານຈໍແດນສະໜອງການສຶກສາແບບບໍ່ໄດ້ເສຍເງິນ. ເສັ້ນທາງກັບຄືນສູ່ ການສຶກສາຂອງອັບດູ-ຣາມານໄດ້ພົບຄວາມຫຍຸ້ງຍາກ. ລາວຍັງມີບາດແຜ ແລະ ຄວາມຊົງຈຳທີ່ເປັນໜ້າຢ້ານກົວຈາກອີຣັກ. ແຕ່ລາວມີພະລັງ, ຄວາມໄຝ່ຝັນ ແລະ ຄວາມຮູ້ສຶກໝັ້ນໃຈ ຊຶ່ງອອກມາຈາກປະສົບການໃນໂຮງຮຽນຂອງລາວ.

*ແຫລ່ງຂໍ້ມູນ : ເບິ່ງກ່ອງທີ 4.9 ໃນບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ 2011.*



ເປັນກຽດແຕ້ມໂດຍ ແມັກແວວ ໂອຈູກາ (Maxwell Ojuka) ຂອງຂວັນ ຈາກແມ່ນໍ້າສີຟ້າ. ທັດສະນະຂອງເດັກ ກ່ຽວກັບຄວາມ ຂັດແຍ້ງ ທາງພາກເໜືອຂອງອູການດາ ລະຫວາງ ລັດຖະບານ ແລະ ກຳລັງທະຫານຕໍ່ຕານຊຸມນາງ.



© Sven Torfinn/Panos

ການເປີດໄປສູ່ໂລກ :
ອາຄານໂຮງຮຽນໃນພາກຕາເວັນອອກຂອງ ປະເທດຊາດ

**ວິງຄະນະຍາດການຊ່ວຍເຫລືອດ້ານມະນຸດສະທຳຈຳເປັນຕ້ອງທົບທວນສະຖານທີ່ການສຶກສາ ໃນວະລະຂອງເຂົາເຈົ້າ**

ຜູ້ຍ້າຍຖິ່ນ (IDPs) ມີສິດໃນການຄຸ້ມຄອງຢ່າງເປັນທາງການໜ້ອຍກວ່າຊາວອົບພະຍົບ. ບໍ່ມີໜ່ວຍງານ ສປຊ ໃດທີ່ຖືກມອບໝາຍໂດຍກົງໃນການຄ້ຳປະກັນຜົນປະໂຫຍດລ່ວງໜ້າ ແລະ ບໍ່ຄ່ອຍປະກົດໃຫ້ເຫັນໃນແຜນການແຫ່ງຊາດ ແລະ ຍຸດທະສາດຂອງຜູ້ໃຫ້ທຶນ. ແຕ່ກໍມີມາດຕະການໃນການປະຕິບັດທີ່ສາມາດຮັບຮອງເອົາເປີດປະຕູໄປສູ່ການສຶກສາສຳລັບຜູ້ຍ້າຍຖິ່ນ IDPs. ໃນໂຄລົມເບຍ, ກົດໝາຍວ່າດ້ວຍການຍ້າຍຖິ່ນຖານ ພາຍໃນປະເທດ ແລະ ການຕັດສິນ ໂດຍສານລັດຖະທຳມະນູນ ໄດ້ເພີ່ມສິດທິແກ່ຜູ້ຍ້າຍຖິ່ນໃນການໄດ້ຮັບການສຶກສາ. ສົນທິສັນຍາສຳລັບການປົກປ້ອງ ແລະ ຊ່ວຍເຫລືອຜູ້ຍ້າຍຖິ່ນພາຍໃນອາຟຣິກາ ທີ່ຖືກຮັບຮອງໃນກອງປະຊຸມສຸດຍອດສະຫະພາບອາຟຣິກາໃນປີ 2009 ທີ່ກຳປາລາ ປະເທດອູການດາໄດ້ສະໜອງການປົກປ້ອງດ້ານນິຕິກຳທີ່ເຂັ້ມແຂງສຳລັບການສຶກສາຂອງຜູ້ຍ້າຍຖິ່ນ. ສິ່ງນີ້ໄດ້ເປັນແບບຢ່າງທີ່ສາມາດຈະນຳໄປໃຊ້ໃນພາກພື້ນອື່ນ ເຖິງວ່າຈະມີແຕ່ລັດຖະບານສອງປະເທດໃນອາຟຣິກາທີ່ໃຫ້ສັດຕະຍາບັນສົນທິສັນຍາຈົນຮອດດຽວນີ້.

ບົດລາຍງານນີ້ ກຳນົດວາລະ ເພື່ອປັບປຸງຂໍ້ກຳນົດການສຶກສາແກ່ຜູ້ທີ່ຕິດຄ້າງ ຫລື ຍ້າຍຖິ່ນຈາກຄວາມຂັດແຍ່ງດ້ວຍອາວຸດ ຊຶ່ງມີບັນດາອົງປະກອບທີ່ສຳຄັນຄື :

- ຫັນປ່ຽນຄວາມຄິດດ້ານມະນຸດສະທຳ. ວົງຄະນະຍາດການຊ່ວຍເຫລືອດ້ານມະນຸດສະທຳ ຈຳເປັນຕ້ອງທົບທວນສະຖານທີ່ການສຶກສາໃນວາລະຂອງເຂົາເຈົ້າ. ທຸກໆວາລະທີ່ພົວພັນເຖິງຄູ່ຮ່ວມມືໃນການສຶກສາເພື່ອທຸກຄົນຕ້ອງເນັ້ນບູລິມະສິດສຳຄັນທີ່ສອດຄ່ອງກັບການສຶກສາໃນການຮ້ອງຂໍດ້ານງົບປະມານ ແລະ ການຈັດສັນງົບປະມານ.

- ເພີ່ມການເງິນເຂົ້າໄປໃສ່ຄວາມຕ້ອງການ. ຂອບວຽກການເງິນທີ່ກວ້າງອອກ ແລະ ສາມາດປັບປ່ຽນໄດ້ ເປັນສິ່ງຈຳເປັນສຳລັບການຊ່ວຍເຫລືອດ້ານມະນຸດສະທຳ. ການເພີ່ມການເງິນສຳລັບ ກອງທຶນລວມ ສາມາດນຳໃຊ້ເພື່ອຕອບສະໜອງຄວາມຂາດເຂີນລະຫວ່າງການຮຽກຮ້ອງ ທາງການເງິນ ແລະ ການຈັດສັນການຊ່ວຍເຫລືອໃນການສຶກສາ. ພວກເຂົາຍັງສາມາດສະໜອງກະແສເງິນທຶນທີ່ຄາດໄວ້ໄປຍັງປະເທດທີ່ເກີດ "ສຸກເສີນທີ່ຖືກລືມ" ແລະ ຂະແໜງທີ່ຖືກລືມເຊັ່ນຂະແໜງການສຶກສາ. ບົດລາຍງານນີ້ແນະນຳວ່າກົນໄກກອງທຶນລວມແບບຫລາຍຝ່າຍເຊັ່ນວ່າ ກອງທຶນຊ່ວຍເຫລືອສຸກເສີນສູນກາງແລະ ກອງທຶນຊ່ວຍເຫລືອຮ່ວມກັນດ້ານມະນຸດສະທຳຄວນຈະເພີ່ມຂະໜາດລະດັບການເງິນປະຈຳປີ ຈາກທີ່ມີໃນປັດຈຸບັນປະມານ 730 ລ້ານໂດລາສະຫະລັດ ຫາ ປະມານ 2 ຕື້ໂດລາສະຫະລັດ.

- ດຳເນີນການປະເມີນຄວາມໜ້າເຊື່ອຖື. ຈຸດເລີ່ມຕົ້ນສຳລັບການສະໜອງການສຶກສາທີ່ມີປະສິດທິພາບໄປເຖິງຊຸມຊົນທີ່ໄດ້ຮັບຜົນກະທົບຈາກຄວາມຂັດແຍ້ງ ເປັນການປະເມີນຄວາມຕ້ອງການທີ່ເປັນໜ້າເຊື່ອຖື. ການຈັດການໃນປັດຈຸບັນ ຍັງໄກຈາກການທົດລອງຄວາມໜ້າເຊື່ອຖືສຳລັບຜູ້ອົບພະຍົບ ແລະ ຜູ້ຍ້າຍຖິ່ນ. ການຮ້ອງຂໍຄວາມຊ່ວຍເຫລືອດ້ານມະນຸດສະທຳສຳລັບການສຶກສາມີການພົວພັນບໍ່ສະໜິດແໜ້ນກັບລະດັບຄວາມຕ້ອງການ. ການປະເມີນໃນສູນອົບພະຍົບບໍ່ໄດ້ສະໜອງພາບລວມທີ່ເປັນລະບົບທາງການເງິນ ແລະ ຄວາມຕ້ອງການອື່ນໆໃນການບັນລຸເປົ້າໝາຍການສຶກສາເພື່ອທຸກຄົນ, ໃນຂະນະທີ່ຄວາມຕ້ອງການຂອງຜູ້ອົບພະຍົບນອກສູນຖືກລະເລີຍຢ່າງກວ້າງຂວາງ. ການປະເມີນສຳລັບຜູ້ຍ້າຍຖິ່ນ ຖືກຕີລາຄາຕ່ຳກວ່າຄວາມຕ້ອງການຕົວຈິງ. ບົດລາຍງານນີ້ແນະນຳວ່າກຸ່ມການສຶກສາ, ກຸ່ມໜ່ວຍງານສາກົນດ້ານມະນຸດສະທຳ ທີ່ຮັບຜິດຊອບການປະສານງານຂໍທຶນ ຄວນຈະເຮັດວຽກກັບອົງກອນທີ່ມີຜູ້ຊ່ຽວຊານໃນການເກັບກຳຂໍ້ມູນ, ການພັດທະນາຕົວຊີ້ບອກຫລັກສຳລັບການສຶກສາ ແລະ ການປະເມີນຄວາມຕ້ອງການການເງິນເພື່ອບັນລຸເປົ້າໝາຍສະເພາະ.

- ສ້າງຄວາມເຂັ້ມແຂງການຈັດການດ້ານການເງິນ ແລະ ການຄຸ້ມຄອງການຍ້າຍຖິ່ນຖານ. ການຈຳແນກຄວາມແຕກຕ່າງລະຫວ່າງຜູ້ອົບພະຍົບ ແລະ ຜູ້ຍ້າຍຖິ່ນທີ່ບໍ່ຊັດເຈນ ເປັນອຸປະສັກໃນການປະຕິບັດທີ່ມີປະສິດທິພາບ. ພາລະກິດຂອງຂ້າຫລວງໃຫຍ່ ເພື່ອຊາວອົບພະຍົບແຫ່ງອົງການສະຫະປະຊາຊາດ ຈະຕ້ອງມີຄວາມເຂັ້ມແຂງ ເພື່ອໃຫ້ອົງກອນສາມາດໃຫ້ການປົກປ້ອງ ຊາວອົບພະຍົບ ແລະ ຜູ້ຍ້າຍຖິ່ນຖານ ທັງໝົດຢ່າງມີປະສິດທິພາບ. ຍ້ອນຄວາມສາມາດ ຂອງອົງການອຸຍນິເຊບ ແລະ ປະຫວັດໃນການສະໜັບສະໜູນການສຶກສາໃນປະເທດທີ່ໄດ້ຮັບຜົນກະທົບຈາກ ຄວາມ

ຂັດແຍ້ງ ແລະ ຄວາມສາມາດທີ່ຈຳກັດຂອງ ອົງການຂ້າຫລວງໃຫຍ່ ເພື່ອຊາວອົບພະຍົບແຫ່ງສະຫະປະຊາຊາດໃນຂະແໜງການນັ້ນ ພວກເຂົາຄວນຈະມີພາລະກິດຮ່ວມກັນໃນການສຶກສາ. ປະເທດທີ່ຮັບເອົາຜູ້ອົບພະຍົບຄວນຈະພິຈາລະນາການຮັບຮອງກົດລະບຽບ ທີ່ອຳນວຍຄວາມສະດວກເຂົ້າເຖິງລະບົບການສຶກສາພາກລັດ ແລະ ປະເທດຮັ່ງມີຄວນ ຈະເຫັນດີຕໍ່ກັບການແບ່ງຄວາມຮັບຜິດຊອບດ້ານການຈັດການທີ່ເທົ່າທຽມກັນໃນທົ່ວໂລກ. ປະເທດທີ່ມີ ປະຊາກອນຍ້າຍຖິ່ນຫລາຍພາຍໃນປະເທດຄວນຈະນຳເອົາແບບຢ່າງຂອງປະເທດ ໂຄລຳເບຍໃນການກຳນົດສິດທິຂອງຜູ້ຍ້າຍຖິ່ນ ເຂົ້າໃນນິຕິບັນຍັດແຫ່ງຊາດ. ໜ່ວຍງານໃນລະດັບພາກພື້ນຄວນຈະພິຈາລະນາຮັບຮອງເອົາສົນທິສັນຍາກຳປາລາ ຂອງສະຫະພາບອາຟຣິກາ ຊຶ່ງຢ່າງຕ່ຳ 15 ປະເທດຄວນຈະໃຫ້ສັດຕະຍາບັນໄວເທົ່າທີ່ຈະໄວໄດ້ ເພື່ອຈະໄດ້ກາຍເປັນກົດໝາຍ.

## ການຟື້ນຟູການສຶກສາ - ຍາດແຍ່ງເອົາສັນຕິພາບທີ່ມີຄຸນຄ່າສູງສຸດ

ການຟື້ນຟູຄວາມຂັດແຍ້ງ ໃນການສຶກສາກໍ່ໃຫ້ເກີດສິ່ງທ້າທາຍອັນໃຫຍ່ຫລວງ. ລັດຖະບານຕ້ອງໄດ້ ດຳເນີນການໃນສະພາບແວດລ້ອມທີ່ການເມືອງບໍ່ມີຄວາມໝັ້ນຄົງ ແລະ ບໍ່ແນ່ນອນໃນລະດັບສູງ, ແລະ ມີຄວາມສາມາດໃນລະດັບຕ່ຳ. ການຟື້ນຟູລະບົບໂຮງຮຽນທີ່ພັງທະລາຍໃນສະພາບການຂາດດູນດ້ານ ການເງິນຊ້ຳເຮື້ອ ແລະ ການຂາດແຄນຄູຈະກໍ່ໃຫ້ເກີດບັນຫາໃຫຍ່. ແຕ່ຄວາມສຳເລັດໃນການສຶກສາສາມາດຊ່ວຍຄ້ຳຈູນສັນຕິພາບ, ສ້າງລັດຖະບານໃຫ້ມີຄວາມຖືກຕ້ອງຕາມກົດໝາຍ ແລະ ສ້າງສັງຄົມ ຕາມເສັ້ນທາງໃຫ້ມີສັນຕິພາບຫລາຍຂຶ້ນ. ຜູ້ໃຫ້ທຶນມີບົດບາດສຳຄັນໃນການເປີດໂອກາດທີ່ມາພ້ອມກັບສັນຕິພາບ.

ປະຊາຊົນ ທີ່ມີຊີວິດຖືກສັ່ນຄອນຈາກຄວາມຂັດແຍ້ງ ດ້ວຍອາວຸດ ກຳລັງອອກມາຈາກຄວາມຮຸນແຮງ ດ້ວຍຄວາມຫວັງ ແລະ ຄວາມໄຝ່ຝັນສຳລັບອະນາຄົດທີ່ດີກວ່າ. ພົນໄດ້ຮັບໃນຄວາມຄາດຫວັງເບື້ອງຕົ້ນແມ່ນ ລັດຖະບານຕ້ອງຮັບການຊ່ວຍເຫລືອໄວເພື່ອໃຫ້ເກີດສັນຕິພາບ. ອາໄສປະສົບການ ທີ່ຫລວງຫລາຍຈາກປະເທດທີ່ໄດ້ຮັບຜົນກະທົບຈາກຄວາມຂັດແຍ້ງ, ບົດລາຍງານນີ້ ກຳນົດຍຸດທະສາດ ທີ່ໄດ້ຮັບຜົນໄວ. ຕົວຢ່າງ, ແຜນງານການຍຸດເຊົາຄ່າທຳນຽມຜູ້ຊົມໃຊ້, ການລິເລີ່ມສະໜັບສະໜູນຊຸມຊົນ, ເລັ່ງໃຫ້ໂອກາດໃນການຮຽນຮູ້ ແລະ ສ້າງຄວາມເຂັ້ມແຂງໃນການຝຶກທັກສະໃນສ່ວນປະກອບ ຂອງການປົດອາວຸດ, ການປົດປະຈຳການທະຫານ ແລະ ການເຕົ້າໂຮມຄືນ (DDR). ໃນຣູວັນດາ, ແຜນງານການປົດອາວຸດ, ປົດປະຈຳການທະຫານ ແລະ ການເຕົ້າໂຮມຄືນ ອຳນວຍຄວາມສະດວກ ໃນການກັບໄປສູ່ການສຶກສາສຳລັບນັກຮົບເກົ່າ ຊຶ່ງມີຫລາຍຄົນທີ່ຍາດໂອກາດສຳລັບການຝຶກອົບຮົມວິຊາຊີບ.

ການສ້າງຫ້ອງຮຽນກໍຍັງສາມາດເປີດໂອກາດໃໝ່. ໃນພາກໃຕ້ຂອງຊູດານ, ແຜນການສ້າງຫ້ອງຮຽນຈຳນວນຫລວງຫລາຍ ໄດ້ອຳນວຍຄວາມສະດວກໃນການເພີ່ມຈຳນວນເດັກນ້ອຍໃນໂຮງຮຽນປະຖົມຈາກ 700,000 ຄົນ ໃນປີ 2006 ເປັນ 1.6 ລ້ານຄົນໃນປີ 2009. ເພື່ອໃຫ້ໄດ້ຮັບຜົນໄວ, ການເນັ້ນໜັກໃສ່ການສະໜອງການກໍ່ສ້າງຫ້ອງຮຽນ ໃນລາຄາຕ່ຳແບບເຄິ່ງຖາວອນ ດ້ວຍແຜນການປ່ຽນແທນຫ້ອງຮຽນ ແບບຖາວອນກວ່າ ໃຫ້ຫລາຍຂຶ້ນໃນອະນາຄົດອັນໃກ້ໆນີ້.

ເມື່ອກ້າວໄປເກີນສິ່ງທີ່ຈະໄດ້ຮັບການສະໜັບສະໜູນໄວນັ້ນ ມັນຕ້ອງການໃຫ້ມີການພັດທະນາ ການວາງແຜນລະດັບຊາດ ແລະ ລະບົບຂໍ້ມູນທີ່ເຂັ້ມແຂງກວ່າ. ປະເທດທີ່ປ່ຽນແປງຈາກຄວາມຂັດແຍ້ງໄປສູ່ການຟື້ນຟູ ໃນໄລຍະຍາວເຊັ່ນ ເອທີໂອເປຍ, ໂມຊຳບິກ, ຣູວັນດາ ແລະ ຊີຣາລີອອນ ໄດ້ສ້າງຄວາມຮ່ວມມືກັບຜູ້ໃຫ້ທຶນ ໂດຍແນໃສ່ການພັດທະນາ ແລະ ການຈັດຕັ້ງປະຕິບັດຍຸດທະສາດໃນຂະແໜງການສຶກສາຮຽນຮ່ວມ ຊຶ່ງມີເປົ້າໝາຍທີ່ຈະແຈ້ງ ໂດຍການສະໜັບສະໜູນຈາກພັນທະການເງິນ ທີ່ໝັ້ນຄົງ. ລະບົບການຄຸ້ມຄອງ ຂໍ້ມູນຂ່າວສານໃນການສຶກສາ (EMIS) ເປັນອົງປະກອບສຳຄັນ ຍ້ອນວ່າພວກເຂົາໄດ້ມອບເຄື່ອງມືໃຫ້ລັດຖະບານຕິດຕາມການຈັດສັນຊັບພະຍາກອນ, ກຳນົດຂົງເຂດທີ່ຕ້ອງການ ແລະ ຄວບຄຸມການຈ່າຍຄ່າຕອບແທນໃຫ້ແກ່ຄູ (ລາຍການດຽວທີ່ໃຫຍ່ທີ່ສຸດໃນງົບປະມານການສຶກສາ). ພາຍໃນປີ 2006, ສີ່ປີຫລັງຈາກສົງຄາມກາງເມືອງຢູ່ປະເທດຊີຣາລີອອນ ສິ້ນສຸດລົງ, ປະເທດດັ່ງກ່າວ ໄດ້ມີຂອບວຽກສຳລັບ EMIS.

ການຄາດເດົາ ແລະ ການສະໜັບສະໜູນແບບຍືນຍົງຂອງຜູ້ໃຫ້ທຶນເປັນສິ່ງສຳຄັນເພື່ອອຳນວຍຄວາມສະດວກໃນການປ່ຽນແປງຈາກຄວາມສະຫງົບສຸກໄປສູ່ການຟື້ນຟູໃນຂະແໜງການສຶກສາ. ການຊ່ວຍເຫລືອທີ່ມີປະສິດທິຜົນ ໃນຂົງເຂດນີ້ໄດ້ຮັບການຜ່ອນຜັນໂດຍການແບ່ງລະຫວ່າງຄວາມຊ່ວຍເຫລືອດ້ານມະນຸດສະທຳ ແລະ ການຊ່ວຍເຫລືອເພື່ອການພັດທະນາ. ຜູ້ໃຫ້ທຶນມັກຈະເຫັນວ່າ ປະເທດຫລັງຄວາມຂັດແຍ້ງ ມີສະຖານະພາບຄືກັບຜູ້ສະໝັກທີ່ອ່ອນແອສຳລັບການໃຫ້ການຊ່ວຍເຫລືອເພື່ອການພັດທະນາ ໃນໄລຍະຍາວ, ອີກຢ່າງແມ່ນເນື່ອງມາຈາກຄວາມກັງວົນກ່ຽວກັບຄວາມສ່ຽງ ຂອງຄວາມຂັດແຍ້ງ ທີ່ຈະເກີດຂຶ້ນໃໝ່ ຫລື ຍ້ອນປະເທດຫລັງຄວາມຂັດແຍ້ງບໍ່ສາມາດຕອບສະໜອງຄວາມຕ້ອງການການລາຍງານທີ່ເຄັ່ງຄັດ. ຜົນສຸດທ້າຍກໍຄືຫລາຍໆປະເທດໄດ້ຖືກປ່ອຍໃຫ້ຂຶ້ນກັບຄວາມຊ່ວຍເຫລືອດ້ານມະນຸດສະທຳ ທີ່ຈຳກັດ ແລະ ບໍ່ສາມາດຄາດຄະເນໄດ້.

ການປຽບທຽບປະສົບການຂອງ ປະເທດໄລເບເລຍ ແລະ ຊີຣາລີອອນໄດ້ໃຫ້ບົດຮຽນຫລາຍ. ຫລັງສົງຄາມກາງເມືອງ ໃນໄລເບເຣຍ, ປະເທດກໍຍັງຕ້ອງອາໄສຄວາມຊ່ວຍເຫລືອດ້ານມະນຸດສະທຳຢ່າງໜັກ. ການສະໜັບສະໜູນດັ່ງກ່າວ ແມ່ນເກືອບເຄິ່ງໜຶ່ງຂອງການຊ່ວຍເຫລືອທີ່ປະເທດໄດ້ຮັບ ໃນປີ 2005-2006. ໃນໄລຍະດຽວກັນ, ຄວາມຊ່ວຍເຫລືອດ້ານມະນຸດສະທຳເພີ່ມຂຶ້ນພຽງ 9% ເມື່ອທຽບໃສ່ບ້ວງເງິນຊ່ວຍເຫລືອທີ່ໃຫຍ່ຫລວງໃຫ້ແກ່ ຊີຣາລີອອນ. ໃນຂະນະທີ່ມີພຽງໜຶ່ງປັດໄຈເທົ່ານັ້ນ ຄື ການມີຖານການເງິນທີ່ໝັ້ນຄົງສຳລັບແຜນການສຶກສາໃນຊີຣາລີອອນ ທີ່ຊ່ວຍອຳນວຍຄວາມສະດວກໃຫ້ມີຄວາມຄືບໜ້າໄວຂຶ້ນ (ກ່ອງທີ 8)

ຍ້ອນວ່າຄວາມເຂົ້າໃຈ ຂອງຜູ້ໃຫ້ທຶນຕໍ່ຄວາມສ່ຽງເປັນໜຶ່ງໃນອຸປະສັກຂອງການເສີມສ້າງຄວາມແຕກໂຕນລະຫວ່າງການຊ່ວຍເຫລືອດ້ານການພັດທະນາ ແລະ ດ້ານມະນຸດສະທຳ, ຊຶ່ງການແກ້ໄຂຂັດເຈນແມ່ນການແບ່ງປັນຄວາມສ່ຽງ. ການຮວບຮວມຊັບພະຍາກອນ ແລະ ການປະຕິບັດວຽກຮ່ວມກັນ ສາມາດເຮັດໃຫ້ຜູ້ໃຫ້ທຶນກະຈາຍຄວາມສ່ຽງ ແລະ ເພີ່ມປະສິດທິພາບຮັກສາຄວາມປອດໄພຫລາຍຂຶ້ນໃນບັນດາຂົງເຂດເຊັ່ນ: ການມອບໝາຍການບໍລິຫານຄວາມສ່ຽງ, ຄ່າໃຊ້ຈ່າຍໃນການເລີ່ມຕົ້ນ ແລະ ການປະສານງານ. ການຮວບຮວມທຶນແຫ່ງຊາດໄດ້ສະແດງໃຫ້ເຫັນເຖິງຜົນປະໂຫຍດຂອງການຮ່ວມມື. ໃນອັຟການິດສະຖານ, ຜູ້ໃຫ້ທຶນ ສາມສິບສອງລາຍໄດ້ທຸ້ມເທເຂົ້າໃນກອງທຶນຟື້ນຟູຂອງ ອັຟການິດສະຖານເກືອບ 4 ຕື້ໂດລາສະຫະລັດ ແຕ່ປີ 2002 ຫາ 2010. ການສຶກສາເປັນພາກສ່ວນທີ່ສຳຄັນ ຂອງຜົນງານ. ຜົນໄດ້ຮັບທີ່ສຳຄັນນັ້ນບໍ່ພຽງແຕ່ເດັກນ້ອຍ ໂດຍສະເພາະເດັກຍິງທີ່ໄດ້ເຂົ້າຮຽນ, ແຕ່ຍັງ ສ້າງຄວາມສາມາດໃນການວາງແຜນແຫ່ງຊາດອີກດ້ວຍ.

ກອງທຶນໂລກ ຍັງມີບົດບາດຍິ່ງໃຫຍ່ໃນປະເທດທີ່ໄດ້ຮັບຜົນສະທ້ອນຈາກຄວາມຂັດແຍ້ງ. ຂະແໜງການສຶກສາຂາດສິ່ງອຳນວຍຄວາມສະດວກໃນການດຳເນີນການ ເມື່ອທຽບກັບກອງທຶນໂລກທີ່ດຳເນີນການໃນຂະແໜງສາທາລະສຸກ. ກອງທຶນເລັ່ງລັດໄດ້ເບີກຈ່າຍເງິນເປັນ ຈຳນວນ 883 ລ້ານໂດລາສະຫະລັດ ແກ່ສາມສິບປະເທດ ນັບຕັ້ງແຕ່ໄດ້ກໍ່ຕັ້ງໃນປີ 2002. ໃນທາງກົງກັນຂ້າມ, ກອງທຶນໂລກເພື່ອ ຕ້ານກັບໂລກເອດ, ວັນນະໂລກ ແລະ ໄຂ້ມາລາເລຍ ຊຶ່ງໄດ້ກໍ່ຕັ້ງຂຶ້ນໃນປີດຽວກັນໄດ້ເບີກຈ່າຍເງິນເປັນ ຈຳນວນ 10 ຕື້ ໂດລາສະຫະລັດ. ການປະ

ການສຶກສາ ຄວນມີພາລະບົດບາດເປັນໃຈກາງໃນແຜນການຟື້ນຟູຫລັງຄວາມຂັດແຍ້ງ

### ກ່ອງທີ 8: ການເລີ່ມຕົ້ນກ່ອນກຳນົດ ແລະ ຢູ່ເພື່ອຊ່ວຍເຫລືອ ຊີຣາລີອອນ

ສິ່ງທີ່ປະຕິບັດໃນ ຊີຣາລີອອນ ຫລາຍຢ່າງສາມາດສືບຫາຄືນໃນໄລຍະຫລັງຄວາມຂັດແຍ້ງໃນປີທີ່ຫາ ກໍຜ່ານໄປ. ດ້ວຍການເປັນປະເທດທີ່ບໍ່ສະຫງົບທີ່ຢູ່ໃນໄລຍະເວລາເກົ້າປີແຫ່ງສົງຄາມການເມືອງທີ່ຫາກໍຍຸດຕິລົງ, ຜູ້ໃຫ້ທຶນມີພັນທະຕໍ່ສອງນະໂຍບາຍທີ່ສຳຄັນຄື: ການຮັກສາຄວາມປອດໄພ ແລະ ເພື່ອສະໜັບສະໜູນການມີຄວາມສະຫງົບສຸກໄລຍະຍາວ.

ຜູ້ໃຫ້ທຶນໄດ້ເລີ່ມເພີ່ມຄວາມຊ່ວຍເຫລືອເພື່ອການພັດທະນາ ກ່ອນຖະແຫລງການສິ້ນສຸດສົງຄາມ ໃນປີ 2002 ຢ່າງເປັນທາງການ ແລະ ສືບຕໍ່ການສະໜັບສະໜູນຕໍ່ໄປ.  ພັນທະຄວາມຊ່ວຍເຫລືອເພື່ອການພັດທະນາ ເພີ່ມຂຶ້ນປະມານ 70% ໃນລະຫວ່າງປີ 2001-2002  ແລະ 2003-2004. ຜູ້ໃຫ້ທຶນລາຍໃຫຍ່ໄດ້ໃຫ້ຄຳໝັ້ນສັນຍາຈະໃຫ້ການຊ່ວຍເຫລືອໃນໄລຍະຍາວໃນການຟື້ນຟູ. ໄປພ້ອມໆກັບການ ສ້າງຄວາມເຂັ້ມແຂງແກ່ລະບົບການບໍລິຫານການເງິນຂອງລັດ ຜູ້ໃຫ້ທຶນລາຍໃຫຍ່ທັງໝົດ ໄດ້ສະໜັບສະໜູນການເງິນໄລຍະຍາວເຂົ້າໃນຍຸດທະສາດການຫລຸດຜ່ອນຄວາມທຸກຍາກຂອງປະເທດຄັ້ງທີສອງ (2008-2012) ຊຶ່ງລວມມີການສະໜັບສະໜູນງົບປະມານໂດຍກົງທີ່ເກືອບເທົ່າກັບໜຶ່ງສ່ວນສີ່ຂອງການໃຊ້ຈ່າຍແຫ່ງຊາດ.

ການສຶກສາຖືກວາງໃຫ້ເປັນໃຈກາງຂອງຂະບວນການຟື້ນຟູ ຊຶ່ງເນັ້ນໜັກເຖິງຄວາມທ່ຽງທຳ ໂດຍ ສະເພາະໃນໄລຍະທີສອງຂອງການປະຕິຮູບ. ການສະໜັບສະໜູນທຶນເຂົ້າງົບປະມານໄດ້ຖືກໃຊ້ເຂົ້າໃນເງິນອຸດໜູນໂຮງຮຽນປະຖົມຄື: ການຍົກເລີກຄ່າທຳນຽມ ແລະ ສະໜອງປຶ້ມແບບຮຽນ. ການສະໜັບສະໜູນຂອງຜູ້ໃຫ້ທຶນແມ່ນແທດເໝາະກັບຄຳໝັ້ນສັນຍາຂອງລັດຖະບານຄື: ແຕ່ປີ 2000-2004, ຄ່າສະເລ່ຍການໃຊ້ຈ່າຍໃນການສຶກສາເພີ່ມຂຶ້ນປະມານ 11% ຕໍ່ປີ.

*ແຫລ່ງຂໍ້ມູນ: ເບິ່ງກ່ອງທີ 5.5 ໃນບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ 2011.*

ລັດຖະບານ ແລະ ຜູ້ໃຫ້ທຶນ ທີ່ເບິ່ງຂ້າມບົດບາດການສຶກສາ ໃນການ ສ້າງສັນຕິພາບ ແມ່ນກຳລັງ ເຮັດໃຫ້ປະເທດເດີນເຂົ້າ ສູ່ເສັ້ນທາງ ອະນາຄົດແຫ່ງ ຄວາມຮຸນແຮງ

ຕິຮູບກອງທຶນເລັ່ງລັດທີ່ກຳລັງດຳເນີນຢູ່ ກຳລັງແກ້ໄຂຄວາມກັງວົນອັນຍາວນານໃນດ້ານຕ່າງໆເຊັ່ນ: ການເບີກຈ່າຍ ແລະ ການຄຸ້ມຄອງທີ່ໄດ້ແກ້ໄຂ ໃນບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ 2010 ແລະ ໃນການປະເມີນພາຍນອກທີ່ສຳຄັນ. ຖ້າວ່າການປະຕິຮູບຫາກສາມາດດຳເນີນໄປໄດ້ທັງໝົດ ແລະ ຢູ່ໃນລວງເລິກ, ກອງທຶນເລັ່ງລັດ ຈະສາມາດກາຍເປັນຈຸດສູນກາງຂອງລະບົບການເງິນໃນລະດັບພະຫຸພາຄີທີ່ສາມາດຕອບສະໜອງ ຄວາມຕ້ອງການອັນຮີບດ່ວນສຳລັບປະເທດທີ່ໄດ້ຮັບຜົນກະທົບຈາກຄວາມຂັດແຍ້ງ. ເຖິງຢ່າງໃດກໍຕາມ, ຕ້ອງມີການປັບປຸງທີ່ສຳຄັນໃນການປະຕິບັດກັບປະເທດທີ່ຫາກໍ່ຫລຸດພົ້ນອອກມາຈາກຄວາມຂັດແຍ້ງໃໝ່ໆ ໃນນັ້ນ ຫລາຍໆປະເທດປະສົບກັບບັນຫາການຮັບການຊ່ວຍເຫລືອທາງດ້ານການເງິນ. ພ້ອມນັ້ນ ກໍຍັງຕ້ອງໄດ້ຂະຫຍາຍຖານແຫລ່ງທຶນຄື: ກອງທຶນເລັ່ງລັດໄດ້ເບີກຈ່າຍເງິນຈຳນວນ 222 ລ້ານ ໂດລາສະຫະລັດ ໃນປີ 2009 ໃນຂະນະທີ່ຊ່ອງວ່າງການເງິນ ພາຍນອກສຳລັບປະເທດທີ່ມີລາຍໄດ້ຕ່ຳ ມີປະມານ 16 ຕື້ໂດລາສະຫະລັດ.

ຂໍ້ຄວາມໃນບົດລາຍງານນີ້ໄດ້ເວົ້າວ່າ ການສຶກສາຄວນຈະມີບົດບາດເປັນໃຈກາງໃນວາລະການຟື້ນຟູ ຫລັງຄວາມຂັດແຍ້ງ. ບົດລາຍງານໄດ້ ແນະນຳໃຫ້ດຳເນີນການໃນສີ່ຂົງເຂດທີ່ສຳຄັນຄື:

- •ຍາດໂອກາດ ໃນການຮັບເອົາການສະໜັບສະໜູນອັນໄວວາໂດຍການເຮັດໃຫ້ການສຶກສາມີລາຄາຖືກ ແລະ ສາມາດເຂົ້າເຖິງໄດ້. ການຍົກເວັ້ນຄ່າທຳນຽມຄວນຖືເປັນສ່ວນໜຶ່ງທີ່ສຳຄັນ ຂອງສັນຕິພາບຫລັງຄວາມຂັດແຍ້ງ. ການຝຶກອົບຮົມທັກສະໃຫ້ເຂັ້ມແຂງ ແລະ ການສ້າງກິດຈະກຳທີ່ສະໜັບສະໜູນທາງຈິດໃຈໃນແຜນງານການປົດອາວຸດ, ການປົດປະຈຳການທະຫານ ແລະ ການເຕົ້າໂຮມຄືນ ສາມາດຊ່ວຍຫລຸດຜ່ອນຄວາມກົດດັນຈາກທ່າແຮງໃນການກັບໄປສູ່ຄວາມຮຸນແຮງອີກ ໂດຍການຂະຫຍາຍໂອກາດໃຫ້ແກ່ນັກຮົບເກົ່າ, ພ້ອມດຽວກັນກໍເລັ່ງແຜນງານໃຫ້ການສຶກສາຄືນໃໝ່ແກ່ຜູ້ທີ່ບໍ່ໄດ້ເຂົ້າຮຽນໃນລະຫວ່າງປີທີ່ມີຄວາມຂັດແຍ້ງ.

- ສ້າງພື້ນຖານສຳລັບການຟື້ນຟູໃນໄລຍະຍາວ. ການພັດທະນາຄວາມສາມາດແຫ່ງຊາດ ເພື່ອການວາງແຜນ, ການສ້າງກົນໄກລະບົບຄຸ້ມຄອງຂໍ້ມູນການສຶກສາ ແລະ ການສ້າງຄວາມເຂັ້ມແຂງໃນລະບົບການຈ່າຍ ເງິນເດືອນຄູ ເບິ່ງຄ້າຍກັບວ່າມີບັນຫາທາງດ້ານວິຊາການ, ແຕ່ວ່າ ມັນເປັນພື້ນຖານການສ້າງລະບົບການສຶກສາໃຫ້ລວມມີຄວາມໂປ່ງໃສ, ມີປະສິດທິພາບ, ມີຄວາມຮັບຜິດຊອບ ແລະ ລັກສະນະມີສ່ວນຮ່ວມຫລາຍຂຶ້ນ.

- ເພີ່ມການຊ່ວຍເຫລືອເຂົ້າໃນກອງທຶນລວມແຫ່ງຊາດ. ນີ້ເປັນສິ່ງທີ່ສາມາດເປີດກວ້າງຜົນປະໂຫຍດທີ່ຫລາກຫລາຍຈາກການຮ່ວມມືຂອງບັນດາຜູ້ໃຫ້ທຶນ. ອົງກອນຊ່ວຍເຫລືອ ຄວນຈະສຳຫລວດ ເບິ່ງທ່າແຮງໃນການກຽມການດ້ານກອງທຶນລວມທີ່ມີຢູ່ຢ່າງເອົາຈິງເອົາຈັງ ແລະ ການສ້າງຕັ້ງກອງທຶນໃໝ່ໃນປະເທດທີ່ໄດ້ຮັບຄວາມສົນໃຈໜ້ອຍ ຊຶ່ງລວມມີ ປະເທດຊາດ ແລະ ສ.ປ. ຄອງໂກ.

- ເຮັດໃຫ້ແຜນກອງທຶນເລັ່ງລັດມີປະສິດທິພາບຫລາຍຂຶ້ນຕໍ່ກອງທຶນລວມຂອງໂລກ. ຂະແໜງການສຶກສາ ມີຄວາມຕ້ອງການລະບົບກອງທຶນລວມຢ່າງຮີບດ່ວນ ເມື່ອປຽບທຽບກັບຂະໜາດ ແລະ ປະສິດທິພາບໃນການດຳເນີນການໃນຂະແໜງສາທາລະນະສຸກ. ບົດລາຍງານສະບັບນີ້ ສະເໜີແນະການເງິນປະຈຳປີສຳລັບກອງທຶນເລັ່ງລັດປະມານ 6 ຕື້ ໂດລາສະຫະລັດ ຈາກ ປີ 2011 ຫາ 2013 ໃນນັ້ນ ປະມານໜຶ່ງສ່ວນສາມ ອາດຈະໄດ້ມາຈາກພັນທະບັດການສຶກສາ ທີ່ໄດ້ສະເໜີຢູ່ໃນບົດທີ 2. ການປະຕິຮູບໃນຕໍ່ໜ້າມີຄວາມຈຳເປັນຕ້ອງຂະຫຍາຍການຊ່ວຍເຫລືອແກ່ປະເທດທີ່ຫາກໍ່ຫລຸດພົ້ນອອກຈາກຄວາມຂັດແຍ້ງ ຊຶ່ງລວມມີຂໍ້ກຳນົດການໃຫ້ທຶນ ໄລຍະສັ້ນ ເພື່ອການໃຫ້ທຶນສະໜັບສະໜູນຢ່າງໄວວາພ້ອມກັບທຶນໃນໄລຍະຍາວສຳລັບ ການຟື້ນຟູ.

## ເຮັດໃຫ້ການສຶກສາເປັນກຳລັງເພື່ອສັນຕິພາບ

ໃນເມື່ອສັງຄົມ ຫາກໍ່ພົ້ນອອກມາຈາກຄວາມຂັດແຍ້ງ ແລ້ວກ້າວໄປສູ່ສັນຕິພາບທີ່ບອບບາງ ແລະ ການເລີ່ມຕົ້ນເດີນທາງໄປສູ່ການສ້າງສັນຕິພາບອັນຍາວໄກ, ນະໂຍບາຍການສຶກສາໄດ້ສະໜອງໃຫ້ລັດຖະບານມີໂອກາດປະເຊີນໜ້າກັບສິ່ງຕົກທອດໃນເມື່ອກ່ອນ ແລະ ເພື່ອພັດທະນາລະບົບການສຶກສາ ທີ່ເອື້ອອຳນວຍໃຫ້ແກ່ສັນຕິພາບໃນອະນາຄົດ.

ຈຸດເລີ່ມຕົ້ນແມ່ນການຮັບຮູ້ວ່າການສຶກສາເປັນສິ່ງສຳຄັນ. ໃນເມື່ອລັດຖະບານໄດ້ເລີ່ມຕົ້ນສ້າງລະບົບ ການສຶກສາ, ເຂົາເຈົ້າຕ້ອງໄດ້ລະມັດລະວັງໃນການເຂົ້າເຖິງສະພາບແວດລ້ອມຫລັງຄວາມຂັດແຍ້ງ. ສິ່ງຕົກທອດຂອງຄວາມຮຸນແຮງ ແລະ ຄວາມບໍ່ໄວ້ວາງໃຈບໍ່ໄດ້ຫາຍໄປໃນທັນທີທັນໃດ. ລັດຖະບານ ຕ້ອງໄດ້ພິຈາລະນາວ່າທາງເລືອກດ້ານນະໂຍບາຍ ຈະຖືກຮັບຮູ້ບົນພື້ນຖານທັດສະນະຂອງຄູ່ແຂ່ງ ທີ່ຍາວນານ ແລະ ບົນພື້ນຖານການແກ້ໄຂບາງສ່ວນຂອງຂໍ້ພິພາດລະຫວ່າງກຸ່ມ ແລະ ເຂດແຄວ້ນ. ແຜນການທີ່ມີລັກສະນະອ່ອນໄຫວຕໍ່ຂໍ້ຂັດແຍ້ງໃນການສຶກສາແມ່ນການຮັບຮູ້ວ່າ ທຸກໆການຕັດສິນດ້ານນະໂຍບາຍ ມີຜົນສຳລັບການສ້າງສັນຕິພາບ ແລະ ສຳລັບແນວທາງ ໃນການຫລີກລ້ຽງກັບໄປສູ່ ຄວາມຮຸນແຮງ. ສິ່ງທີ່ປະຊາຊົນຖືກສອນມາ, ສອນດ້ວຍວິທີໃດ ແລະ ການຈັດລະບົບການສຶກສາແບບໃດ ສາມາດເຮັດໃຫ້ສັງຄົມນຳໄປສູ່ຄວາມຂັດແຍ່ງທີ່ຮຸນແຮງບໍ່ຫລາຍກໍໜ້ອຍ.

ການສຶກສາໄດ້ຮັບຄວາມເດືອດຮ້ອນຈາກການປ່ອຍປະທີ່ເປັນລະບົບໃນວາລະການສ້າງສັນຕິພາບຢ່າງກວ້າງຂວາງ. ການປ່ອຍປະສະແດງໃຫ້ເຫັນເຖິງການປະໂອກາດໃນການປ້ອງກັນຄວາມຂັດແຍ້ງ ແລະ ການພັດທະນາໃນສັງຄົມທີ່ຕົກລົບທົບໄດ້. ຍິ່ງໄປກວ່ານັ້ນ, ກໍຍັງເປັນຕົວແທນຂອງໄພຂົ່ມຂູ່. ລັດຖະບານ ແລະ ຜູ້ໃຫ້ທຶນທີ່ເບິ່ງຂ້າມບົດບາດຂອງການສຶກສາໃນການສ້າງສັນຕິພາບ ກຳລັງກຳນົດທາງເດີນຂອງປະເທດ ໃຫ້ມີຄວາມປອດໄພໜ້ອຍລົງ ຊຶ່ງມີທ່າແຮງເກີດຄວາມຮຸນແຮງໃນອະນາຄົດຫລາຍຂຶ້ນ.




ໂຮງຮຽນເດັກຍິງ ທີ່ຖືກເບິ່ງໃນການ ປະທະລະຫວ່າງ ກຳລັງລັດຖະບານ ແລະ ທະຫານຊົນນະບົດ ຢູ່ເມເດລິນ, ໂຄລົມເບຍ

ການປ່ອຍປະລະເລີຍການສຶກສາ ເປັນຫລັກຖານໃນການດຳເນີນວຽກຂອງຄະນະກຳມະທິການສ້າງສັນຕິພາບ ຂອງ ສປຊ, ຄະນະກຳມະການທີ່ປຶກສາລະຫວ່າງລັດຖະບານ ແລະ ກອງທຶນສ້າງສັນຕິພາບທີ່ກ່ຽວຂ້ອງ (PBF). ກອງທຶນໄດ້ກາຍເປັນສ່ວນສຳຄັນຂອງສະຖາປັດຕະຍະກຳຫລັງຄວາມຂັດແຍ້ງຂອງ ສປຊ. ເຖິງຢ່າງໃດກໍຕາມ, ການເງິນຂອງກອງທຶນສ້າງສັນຕິພາບແມ່ນມີຂະໜາດນ້ອຍຫລາຍ (ໄດ້ຮັບພຽງແຕ່ 347 ລ້ານໂດລາສະຫະລັດ ນັບແຕ່ປີ 2000) ແລະ ໂຄງການການສຶກສາສະເພາະມີພຽງ 3% ຂອງທຶນທີ່ໃຫ້ທັງໝົດ. ບັນຫາອື່ນອີກແມ່ນກອງທຶນສ້າງສັນຕິພາບ ສະໜັບສະໜູນກ່ອນອື່ນໝົດໃຫ້ໂຄງການທີ່ມີການເຊື່ອມໂຍງໜ້ອຍເຂົ້າໃນ ຂະບວນການການວາງແຜນໄລຍະຍາວ.

ບົດລາຍງານນີ້ ຄົ້ນຫາຊ່ອງທາງການສຶກສາທີ່ກວ້າງຂວາງ ຊຶ່ງຜ່ານຊ່ອງທາງດັ່ງກ່າວການສຶກສາສາມາດມີອິດທິພົນຕໍ່ຄວາມຫວັງສຳລັບສັນຕິພາບ. ແຕ່ບົດລາຍງານໄດ້ເນັ້ນໜັກວ່າຍັງຂາດແຜນແມ່ບົດ. ສ່ວນຈຸດເລີ່ມຕົ້ນ ແມ່ນຜູ້ວາງນະໂຍບາຍຕ້ອງແນ່ໃຈວ່ານະໂຍບາຍການແຊກແຊງທີ່ກຳນົດໃນການສຶກສາອາດຈະເພີ່ມຄວາມຄຽດແຄ້ນກໍ່ໃຫ້ເກີດຄວາມຂັດແຍ້ງດ້ວຍອາວຸດ ແລະ ເພື່ອຊັ່ງຊາຢ່າງລະມັດລະວັງເຖິງຄວາມເປັນໄປໄດ້ໃນ ການຮັບຮູ້ຂອງສັງຄົມກ່ຽວກັບ ນະໂຍບາຍ ແລະ ດຳເນີນການປະເມີນຜົນທີ່ອາດ ເປັນໄປໄດ້ໃນດ້ານຕ່າງໆເຊັ່ນ:

- ພາສາທີ່ໃຊ້ໃນການສິດສອນ. ບໍ່ມີບັນຫາໃດຈະສາມາດສະແດງທາງເລືອກທີ່ແໜ້ນໜຽວທີ່ລັດຖະບານ ຫລັງຄວາມຮຸນແຮງໄດ້ປະສົບດີກວ່ານະໂຍບາຍພາສາ. ໃນບາງສະພາບການຄື ສາທາລະນະລັດສະຫະລັດ ທັນຊາເນຍ ໄດ້ນຳໃຊ້ພາສາປະຈຳຊາດຢ່າງດຽວເປັນສື່ກາງການຮຽນການສອນໃນໂຮງຮຽນ ຊຶ່ງຊ່ວຍສົ່ງເສີມຄວາມສຳນຶກໃນເອກະລັກຮ່ວມກັນ. ກົງກັນຂ້າມໃນບາງສະພາບ ມັນຊ້ຳເປັນສະນວນໃຫ້ເກີດມີຄວາມຮຸນແຮງ. ໃນກົວເຕມາລາ, ບ່ອນທີ່ນະໂຍບາຍການໃຊ້ພາສາໃນການສຶກສາ ເປັນແຫລ່ງທີ່ມາຂອງ ຄວາມຄຽດແຄ້ນຂອງຊາວພື້ນເມືອງ ຊຶ່ງຄະນະກຳມາການປະຕິຮູບການສຶກສາ ໄດ້ຖືກສ້າງຂຶ້ນ ເພື່ອແກ້ໄຂຄວາມຄຽດແຄ້ນນີ້, ສົ່ງເສີມການປຶກສາຫາລື ແລະ ການສ້າງຫລັກສູດ ສຳລັບການພັດທະນາການສຶກສາແບບສອງພາສາ ແລະ ວັດທະນະທຳແບບປະສົມປະສານ ຊຶ່ງເປັນ ວິທີທີ່ອາດຈະມີຄວາມສອດຄ່ອງຢ່າງກວ້າງຂວາງ.

- ການປະຕິຮູບຫລັກສູດ. ການສອນວິຊາຕ່າງໆເຊັ່ນ: ປະຫວັດສາດ ແລະ ສາສະໜາ ກໍ່ໃຫ້ເກີດຄວາມອ່ອນໄຫວກ້າວໄປສູ່ຄວາມຮຸນແຮງ. ໃນສັງຄົມທີ່ມີຫລາຍເຊື້ອຊາດ ຫລື ມີຄວາມເຊື່ອຖືທີ່ຫລາກຫລາຍ, ຫລັກສູດໄດ້ຊ່ວຍສ້າງໃຫ້ນັກຮຽນຕ້ອງເບິ່ງການພົວພັນຂອງຕົນເອງ ກັບຄົນອື່ນຢ່າງຖືກຕ້ອງ. ການຈັດການກັບບັນຫາ ດ້ານເອກະລັກທີ່ປະເຊີນກັບຜູ້ປະຕິຮູບການສຶກສາແມ່ນມີທາງເລືອກ ທີ່ແກ້ໄຂຍາກ ແລະ ຕ້ອງໃຊ້ເວລາ. ລະບົບການສຶກສາຂອງກຳປູເຈຍໃນປັດຈຸບັນແມ່ນແກ້ໄຂປະຫວັດສາດການຂ້າລ້າງເຜົ່າພັນ. ໃນປະເທດຣູວັນດາ ຊຶ່ງເປັນບ່ອນລະບົບການສຶກສາໄດ້ສົ່ງເສີມ ການແບ່ງແຍກນັ້ນ ລັດຖະບານຍັງບໍ່ທັນໄດ້ແນະນຳຄືນການສອນປະຫວັດສາດໃນປະເທດເທື່ອ. ແຕ່ປະສົບການບ່ອນອື່ນໆສະແດງໃຫ້ເຫັນວ່າການສຶກສາສາມາດທັບມ້າງຄວາມແຕກແຍກທີ່ມີແນວກັ້ນໄວ້ເທື່ອລະໜ້ອຍ ໂດຍເຮັດໃຫ້ນັກຮຽນສະທ້ອນລັກສະນະສະເພາະ ທີ່ຫລາກຫລາຍຂອງພວກເຂົາ ແນວໃດ ແລະ ຈະສາມັກ ຄີກັນແທນທີ່ຈະແຕກແຍກ. ຕົວຢ່າງ, ຂໍ້ຕົກລົງວັນສຸກດີ ຂອງປະເທດ ໄອແລນເໜືອ ໄດ້ເປີດປະຕູເພື່ອການຮັບຮູ້ອັນກວ້າງຂວາງ ຂອງຄວາມເປັນປະຊາຊົນ ໂດຍສົ່ງເສີມໃຫ້ນັກຮຽນເຫັນເອກະລັກສະເພາະທີ່ອາດເປັນໄປໄດ້ ໂດຍອະນຸຍາດໃຫ້ມີແນວຄວາມຄິດທີ່ວ່າເຂົາເຈົ້າສາມາດເປັນໄດ້ທັງຄົນໄອແລນ ແລະ ຄົນອັງກິດ ຫລື ເປັນພຽງຄົນໄອແລນ ທີ່ນັບຖືສາດສະໜາໃດກໍໄດ້. ນີ້ເປັນ ຕົວຢ່າງທີ່ດີຂອງສິ່ງທີ່ ອາມາດຕະຍາແຊນ (Amartya Sen) ໃຫ້ລັກສະນະວ່າເປັນການຫັນຈາກການເປັນ “ພັນທະມິດເອກະພົດ” ທີ່ມີໜຶ່ງກຸ່ມໄປສູ່ເອກະລັກທີ່ມີຄວາມຫລາກຫລາຍ .

- ການກະຈາຍອຳນາດໃນການຄຸ້ມຄອງການສຶກສາ. ການແບ່ງຂັ້ນຄຸ້ມຄອງ ແລະ ການກະຈາຍອຳນາດ ເບິ່ງຄືວ່າ ເປັນເສັ້ນທາງແບບອັດຕະໂນມັດໄປສູ່ຄວາມຮັບຜິດຊອບອັນໃຫຍ່ຫລວງ ຄືກັນກັບເສັ້ນທາງສູ່ການສ້າງສັນຕິພາບ. ການປະເມີນຜົນດັ່ງກ່າວເປັນການເວົ້າເກີນຄວາມເປັນຈິງ. ໃນບາງປະເທດ ທີ່ມີການໂອນອຳນາດໃນລະບົບການສຶກສາຫລາຍ, ບົດບາດທີ່ອ່ອນແອຂອງລັດຖະບານກາງອາດ ຈະກີດຂວາງຄວາມພະຍາຍາມຂອງການສ້າງສັນຕິພາບ. ຕົວຢ່າງໜຶ່ງທີ່ເດັ່ນແມ່ນ ປະເທດບອດສະເນຍ ແລະ ເຮີເຊໂກວິເນຍ. ພາຍໃຕ້ຂໍ້ຕົກລົງເດເຕີນ ປີ1995, ປະເທດທີ່ມີປະຊາກອນປະມານ 3.8 ລ້ານຄົນ ມີກະຊວງສຶກສາທິການ 13 ແຫ່ງ ແລະ ລະບົບການສຶກສາທີ່ແບ່ງແຍກສ່ວນໆ. ລັດຖະບານກາງ ໄດ້ຮັບຮອງເອົາຫລັກການຄວາມກ້າວໜ້າກ່ຽວກັບການສຶກສາມາໃຊ້. ເຖິງຢ່າງໃດກໍຕາມ, ດ້ວຍການ ປະກົດຕົວຂອງລັດຖະບານກາງໃຫ້ໜ້ອຍທີ່ສຸດ, ເດັກນ້ອຍສືບຕໍ່ຮຽນຈາກສາມຫລັກສູດ ທີ່ແຕກຕ່າງ ໃນວິຊາຕ່າງໆເຊັ່ນ: ປະຫວັດສາດ, ວັດທະນະທຳ ແລະ ພາສາ ຊຶ່ງບາງຄັ້ງກໍມີລັກສະນະສົ່ງເສີມ ໃຫ້ມີອະຄະຕິ. ຍິ່ງກວ່ານັ້ນ, ບາງໂຮງຮຽນຍັງດຳເນີນເອົາຊື່ບຸກຄົນໃນ ກອງທະຫານ ຊຶ່ງບາງກຸ່ມເຫັນວ່າ ເປັນວິລະບູລຸດຂອງຊາດ ແລະ ບາງກຸ່ມກໍຖືວ່າເປັນສັນຍະລັກຂອງຄວາມເປັນປໍລະປັກ.

- ສ້າງໂຮງຮຽນໃນສະພາບແວດລ້ອມທີ່ບໍ່ມີຄວາມຮຸນແຮງ ເປັນຍຸດທະສາດໜຶ່ງຈະແຈ້ງສຳລັບ ການສຶກສາທີ່ດີ, ສຳລັບເດັກນ້ອຍ ແລະ ການສ້າງສັນຕິພາບຄື: ສ້າງໃຫ້ໂຮງຮຽນເປັນສະຖານທີ່ບໍ່ມີ

ການສຶກສາ ສາມາດທັບ ມ້າງຄວາມ ແຕກແຍກທີ່ມີ ແນວກັ້ນໄວ້ ເທື່ອລະໜ້ອຍ ໂດຍເຮັດໃຫ້ ນັກຮຽນສະ ທ້ອນລັກສະ ນະສະເພາະທີ່ ຫລາກຫລາຍ

ຄວາມຮຸນແຮງ. ການທ້າທາຍຕໍ່ການກັບສູ່ສະພາບປົກກະຕິຈາກຄວາມຮຸນແຮງໃນສັງຄົມ ສ່ວນໜຶ່ງຂຶ້ນກັບຂໍ້ຫ້າມໃນການລົງໂທດປະຫານຢ່າງມີປະສິດທິພາບ.

ໃນເມື່ອທຸກໆຄວາມຂັດແຍ້ງ ທາງດ້ານກຳລັງອາວຸດສະທ້ອນມາຈາກບັນດາຄວາມເຄັ່ງຕຶງຕ່າງໆ ແລະ ຄວາມຫລົ້ມເຫລວຂອງການແກ້ໄຂຄວາມຂັດແຍ້ງ ທຸກໆສະພາບການຫລັງຄວາມຂັດແຍ້ງຈຶ່ງເປັນເປົ້າໝາຍຂອງການຂົ່ມຂູ່ ແລະ ໃຫ້ໂອກາດຕໍ່ສຶກສາໃນການສ້າງສັນຕິພາບ. ໃນບັນດາວິທີການທີ່ໄດ້ສະເໜີໃນບົດລາຍງານນີ້ມີຄື:

ການສຶກສາມີບົດບາດສຳຄັນໃນການສ້າງຄວາມຕ້ານທານກັບຄວາມຂັດແຍ້ງທີ່ຮຸນແຮງ

- ຮັບຮູ້ວ່າການສຶກສາເປັນສ່ວນໜຶ່ງໃນສະພາບຫລັງຄວາມຂັດແຍ້ງ. ລັດຖະບານແຫ່ງຊາດ ແລະ ຜູ້ໃຫ້ທຶນຊ່ວຍເຫລືອຕ້ອງເຂົ້າໃຈວ່າ: ເຈດຕະນາຂອງພວກເຂົາຈະເປັນແນວໃດກໍຕາມ, ການປະຕິຮູບນະໂຍບາຍການສຶກສາຈະຕ້ອງຖືກປະຕິບັດໃນເງື່ອນໄຂການເມືອງທີ່ຕົກທອດຈາກຄວາມຂັດແຍ້ງ. ການພັດທະນານະໂຍບາຍທັງໝົດ ຄວນໃຫ້ມີການປະເມີນຄວາມສ່ຽງ ຫລັງຄວາມຂັດແຍ້ງຢ່າງຫລີກລ້ຽງບໍ່ໄດ້.

- ຂະຫຍາຍກອງທຶນສ້າງສັນຕິພາບ. ຄະນະກຳມະການສ້າງສັນຕິພາບ ຄວນຈະຫ້າວຫັນຂຶ້ນກວ່າເກົ່າໃນການສະໜັບສະໜູນຄວາມພະຍາຍາມຂອງລັດຖະບານ ເພື່ອເຊື່ອມໂຍງການສຶກສາເຂົ້າໃນຍຸດທະສາດການສ້າງສັນຕິພາບ. ການເພີ່ມແຫລ່ງທຶນຜ່ານກອງທຶນສ້າງສັນຕິພາບລະຫວ່າງ 500 ລ້ານ ໂດລາສະຫະລັດ ແລະ 1 ຕື້ໂດລາສະຫະລັດ ຕໍ່ປີ ສາມາດໃຊ້ປະໂຫຍດທີ່ມີປະສິດທິພາບຫລາຍຂຶ້ນ ໃນການເປີດໂອກາດຊຶ່ງສັນຕິພາບໄດ້ສະໜອງໃຫ້.

- ເພີ່ມທະວີບົດບາດຂອງອົງການອຸຍແນດສະໂກ ແລະ ອຸຍນີແຊັບໃນຂໍ້ລິເລີ່ມການສ້າງສັນຕິພາບ. ຜູ້ໃຫ້ທຶນສາມາດປະກອບສ່ວນເຂົ້າໃນການວາງແຜນການສຶກສາທີ່ອ່ອນໄຫວຕໍ່ຄວາມຂັດແຍ້ງ. ຫລັກການ ທຳອິດຂອງຂໍ້ຜູກພັນແມ່ນ “ບໍ່ສ້າງຄວາມເສຍຫາຍ”. ນັ້ນເປັນເຫດຜົນທີ່ວ່ານະໂຍບາຍການສຶກສາ ຄວນຈະມີການປະເມີນຜົນກະທົບທີ່ອາດເກີດຂຶ້ນ ໂດຍຄຳນຶງເຖິງບໍ່ພຽງແຕ່ຂໍ້ມູນດ້ານວິຊາການ, ແຕ່ຍັງລວມ ເຖິງຄວາມຮັບຮູ້ຂອງສາທາລະນະ ແລະ ຄວາມຄຽດແຄ້ນທີ່ຍາວນານ. ການສ້າງສັນຕິພາບໃຫ້ຍືນຍົງຮຽກຮ້ອງໃຫ້ມີຫລາຍກວ່າການວາງແຜນ ແລະ ແຫລ່ງທຶນເທົ່ານັ້ນ. ມັນຍັງຕ້ອງການ ນັກຊ່ຽວຊານມືອາຊີບ ແລະ ອົງກອນທີ່ມີຄວາມເສຍສະລະ ແລະ ມີຄວາມມຸ່ງໝັ້ນໃນການສ້າງ ຄວາມສາມາດ ແລະ ໃຫ້ການຊ່ວຍເຫລືອດ້ານວິຊາການໃນຂົງເຂດນັບແຕ່ການພັດທະນາຫລັກສູດໄປເຖິງການອອກແບບປຶ້ມແບບຮຽນ ແລະ ການອົບຮົມຄູ. ນີ້ເປັນຂົງເຂດທີ່ອຸຍແນດສະໂກ ແລະ ອຸຍນີແຊັບຕ້ອງມີບົດບາດເປັນໃຈກາງ ແລະ ທັງສອງ ອົງການຄວນເຂົ້າຮ່ວມຢ່າງຫ້າວຫັນ ໃນຄະນະກຳມາທິການສ້າງສັນຕິພາບຂອງ ສປຊ.

ການສຶກສາ ມີບົດບາດສຳຄັນ ໃນການສ້າງຄວາມຕ້ານທານກັບຄວາມຂັດແຍ້ງທີ່ຮຸນແຮງ. ໂຮງຮຽນ ໃນສັດຕະວັດທີຊາວເອັດ ຕ້ອງການທັງໝົດທີ່ກ່າວມາຂ້າງເທິງເພື່ອສິດສອນເດັກນ້ອຍໃນສິ່ງທີ່ເປັນທັກສະອັນໜຶ່ງອັນດຽວທີ່ ບໍ່ລົງລອຍກັນສຳລັບສັງຄົມທີ່ມີຄວາມຈະເລີນອັນຫລາກຫລາຍທາງດ້ານວັດທະນະທຳ ຊຶ່ງແມ່ນທັກສະໃນການຢູ່ຮ່ວມກັບຜູ້ອື່ນຢ່າງສັນຕິ. ການປູກຈິດສຳນຶກກ່ຽວກັບສາສະໜາ, ຊົນເຜົ່າ, ພາສາ ແລະ ຄວາມຫລາກຫລາຍຂອງເຊື້ອຊາດບໍ່ຄວນຖືກກີດກັ້ນໃນຫ້ອງຮຽນ. ໃນທາງກົງກັນຂ້າມ, ຄວາມຫລາກຫລາຍຄວນຈະຖືກຍອມຮັບ ແລະ ຍ້ອງຍໍ. ແຕ່ໂຮງຮຽນ ແລະ ຫ້ອງຮຽນຕ້ອງ ເປັນສະຖານທີ່ເໜືອກວ່າບ່ອນອື່ນໃດໆ ທີ່ເດັກນ້ອຍຮຽນຮູ້ໃນການຢູ່ຮ່ວມກັນ, ແລກປ່ຽນນຳກັນ ແລະ ເຄົາລົບເຊິ່ງກັນ ແລະ ກັນ. ບໍ່ມີປະເທດໃດສາມາດຫວັງທີ່ຈະສ້າງຮາກຖານສັນຕິພາບທີ່ຍາວນານໄດ້ ຈົນກວ່າຈະພົບວິທີສ້າງຄວາມໄວ້ເນື້ອເຊື່ອໃຈຊຶ່ງກັນ ແລະ ກັນ ລະຫວ່າງປະຊາຊົນພາຍໃນປະເທດ ແລະ ສະຖານທີ່ເພື່ອເລີ່ມຕົ້ນສິ່ງນີ້ຢູ່ໃນຫ້ອງຮຽນ.



ຫ້ອງຮຽນໃນໝູ່ບ້ານຂອງຊາວຈໍເຈຍ ຢູ່ຊາດເຊນ, ພາກໃຕ້ຂອງອົດເຊເຕຍ ຖືກທຳລາຍ ລະຫວາງ ສົງຄາມໃນເດືອນ ສິງຫາ 2008

© Sergey Maximishin/Panos

# ວິກິດການເຊື່ອງຊ້ອນ:
# ຄວາມຂັດແຍ້ງດ້ວຍອາວຸດ ແລະ ການສຶກສາ

ເມື່ອສົງຄາມເກີດຂຶ້ນ ຄວາມເອົາໃຈໃສ່ຂອງສາກົນ ແລະ ການລາຍງານຂອງສື່ ເນັ້ນຄວາມສົນໃຈໄປໃສ່ຮູບພາບຂອງຄົນທີ່ຖືກເດືອດຮ້ອນກ່ອນ. ແຕ່ວ່າຢູ່ເບື້ອງຫລັງຂອງຮູບພາບເຫລົ່ານີ້ ຍັງມີວິກິດການທີ່ເຊື່ອງຊ້ອນຢູ່. ໃນບັນດາປະເທດທີ່ທຸກຍາກທີ່ສຸດຂອງໂລກ ຄວາມຂັດແຍ້ງດ້ວຍອາວຸດທຳລາຍບໍ່ສະເພາະແຕ່ໂຄງລ່າງຂອງໂຮງຮຽນ ແຕ່ຄວາມຫວັງ ແລະ ຄວາມໄຝ່ຝັນຂອງອະນຸຊົນລຸ້ນຫລັງ.

ວິກິດການເຊື່ອງຊ້ອນ: ຄວາມຂັດແຍ້ງດ້ວຍອາວຸດ ແລະ ການສຶກສາໄດ້ບັນທຶກຜົນເສຍຫາຍທີ່ຮ້າຍແຮງຂອງຄວາມຂັດແຍ້ງດ້ວຍອາວຸດຕໍ່ການສຶກສາ. ມັນໄດ້ສຶກສາການລະເມີດສິດທິມະນຸດຢ່າງກວ້າງຂວາງໂດຍການເຮັດໃຫ້ເດັກນ້ອຍບໍ່ໄດ້ໄປໂຮງຮຽນ. ບົດລາຍງານໄດ້ທ້າທາຍກັບລະບົບການຊ່ວຍເຫລືອສາກົນທີ່ບໍ່ໄດ້ຮັບຜົນສຳເລັດ ໃນການຊ່ວຍເຫລືອປະເທດທີ່ຖືກຜົນກະທົບຈາກຄວາມຂັດແຍ້ງທີ່ນຳມາຊຶ່ງຜົນເສຍຫາຍຕໍ່ການສຶກສາ. ມັນໄດ້ສົ່ງຄຳເຕືອນວ່າ ໂຮງຮຽນແມ່ນໄດ້ຖືກໃຊ້ໃນການຖ່າຍທອດຄວາມຄຽດແຄ້ນ, ຄວາມອະຄະຕິ ແລະ ຄວາມບໍ່ຍຸຕິທຳໃນສັງຄົມ.

ບົດລາຍງານໄດ້ຮຽກຮ້ອງໄປຍັງບັນດາລັດຖະບານເພື່ອສະແດງຄວາມຕັດສິນໃຈອັນໃຫຍ່ຫລວງໃນການລຶບລ້າງວັດທະນະທຳຍົກເວັ້ນໂທດໃນການທຳລາຍເດັກນັກຮຽນ ແລະ ໂຮງຮຽນ. ບົດລາຍງານໄດ້ກຳນົດແຜນສຳລັບການປັບປຸງໂຄງສ້າງດ້ານການຊ່ວຍເຫລືອສາກົນ. ພ້ອມນັ້ນ ບົດລາຍງານໄດ້ກຳນົດບັນດາຍຸດທະສາດເພື່ອປັບປຸງພາລະບົດບາດຂອງການສຶກສາໃນການສ້າງສັນຕິພາບ.

ນີ້ແມ່ນບົດສັງລວມການລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ 2011. ສຳລັບບົດລາຍງານສະບັບສົມບູນ ພ້ອມທັງຕົວເລກສະຖິຕິ ແລະ ຕົວຊີ້ບອກດ້ານການສຶກສາແບບຄົບຊຸດ, ແລະ ສະບັບເປັນພາສາອື່ນໆ ມີໃນເວບໄຊ www.efareport.unesco.org

*'ຂ້າພະເຈົ້າຮັບຮອງເອົາຄຳຮຽກຮ້ອງຂອງອົງການອຸຍແນດສະໂກເຖິງລັດຖະບານປະເທດຕ່າງໆໃນທົ່ວໂລກໃຫ້ລົງທຶນໜ້ອຍໃສ່ລູກລະເບີດ ແລະ ລູກປືນ ພ້ອມນັ້ນກໍໃຫ້ລົງທຶນຫລາຍໃສ່ປຶ້ມແບບຮຽນ, ນາຍຄູ ແລະ ໂຮງຮຽນ'.*

**ໂອສະກາ ອາຣີອາ ຊັນເສດ,**
ຜູ້ຊະນະລາງວັນໂນແບນ
ສາຂາສັນຕິພາບ ປີ 1987

*'ຂ້າພະເຈົ້າມີຄວາມຫວັງວ່າຜູ້ນຳການເມືອງໃນທຸກໆປະເທດຈະຟັງຂໍ້ຄວາມຂອງບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ 2011 ຂອງອົງການອຸຍແນດສະໂກ ແລະ ຈົດຈຳວ່າການສຶກສາບໍ່ຄວນຈະຖືກນຳໃຊ້ເປັນຢາພິດເບື່ອເມົາສະໝອງທີ່ໜຸ່ມນ້ອຍດ້ວຍຄວາມມີອະຄະຕິ, ຂາດຄວາມອົດກັ້ນ ແລະ ຂາດຄວາມນັບຖືຊຶ່ງກັນແລະກັນ. ໂຮງຮຽນສາມາດເປັນກຳລັງທີ່ແຂງແກ່ນເພື່ອສັນຕິພາບ'*

**ຊີຣິນ ອີບາດີ,**
ຜູ້ຊະນະລາງວັນໂນແບນ
ສາຂາສັນຕິພາບ ປີ 2003

*'ໜຶ່ງໃນບັນດາຂໍ້ຄວາມໃນບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ 2011 ຂອງອົງການອຸຍແນດສະໂກ ໄດ້ບອກວ່າ ການສຶກສາສາມາດເປັນກຳລັງສະກັດກັ້ນຄວາມຂັດແຍ້ງ, ຟື້ນຟູປະເທດພາຍຫລັງຄວາມຂັດແຍ້ງ ແລະ ສ້າງສັນຕິພາບ. ຂ້າພະເຈົ້າຮັບຮອງເອົາຂໍ້ຄວາມດັ່ງກ່າວຢ່າງສຸດອົດສຸດໃຈ'.*

**ໂຈເຊ ຣາມອສ ຣອກຕາ,**
ຜູ້ຊະນະລາງວັນໂນແບນ
ສາຂາສັນຕິພາບ ປີ 1996

*'ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ 2011 ຂອງອົງການອຸຍແນດສະໂກ ເພີ່ມຄວາມເຂົ້າໃຈຂອງພວກເຮົາກ່ຽວກັບຜົນກະທົບທີ່ເປັນອັນຕະລາຍຂອງຄວາມຮຸນແຮງທາງເພດ ແລະ ການຂົ່ມຂືນ ໂດຍເຕືອນໃຫ້ເຮົາຮູ້ເຖິງຜົນກະທົບເພີ່ມເຕີມຂອງມັນຕໍ່ການສຶກສາ - ຊຶ່ງເປັນສາຍກ່ຽວພັນອັນໜຶ່ງຖືກປ່ອຍປະເປັນເວລາດົນນານ.'*

**ແມຣີ ໂຣບິນສັນ,**
ສະມາຊິກກຳມາທິການດ້ານສິດທິມະນຸດ
ຂອງອົງການສະຫະປະຊາຊາດ, 1997-2002

*ບົດລາຍງານຂອງອົງການອຸຍແນດສະໂກສະບັບນີ້ ກາຍກຳນົດເວລາດົນສົມຄວນ. ມັນໄດ້ບັນທຶກຂໍ້ມູນລະອຽດທີ່ປ່ຽນແປງຍາກກ່ຽວກັບການໃຊ້ຄວາມຮຸນແຮງແບບທາລຸນ ຕໍ່ປະຊາຊົນຊາວໂລກທີ່ດ້ອຍໂອກາດທີ່ສຸດ ລວມທັງເດັກນັກຮຽນ ແລະ ມັນທ້າທາຍຕໍ່ຜູ້ນຳຂອງທຸກໆປະເທດ ບໍ່ວ່າຈະຮັ່ງມີ ຫລື ທຸກຍາກ ເພື່ອກະທຳຢ່າງເດັດຂາດ. ຄຳຂໍຮ້ອງຂອງຂ້າພະເຈົ້າຕໍ່ຜູ້ນຳໂລກແມ່ນເພື່ອສ້າງປະໂຫຍກສະແດງຄວາມຕັ້ງໃຈແບບງ່າຍໆຄື: "ພໍແລ້ວຄືພໍແລ້ວ."*

**ແດສມອນ ຕູລູ,**
ຜູ້ຊະນະລາງວັນໂນແບນ
ສາຂາສັນຕິພາບ ປີ 1984

UNESCO Publishing
United Nations
Educational, Scientific and
Cultural Organization
EFA GMR
EDUCATION FOR ALL GLOBAL MONITORING REPORT
www.efareport.unesco.org